ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ສະຖາບັນຄົ້ນຄວ້າພາສາສາດ

ຮັກພາສາຂອງເຮົາ

ເຫຼັ້ມທີ II

ຄົ້ນຄວ້າ ແລະ ຮຽບຮຽງໂດຍ : ສົມແສງ ໄຊຍະວົງ
Somseng Xayavong

ນະຄອນຫລວງວຽງຈັນ 2005

ກະຊວງຖະແຫຼງຂ່າວແລະວັດທະນະທຳ
ສະຖາບັນຄົ້ນຄວ້າພາສາສາດ

ຮັກພາສາຂອງເຮົາ

ເຫຼັ້ມທີ II

ຄົ້ນຄວ້າແລະຮຽບຮຽງໂດຍ: ສົມແສງ ໄຊຍະວົງ
Somseng Xayavong

ເລກທະບຽນການພິມ: 195 ພຈ 29042005
ພິມທີ່: ໂຮງພິມມັນທາຕຸລາດ
ຈຳນວນພິມ: 550 ຫົວ.

ສະຫງວນລິຂະສິດຂອງຜູ້ຂຽນ.
ນະຄອນວຽງຈັນ 2005.

ຄຳນຳ

ປຶ້ມ "ຮັກພາສາຂອງເຮົາ" ເຫຼັ້ມນີ້ນັບວ່າເປັນເຫຼັ້ມທີ່ສອງ ທີ່ໄດ້ຮີບໂຮມເອົາບັນດາບົດຄວາມກ່ຽວກັບພາສາທີ່ອີງໃສ່ວິຊາການມາໄຈ້ແຍກ ຊີ້ແຈງ ເຊິ່ງບົດສ່ວນຫຼາຍໃນນີ້ ໄດ້ເປັນການອະທິບາຍກ່ຽວກັບຄວາມໝາຍ,ປະຫວັດ ຄວາມໝາຍຂອງຄຳ ຫຼື ກຸ່ມຄຳໂດຍສະເພາະ ຊຸມຄຳໃນພາສາລາວ. ທັງນີ້ກໍ່ເພື່ອຈຸດປະສົງຈະນຳເອົາຜົນຂອງການສຶກສາຄຳສັບຕາມແບບແຜນວິຊາການ ອອກສູ່ສັງຄົມ, ເພື່ອຊີ້ແຈງເຫດ ແລະຜົນອັນຈະກໍ່ໃຫ້ເກີດຄວາມເຂົ້າໃຈທີ່ຖືກຕ້ອງຕໍ່ກັບພາສາ ແລະຕໍ່ກັບຄວາມໝາຍຂອງບາງຄຳໃນພາສາລາວ. ເຫັນວ່າ ບົດຕ່າງໆໃນນີ້ ໄດ້ຊ່ວຍໃຫ້ຄວາມຮູ້ ແລະແງ່ຄິດທີ່ໃໝ່ໆຫຼາຍຢ່າງກ່ຽວກັບພາ-ສາ, ກ່ຽວກັບບາງຄຳໃນພາສາລາວ ແລະເປັນການບຸກເບີກສຳລັບການຄົ້ນ-ຄວ້າທາງຄວາມໝາຍ ແລະປະຫວັດຄວາມໝາຍຂອງຄຳໃນລັກສະນະນີ້. ສະ ນັ້ນ ການຄົ້ນຄວ້າໃນລັກສະນະດັ່ງກ່າວຄົງຈະເປັນການຊ່ວຍໃຫ້ແກ່ການປົກ ປັກຮັກສາ ແລະສົ່ງເສີມພາສາລາວ, ຈະນຳເອົາຜົນຫຼາຍປະການມາສູ່ຜູ້ອ່ານ ໂດຍສະເພາະນັກສຶກສາ, ຄູສອນ, ອາຈານ, ນັກຄົ້ນຄວ້າ ແລະນັກຮຽນ ທີ່ຈະ ນຳໄປເປັນຂໍ້ມູນສຳລັບຄົ້ນຄວ້າ ສຶກສາ ເພື່ອເພີ່ມພູນຄວາມຮູ້ ຫຼືກັບຜູ້ຂີດຂຽນ ທີ່ຈະເລືອກນຳໄປໃຊ້ກັບງານການຂຽນ, ກັບໂຄສົກ ທີ່ຈະນຳໄປປັບປຸງການ ເວົ້າຂອງຕົນຕໍ່ໄປ.

ໃນໂອກາດນີ້ ຂໍສະແດງຄວາມຊົມເຊີຍຕໍ່ກັບຜົນງານດັ່ງກ່າວນີ້ຂອງຜູ້ ຄົ້ນຄວ້າ ທີ່ໄດ້ມີຄວາມອົດທົນ ພະຍາຍາມຄົ້ນຄວ້າ ຈົນໄດ້ປຶ້ມທີ່ມີປະໂຫຍດ ເຊັ່ນນີ້ມາສູ່ຜູ້ອ່ານ ແລະສັງຄົມ.

ສະຖາບັນຄົ້ນຄວ້າພາສາສາດ

ອາລຳພະບິດ

ບົດຄວາມກ່ຽວກັບພາສາທີ່ໄດ້ຂຽນຕາມລັກສະນະນີ້ ແມ່ນວິທີໜຶ່ງຂອງ ການສຶກສາພາສາທີ່ໃຊ້ທັງການໄຈ້ແຍກ, ຊີ້ແຈງໂດຍໃຫ້ຕົວຢ່າງໄປຕາມແງ່ ຕ່າງໆຂອງຄວາມໝາຍທີ່ປະກອບໃນລະດັບຄຳ ຫຼື ລະດັບອະລິກ່ຳມີ, ບົດສ່ວນ ໜາຍ ໄດ້ກ່ຽວກັບພາສາລາວ, ຄຳລາວ ເຊິ່ງຫົວເລື່ອງທີ່ນຳມາຂຽນນັ້ນແມ່ນໄດ້ ເລືອກມາຈາກກໍລະນີດັ່ງນີ້:

1. ຄຳທີ່ພົບວ່າມີການຂຽນບໍ່ຄືກັນ ແລະ ເຄີຍໃຊ້ຂຽນໃຊ້ເວົ້າຕາມທີ່ ຜູ້ໃຊ້ເອງຮູ້ ອັນພາໃຫ້ເກີດສະພາບການຂຽນບໍ່ເອກະພາບ ທັງ ເຂົ້າໃຈຄວາມໝາຍຂອງຄຳນັ້ນໆກໍ່ບໍ່ຄືກັນໃນພາສາລາວ.
2. ບາງຄຳທີ່ເຄີຍມີແລ້ວໃນພາສາລາວ ແຕ່ຄຳນັ້ນໄດ້ຮັບການນຳ ມາໃຊ້ໜ້ອຍ, ມີຜູ້ຮູ້ກໍ່ໜ້ອຍເຂົ້າ ທັງເຫັນວ່າຈະກ້າວເຂົ້າໄປເຖິງ ການສູນເສຍຄຳນັ້ນໄປຈາກພາສາລາວໃນອະນາຄົດ.
3. ຄຳລາວບາງຄຳທີ່ບໍ່ທັນພົບການນິຍາມຄວາມໝາຍໄວ້ໃຫ້ມາ ກ່ອນ.
4. ຄຳລາວ ທີ່ບໍ່ເຄີຍພົບການໄຈ້ແຍກຄວາມໝາຍ, ສຶກສາແງ່ ແລະ ທິດຂອງຄວາມໝາຍໃນຄຳນັ້ນ.
5. ຄຳທີ່ຢູ່ໃນກຸ່ມຄວາມໝາຍດຽວກັນ ແຕ່ມີຄວາມແຕກຕ່າງບາງ ສ່ວນປະກອບ ພາໃຫ້ໄດ້ຄວາມໝາຍໃກ້ຄຽງຈົນມີຜູ້ເຂົ້າໃຈວ່າ ເປັນຄວາມໝາຍດຽວກັນ ແຕ່ໃນຕົວຈິງມັນແຕກຕ່າງກັນ.
6. ການໃຊ້ຄຳ, ການຕີຄວາມໝາຍຂອງຄຳໃນບໍລິບົດທີ່ຕ່າງກັນ.
7. ການໃຊ້ຄຳຟຸ່ມເຟືອຍ, ການໃຊ້ຄຳຊ້ຳຊາກ, ການປາກເກົ່ ຫຼື ຄຳ ເຄີຍປາກ.

8. ບາງເລື່ອງຂອງການແປ.

9. ບາງຄຳທີ່ມີຄວາມໝາຍກ່ຽວພັນກັບວັດທະນະທຳ, ບູຮານຄະດີ, ປະຫວັດສາດ ເຊິ່ງເຫັນວ່າຄຳຊຸມນີ້ ແລະການສຶກສາຄຳຊຸມນີ້ ຈະເປັນປະໂຫຍດ,ຈະກາຍເປັນຂໍ້ມູນ, ໃຫ້ຄວາມຮູ້ ແລະຂໍ້ຄິດ ອັນໃໝ່ແກ່ຜູ້ສົນໃຈອ່ານ, ຜູ້ທີ່ເຮັດການສຶກສາທາງພາສາ, ທາງ ມະນຸດວິທະຍາ ເພື່ອນຳໄປໃຊ້ ຫຼື ນຳໄປຂະຫຍາຍການສຶກສາ ໃຫ້ກວ້າງ ແລະເລິກຂຶ້ນໄປອີກ.

10.ບາງຄຳທີ່ຮັບຈາກພາສາອື່ນທີ່ມີຮູບຄຳໃກ້ຄຽງກັນ, ນຳມາໃຊ້ປົນເປກັບພາສາລາວ, ໃຊ້ແທນຄຳທີ່ພາສາລາວມີແລ້ວ. ເມື່ອນຳມາໃຊ້ພາໃຫ້ໄດ້ຄວາມໝາຍບໍ່ກົງກັບຄວາມໝາຍເດີມທີ່ມີໃນພາສາລາວ, ເກີດຄວາມ ໝາຍ ເຂວ, ຄາດເຄື່ອນ ຫຼື ຜິດ ແລະເກີດພາວະແຊກແຊງທາງພາສາດ້ວຍຄຳຢ່າງ ດຽວຈາກພາສາອື່ນ, ຈະເຮັດໃຫ້ເກີດການສູນເສຍຄຳລາວໃນພາຍໜ້າ. ເຊິ່ງ ປະກົດການນີ້ຫາກເປັນຂະບວນກໍ່ຈະມີຜົນບໍ່ດີໃຫ້ແກ່ພາສາລາວກໍ່ຄືວັດທະນະ ທຳລາວໃນສ່ວນນີ້ ຢ່າງໜັກ.

ນອກຈາກທີ່ກ່າວມານີ້ ກໍ່ຍັງມີຫຼາຍຫົວເລື່ອງທີ່ກ່ຽວກັບພາສາລາວ ແລະ ຄວາມຮູ້ຕ່າງໆກ່ຽວກັບພາສາທົ່ວໄປ ເຊິ່ງຮິບໂຮມໄດ້ 60 ກວ່າບົດມາພິມ. ແຕ່ ນີ້ເປັນພຽງໜຶ່ງໃນສີ່ສ່ວນຂອງຈຳນວນບົດທີ່ຂ້າພະເຈົ້າໄດ້ຂຽນຕະຫຼອດສາມ ປີກວ່າຜ່ານມາ. ນອກນີ້ ກໍ່ຍັງມີບົດຄົ້ນຄວ້າດ້ານອື່ນໆຂອງພາສາລາວເຊິ່ງກໍ່ ໄດ້ຈັດພິມເປັນປຶ້ມຕ່າງຫາກ. ບົດທີ່ເຫຼືອຢູ່ກໍ່ໄດ້ຮິບໂຮມ ແລະຈະຈັດພິມໃນໂອ ກາດຕໍ່ໄປ.

ຂ້າພະເຈົ້າໄດ້ຂຽນບົດຄວາມກ່ຽວກັບພາສາໃນລັກສະນະນີ້ ກໍ່ເນື່ອງ ຈາກວ່າ ໃນຜ່ານມາການສຶກສາພາສາລາວໃນແງ່ໃດໆກໍ່ມີໜ້ອຍ ຫຼື ບໍ່ມີຊ້ຳ, ອັນທີ່ເວົ້າເຖິງຄວາມໝາຍຂອງຄຳກໍ່ພົບພຽງໃນປຶ້ມວັດຈະນານຸກົມຂອງລາວ ເຊິ່ງກໍ່ບໍ່ມີຫຼາຍເຫຼັ້ມປານໃດ ທັງອີງປະກອບດ້ານຄຳສັບໃນແຕ່ລະເຫຼັ້ມກໍ່ຍັງມີບໍ່

ຫຼາຍຕາມທີ່ພາສາລາວເຮົາມີ. ແຕ່ສິ່ງທີ່ຂາດທີ່ສຸດນັ້ນກໍ່ຄືການໃຫ້ທິດສະດີ, ໃຫ້ວິທີເບິ່ງພາສາ, ເບິ່ງໜັງສື, ເບິ່ງຄວາມໝາຍ, ເບິ່ງຕົວຜູ້ໃຊ້ ວ່າອັນໃດແມ່ນອັນໃດ ນັ້ນຍິ່ງຂາດເຂີນ.ໃນພາສາລາວເຮົາແມ່ນມີຫຼາຍສິ່ງທີ່ໜ້າສົນໃຈ, ມີອັນໃຫ້ຮູ້ຫຼາຍ ແຕ່ຈະຫາບົດ, ຫາຜູ້ຂຽນສິ່ງຊຸມນັ້ນອອກມາກໍ່ຍັງຍາກ ຈະອາໄສຄຳແປໃນວັດຈະນານຸກົມ ກໍ່ຍັງຈຳກັດ ຍ້ອນວ່າ ບົດບາດຂອງ ວັດຈະນານຸກົມ ກໍ່ພຽງສ່ຳແບ່ງຄວາມໝາຍ ແລະນິຍາມມັນໃຫ້ໄວ້, ສິ່ງອື່ນໆທີ່ຄວນອະທິບາຍ ຫຼື ຊີ້ແຈງຫຼາຍຈິ່ງເຂົ້າໃຈ ກໍ່ບໍ່ສາມາດຈະນຳໄປຂຽນໃສ່ໄດ້ ເພາະຈະເປັນການເຮັດແນວນອກເລື່ອງຂອງວັດຈະນານຸກົມ.

ເມື່ອເຫັນສະພາບພາສາລາວ ແລະ ສະພາບການສຶກສາພາສາລາວເປັນແນວນີ້ ຂ້າພະເຈົ້າກໍ່ໄດ້ເລືອກເອົາແບບຂຽນທີ່ຍຶດເລື່ອງພາສາເປັນຫຼັກ ແລ້ວໃຊ້ວິຊາການ ຊີ້ແຈງ, ອະທິບາຍຕາມແງ່ຂອງຄວາມໝາຍທີ່ມັນເປັນຢູ່ໃນຄຳນັ້ນໆ ຫຼື ວະລີນັ້ນໆ ໃນຫຼາຍກໍລະນີ ການອະທິບາຍກໍ່ໄດ້ເອົາວັດທະນະທຳສ່ວນທີ່ກ່ຽວຂ້ອງກັບຄຳນັ້ນໆໄດ້ມາເປັນຕົວຊ່ວຍຊີ້ແຈງ ເພື່ອນຳໄປສູ່ຄວາມເຂົ້າໃຈ ແລະໄປເກີດການຮັບຮອງແກ່ຄວາມໝາຍຂອງຄຳນັ້ນໆກັບຕົວຜູ້ອ່ານ.

ຜູ້ສຶກສາເອງ ພະຍາຍາມຂຽນໂດຍໃຊ້ຄຳເວົ້າຈະແຈ້ງ, ໃຫ້ບົດບໍ່ຍາວ, ໃຫ້ນິຍາມ ແລະຕົວຢ່າງຕາມແບບແຜນວິຊາການສຳລັບການອະທິບາຍຊີ້ແຈງ. ແຕ່ເຖິງຢ່າງໃດຄວາມຜິດພາດກໍ່ຄົງຈະມີໄດ້ໃນບາງຈຸດບາງຕອນ ອັນເນື່ອງມາຈາກຄວາມບໍ່ສາມາດເຮັດໃຫ້ຄວາມລະອຽດ, ຮອບຄອບໄດ້ຢ່າງສະໝ່ຳສະເໝີໃນການຂຽນ ຫຼື ໃນການຕີພິມ.

ໃນໂອກາດນີ້ຂ້າພະເຈົ້າຂໍຂອບໃຈມາຍັງທ່ານ ທີ່ໄດ້ຊ່ວຍໃນວຽກງານການຈັດພິມ, ຕີພິມ ແລະຜູ້ສະໜັບສະໜູນແກ່ການພິມປຶ້ມນີ້ຈົນສຳເລັດມາໄດ້. ຫວັງວ່າທ່ານຜູ້ອ່ານຈະໃຫ້ການສະໜັບສະໜູນຕໍ່ຜົນງານ ແລະຄວາມພະຍາຍາມເຊັ່ນນີ້ຂອງຂ້າພະເຈົ້າ ແລະຂ້າພະເຈົ້າກໍ່ຂໍອະໄພຈາກຜູ້ອ່ານໃນເມື່ອພົບສິ່ງທີ່ຜິດພາດໃນການສຶກສານີ້, ຈະນຳເອົາຄວາມຊົມເຊີຍຈາກທ່ານຜູ້ອ່ານ

ไปเป็นกำลังใจให้แก่การสึกสาค้นคว้าพาสาลาวต่ไป และจะนำเอิา ถ้าติชมที่สิมเหดสิมผิมจากผู้อ่าน เพื่อไปปับปุงแก้ไขในการสึกสา, การจัดพิมปี้มในลักสะนะนี้ต่ไป.

ผู้สึกสา

สิมแสง ไชยะวิง

มะถอมวังจันอันที่ 20 /4 / 2005

ສາລະບານ

ບົດຂຽນ	ໜ້າ
1. ຄຳບອກເພດແລະພາສາແຫ່ງເພດ.	1
2. ສະຫຼະ ໃx ຄ່າທີ່ມີໃນພາສາລາວ	3
3. ນີ້ບໍ່ແມ່ນບັນຫາພາສາລາວ	5
4. ຄຳທີ່ມີຜູ້ໃຊ້ຍັງມັກຫຼົງລະຫ່ວາງ ພາສາ ກັບ ໜັງສື	8
5. ຈິດຕະສາດ, ສະຕິ ແລະຄວາມຮູ້ເປັນພື້ນຖານທີ່ສຳຄັນ ແກ່ການໃຊ້ພາສາ	11
6. ເບິ່ງຈາກແງ່ພາສາສູ່ວັດທະນະທຳ ໃນຄຳ ຫຼັງຄາ ແລະ ຊາຍຄາ	13
7. ໂຈກ ຄຳລາວແທ້ແຕ່ໃດ	15
8. ເມື່ອເປັນຄຳເຊື່ອມຈະໃຊ້ ກໍ ຫຼື ກໍ່ ?	17
9. ຈະໃຊ້ຄຳໃດ ຈອງ ຫຼື ຈ່ອງ ?	18
10. ລັກສະນະທາງຄວາມໝາຍຂອງ ຄຳສີ່ພະຍາງ ໃນພາສາລາວ	20
11. ວັດທະນະທຳ ກ່ຽວຂ້ອງກັບການໃຊ້ພາສາ ໃຫ້ເກີດຄວາມເອກະພາບ	22
12. ຄຳວ່າ ກໍ ແລະ ກໍ່ ໃນພາສາລາວ	25
13. ສຶກສາຊື່ ນິ້ວມື ຕາມແງ່ວັດທະນະທຳ	27
14. ຄຳ ລາກ ດຶງ ແກ່ ໃນພາສາລາວ	29
15. ຄຳວ່າ ຖຽງນາ ໃນພາສາລາວ	31
16. ຄຳຫຼາຍຄວາມໝາຍ ແລະຄຳທີ່ຄວາມໝາຍກະຈາຍ	34
17. ຄຳວ່າ ຮາດ ແລະກະຈາ ໃນພາສາລາວ	36
18. ຄຳວ່າ ເຂົ້າຈ້າວ ໃນພາສາລາວ	37
19. ຄຳວ່າ ປົນ ແລະໄຕ່ ໃນພາສາລາວ	39
20. ຄຳວ່າ ໄວ້ຕົວ ຖືຕົວ ແລະໃນຕົວ ໃນພາສາລາວ	41
21. ແອບແຝງ ຫຼື ອີບແຝງ ?	43

22. ຄຳວ່າ ເຈາະຢາງ ມີຢູ່ໃສ ໃນໂມຍ-ມວຍລາຍລາວ 45
23. ຄຳວ່າ ແພ້ ແລະ ຊະນະ 48
24. ຄຳ ຕ່າງດ້າວ ແລະ ຕ່າງປະເທດ ໃນພາສາລາວ 50
25. ມີຄຳຖາມມາ ມີຄຳຕອບໃຫ້ ກ່ຽວກັບສຽງ " ຣ " .ໃນພາສາລາວ 52
26. ຄຳ ຮວມ ແລະ ຮ່ວມ ໃນພາສາລາວ 55
27. ຄຳ ກິດ ແລະ ກິ້ນ ໃນພາສາລາວ 56
28. ຄຳວ່າ ຈ່າງ ແລະ ເພີກ ໃນພາສາລາວ 58
29. ຄຳວ່າ ສູບ ໃນພາສາລາວ 59
30. ຄຳວ່າ ສວຍໂອກາດ ໃນພາສາລາວ 60
31. ຄຳວ່າ ທຸກຍາກ ແລະ ທຸກຈົນ ໃນພາສາລາວ 62
32. ຄຳວ່າ ພາລະ ແລະ ບົດບາດ 64
33. ຄຳ ບານເຕະ ບານສົ່ງ ໃນພາສາລາວ 66
34. ຄຳວ່າ ເຮັດໜ້ອນໜ້າທີ່ 68
35. ຄຳ ກິນ ແລະ ດື່ມ ໃນພາສາລາວ
36. ເບິ່ງຈາກພາສາສູ່ວັດທະນະທຳໃນສຳນວນລາວ" ລ້ອຍຊ້ອຍຂໍ
ເປັນນ້ອຍນຳນ້ອງໄດ້ບໍ? 72
37.ແງ່ມອງຈາກພາສາສູ່ ວັດທະນະທຳ ໃນສຳນວນລາວ"ບໍ່ໄດ້ນ້ອງ
ຍາມເປັນ ສາວ ອ້າຍຈະເອົາຍາມຮ້າງ" 74
38. ຄຳວ່າ ເຫຼົ້າ ແລະ ສຸຣາ ໃນພາສາລາວ 77
39. ຄຳບອກກິ່ນ ໃນພາສາລາວ 79
40. ຄຳວ່າ ອາໄສ ໃນພາສາລາວ 81

41. ใต ຄວາມໝາຍໃນພາສາລາວ 82
42. ຄຳວ່າ ແຫຍ່ ແລະ ສອດ ໃນພາສາລາວ 84.
43. ຫາຄຳ ຈີ້ມ, ຈີ້ມ, ນ້ຳຈີ້ມ ໃນພາສາລາວ 86
44. ສຶກສາບາງສາເຫດຂອງການໃຊ້ຄຳ ເຮັດໃຫ້ເຫຼືອ 87.
45. ຄຳວ່າ ນັກຂຽນ, ນັກແຕ່ງ, ນັກປະພັນ ໃນພາສາລາວ 89.
46. ສຶກສາຄຳວ່າ ໄມ້ແສ້ ໃນພາສາລາວ 90
47. ຄຳ ເຕັ້ນແອ, ເຕັ້ນສາກ ໃນພາສາລາວ 93
48. ຄຳ ໜ້ຽຍ, ໜ້ຽເຄັ້ມ ໃນພາສາລາວ 95
49. ເບິ່ງສູ່ ຄຳໂຕ້ງໂຕຍ ໃນພາສາລາວ 97
50. ຄຳວ່າ ດັ້ນ ດ້ງ ຕອດ ໃນພາສາລາວ 99
51. ຫາຄຳ ເຮືອນຮ້ານ ຫຼື ເຮືອນຍົກພື້ນ ໃນພາສາລາວ 101

ຄຳບອກເພດ ແລະ ພາສາແຫ່ງເພດ

ຜ່ານມາ ມີບາງຄົນເຂົ້າໃຈເລື່ອງເພດໃນພາສາ ແລະ ຄຳບອກເພດ, ວ່າ ສອງເລື່ອງນັ້ນແມ່ນອັນດຽວ; ອັນນຳໄປສູ່ການຄິດວ່າ ໃນພາສາລາວມີເພດ, ພາສາລາວເປັນພາສາແຫ່ງເພດ. ມື້ນີ້ຈະໄດ້ນຳເລື່ອງນີ້ມາສະເໜີດ້ວຍວິທີສຶກສາ.

ຕາມຫຼັກວິຊາພາສາສາດ ການເບິ່ງແຕ່ລະເລື່ອງຂອງພາສາແມ່ນເບິ່ງເພື່ອຫາໃຫ້ຮູ້ຄວາມເປັນລະບົບ, ກົດເກນທີ່ເປັນຢູ່ໃນພາສານັ້ນໆ. ລະບົບແລະກົດເກນນັ້ນ ໄດ້ເປັນຕົວບອກໃຫ້ຮູ້ວ່າອັນໃດແມ່ນອັນໃດ, ມັນພົວພັນກັນໄດ້ແນວໃດ, ປ່ຽນແປງໄດ້ແນວໃດຢູ່ໃນພາສາ.

ແຕ່ລະພາສາໃນໂລກຕ່າງກໍ່ມີຄຳຈຳນວນໜຶ່ງທີ່ຊີ້ບອກໃຫ້ຮູ້ວ່າ ອັນໃດແມ່ນຜູ້, ອັນໃດແມ່ນແມ່ . ຕົວຢ່າງໃນພາສາລາວ ຄຳທີ່ບອກໃຫ້ຮູ້ວ່າ ຕົວຜູ້ ມີຄຳເຊັ່ນນີ້: ຜູ້, ຊາຍ, ພໍ່, ປູ່, ລຸງ, ຕາ, ບ່າວ, ອາວ, ອ້າຍ, ເຂີຍ, ບັກ, ຊຸນ, ທ້າວ, ພະຍາ, ພະ, ເຈົ້າມ່ອມ, ເຈົ້າຫົວ, ສິງ, ຈົວ, ທິດ, ຊຽງ, ມະຫາ, ທອກ, ໂທນ, ໂອກ, ເຖິກ ດັ່ງນີ້ເປັນຕົ້ນ. ສຳລັບຄຳທີ່ຊີ້ບອກຕົວແມ່ ໄດ້ແກ່: ແມ່, ຍິງ, ອີ່, ປ້າ, ສາວ, ໃພ້, ອາ, ຍ່າ, ນາຍ(ຍາຍ) ນາງ ດັ່ງນີ້ເປັນຕົ້ນ.

ທີ່ສະເໜີນີ້ເປັນພຽງຊຸມຄຳທີ່ **ບອກເພດ** ນັບທັງຄົນແລະສັດໃນພາສາລາວ ໂດຍຍຶດເອົາຄົນເປັນກຸ່ມຫຼັກ ແລ້ວເບິ່ງອອກໄປສູ່ສັດບາງຊະນິດ; ຫາກໃຜສົນໃຈເລື່ອງຂອງການເກີດ ແລະ ການໃຊ້ແຕ່ລະຄຳໃນນີ້ ກໍ່ສາມາດສືບສ່າວເຂົ້າໄປໃນທາງວັດທະນະທຳໂດຍສະເພາະເລື່ອງສາຍຍາດ (Kinship term) ແລະການຈັດລຳດັບໃນສາຍຍາດ; ການສຶກສາສ່ວນນີ້ ບາງຢ່າງອ່າວໄກໄປຈາກເລື່ອງພາສາສາດ ອາດເລີຍເຂົ້າສູ່ເລື່ອງມະນຸດສາດ ມີແຕ່ສາຍກ້ຽວພັນຂອງມັນໄດ້ ວຽນມາສູ່ພາສາ, ອັນທີ່ຈະກ່ຽວຂ້ອງແທ້ນັ້ນ ແມ່ນການສຶກສາ

ກ່ຽວກັບຄຳນຳໜ້າຊື່ຄົນ ໂດຍໃຊ້ວິທີສຶກສາ ຕາມທິດສະດີຂອງ ທ່ານ Brown ແລະ Levinson ກໍ່ຈະເຂົ້າເຖິງເລື່ອງ ຂອງຄຳນຳໜ້າຊື່ ໃນພາສາລາວໄດ້.

ບັດນີ້ໄງມາເວົ້າເລື່ອງເພດໃນພາສາ, ຕາມກົດເກນແລ້ວ ພາສາທີ່ນັບວ່າ ເປັນພາສາແຫ່ງເພດ (Gender) ນັ້ນແມ່ນການເບິ່ງຈາກຂະບວນການປ່ຽນ ແປງຮູບແບບຂອງຄຳຢ່າງເປັນລະບົບ ໃນເມື່ອໄດ້ນຳມັນມາໃຊ້ສ້າງປະໂຫຍກ. ເມື່ອຮູບຄຳມີສ່ວນຖືກຕັດ ຫຼື ຕື່ມ ກໍ່ພາໃຫ້ຄຳນັ້ນໆໄດ້ສະແດງໜ້າທີ່ໃດໜຶ່ງ ເພີ່ມຂຶ້ນຈາກຄວາມໝາຍຫຼັກ, ດັ່ງ ຄຳຂອງພາສາ ສະລາວ, ຣັດເຊຍ, ກາຊັກ, ມົງໂກນ, ເກົາຫຼີ, ໂປຣຍ ແລະ ອີກຫຼາຍພາສາ ທີ່ເປັນພາສາຄຳຕິດຕໍ່ ແບບນັ້ນໄດ້ຈັດເປັນພາສາແຫ່ງເພດ.

ພາສາແຫ່ງເພດນັ້ນບໍ່ໝາຍວ່າ ແຕ່ລະຄຳເປັນຄຳຂອງຜູ້ຍິງ, ຜູ້ຊາຍ ; ທີ່ ເອີ້ນເປັນເພດ ຜູ້, ແມ່ ຫຼື ກາງ ກໍ່ເນື່ອງຈາກ ຄຳຕ່າງໆໃນພາສານັ້ນມີລັກສະນະ ໃດໜຶ່ງທີ່ເປັນແນວດຽວກັນແລະ ສ່ວນທີ່ຈະນຳມາປະກອບໃສ່ທ້າຍຂອງແຕ່ ລະຄຳ ໄດ້ໃຫ້ຄ່າຢ່າງໃດໜຶ່ງເພີ່ມຂຶ້ນເຊັ່ນ:ຄ່າສຳລັບເນັ້ນໜັກ, ຄ່າສຳລັບສຳ ພັນ, ຄ່າແຫ່ງຈຳນວນ, ຄ່າແຫ່ງການເວລ, ຄ່າແຫ່ງການຮັບ ຫຼື ຄ່າແຫ່ງການ ຈາກ, ຄ່າແຫ່ງເທສະ ແລະອື່ນໆ. ສ່ວນຕື່ມເຂົ້າໃນຄຳເພື່ອບອກຄ່າແຕ່ລະອັນ ກໍ່ມີຕົວສະເພາະທີ່ກຳນົດເປັນແບບໄວ້ ວ່າ ໂຕໃດຕ້ອງໃສ່ກັບໂຕໃດຢ່າງເປັນລະ ບົບ ບໍ່ແມ່ນຊິຮ່າວເກັບຮ່າວຕື່ມໃສ່,.

ເມື່ອມາເຖິງສະໄໝໄດ້ເຜີຍແຜ່ພາສາອອກໄປ, ເພື່ອໃຫ້ຜູ້ຮຽນໄດ້ຮຽນຮູ້ ງ່າຍ, ໃຫ້ຈື່ກ່ຳງ່າຍ ເຂົ້າໃຈໄດ້ສະດວກ ນັ້ນ ນັກຄົ້ນຄວ້າພາສາຈຶ່ງໄດ້ກຳນົດຊື່ ໃຫ້ແຕ່ລະ ລະບົບຂອງຄຳ ພ້ອມກັບສ່ວນທີ່ຕື່ມເຂົ້ານັ້ນວ່າ **ເພດ** ໂດຍ ເອົາເພດແຫ່ງຄົນເປັນຕົວສົມທຽບໃສ່, ມັນເປັນການບັງເອີນ ຫຼືມັນມີກົດພາຍ ໃນທາງຈິດຕະສາດທີ່ເລິກເຊິ່ງຂອງມະນຸດແນວໃດກໍ່ຍັງເປັນສິ່ງສົງໄສຢູ່ ວ່າຄົນ ແລະສັດໄດ້ມີພຽງສອງເພດຫຼັກ, ເມື່ອມາເບິ່ງລະບົບຄຳໃນພາສາ ກໍ່ເຫັນເປັນ ລັກສະນະຄືກັນ, ຄວາມຄືອັນນີ້ ໄດ້ເປັນເຫດທີ່ໃຫ້ນັກຄົ້ນຄວ້າພາສາ ເອີ້ນທຽບ

ໃຫ້ລະບົບຄຳນັ້ນວ່າ ເພດ ເຊັ່ນກັນກັບຄົນຫຼືສັດ, ຕ່າງແຕ່ວ່າ ເພດຂອງຄົນ ຫຼືສັດມັນມີກິດເກນແຫ່ງຄວາມຮັກມັກ ແລະສະແຫວງຫາກັນ, ວັດທະນະທຳ ຂອງມະນຸດຫຼາຍຢ່າງໄດ້ເກີດຂຶ້ນກໍ່ເພາະເພດອັນນີ້; ແຕ່ເພດຂອງຄຳໃນພາສາ ພັດບໍ່ຮູ້ຮັກມັກກັນ, ບໍ່ມີກິດແຫ່ງການສົມລົດ; ຄຳໃໝ່ທີ່ເກີດຂຶ້ນມາເລື້ອຍໆນັ້ນ ກໍ່ບໍ່ແມ່ນເກີດຍ້ອນ ເພດຜູ້ ເພດແມ່ ຂອງພາສາ ທີ່ຢູ່ຮ່ວມກັນ.

ໃນການຈັດເພດນີ້ ບາງພາສາກໍ່ຈັດລະບົບຄຳເປັນສອງເພດຄື ຜູ້ ກັບແມ່ ແຕ່ບາງພາສາເປັນສາມເພດຄື ຜູ້, ແມ່ ແລະ ກາງ ໂດຍເບິ່ງຈາກຕົວສະຫຼະທີ່ ປະກອບໃນຄຳນັ້ນເປັນຕົວຫຼັກສຳລັບຈັດ.

ໃນພາສາລາວ ການເຄື່ອນໄຫວຂອງຄຳ ຈະຢູ່ໃນຕຳແໜ່ງໃດໃນປະ ໂຫຍກກໍ່ຍັງຄົງຮູບເດີມ, ບໍ່ມີສ່ວນປະຊິດ, ສ່ວນຕື່ມທີ່ມີລັກສະນະທາງໄວຍາ-ກອນໃດໆໃຫ້ແກ່ຄຳ. ໂດຍຜ່ານການສຶກສາປຽບທຽບລະບົບໄວຍາກອນ ໃນ ລະດັບຄຳ ແລະການສຳພັນຂອງຄຳກັບຄຳແລ້ວໄດ້ຕັດສິນວ່າ ພາສາລາວເປັນ ພາສາທີ່ມີພຽງຄຳບອກເພດ,ແຕ່ບໍ່ເປັນພາສາແຫ່ງເພດ.

ສະຫຼະ ໃx ຄ່າທີ່ມີໃນພາສາລາວ

ສະຫຼະ ໃx ແລະ ໄx ບໍ່ແມ່ນສະຫຼະທີ່ມີບັນຫາ ແຕ່ບັນຫາແມ່ນການ ຂຽນບໍ່ຖືກກັບຄຳ ເຊິ່ງມັນເກີດເລື້ອຍກັບຜູ້ຂຽນ,ຜູ້ໃຊ້ພາສາລາວບາງຄົນ.

ใx ແລะ ไx ໝາຍຖຶ່ນອອກສຽງຕົວນີ້ໄດ້ສຽງດຽວກັນຄື: / aj/ ແຕ່ໃນຕົວຈິງສຽງເດີມໃນພາສາລາວ ใx ແລะ ไx ຕ່າງກໍ່ອອກສຽງໃຫ້ຕ່າງກັນຄື: ใx ເມື່ອອອກສຽງໄດ້ເປັນ / aə/ ແລະไx ເປັນ / aj/. ສຽງ ใx ດັ້ງເດີມທີ່ມີຜູ້ຍັງໃຊ້ ເວົ້າ ແລະ ຂຽນປະຈຳນັ້ນໄດ້ແກ່ ຊາວໝວງພະບາງ, ໄຊຍະບູລີ, ໄຕດຳ ແລະລື້ ເປັນຕົ້ນ. ຜູ້ທີ່ຍັງຮັກສາສຽງນີ້ໄວ້ໄດ້ ກໍ່ຍັງມີຈຳນວນໜ້ອຍ, ເຂົ້າເຈົ້າຈະເປັນຜູ້ຮູ້ ໄດ້ເຖິງຄວາມແຕກຕ່າງທາງສຽງຂອງ ສະໜະ ใx , ສະໜະ ไx ແລະ ສຽງສະ ໜະ ເx / ə:/ ໄດ້ດີ ທັງບໍ່ເຄີຍຫຼົງ ໃນການໃຊ້ລະຫວ່າງສະໜະສາມອັນນີ້ ສະນັ້ນ ຈຶ່ງຖືວ່າ ຊາວລາວຖິ່ນດັ່ງກ່າວໄດ້ເປັນເຈົ້າຂອງແຫ່ງສຽງຊຸມນີ້ ແລະເປັນຫຼັກສຳ ລັບການອອກສຽງພ້ອມກັບການຂຽນສະໜະຊຸມນີ້ໃຫ້ຖືກຄຳ. ສຳລັບ ໄທແດງ ໄທຂາວ ສາມາດອອກສຽງໄດ້ໜຽງ ไX ແລະ ເx ; ແຕ່ ใX ຊ້ຳອອກສຽງເປັນ ເx ຄືກັນ ພາໃຫ້ຈຳແນກບໍ່ອອກວ່າມັນຕ່າງກັນອັນໃດ ແລະ ຄຳໃດຄວນຂຽນ ສະໜະໃດ, ຄົນລາວບາງຄົນເວົ້າວ່າ ໝາຍຖຶ່ນບໍ່ສາມມາດອອກສຽງສະໜະ ใx / aə/ ໄດ້; ຈະຂຽນ ใx ຫຼື ไx ກໍ່ອອກສຽງໄດ້ແນວດຽວ; ເພາະຄວາມລຳບາກ ໃນການຈຳແນກນີ້ ຄວນເອົາຮູບດຽວຄື: ไx ອັນດຽວ ກັບ ເx ກໍ່ຄົງພໍແລ້ວ; ທັງ ຄຳລາວ ຄຳຈາກພາສາອື່ນທີ່ຮັບມາທີ່ເປັນສຽງ /aj/ ກໍ່ໃຊ້ຕົວດຽວຄົງແກ້ບັນຫາ ການຂຽນສະໜະສອງຕົວນີ້ໄດ້.

ເລື່ອງນີ້ບໍ່ສະເພາະແຕ່ພາສາລາວ; ຢູ່ໃນພາສາໄທການຂຽນສະໜະ ใx ແລະ ไx ກໍ່ພົບມີຜູ້ໃຊ້ປົນເປຈົນເປັນບັນຫາມາແລ້ວ. ຄື ມາເຖິງວັນທີ່ 17/ /4/ ພ.ສ 2485 ໃນສະໄໝຂອງທ່ານຈອມພົນ ປ. ພິບູນສົງຄາມ ເປັນນາຍົກຂອງໄທ ໄດ້ປະກາດການປັບປຸງການຂຽນຄຳໃນພາສາໄທ ໂດຍສັ່ງ ໃຫ້ງົດໃຊ້ສະໜະ ใx (ໄม้ม้วน), ໃຫ້ໃຊ້ໜຽງ ไx ຕົວດຽວໄດ້. ຕໍ່ມາຄວາມຈຳ ເປັນທາງພາສາ ແລະ ຄວາມຕ້ອງການຢູ່ໃນວັດທະນະທຳໄດ້ເປັນຕົວເຮັດໃຫ້ ການໃຊ້ສະໜະ ใx ບໍ່ສາມາດຕັດອອກຈາກການຂຽນຄຳໃນພາສາໄທໄດ້, ເຖິງ ທຸກວັນນີ້ ໄທກໍ່ຍັງຮັກສາ ແລະ ໃຊ້ດັ່ງເຄີຍ ເຖິງສຽງຈິງໃນພາສາໄທບໍ່ມີ ແລະ

ບ່ອອກສຽງນີ້ ດັ່ງຄົນລາວເຂດເໜືອໄດ້ແລ້ວ ແຕ່ກໍ່ມາອາໄສການຈື່ເອົາເປັນສຳຄັນວ່າ ຄຳທີ່ໃຊ້ ໃX ໃນພາສາໄທມີ 22 ຕົວ.

ບັດນີ້ມາເບິ່ງສະຫຼະ ໃx ໃນພາສາລາວ, ພວກເຮົາຍັງມີພື້ນຖານທາງສຽງທີ່ໜັ້ນຄົງ, ມີຄົນອອກສຽງສະຫຼະນີ້ໄດ້ຢ່າງຖືກຕ້ອງຕາມເດີມດັ່ງລາວຫຼາຍຖິ່ນທີ່ສະເໜີມາ, ສະນັ້ນ ຄ່າຂອງສະຫຼະ ໃx ຍັງມີຫຼາຍ ນອກຈາກມີຄ່າຕໍ່ພາສາ, ຕໍ່ວັດທະນະທຳແລ້ວ ຍັງມີຄ່າຕໍ່ປະຫວັດຕົວອັກສອນລາວ; ສະຫຼະ ໃx ເຖິງວ່າເປັນພຽງສະຫຼະດຽວໃນພາສາລາວ ແຕ່ເຊື່ອວ່າຈະມີຄ່າມະຫາສານສຳລັບຄຳຊູ ຫຼື ອ້າງອີງໃຫ້ແກ່ການສ້າງໜັງສືລາວວ່າ ລາວສ້າງ ແລະສ້າງຕາມພາສາລາວ ແຕ່ໃດໆ ແລ້ວໃຫ້ເປັນແບບແກ່ຜູ້ອື່ນ ໄດ້ຖອນແບບ ຫຼືກ່າຍເອົາໄປໃຊ້ຕາມ, ລາວເຮົາຄົງເປັນເຈົ້າຂອງທີ່ສ້າງອັກສອນລາວທີ່ມີ ໃX ນີ້ດ້ວຍຄວາມທີ່ຕົນເປັນຫຼັກແລະເປັນເຈົ້າຂອງສຽງນີ້ຢູ່ມາແຕ່ໃດໆແລ້ວ. ສະຫຼະ ໃx ຍັງມີຄ່າແຫ່ງສັກສິຂອງຄວາມເປັນວັດທະນະທຳ, ເປັນອັກສອນແລະເປັນຕົວສະແດງຂອງສຽງ /aɔ/ ນີ້ໃນພາສາລາວຢູ່ສະເໝີໄປ.

ນີ້ ບໍ່ແມ່ນບັນຫາພາສາລາວ

ຫາກພາສາລາວແມ່ນຄົນຜູ້ໜຶ່ງ ເຮົາກໍ່ໜ້າສົງສານ ເພາະໄປໃສມາໃສກໍ່ມີແຕ່ຜູ້ຈົ່ມໃຫ້ວ່າ ມີແຕ່ຄວາມຜິດ. ຜູ້ທີ່ມີໜ້າທີ່ຄົ້ນຄວ້າພາສາລາວ ກໍ່ບໍ່ໄດ້ເມີນເສີຍດັ່ງທີ່ມີຄົນເວົ້າ ຈຶ່ງນຳພາສາລາວມາກວດກາເບິ່ງວ່າໄດ້ຂາດ

ອັນໃດ. ເມື່ອກວດເບິ່ງເປັນເລື່ອງໆໄປເຊັ່ນ: ຈຳນວນໜ່ວຍສຽງ, ຈຳນວນວັນ-ນະຍຸດ, ຈຳນວນຄຳ, ຄວາມໝາຍຈົນເຖິງປະໂຫຍກ ກໍ່ເຫັນວ່າທຸກສ່ວນມີຄວາມສົມບູນ. ໃນສ່ວນຂອງສະຫຼະກໍ່ເຫັນວ່າ: ສະຫຼະ x̊, x̌ ຈົນຮອດ ໄx, ໃx ຕ່າງກໍ່ຍັງມີຢູ່ດັ່ງເຄີຍ, ໃນສ່ວນຂອງຄຳສັບຍິ່ງເຫັນວ່າ ໃນພາສາລາວມີຄຳຢ່າງ ອຸດົມສົມບູນ, ບາງແນວໃນພາສາເພິ່ນມີໜ້ອຍ ເຮົາພັດມີຫຼາຍ ຫາກໃຊ້ບໍ່ຮູ້ ເລືອກກໍ່ຈະເກີດເປັນຟຸ່ມເປັນເຟືອຍກໍ່ມີຄື: ຊິກງິກເຊົ້າເງົ້າ,ເຊັກເງັກ,ເຊິບເງິບ, ຊາບງາບ,ເຊ້ວເງ້ວ, ຈາດລາດ, ຈິດລິດ, ປ່າງງ່າງ, ແປ່ງແງ່ງ, ອາບຟາບ, ອູບ ຟູບ, ເອບເຟບ,ແອັບແຟັບ, ຕ້ອບຍ້ອບ, ແຕັບແຍັບ, ຕ່ອງແຕ່ງ, ໂຕ່ງໂຕ້ຍ, ໂອດໂປດ, ອູດປູດ, ແອດແປດ, ເອດເປດ. . . ພ້ອມນີ້ຍັງພົບຊຸມຄຳທີ່ເກາະໝູ່ ເຊັ່ນ: ແຕກສະລຸຜຸຟ່າຍ, ພີ່ນ້ອງປ້ອງປາຍ, ຕົບແຂ່ງແຂ່ງຂາ, ຫົວໝົ້ນກົ້ນຕັ້ງ, ຈົ່ມວ່າດ່າປ້ອຍ, ຂີ້ຂ້າໜ້າຂ້ອຍ, ລັກມິກຈິກຫໍ່, ໜ້າສິດຕາຊື່ນ, ໄປລ້ຳມາດາຍ, ເຮັດຫຼົ້ນກິນແທ້, ເຮັດຫູເບົາເອົາງ່າຍ,ຊູຊີຮີນະ ແລະອີກຫຼາຍຄຳ. ກຸ່ມນີ້ກໍ່ບໍ່ອຶດ ບໍ່ຢາກ ພໍແຕ່ວ່າຕ້ອງການໃຊ້ອັນໃດກໍ່ມີພ້ອມໄວ້ໃຫ້.

ແຕ່ເຖິງຢ່າງນັ້ນກໍ່ຍັງຄິດວ່າ ສຽງຈົ່ມຕິໃຫ້ພາສາລາວວ່າມີຄວາມຜິດ, ພາສາລາວຮູ້ເຊື່ອງອຳຂໍ້ຜິດພາດເປັນຫຼືບໍ່ ຈົ່ງກວດເບິ່ງອີກຕໍ່ໄປ. ໃນທີ່ສຸດກໍ່ພົບຄື: ພາສາລາວບາງຄຳມີຢູ່ແລ້ວ ແຕ່ບໍ່ໄດ້ເຄື່ອນເໜັ້ງຫຼາຍ ຈົນພາໃຫ້ເກົ່າ ເຊັ່ນຊຸມ ຄຳ: ເຝື້ອ, ທ່ອງ, ລົມແດງ, ໄໝຫຍິບ, ມິດສົ້ມ, ໄມ້ປ່ອງ, ຫຼ້ຽ, ກູ່ນ,ເຫິງ,ຟ້າຍ,ຝານ,ອ່າວ ແລະ ອີກຫຼາຍໆຄຳ. ສາຍເຫດທີ່ບໍ່ໄດ້ເໜັ້ງແມ່ນຜູ້ເອົາມາໃຊ້ມີໜ້ອຍເຂົ້າ, ຜູ້ໃຊ້ບາງຄົນມັກໄປເອົາຄຳອື່ນມາໃຊ້ແທນສະເໝີ ເຊັ່ນ: ເຝື້ອ ກໍ່ເອົາຄຳວ່າ ເມກ ມາໃຊ້ແທນ, ລົມແດງ ກໍ່ເອົາ ພາຍຸ; ປ໋ວ ກໍ່ເອົາ ຮັກສາ ມາແທນ; ນົບ ກໍ່ເອົາໄຫວ້; ມິດສົ້ມ ກໍ່ເອົາ ມິດແດງ; ເຫິງ ກໍ່ເອົາ ນານ; ໄໝຫຍິບ ກໍ່ເອົາ ດ້າຍ ມາແທນ, ອ່າວ ກໍ່ເອົາຂ້ອນຂ້າງມາໃຊ້ແທນ ແລະອີກຫຼາຍຄຳກໍ່ພົບແບບນີ້. ສະນັ້ນຈົ່ງເຫັນວ່າຄຳລາວຊຸມໜຶ່ງບໍ່ສູ້ໄດ້ເໜັ້ງ ນັ້ນ ແມ່ນຍ້ອນຜູ້ໃຊ້ບໍ່ສູ້ເອົາມາໃຊ້ ແລ້ວຫາເອົາຄຳອື່ນມາໃຊ້ແທນ ບໍ່ແມ່ນ

ຍ້ອນມັນອຶດຄຳ; ເບິ່ງມາຮອດຊຸມຄຳທີ່ໃຊ້ສະຫຼະ ໄx ແລະ ໃx ກໍ່ພົບວ່າມີຄ່າ ດັ່ງເຄີຍເຊັ່ນຄຳ: ຫ່ວງໃຍ, ສົ່ງໄສ, ວິໄຈ, ສິດໃສ, ນຳໃຊ້,ໄຊ້ໜີ້, ປັບໃໝ, ເສັ້ນ ໄໝ, ໃຕໄກ່. ປັດໄຈ, ວິໄນ, ຫວັ່ນໄຫວ, ໄສ້ຕິ່ງ, ໄສ້ບິກ, ໃຍແມ່ງມຸມ,ໄຂ ຄວາຍ, ໄລປະຕູ, ໄລນ້ຳ, ໄລແມ່ງດັ້ນ,ໄສໄຍ,ໄອ,ໄຝ,ປັບໃໝ,ໃຈຄວາມ ແລະ ອື່ນໆ. ໃນກຸ່ມນີ້ກໍ່ພົບບາງຄຳເຊິ່ງໄດ້ຮັບການເຂົ້າໃຫວຮັບໃຊ້ເປັນປະຈຳ ແຕ່ ເຫັນໂສມບໍ່ເຕັມຮູບ ເຊັ່ນ: ສົ່ງໄສ ກໍ່ເປັນຮູບ:ສົ່ງໃສ; ຫ່ວງໃຍ ກໍ່ເປັນຫ່ວງໄຍ ບາງເທື່ອກໍ່ເປັນ ຫວງໄຍ ຊ້ຳ, ປັບໃໝ ກໍ່ເປັນ ປັບໄໝ; ລຳໄສ້ ກໍ່ເປັນລຳ ໃສ້,ປະຊາທິປະໄຕ ກໍ່ເປັນ ປະຊາທິປະໃຕ . . ການທີ່ຮູບຖືກປ່ຽນນີ້ ແມ່ນປ່ຽນ ຍາມທີ່ມີຜູ້ເອົາໄປໃຊ້ ບາງຄົນກໍ່ຮັກສາ ໃຊ້ຕາມຮູບຄຳເດີມ ແຕ່ບາງຄົນກໍ່ປ່ຽນ ຕາມໃຈຄິດ. ກໍລະນີທີ່ພົບນີ້ ກໍ່ແມ່ນຍ້ອນຜູ້ໃຊ້ບາງຄົນເຊັ່ນກັນ.ຜູ້ທີ່ມັກໃຫ້ເກີດ ແນວນີ້ ແມ່ນຍ້ອນຄວາມບໍ່ສູ້ໃສ່ໃຈຫຼື ເພາະຄວາມມັກຂຽນແບບບໍ່ຫາຮູ້ຕຳລາ ກໍ່ມີ ແລະກໍ່ຄົງແມ່ນຜູ້ທີ່ໃຊ້ການຂຽນແບບຕາມຄິດເອງນີ້ ທີ່ມັກຕິພາສາລາວ ວ່າບໍ່ຊັດເຈນ,ບໍ່ມີແບບແຜນ,ບໍ່ມີໄວຍາກອນ ແທນທີ່ຈະຕິຕົນເອງ. ເມື່ອໄປພົບ ຄຳໃນຊຸມສະຫຼະ ເx໋ງ ແລະ x̊ , x̃ ກໍ່ເຫັນອີກ ເຊິ່ງເປັນກໍລະນີດຽວກັນກັບຊຸມ ໄx, ໃx ເຊັ່ນກັນ. ຄື ເພິ່ງພໍໃຈ ກໍ່ຖືກປ່ຽນດ້ວຍ ພຶ່ງພໍໃຈ, ເດີກດຳບັນ ກໍ່ເປັນ ດຶກດຳບັນ; ນ້ຳເມິກ ກໍ່ເປັນ ມຶກ ຄືຄຳຂອງພາສາເພິ່ນ.

ຄວາມຜິດທີ່ກວດເຫັນຍັງມີຫຼາຍຢ່າງ ແຕ່ພາສາລາວບໍ່ໄດ້ເຮັດຜິດ ຄຳ ດຽວກັນມີເທື່ອໃຊ້ຖືກ ມີເທື່ອໃຊ້ຜິດນັ້ນແມ່ນຍ້ອນຜູ້ໃຊ້, ພາສາດຽວກັນມີຜູ້ໃຊ້ ມ່ວນ ໃຊ້ບໍ່ມ່ວນ ກໍ່ແມ່ນຍ້ອນຜູ້ໃຊ້; ລະຫວ່າງພາສາ ກັບຄວາມຮູ້ພາສາຂອງ ບຸກຄົນແລະການໃຊ້ພາສາແມ່ນເປັນກໍລະນີຕ່າງຫາກັນ,ໃນພາສາໄດ້ມີຄຳອັນ ອຸດົມສົມບູນແຕ່ຄົນພັດໄດ້ຄຳຈາກພາສາຢູ່ໃນຕົວບໍ່ຫຼາຍກໍ່ຍາກທີ່ຈະໃຊ້ພາສາ ໃຫ້ໄດ້ຢ່າງເລິກເຊິ່ງເຖິງຖອງ;ຫາກຮູ້ຄວາມໝາຍຂອງຄຳບໍ່ຄັກແນ່ ເມື່ອນຳຄຳ ນັ້ນໄປໃຊ້ກໍ່ຍາກທີ່ຈະໃຫ້ໄດ້ຄວາມຊັດເຈນ. ຫາກຄິດຈະຕິ ຫຼື ແປງ ກໍ່ຄົງປ່ຽນ ເປົ້າໄປໃສ່ຜູ້ໃຊ້ຄົງຖືກກວ່າ, ຂໍໃຫ້ຊ່ວຍນຶກສະເໝີວ່າ ການໃຊ້ພາສາອອກໄປ

ນອກຈາກມັນມີບົດບາດຕໍ່ຄວາມຖືກຄວາມຜິດຂອງການສື່ຄວາມໝາຍໃຫ້ຜູ້ອື່ນແລ້ວ ພາສາທີ່ໃຊ້ໄປນັ້ນກໍ່ ສະທ້ອນຄືນໃຫ້ເຫັນຄວາມຖືກ, ຄວາມຜິດຂອງ ຄວາມຄິດ, ຄວາມຮັບຜິດຊອບ,ວັດທະນະທຳ,ຄວາມຮູ້, ທັດສະນະ, ຄວາມໃສ່ໃຈຂອງຜູ້ໃຊ້ຕໍ່ຜອ່ານ,ຜູ້ຟັງເຊັ່ນກັນ.

ຄຳທີ່ມີຜູ້ເຂົ້າໃຈມັກຫຼົງ
ລະຫວ່າງ ພາສາ ກັບ ໜັງສື

ຄຳວ່າ ໜັງສື ຫຼື ອັກສອນ ເມື່ອຍິນຄຳໃດໜຶ່ງໃນນີ້ ໂດຍທົ່ວໄປກໍ່ຮູ້ວ່າ ແມ່ນຫຍັງ ແຕ່ພໍມາເວົ້າວ່າ ພາສາ ຄົນລາວຫຼາຍໆຄົນ ກໍ່ຍັງເຂົ້າໃຈວ່າແມ່ນ ໜັງສື ຫຼື ອັກສອນ ເຊັ່ນກັນ. ຜ່ານມາຜູ້ຂຽນເອງກໍ່ເຄີຍມີຜູ້ຖາມ ເລື່ອງພາສາ ລາວ ແຕ່ເອົາການຂຽນມາຖາມ. ຄວາມເຂົ້າໃຈເລື່ອງໜັງສື ແລະ ພາສາຫາກ ຍັງເປັນສະພາບນີ້ຢູ່ໃນສັງຄົມລາວ ກໍ່ສະແດງວ່າການພັດທະນາຄວາມເຂົ້າໃຈ ຢູ່ໃນຂະບວນການຮຽນ, ການສຶກສາພາສາໃນລາວເຮົາຍັງເຂົ້າໃຈບໍ່ຖືກເລື່ອງ ໂດຍສະເພາະ ການພັດທະນາຄວາມເຂົ້າໃຈເລື່ອງ. ຄຳວ່າ ໜັງສື ແລະ ພາສາ ທັງທີ່ຮູບຄຳ, ສຽງ ແລະ ຄວາມໝາຍ ຕະຫຼອດເຖິງທີ່ມາຂອງຄຳກໍ່ລ້ວນແຕ່ ຕ່າງກັນ ແຕ່ເປັນຫຍັງຄົນລາວຫຼາຍຄົນພັດເຂົ້າໃຈວ່າແມ່ນອັນດຽວກັນ ໂດຍ ສະເພາະເຂົ້າໃຈເລື່ອງໜັງສືວ່າແມ່ນ ພາສາ. ການເປັນເຊັ່ນນີ້ຜູ້ສຶກສາເຫັນວ່າ ຄົງເກີດມາຈາກສາເຫດບາງປະການທີ່ສຳຄັນດັ່ງນີ້:

ໜຶ່ງ: ເພາະທີ່ມາຂອງແຕ່ລະຄຳນີ້ ເປັນຄຳຮັບມາຈາກພາສາອື່ນ; ຄື ຄຳ ວ່າ ໜັງສື ເປັນຄຳທີ່ຮັບມາຈາກພາສາຈີນບູຮານ ຕະຫຼອດຮອດຄຳວ່າ ເມິກ, ສື ແລະເຈ້ຍ ກໍ່ແມ່ນຄຳຈີນຫໍ້ ທີ່ລາວຮັບມາໃຊ້. ຄຳວ່າ ອັກສອນ ທີ່ຂຽນຕາມສຽງ ລາວນີ້ ໄດ້ຮັບມາຈາກພາສາ ປາລິ ແລະ ສັນສະກິດ ທີ່ຂຽນເປັນ ອັກສຣ; ຄຳ ວ່າ ພາສາ ກໍ່ເປັນຄຳທີ່ຮັບມາຈາກປາລິເຊັ່ນກັນ. ແຕ່ເດີມມາ ລາວເຮົາເຄີຍມີ ຄຳວ່າ "ຄວາມ" ເຊິ່ງໝາຍເຖິງ ອັນຮູ້, ເລື່ອງຮູ້ ເປັນຊື່ເອີ້ນຄືກັບຄຳວ່າ ພາສາ ຫຼື Langguage. ຕົວຢ່າງ: ຄວາມລາວ , ຄວາມຈີນ ກໍ່ໝາຍເຖິງພາສາລາວ, ພາສາຈີນ. ການທີ່ລາວໄດ້ຮັບຄຳວ່າ ໜັງສື, ອັກສອນ ແລະ ພາສາ ຈາກຊາດ ອື່ນມານັ້ນ ອັນດີກໍ່ແມ່ນມັນໄດ້ເປັນສິ່ງເສີມສ້າງຄວາມມາກມາຍ, ມັ່ງມີ ແກ່ຄັງ ຄຳສັບໃຫ້ພາສາລາວໄດ້ມີຄຳຫຼາຍຂຶ້ນ, ມີອັນໃຊ້ເພີ່ມຂຶ້ນ. ແຕ່ດ້ານຈຳກັດກໍ່ມີ; ຄື ເຮົາຈະໄດ້ພຽງຄວາມໝາຍຫຼັກຂອງຄຳ ເທົ່ານັ້ນ; ແຕ່ສ່ວນປະກອບ (Features)ຂອງມັນ ອັນເປັນສິ່ງຍິກຍ່ອຍທີ່ລະອຽດໃນຄວາມໝາຍຂອງຄຳ ນັ້ນແມ່ນບໍ່ສາມາດຮູ້ໄດ້ໝົດຄືກັບຄຳທີ່ເກີດໃນພາສາແມ່(Mother tonge) ຂອງຕົນ, ສະນັ້ນ ກໍ່ພາໃຫ້ເຂົ້າໃຈຕໍ່ຄວາມໝາຍລະຫວ່າງຄຳ ທີ່ຮັບມານຳກັນນີ້ ເກີດຫຼົງໄດ້ງ່າຍ.

ສອງ: ໃນແຕ່ລະວັນ ພວກເຮົາເຄີຍຍິນຄຳວ່າ ພາສາ ຢູ່ເປັນປະຈຳກວ່າ ຄຳວ່າ ໜັງສື ເຊັ່ນ ຮຽນພາສາລາວ, ພາສາອັງກິດ, ພາສາຕ່າງປະເທດ. . . ໃນ ເວລາຮຽນພາສານັ້ນພັດໄດ້ເລີ່ມຮຽນ ຕົວຂຽນ ແລະ ແອບອ່ານ ແຕ່ມັກເວົ້າວ່າ ຮຽນພາສາ, ບໍ່ສູ້ເວົ້າວ່າຮຽນຕົວໜັງສື, ຮຽນຂຽນຕົວໜັງສື. ການຮຽນຕົວຂຽນ, ໜັງສື ໃຊ້ເວລາບໍ່ດົນກໍ່ຮູ້ ແລະ ຈື່ ຈາກນັ້ນກໍ່ຮຽນເລື່ອງຂອງພາສາໄປເລີຍ, ຄຳ ວ່າໜັງສື (Alphabet ຫຼື Letter) ພັດບໍ່ສູ້ໄດ້ຍິນເລື້ອຍສ່ຳກັບຄຳວ່າ ພາສາ, ຮຽນຕົວໜັງສືກໍ່ວ່າຮຽນພາສາຢູ່ຕະຫຼອດ. ສະນັ້ນ ໂອກາດທີ່ຈະເຮັດໃຫ້ຄົນຫຼົງ ເລື່ອງໜັງສືກັບພາສາຈະມີຫຼາຍທີ່ສຸດ.

ສາມ: ໃນວັດຈະນານຸກົມພາສາລາວເຫຼັ້ມຕ່າງໆຍັງບໍ່ພົບວ່າມີການນິຍາມ

ໃຫ້ຮູ້ວ່າ ພາສາ ແມ່ນຫຍັງແທ້,ຢ່າງມີກໍ່ພຽງແຕ່ວ່າ ພາສາ:ແມ່ນຄຳເວົ້າ,ແມ່ນ ສຽງເທົ່ານັ້ນໂດຍບໍ່ສາມາດນິຍາມໃຫ້ລະອຽດວ່າແມ່ນສຽງຊະນິດໃດ,ສຽງທີ່ມະ ນຸດສ້າງອອກຢ່າງມີການກຳນົດ,ມີແບບແຜນແລະມີກົດແນວໃດ,ໃນສຽງທີ່ເປັນ ພາສານັ້ນໆແມ່ນມັນມີຄົ້ນຄວາມຖີ່ສະເພາະຕົວ,ຄົ້ນນັ້ນມັນໄປບັນທຶກໄວ້ໃນສະ ໝອງ,ການຮັບຮູ້ພາສາແລະການຈະເວົ້າອອກໄປກໍ່ແມ່ນໃຊ້ຄົ້ນຕົວນັ້ນ.

ຄຳວ່າ ໜັງສື ກໍ່ເຊັ່ນກັນ ຍັງບໍ່ພົບຄຳນິຍາມຫຼືອະທິບາຍວ່າ ໜັງສື ແມ່ນຕົວຂີດຫຼືແຕ້ມທີ່ໝາຍໃຫ້ສຽງໃດໜຶ່ງຂອງພາສາ,ຕົວອັກສອນກໍ່ໝາຍເຖິງ ຕົວທີ່ຂຽນໝາຍໃຫ້ສຽງ,ມັນເອງບໍ່ແມ່ນພາສາເປັນພຽງເຄື່ອງໝາຍທີ່ໃຊ້ສື່ໃດ ໜຶ່ງຂີດຫຼືຂຽນເປັນຮອຍເພື່ອເປັນສັນຍາລັກໃຫ້ສຽງພາສາ,ຕົວອັກສອນຫຼືໜັງສື ມີຂຶ້ນແມ່ນຍ້ອນໝາກຜົນຂອງການແຕ້ມທີ່ຫາແບບ ຫາຮູບອອກມາໂດຍໃຊ້ສື ເປັນຕົວລະບາຍໃສ່,ຄົນຫາຮູ້ເຮັດໜັງສືເປັນເມື່ອສີ່ພັນກວ່າປີກ່ອນນີ້ແຕ່ພາສາ ແມ່ນມີຂຶ້ນພ້ອມກັບຄາວທີ່ມະນຸດເກີດມາໃນໂລກ;ຄຳວ່າ ໜັງສື ໝາຍເຖິງ Letter ຫຼື Script

ເພື່ອແກ້ໄຂການຫຼົງຄຳຊຸມນີ້ ກໍ່ມີແຕ່ສ້າງເອກະສານທາງພາສາໃຫ້ຫຼາຍ, ເຮັດປຶ້ມວັດຈະນານຸກົມທີ່ບັນຈຸຄຳໃຫ້ຫຼາຍ ແລະເພີ່ມເຕີມຫຼືດັດແກ້ບາງຄຳນິ-ຍາມ. ຄວາມເຂົ້າໃຈຕາມການຫຼົງເລື່ອງແນວນີ້ກໍ່ພາໃຫ້ເຂົ້າໃຈຕໍ່ພາສາລາວບໍ່ ຖືກເລື່ອງ, ການຂຽນບໍ່ຖືກກໍ່ກ່າວວ່າໃຫ້ພາສາລາວ.

ວິຊາໃນພາສາສາດໄດ້ມີການສຶກສາໃຫ້ຮູ້ເລື່ອງໃດເປັນເລື່ອງນັ້ນ,ຄຳໃດ ກໍ່ມີຄວາມໝາຍຕາມຄຳນັ້ນ,ຫາກເບິ່ງພາສາໄປຕາມສາດຂອງມັນກໍ່ຍາກທີ່ຈະ ເວົ້າເລື່ອງການຂຽນ,ຕົວຂຽນແມ່ນເລື່ອງພາສາ. ການຂຽນຜິດບໍ່ແມ່ນພາສາຜິດ ແລະ ການໃຊ້ພາສາໄດ້ຜິດ ກໍ່ບໍ່ແມ່ນຍ້ອນຕົວຂຽນ, ສາເຫດຂອງການຂຽນບໍ່ ຖືກ ແລະ ສາເຫດທີ່ໃຊ້ພາສາຜິດແມ່ນເກີດຈາກບຸກຄົນເປັນສຳຄັນເຊິ່ງຄົນນັ້ນ ມີການຮຽນຮູ້ແນວໃດ, ສ່ຳໃດ ແລະໄດ້ວັດທະນະທຳແຫ່ງພຶດຕິກຳດ້ານພາສາ ແບບໃດກໍ່ພາໃຫ້ພາສາທີ່ສະແດງອອກກໍ່ຕາມນັ້ນ.

ຈິດຕະສາດ, ສະຕິ ແລະ ຄວາມຮູ້ ເປັນພື້ນຖານທີ່ສຳຄັນແກ່ການໃຊ້ພາສາ

ການເວົ້າ ຫຼື ການຂຽນ ລ້ວນແຕ່ເປັນການໃຊ້ພາສາເພື່ອສະແດງຄວາມນຶກຄິດ, ຄວາມຮູ້ຂອງບຸກຄົນອອກສູ່ຄົນອື່ນໃນສັງຄົມ. ນັກພາສາສາດໄດ້ແຍກລະຫວ່າງ ສຽງເວົ້າ, ຕົວອັກສອນທີ່ຂຽນ ແລະ ສະຕິຄວາມຮູ້, ຈິດຕະສາດ ອອກເປັນຢ່າງໆ; ສຽງ ແລະ ອັກສອນເປັນສິ່ງສຳລັບສະແດງອອກເອີ້ນວ່າ: (performent) ໝາຍວ່າບໍ່ທັນແມ່ນທາດຂອງພາສາທີ່ແທ້ຈິງເທື່ອ ພຽງແຕ່ເປັນອັນສະແດງອອກມາໃຫ້ຜູ້ອື່ນຮູ້, ສ່ວນທີ່ຢູ່ໃນຕົວໂດຍສະເພາະໃນເຂດຮັບຮູ້ ແລະ ຮູ້ໃນສະໝອງນັ້ນໄດ້ເປັນຕົວສຳຄັນເພື່ອບັນຊາ, ຜະລິດ ແລະ ສັ່ງການໃຫ້ສະແດງອອກ, ເຫັນວ່າ ຄຸນນະພາບໃນສິ່ງສະແດງຈຶ່ງຂຶ້ນກັບຄຸນນະພາບຂອງສະຕິ, ຄວາມຮູ້ ແລະ ຈິດຕະສາດຂອງບຸກຄົນ. ສະນັ້ນ ຫາກສົນໃຈການໃຊ້ພາສາຂອງຄົນ ຈຶ່ງຕ້ອງສຶກສາເລື່ອງຈິດຕະສາດ,ຄວາມຮູ້ ແລະ ສະຕິ ຂອງບຸກຄົນໄປນຳກັນ.

ຕາມການສຶກສາດ້ານພາສາສາດເຊິ່ງຈິດຕະວິທະຍາໄດ້ໃຫ້ຮູ້ວ່າ ຈິດຕະ-ສາດ, ສະຕິ ແລະ ຄວາມຮູ້ ມີຄວາມສຳຄັນທີ່ສຸດຕໍ່ກັບການໃຊ້ພາສາ ແລະ ການຂຽນກໍ່ແມ່ນສິ່ງໜຶ່ງຢູ່ໃນຂະບວນອັນນີ້, ການຈະສຶກສາການຂຽນຖືກ ຫຼື

ຂຽນບໍ່ຖືກ ກໍ່ຄວນໄປສຶກສາໃນເລື່ອງຈິດຕະສາດ, ສະຕິ ແລະ ຄວາມຮູ້; ໃນ ນັ້ນສາມາດເບິ່ງໃຫ້ຮູ້ວ່າເປັນຄວາມຕັ້ງໃຈ, ຄວາມຊິນເຄີຍ ຫຼື ເພາະຄວາມບໍ່ຮູ້. ຄວາມຊິນເຄີຍ ສາມາດຄຸມການປະຕິບັດໃຫ້ເໝືອນຄວາມຕັ້ງໃຈເຮັດ ແລະ ຄວາມຮູ້ກໍ່ເປັນຕົວອຳນວຍໃຫ້ແກ່ການຄົ້ງໄວ້ ຫຼື ປ່ຽນແປງໃໝ່ຢູ່ໃນຕົວຂອງ ບຸກຄົນເຊັ່ນກັນ.

ດ້ານຈິດຕະສາດທີ່ມີຕໍ່ການຂຽນ: ຕາມປົກກະຕິຄົນເຮົາຈະຮັບຮູ້ເອົາ ຂໍ້ມູນອັນທີ່ມາເຖິງຕົວກ່ອນ, ເພາະຕົວທີ່ມາກ່ອນນີ້ໄດ້ມີໂອກາດເຂົ້າໄປຈັບຝັ່ງ ຢູ່ທີ່ບ່ອນຮັບຮູ້ (memory) ໃນສະໝອງ, ເມື່ອມັນຢູ່ຫັ້ນດົນ ຫາກບໍ່ມີຕົວອື່ນ ມາປ່ຽນແທນມັນກໍ່ຈະຝັ່ງແໜ້ນເຂົ້າ ພາໃຫ້ເກີດມີຮາກເຫງົ້າຈ່ອງຈຳໄວ້; ເມື່ອ ການຈຳໄວ້ນີ້ແໜ້ນເທົ່າໃດ ກໍ່ຍາກທີ່ຈະມີຕົວອື່ນມາແຊກເຂົ້າໄປປ່ຽນແທນໄດ້ ສະນັ້ນ ຈຶ່ງເກີດພາວະຄົ້ງເດີມ, ຮູ້ຕົວໃດກ່ອນກໍ່ຮູ້ແຕ່ຕົວນັ້ນໆ ເຖິງຕາມຫຼັງຈະ ມີຕົວອື່ນມາກໍ່ບໍ່ສາມາດເຂົ້າໄດ້ ເພາະບ່ອນຮັບຮູ້ນັ້ນແຈບ ແລະ ຕັນດ້ວຍຕົວ ເກົ່າທີ່ມີຮາກຝັ່ງໄວ້ຢ່າງດີແລ້ວ. ຈິດຕະສາດສ່ວນນີ້ກໍ່ມີຜົນຕໍ່ຕົວຂຽນ ບາງຄົນ ທີ່ເຄີຍກັບຮູບຂຽນ, ຕົວຂຽນອັນທຳອິດທີ່ເຂົ້າມາ ແລະ ເກີດຝັ່ງຮາກໄວ້ແລ້ວ ກໍ່ ຈະຍຶດຖືຕົວນັ້ນແບບນັ້ນ, ການຮັບເອົາອັນໃໝ່, ແບບໃໝ່ໄດ້ງ່າຍ ຫຼື ຍາກ ແມ່ນຂຶ້ນກັບລະດັບຄວາມແໜ້ນແກ່ນຂອງການຝັ່ງຮາກນີ້. ສະນັ້ນ ທ່ານ ກາຟິ ນ້ຳ ເດີຊູເຊ ນັກພາສາສາດຊື່ດັ່ງລະດັບໂລກ ຈຶ່ງຖືການປ່ຽນແປງແບບຂຽນຈາກ ອັນທີ່ເຄີຍນັ້ນວ່າ ແມ່ນຂະບວນການປ່ຽນແປງທາງຄວາມຊິນເຄີຍຢ່າງໜຶ່ງ.

ດ້ານສະຕິທີ່ມີຕໍ່ການຂຽນ: ສະຕິເປັນຕົວຄວບຄຸມ ແລະ ການປະພຶດ ໃນການຂຽນ ຫາກເມື່ອໃດສະຕິບໍ່ໄດ້ຕາມໄປກັບທຸກອັນທີ່ຂຽນ ກໍ່ແນ່ນອນວ່າ ມີບາງຕົວຂຽນຈະໄດ້ຮັບພາວະລຳພັງ ແລະ ໄດ້ຮູບຂຽນຕາມຄວາມລຳພັງນັ້ນ. ການທີ່ພາໃຫ້ຂຽນຜິດ, ພິມຜິດດ້ວຍຕົວເອງ ຫຼື ສິ່ງທີ່ຜູ້ອື່ນຂຽນຖືກ ມາແລ້ວ ກໍ່ ເກີດພິມຜິດໃຫ້, ຜູ້ອື່ນໄດ້ຮັບຄວາມຜິດທາງພາສາຍ້ອນ ກໍ່ມີສາເຫດຈາກ ຄວາມອ່ອນຍານ ຫຼື ອາການລຳພັງດ້ານສະຕິນັ້ນເອງ.

ຄວາມຮູ້ທີ່ມີຕໍ່ການຂຽນ: ຄວາມຮູ້ແມ່ນຕົວກຳກັບຄຸນນະພາບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມຄົບຖ້ວນແນ່ນອນຂອງປິດ. ສິ່ງທີ່ມີໃນຄວາມຮູ້ໄດ້ເປັນຕົວທີ່ມາປ້ອນແກ່ການຂຽນ, ການເວົ້າ. ຫາກຄວາມຮູ້, ສິ່ງທີ່ຮູ້ໜ້ອຍອັນທີ່ຈະນຳມາໃຊ້ຂຽນ ຫຼື ເວົ້າກໍ່ຈະອຶດ; ຄວາມຮູ້ຫຼົ່ມ,ຮູ້ກະຍິກກະຍ່າງກໍ່ພາໃຫ້ສິ່ງຂຽນອອກກໍ່ໄດ້ຕາມຄວາມຫຼົ່ມ ແລະຄວາມກະຍິກກະຍ່າງນັ້ນ. ສະນັ້ນ ຫາກຄວາມຜິດໃນການຂຽນ ຫຼື ການໃຊ້ພາສາເກີດຂຶ້ນ ກໍ່ຄວນເບິ່ງວ່າ ມັນເກີດຂຶ້ນຍ້ອນສາເຫດຈາກດ້ານໃດ ດັ່ງທີ່ສະເໜີມານີ້.

ເບິ່ງຈາກແງ່ພາສາສູ່ ວັດທະນະທຳ ໃນຄຳ: ຫຼັງຄາ ແລະ ຊາຍຄາ

ຄຳໃນພາສາລາວທີ່ເກີດມີຂຶ້ນເພາະວັດທະນະທຳເປັນຕົວສຸມສ້າງ ນັ້ນພົບວ່າມີຕັ້ງຫຼາຍຮ້ອຍຄຳ. ຄຳວ່າ ຫຼັງຄາ ແລະ ຊາຍຄາ ທີ່ເປັນຄຳກ່ຽວກັບເຮືອນຮ້ານກວ້ານເຊຍຂອງລາວນີ້ ກໍ່ນັບວ່າເປັນຊຸມຄຳທີ່ມີຂຶ້ນເພາະວັດທະນະທຳລາວສ່ວນນີ້ຊິ້ຫາພາໄດ້.

ຄຳວ່າ ຫຼັງຄາ ໃນນີ້ ຫຼັງ ໝາຍເຖິງດ້ານທີ່ກົງກັນຂ້າມກັບໜ້າ; ດ້ານທີ່ເປັນອັນຮອງຮັບຕໍ່ສິ່ງອື່ນຈາກພາຍນອກທີ່ມາສູ່ ຫຼື ດ້ານທີ່ລັບບ່ຽງຢູ່.

ຄຳວ່າ ຊາຍຄາ ໃນນີ້ ຊາຍ ໝາຍເຖິງຕົ້ນສຸດຂອງແນວ, ຂອບຂອງແດນ.

ບັດນີ້ມາສູ່ຄຳວ່າ ຄາ ຄຳນີ້ຄົງມີຄວາມ ອ່າວຍາວ ເນື່ອງຈາກວ່າມັນມີ ແງ່ມອງທາງຄວາມໝາຍທີ່ເປັນໄດ້ຫຼາຍຢ່າງ.

ແງ່ໜຶ່ງ: ຄາ ໝາຍເຖິງຄ້າງຢູ່, ບໍ່ໄປບໍ່ມາ.

ແງ່ສອງຄື: ຄາ ເປັນຊື່ສິ່ງຂອງທີ່ເຮັດດ້ວຍໄມ້ສຳລັບສຸບໃສ່ຄໍໝູ ເພື່ອກັນ ໝູບໍ່ໃຫ້ລອດຜ່ານຮົ້ວຜ່ານຊ່ອງໄດ້ ເອີ້ນວ່າ ຄາໝູ.

ແງ່ສາມ: ມີຜູ້ເບິ່ງວ່າ ຄາ ຄົງພັ້ນມາຈາກຄຳວ່າ ຄ່າ ທີ່ໝາຍເຖິງສິ່ງ ສຳລັບຢ້າງຊີ້ນ,ຢ້າງໝາກເຜັດ ຫຼື ຮົມຄ້ວນ ທີ່ເຮັດເຢິງໄວ້ດ້ວຍການມັດຫ້ອຍ ໃຫ້ຢູ່ເທິງເຕົາໄຟ ແລະເປັນບ່ອນມ້ຽນສິ່ງທີ່ຫຼີກໜູກັດ, ຫຼີກແມວຈົກເອົາ. ການທີ່ມອງຕາມແງ່ນີ້ກໍ່ເພາະວ່າ ຫຼັງຄາ ກໍ່ຄື ຄ່າ ອັນເປັນສິ່ງຄ້າງຢູ່ຢ່າງນັ້ນ ຄື ກັບມັນຄາຢູ່ບໍ່ຂຶ້ນບໍ່ຕົກ, ບໍ່ໂອນເອນ.

ແຕ່ລະແງ່ມອງກໍ່ມີເຫດຜົນ ແຕ່ກໍ່ໜ້າຄິດຕື່ມວ່າ ຄ່າຢ້າງຊີ້ນກັບຄາໝູ ແລະ ຄາ ທີ່ໝາຍເຖິງ ຄ້າງ ນັ້ນມັນຈະກ່ຽວກັບ ຫຼັງ ແລະ ຊາຍ ແນວໃດ, ມາ ກ່ຽວເພາະຫຍັງ? ຄວາມໝາຍຊຸມນີ້ບໍ່ໜ້າຈະມີສ່ວນມາກ່ຽວ ເພາະມັນບໍ່ມີ ຫຍັງກ່ຽວເຖິງເຮືອນຄົນ, ສ່ວນຄຳວ່າ ຫຼັງຄາ ແລະ ຊາຍຄາ ແມ່ນຄຳທີ່ກ່ຽວກັບ ເຮືອນຄົນ ດັ່ງນັ້ນ ໜ້າຈະປ່ຽນແງ່ມອງໄປສູ່ອັນໃໝ່. ຫາກມອງວ່າ ຫຼັງຄາ ແລະ ຊາຍຄາ ແມ່ນສ່ວນທີ່ເຮັດສຳລັບມຸງເຮືອນ ກໍ່ໜ້າຈະໄປສຶກສາໃນສິ່ງມຸງນັ້ນ ຈະເໝາະກວ່າ.

ແຕ່ໃດໆມາຄົນລາວມັກໃຊ້ໃບຫວາຍ, ຕອງຈິງ, ໃບຄໍ ແລະ ຫຍ້າຄາ ເປັນອັນມຸງເຮືອນໂດຍນຳມາຈ່າມ ຫຼື ໄພ. ບາງຖິ່ນກໍ່ໃຊ້ໄມ້ປ່ອງມາເຮັດຝ້າມຸງ ໃນນັ້ນຕົວທີ່ໃຊ້ຫຼາຍກວ່າໝູ່ໄດ້ແກ່ຫຍ້າຄາ ເພາະວ່າຫຍ້າຄາ ເກີດໄດ້ໃນທຸກ ພາກຂອງລາວ, ສ່ວນໃບຫວາຍ,ໃບຄໍ້ກໍ່ມີຈຳກັດພຽງບາງຖິ່ນ. ຄົງເປັນເພາະ ຫຍ້າຄາໄດ້ມີການຕິດພັນກັບດິນລາວ, ຄົນລາວເຊັ່ນນີ້ ໂອກາດທີ່ຈະໃຫ້ຫຍ້າ ຄາ ກາຍມາເປັນຕົວສຳຄັນໃນສິ່ງມຸງເຮືອນນັ້ນຈຶ່ງມີຫຼາຍທີ່ສຸດ; ຄາ ໃນຄຳວ່າ ຫຼັງຄາ ແລະ ຊາຍຄານັ້ນ ກໍ່ຄົງໄດ້ຄວາມໝາຍມາຈາກຄຳວ່າ ຫຍ້າຄາ ນີ້ເອງ.

ปะจุบันนี้ ຫຼ້ງຄາ, ຊາຍຄາໄດ້ເປັນສອງຄຳທີ່ຄົ້ງຢູ່ຢ່າງມີຖານະ ທີ່ແໜ້ນໃນພາສາລາວ ເຖິງເຮືອນລາວຈະມຸງດ້ວຍກະເບື້ອງ, ຊີແພັກ, ດິນຂໍ ຫຼື ສັງກະສີແລ້ວກໍ່ຕາມ ແຕ່ຄຳວ່າ ຫຼ້ງຄາ ແລະ ຊາຍຄາກໍ່ຍັງເປັນຊື່ເດີມທັ້ງໃຊ້ຢູ່ຢ່າງນັ້ນ.

ຜູ້ສຶກສາຢາກໃຫ້ຄຳລາວໂດຍທົ່ວທຸກຄຳ ຈົ່ງເປັນຢູ່ຢ່າງຄຳວ່າ ຫຼ້ງຄາ ແລະ ຊາຍຄານີ້ ກໍ່ຄົງຈະບໍ່ຫວັ່ນກົວຕໍ່ຄຳທີ່ຄ້າຍຄືກັນຈາກພາສາອື່ນຈະມາຊິ້ງແຊງບ່ອນ. ຄຳວ່າ ຫຼ້ງຄາ ແລະຊາຍຄາ ເປັນຄຳທີ່ຫຼອມໂດຍວັດທະນະທຳລາວ ສົມຄວນແລ້ວ ທີ່ໄດ້ຮັບຖານະວ່າເປັນຄຳລາວແທ້ມາແຕ່ໃດໆ.

ໂຈກ ຄຳລາວແທ້ແຕ່ໃດມາ

ໃນທຸກວັນນີ້ພົບວ່າ ການໃຊ້ຄຳວ່າ ແພ້ ຕາມຄວາມໝາຍເດີມທີ່ໝາຍເຖິງ ຊະນະ ນັ້ນໄດ້ຮັບການແຊກແຊງດ້ວຍຄຳຢ່າງດຽວກັນຈາກພາສາອື່ນເຊິ່ງໃຫ້ຄວາມໝາຍຂອງແພ້ເປັນໂຈກ. ຜົນຕາມມາກໍ່ເຫັນວ່າ ສະຖານະພາບຂອງຄຳວ່າ ແພ້ ເກີດຄວາມບໍ່ໝັ້ນຄົງ ພາໃຫ້ມີຜູ້ສົງໄສວ່າແມ່ນຊະນະ ຫຼື ເສຍ ພ້ອມກັນນັ້ນ ຄຳວ່າ ໂຈກ ເຊິ່ງເປັນຄຳລາວແທ້ມາແຕ່ໃດໆຍິ່ງຖືກລັບບັງຝັງແຈບເຂົ້າໄປຈົນເກືອບບໍ່ເຫັນຮອດສິ້ນ; ເບິ່ງແລ້ວສະຖານະພາບຂອງຄຳນີ້ຍິ່ງຊຸດໂຊມກວ່າຄຳວ່າ ແພ້ ໄປອີກ.

ແຕ່ເດີມມາພາສາລາວເຮົາ ເມື່ອມີຄຳວ່າ ແພ້ ຂຶ້ນມາກໍ່ຫາໄດ້ຄຳວ່າ ໂຈກ ມາໃຫ້ເປັນຄຳຄູ່ທີ່ກົງກັນຂ້າມດ້ານຄວາມໝາຍ. ຄຳວ່າ: ແພ້ ໝາຍເຖິງ ຊະນະ, ໄດ້ ສ່ວນ ໂຈກ ໝາຍເຖິງ ພ່າຍ, ບໍ່ແພ້,ເຮ່ຍໃຫ້ເພີ່ນ. ອັນທີ່ເຮັດໃຫ້ ຄຳທັງສອງເກີດພາວະຈະສູນຄວາມໝາຍເດີມ ຫຼື ກ້າວໄປສູນເສຍຄວາມເດີມ ນັ້ນ ພໍເຫັນສາເຫດດັ່ງນີ້:

ການມີຄຳວ່າ ຊະນະຈາກປາລີເຂົ້າມາ ກໍ່ພາໃຫ້ໃຊ້ຄຳວ່າ ຊະນະ ໝາຍຂຶ້ນ, ແລ້ວການໃຊ້ຄຳວ່າ ແພ້ ແນ່ນອນກໍ່ຕ້ອງໜ້ອຍເຂົ້າ.ຄວາມໜ້ອຍ ເຂົ້ານີ້ເອງພາໃຫ້ເກີດພາວະອ່ອອນແອຕໍ່ກັບການໃຊ້ຄວາມໝາຍຂອງຄຳນີ້ລົງ ໃນພາສາລາວ ແລະ ພາວະອ່ອນແອນີ້ ພາໃຫ້ເກີດການແຊກຊ້ອນດ້ວຍຄຳ ຢ່າງດຽວກັນຂອງພາສາອື່ນທີ່ມີອິທິພົນໃໝ່ແຜ່ເຂົ້າມາ, ບັດນີ້ຄວາມໝາຍຂອງ ຄຳວ່າ ແພ້ ຍິ່ງໄດ້ຮັບຜົນຮ້າຍຊ້ຳສອງຄື ໜຶ່ງ: ເກີດພາວະອ່ອນແອ ແລະ ແຄບ ເຂົ້າ; ສອງ: ປັ້ນທາງ, ປັ້ນເບື້ອງຂອງຄວາມໝາຍເດີມ. ຄວາມໝາຍທີ່ປັ້ນນັ້ນ ພາໃຫ້ເຂົ້າໃຈວ່າ ແພ້ ແມ່ນ ເສຍ, ສະນັ້ນ ກໍລະນີທີ່ເສຍກໍ່ມັກໃຊ້ຄຳວ່າ ແພ້ ຕາມຄຳເພີ່ນ. ການປັ້ນທາງຂອງຄວາມໝາຍນີ້ ຊ້ຳພໍດີເທົ່າກັບຄວາມໝາຍ ຂອງຄຳວ່າໂຈກ. ດ້ວຍເຫດນີ້ ເມື່ອມັກໃຊ້ ແພ້ ໃຫ້ແກ່ກໍລະນີເສຍແລ້ວ ຄຳວ່າ ໂຈກ ກໍ່ບໍ່ມີບ່ອນໃຊ້ ໝາຍວ່າບ່ອນຢູ່ເດີມຂອງຄຳວ່າ ໂຈກ ໄດ້ຖືກຢຶດຄອງ ຈາກຄຳອື່ນຈົນຊິໜົດ. ການເປັນເຊັ່ນນີ້ໃນທາງພາສາສາດເອີ້ນວ່າ: ການປ່ຽນ ແປງເພາະການເຂົ້າມາແທນທີ່ (Replace) ຂອງຄຳອື່ນ. ກ່າວມາຮອດນີ້ ຫາກ ປຽບເອົາຄຳວ່າ ໂຈກ ເໝືອນກັບຄົນຜູ້ເຊິ່ງມີບ່ອນຢູ່ເດີມກ່ອນແລ້ວມາແຕ່ໃດໆ ຕໍ່ມາກໍ່ຖືກສູນເສຍເພາະການບຸດຊີ້ງຂອງຄຳອື່ນ, ໂຕມາບຸດຊີ້ງນັ້ນບໍ່ເຄີຍມາ ສ້າງຄວາມແໜ້ນໃຫ້ພາສາເຮົາ. ບໍ່ວ່າແຕ່ຄົນ ພາສາກໍ່ມີອາການບຸດຊີ້ງ ຫາກ ເມື່ອໃດມີຄວາມລະເຫຼີງ,ການບຸດບຽນຈາກພາຍນອກກໍ່ຈະຕາມເຂົ້າມາໃນສິ່ງ ນັ້ນ, ອັນນີ້ແມ່ນໂລຊິກ.

ເມື່ອເປັນຄຳເຊື່ອມຈະໃຊ້ ກໍ ຫຼື ກ່ໍ

ສອງຄຳນີ້ ມີຜູ້ເວົ້າເລື້ອຍແຕ່ຍັງບໍ່ທັນເຫັນມີຜູ້ຂຽນເປັນບົດຊີ້ແຈງ ອອກມາເທື່ອ. ມື້ນີ້ເຮົາມາເວົ້າຄຳທັງສອງນີ້ດ້ວຍເຫດ ແລະ ຜົນທາງພາສາຈະ ສົມຄວນກວ່າ.

ຜ່ານມາໃນພາສາລາວເຄີຍພົບໃຊ້ທັງ ກໍ ແລະ ກ່ໍ ໃຫ້ເປັນຄຳເຊື່ອມ, ຜູ້ນິຍົມໃຊ້ ກໍ ແລະ ຜູ້ນິຍົມໃຊ້ ກ່ໍ ຕ່າງກ່ໍມີຂໍ້ອ້າງອີງທີ່ບໍ່ສູ້ເຂົ້າຄວາມກັນ. ຄືວ່າ ຜູ້ນິຍົມໃຊ້ ກໍ ໄດ້ມີຂໍ້ອ້າງວ່າໃຊ້ ກໍ ຖືກກວ່າ ເພາະຫາກໃຊ້ ກ່ໍ ຈະໄດ້ຄວາມ ໝາຍວ່າ: ສ້າງ, ເຮັດຂຶ້ນ ເຊັ່ນ: ກ່ໍສ້າງ, ກ່ໍຕິວ, ກ່ໍເລື່ອງ. ສະນັ້ນ ເພື່ອໃຫ້ຈຳ ແນກຄວາມໝາໄດ້ງ່າຍທັງເຫັນວ່າຖືກກວ່າຕ້ອງຂຽນວ່າ ກໍ ບໍ່ແມ່ນ ກ່ໍ. ສຳລັບ ຜູ້ໃຊ້ເບື້ອງທີ່ຮັບຮອງວ່າໃຊ້ ກ່ໍ ຖືກນັ້ນ ມີຂໍ້ອ້າງວ່າ ຫາກສັງເກດທີ່ການອອກ ສຽງນັ້ນ ໂດຍທົ່ວໄປຄົນລາວເຄີຍອອກສຽງເປັນເອກ ສະນັ້ນ ຕ້ອງມີໄມ້ເອກ, ໃນຄຳນີ້ການຂຽນກ່ໍຕ້ອງໃສ່ໄມ້ເອກເປັນ ກ່ໍ, ນີ້ເປັນຂໍ້ອ້າງອີງໜຶ່ງ. ຂໍ້ອ້າງອີງທົ່ວ ໄປພົບວ່າ ເປັນຂໍ້ອ້າງທີ່ສູ້ຄວາມກັນ ເຊັ່ນ ຜູ້ທີ່ວ່າໃຊ້ ກ່ໍ ແມ່ນບໍ່ຖືກ ເພາະ ກ່ໍ ໝາຍເຖິງ ກ່ໍສ້າງ, ກ່ໍຮ່າງສ້າງຕິວ, ກ່ໍເລື່ອງຕ່າງໆ ,ໃຊ້ ກໍ ຈະເປັນຄຳທີ່ຖືກຕ້ອງ .ເບື້ອງໜຶ່ງເບິ່ງຄຳວ່າ ກໍ ຍິ່ງມີຄວາມໝາຍຫຼາຍຢ່າງຄື ຄວາມໝາຍທີ່ເປັນນາມ ໄດ້ແກ່: ກໍໄມ້, ກໍມື້, ກໍມ່ວງ . . . ເປັນຄຳນາມອີກຄື: ຂີ້ກໍ ແລະ ເປັນໄດ້ທັງຄຳ ຄຸນສັບຄື: ເບິ່ງຈົນຕາກໍ ແລະອື່ນໆ. ສະນັ້ນ ຄວາມຄິດວ່າຈະຫຼີກການຈະຕຳ ກັບຄວາມໝາຍອື່ນນັ້ນແມ່ນຫຼີກບໍ່ໄດ້,ໃຊ້ ກ່ໍ ຫຼືໃຊ້ ກໍ ຄຳໃດກ່ໍລ້ວນແຕ່ມີແນວ

ຕຳກັບຄວາມໝາຍອື່ນ.

ຈາກທັດສະນະທັງສອງນີ້ ເຮົາມາຊອກຂໍ້ອ້າງອື່ນເພື່ອໄດ້ຂໍ້ສະຫຼຸບໃໝ່. ໃນພາສາໄທ ເພິ່ນກໍມີຄຳນີ້, ເມື່ອໃຊ້ມັນເປັນຄຳເຊື່ອມເພິ່ນບໍ່ໃຊ້ໄມ້ເອກ ຫຼື ບໍ່ ໃຊ້ສະຫຼະ x̀ ຢ່າງດຽວ ແລະຄຳນີ້ສຽງຂອງພາສາເພິ່ນກໍບໍ່ແມ່ນສຽງເອກ ຫຼື ສຽງ ກາງ ສະນັ້ນ ຈຶ່ງໃຊ້ໄມ້ຫັນອາກາດ ກໍ່ເຫັນວ່າເຂົ້າກັບສຽງພາສາເພິ່ນ.

ສ່ວນໃນພາສາລາວ ຜ່ານການກວດກາສຽງພາສາໄດ້ພົບວ່າໃນສຽງນີ້ ຄົນລາວສ່ວນຫຼາຍ ແລະ ຫຼາຍຖິ່ນອອກສຽງເປັນສຽງເອກຢ່າງຈະແຈ້ງ, ພ້ອມນີ້ ບາງເຂດບໍ່ອອກສຽງວ່າ ກໍ ຫຼື ກ໋ ແຕ່ອອກສຽງເປັນກ່າ ເຊັ່ນ: ຂ້ອຍກ່າຊິໄປ; ປີນີ້ ປີໜ້າກ່າຢ່າ; ເຮັດອັນໃດກ່າເຮັດໄດ້. ສຽງໃນຄຳນີ້ເປັນສຽງ**ເອກ**. ຈາກສິ່ງທີ່ພົບ ນີ້ຈະສາມາດຮູ້ໄດ້ວ່າ ຄຳນີ້ມີພື້ນຖານທາງສຽງເປັນສຽງ**ເອກ**; ສ່ວນສະຫຼະທີ່ ອອກເປັນ x̀ ຫຼື xา ນັ້ນ ເປັນສ່ວນປ່ຽນແປງຕາມບາງເຂດ. ສະນັ້ນ ການຂຽນ ໃນກໍລະນີ້ເມື່ອເປັນຄຳເຊື່ອມຄວນໃຊ້: **ກ່** ມີໄມ້ເອກ ເຊິ່ງເຫັນວ່າມີພື້ນຖານ ທາງສຽງທີ່ຈະແຈ້ງ, ການໃສ່ໄມ້ເອກໃນຄຳນີ້ສົມຄວນປະຕິບັດໂດຍທົ່ວກັນ ເມື່ອຜູ້ຂຽນໄດ້ໃສ່ໄມ້ເອກໃນຄຳນີ້ໄປແລ້ວ ແຕ່ໄດ້ຖືກລັບຫາຍໄປຍ້ອນຜູ້ຕີພິມ ຄົນອື່ນ, ຜູ້ທີ່ຈະໄປຊອກອັນລັບຫາຍນັ້ນມາໃຫ້ແທນກໍ່ຄົງເປັນໜ້າທີ່ຂອງຜູ້ ຕີພິມນັ້ນເອງ.

ຈະໃຊ້ຄຳໃດ ຈອງ ແລະ ຈ່ອງ

ຄຳວ່າ ຈອງ ແລະ ຈ່ອງ ບໍ່ແມ່ນຄຳໃໝ່ຂອງພາສາລາວ ແຕ່ລະຄຳໃນນີ້ ລ້ວນແຕ່ມີປະຫວັດການເກີດ ແລະ ໃຊ້ມາຢ່າງດົນນານ. ພົບເຫັນດັ່ງນີ້:

ໜຶ່ງ: ຈອງ ເປັນຊື່ຂອງສິ່ງຕັກຂອງກິນ ຈາກພາຊະນະໜຶ່ງສູ່ອີກພາຊະນະໜຶ່ງ ໂດຍໃຫ້ປະລິມານໜາຍ ບໍ່ແມ່ນຈາກພາຊະນະສູ່ປາກໂດຍສະເພາະ. ຈອງ ລາວເຮັດດ້ວຍໄມ້ທ້ຽຕິວ ຫຼື ສ່ວນໃບເຮັດດ້ວຍໂປະໜາກພ້າວ ສ່ວນກັ່ນເຮັດ ດ້ວຍໄມ້.

ສອງ: ຄຳວ່າ ຈອງ ຍັງພົບໃຊ້ເປັນຄຳປະສົມທີ່ເປັນນາມຄື ໝາກຈອງ ຄວາມ ໝາຍນີ້ເປັນນາມສະເພາະ.

ມາສູ່ຄຳວ່າ ຈ່ອງ ຄຳນີ້ເປັນຄຳກິລິຍາ ໝາຍເຖິງ ອາການໃຊ້ມືຈັບນ່ຽວ ສິ່ງໃດໜຶ່ງໄວ້, ດຶງໄວ້.

ອັນທີ່ມາກ່ຽວເຖິງການໃຊ້ສອງຄຳນີ້ຄື ກໍລະນີມີຜູ້ເຫັນສິ່ງໜຶ່ງແລ້ວເກີດ ຄວາມຕ້ອງການສິ່ງນັ້ນ ແຕ່ບໍ່ທັນເອົາ ຫຼືບໍ່ທັນຊື້ເອົາໄປເທື່ອ ແລ້ວໄປສະແດງ ຄວາມຢາກໄດ້, ຢາກມີສິດຄອບຄອງໃນສິ່ງນັ້ນດ້ວຍວິທີຂຽນ ຫຼືໝາຍແບບໃດ ໜຶ່ງໄວ້ເພື່ອໃຫ້ຜູ້ອື່ນຮູ້, ຕິວສະແດງນີ້ ຍັງມີບັນຫາວ່າຈະເອີ້ນວ່າແນວໃດ, ຂຽນ ແນວໃດ, ຮູບໃດ ຈະໃຊ້ ຈອງ ຫຼື ຈ່ອງ? ບາງຄົນໃຊ້ຄຳວ່າ ຈອງ ບາງຄົນໃຊ້ຄຳ ວ່າ ຈ່ອງ ແລະ ບາງຄົນກໍ່ຍັງໃຊ້ແດ່ສິງໄສແດ່ ວ່າຄຳໃດແທ້ເປັນຄຳແມ່ນ ເປັນ ແບບສອງຈິດສອງໃຈໃນການໃຊ້.

..

ຜູ້ທີ່ເຄີຍໃຊ້ຄຳວ່າ: ຈອງ ກໍ່ມີຂໍ້ອ້າງເຊັ່ນກັນ ແຕ່ມີຄຳອ້າງບໍ່ໜາຍປານໃດຄື ໃນສິ່ງໂຄສະນາ ໂດຍສະເພາະ ຍາມຜ່ານພາສາໄທ ເມື່ອເຫັນຮູບຂຽນວ່າ ຈອງ ເຊັ່ນນັ້ນກໍ່ໃຊ້ຕາມເພິ່ນ.

ສ່ວນຜູ້ທີ່ໃຊ້ຄຳວ່າ: ຈ່ອງ ມີຂໍ້ອ້າງວ່າ ຄຳນີ້ມັນມີຮູບພາບແບບປຽບທຽບທີ່ ເໝືອນກັບການນ່ຽວໄວ້, ດຶງໄວ້ ຢ້ານສິ່ງນັ້ນຈະໄປກ່ອນທີ່ຕົນເອງຈະເອົາ ແລະ ເປັນການສະແດງເຈດຈຳນົງເພື່ອລັດສິດຂອງຜູ້ອື່ນທີ່ຢາກມາເອົາສິ່ງນັ້ນ ເຊັ່ນກັນ.

ຕໍ່ກໍລະນີນີ້ ຫາກອີງໃສ່ວິທີການສຶກສາປຽບທຽບຄວາມໝາຍຂອງຄຳ ແລະ

ປະຫວັດຄວາມໝາຍຂອງຄຳ ມາໄຈ້ແຍກ ກໍ່ຈະສາມາດແກ້ໄຂໄດ້.

ຄວາມອ້າງຂອງສອງກະແສຄວາມຄິດ ເທິງນີ້ເຫັນວ່າ ຊຸມຜູ້ໃຊ້ຄຳວ່າ ຈ່ອງ ທີ່ໃສ່ໄມ້ເອກໃນຄຳ ໄດ້ມີຖານທາງມະໂນພາບອ່າວໜັກແໜ້ນກວ່າເພາະມີທ່າ ຈັ້ງຢູ່ບົນພາສາລາວ.

ແຕ່ເມື່ອຫັນຄືນ ເບິ່ງໃນພາສາລາວໃນກໍລະນີນີ້ ແຕ່ກີ້ແມ່ນເຮົາເຄີຍໃຊ້ ຄຳວ່າ"ເຈ້ົາ"ມາແລ້ວເຊັ່ນ: ໄປເຈ້ົາບ່ອນໃຮ່, ມັກບ່ອນໃດເຈ້ົາເອົາບ່ອນຫັ້ນ; ໄປ ເຈ້ົາສາວ ແລະອື່ນໆ. ການເຈ້ົານັ້ນບໍ່ຖ້າຂຽນເປັນໜັງສືພຽງແຕ່ໃຊ້ເຄື່ອງໝາຍ ໃດໜຶ່ງທີ່ສາມາດໃຫ້ຜູ້ອື່ນຮູ້ກໍ່ໄດ້. ການເຈ້ົາແມ່ນໄດ້ປະຕິບັດມາກ່ອນ ທີ່ລາວ ບໍ່ທັນມີຕົວໜັງສືພຸ້ນ. ຫາກຫັນມາໃຊ້ຄຳວ່າ **"ເຈ້ົາແລ້ວ"** ໃນກໍລະນີນີ້ ຄຳວ່າ ຈອງ ແລະ ຈ່ອງ ກໍ່ຈະກັບໄປຢູ່ຕາມບ່ອນເດີມຂອງໃຜມັນເອງ, ມັນຈະບໍ່ກາຍ ມາເປັນຄຳທີ່ໃຊ້ແລ້ວມີບັນຫາດັ່ງທີ່ວ່າມາໃນນີ້. ພາສາແມ່ນສິ່ງທີ່ບໍ່ຮູ້ສຶກຕໍ່ ຄວາມຍຸດຕິທຳ ແລະຄວາມສະເໝີພາບ ມີແຕ່ຜູ້ໃຊ້ທີ່ຈະຮູ້ ແລະ ເອົາສິ່ງນັ້ນ ໄປໃຫ້ແກ່ພາສາ.

ລັກສະນະທາງຄວາມໝາຍຂອງ ຄຳສັ້ພະຍາງ ໃນພາສາລາວ

ໂດຍພື້ນຖານຄຳໃນພາສາລາວເປັນຄຳໂດດ ແຕ່ສິ່ງນີ້ບໍ່ໄດ້ຈຳກັດ ຕົວຢູ່ຢ່າງນີ້ສະເໝີໄປ ເຊັ່ນດຽວກັບຄຳໃນພາສາຄຳຕິດຕໍ່(Agglutinative)

ເຊິ່ງກໍ່ບໍ່ໄດ້ໝາຍວ່າຈະມີຄຳຕິດຕໍ່ກັນເປັນຄຳຍາວລ້ວນໆ ດັ່ງຄຳໃນພາສາມົ້ງ ໂກນ, ກາຊັກ, ໂປຣ໋ງດ, ເກົາຫຼີ . ..ໃນນັ້ນຄຳໂດດກໍ່ມີໜ້າຍເຊັ່ນກັນດັ່ງຄຳທີ່ສະເໜີໃນປະໂຫຍກຕົ້ນນີ້ ສະແດງວ່າໃນພາສາລາວກໍ່ມີພະຍາງທີ່ຕິດຕໍ່ກັນເປັນຄຳຍາວເຊັ່ນກັນ ດັ່ງຕົວຢ່າງນີ້: ມະລ້ອມກ້ອມກ້ອຍ, ມະລຶງຕຶງຕັງ, ມະລຶບປຶບປັບ, ມະໂຄ່ງມະເຄ່ງ, ມະລຸງນຸງນັງ, ອິລຸງພຸງພົ້ວ, ມ້ອງມະແງ້ງ, ມະນຶງມະນຶດ, ມະລຸກຄຸກຄັກ, ມະເລເຊນັງ, ມະຫັບມະຫາຍ, ມະຍຸມະຍະ ແລະ ອີກຕັ້ງໜ້າຍໆສິບຄຳ. ຈາກຕົວຢ່າງນີ້ຈະປະຕິເສດວ່າ ຊຸມນີ້ບໍ່ແມ່ນຄຳ, ແມ່ນສຳນວນ (Idiom) ຫຼື ປະໂຫຍກຍ່ອຍ (Clause) ກໍ່ເປັນໄປໄດ້ ເພາະໂຄງສ້າງ ແລະ ຄວາມໝາຍຂອງມັນແຕ່ລະອັນ ບໍ່ແມ່ນສຳນວນ ຫຼື ປະໂຫຍກຍ່ອຍເລີຍ; ອາດຈະເບິ່ງຊຸມນີ້ວ່າ ແມ່ນຄຳປະສົມທີ່ມີສີ່ພະຍາງ, ໃນນັ້ນພະຍາງຊຸມໜຶ່ງເຮັດໜ້າທີ່ຂະຫຍາຍຄວາມໝາຍຕົ້ນໃຫ້ເປັນແນວໂຕງໂຕຍ; ຫາກເບິ່ງແບບນີ້ ຄົງເຂົ້າຄວາມໄດ້ກວ່າ. ຜູ້ສຶກສາເອງຮັບຮອງວ່າຄຳປະສົມທີ່ມີສີ່ພະຍາງແບບນີ້ ກໍ່ເປັນຮູບຄົງທີ່ອັນໜຶ່ງຢູ່ໃນພາສາລາວ. ຄຳວ່າ ຄົງທີ່ ໃນນີ້ມີສອງຢ່າງ ໄດ້ແກ່:

ໜຶ່ງ ຄົງທີ່ ດ້ານໂຄງສ້າງຄື ຕ້ອງມີສີ່ພະຍາງສະເໝີ ບໍ່ສາມາດຕັດ ຫຼື ຕື່ມພະຍາງອື່ນເຂົ້າໄປ; ການຕັດ, ປ່ຽນ ຫຼື ຕື່ມ ລ້ວນແຕ່ແຕະຕ້ອງເຖິງຄວາມໝາຍ.

ສອງ: ຄຳທີ່ມີສີ່ພະຍາງນີ້ ໄດ້ເປັນແບບໜຶ່ງອັນແນ່ນອນ ຢູ່ໃນພາສາລາວແທ້ບໍ່ແມ່ນມີບາງເທື່ອບາງຍາມ. ໃນນີ້ ສິ່ງທີ່ໜ້າສົນໃຈເພື່ອສຶກສາໃນຄຳຊຸມນີ້ແມ່ນ ຄວາມໝາຍຂອງມັນ, ເຊິ່ງຜູ້ສຶກສາເອງເຫັນວ່າ ມີຄວາມໝາຍຕາມແນວໂຕງໂຕຍນັ້ນ ມັນແມ່ນແທ້ບໍ່ ແລະ ແມ່ນແນວໃດ. ເຮົາສາມາດເຂົ້າສູ່ການສຶກສາເລື່ອງນີ້ໄດ້ໂດຍແບບເລັ່ງລັດຄື ລັດໄປສູ່ທີ່ສ່ວນປະກອບຂອງຄຳກ່ອນ.

ແຕ່ລະຄຳພົບວ່າ ມີການຊ້ຳພະຍັນຊະນະ ແລະ ສະຫຼະຢ່າງສະເໝີ. ໃນນັ້ນ ພົບພະຍາງທຳອິດມັກຂຶ້ນດ້ວຍ ມະ ເຊັ່ນ: ມະລຶງນຶງນຶດ, ມະລ້ອງງ້ອງ

ແງ້ງ . . . ໃນນີ້ເຫັນວ່າມີ ມະ ຂົ້ນໜ້າ ແລະ ຊ້ຳ ນ ກັບ ນ; ຊ້ຳ ງ ກັບ ງ; ຊ້ຳສະ ໜະ x, ສະໜະ xອງ. ການຊ້ຳເຊັ່ນນີ້ພາໃຫ້ເກີດການສຳພັດກົມກືນທາງສຽງ, ການກົມກືນທາງສຽງລະຫວ່າງພະຍາງແມ່ນລັກສະນະສະເພາະຂອງການເກີດ ໂຕງໂຕຍ;ໂຕງໂຕຍ. ຈາກນີ້ກໍ່ໄປເບິ່ງຄວາມໝາຍແຕ່ລະຄຳ

ຄື: ມະລອງງ້ອງແງ້ງ ມີຄວາມໝາຍກ່ຽວກັບສິ່ງທີ່ເປັນເສັ້ນນ້ອຍໆ ແລະ ຄົດແບບກ້ຽວງໍ.

ມະລຸກຄຸກຄັກ ມີຄວາມໝາຍກ່ຽວກັບສິ່ງເປັນກ້ອນໜາຍກ້ອນທີ່ບໍ່ສ່ຳ ກັນແຕ່ຢູ່ຕິດຕໍ່ກັນພາໃຫ້ເກີດເປັນອັນສູງອັນຕ່ຳບໍ່ຮາບ.

ມະລຸງນຸງນັ້ງ ມີຄວາມໝາຍກ່ຽວກັບສິ່ທີ່ເປັນເສັ້ນຢູ່ຢ່າງໄຂ່ວກັນ ຫຼື ເກາະໃສ່ກັນທັ້ງເນ້ັ້ງຢາຍໄປທົ່ວ.ແລະຍັ້ງມີໜາຍໆຄຳ.

ໜ້ງແຕ່ເບິ່ງສ່ຳນີ້ ກໍ່ເຫັນວ່າຄຳສີ່ພະຍາງໃນພາສາລາວ ມີຄວາມໝາຍ ໃຫ້ຮູ້ສິ່ງທີ່ຕິດຕໍ່, ຕໍ່ເນື່ອງ, ແຕ່ການຕໍ່ເນື່ອງກັນນັ້ນ ເປັນຢ່າງບໍ່ສະໝ່ຳສະເໝີ, ບໍ່ເປັນລະບຽບ; ອາດໄຂວ່, ສິນ ຫຼື ຄົດງໍ້ງ້ຽວ ເປັນຕົ້ນ.

ວັດທະນະທຳກ່ຽວຂ້ອງກັບ
ການໃຊ້ພາສາໃຫ້ເກີດຄວາມເປັນເອກະພາບກັນ

ການທີ່ຄົນຜູ້ໜຶ່ງຈະສາມາດ ໃຊ້ພາສາໄດ້ນັ້ນ ຕ້ອງການໃຊ້ເລວລາ ໜາຍປີເພື່ອຮຽນຮູ້, ສຳລັບການຈະເຮັດໃຫ້ຄົນໃນຊາດໃຊ້ພາສາເປັນເອກະ

ພາບໄດ້ນັ້ນ ຍັງຕ້ອງການເວລາຫຼາຍກວ່າຕັ້ງຫຼາຍທົບ, ຫາກໃນຊາດໜຶ່ງມີພາສາແຕກຕ່າງກັນໄປເປັນຖິ່ນໆ ບໍ່ພຽງເທົ່ານັ້ນຫາກຍັງປະກອບມີຫຼາຍເຜົ່າ ເຊິ່ງແຕ່ລະເຜົ່າກໍ່ສະແດງວ່າມີພາສາທີ່ບໍ່ແມ່ນອັນດຽວກັນ ກໍ່ຍິ່ງຈະເຫັນການໃຊ້ພາສາໃນຊາດນັ້ນໃຫ້ເກີດເປັນເອກະພາບໄດ້ຍິ່ງລຳບາກ ແລະ ຕ້ອງການເວລາໂດຍຈະກຳນົດຈຳນວນປີທີ່ຈະເຮັດໃຫ້ໄດ້ນັ້ນຍາກ.

ລາວເຮົາເປັນຊາດທີ່ມີຄົບຕາມກໍລະນີທີ່ເວົ້າໃນນີ້. ການມີຄວາມແຕກຕ່າງຂອງພາສາຖິ່ນ ທັງພາສາເຜົ່າກໍ່ສະແດງເຖິງຄວາມແຕກຕ່າງທາງຄວາມຄິດ (Concept) ແລະ ການມອງໂລກ(World view);ສຳລັບ ທາງຄວາມຄິດແມ່ນມີພາລະໃນການຊ່ວຍໃຫ້ຄິດໄດ້ອັນຖືກ, ອັນມີເຫດມີຜົນ, ອັນກະທັດຮັດ, ເປັນລຳດັບ ຫຼື ບໍ່; ສ່ວນການມອງໂລກ ກໍ່ມີພາລະຊ່ວຍໃຫ້ການເບິ່ງຄົນ, ເບິ່ງເລື່ອງ, ເບິ່ງອັນເປັນມາ ແລະ ເປັນໄປ, ເບິ່ງເປັນອັນດີ ຫຼື ເປັນອັນຮ້າຍ,ເບິ່ງອັນເປັນປະໂຫຍດຫຼືບໍເປັນປະໂຫຍດສຳລັບຕົນຫຼືສັງຄົມ ສະນັ້ນເມື່ອພາສາມີຄວາມແຕກຕ່າງກັນກໍ່ເຂົ້າໃຈໄດ້ວ່າ ໃນສິ່ງດຽວກັນກໍ່ຈະເບິ່ງບໍ່ຄືກັນ, ຄິດບໍ່ຄືກັນ ກໍ່ເປັນໄດ້ ແລະ ກໍ່ຈະມີອັນຄື, ອັນຄ້າຍຄື ກໍ່ເປັນໄດ້. ພາສາເປັນຕົວກຳນົດຄວາມຄິດຂອງຄົນຜູ້ໜຶ່ງໆ ເຊິ່ງຈະປ່ຽນອອກກໍ່ຍາກ ແລະ ຈະເອົາພາສາອັນໃໝ່ແທນເຂົ້າໃຫ້ຕົວໄດ້ກ່ອນ ກໍ່ແສນຍາກ. ດ້ວຍເຫດນີ້ ຄົນຖິ່ນໃດກໍ່ຈະຖືວ່າ ພາສາຖິ່ນຂອງຕົນຖືກ ແລະ ສິ່ງໃດທີ່ໄດ້ຮຽນຮູ້ກ່ອນ ກໍ່ຈະວ່າໂຕນັ້ນເປັນແນວນັ້ນກ່ອນ,ແມ່ນຕົວຖືກກວ່າຢູ່ສະເໝີ. ນີ້ແມ່ນປະກົດການທາງສັງຄົມ ແລະ ຈິດຕະສາດແຫ່ງພາສາໃນການຮັບຮູ້ ແລະ ສຳນຶກ.

ໃນຄວາມເປັນຈິງ ພາສາ ແລະ ຄວາມຄິດ ຕົວທີ່ຖືກກວ່ານັ້ນ ແມ່ນ ພາສາ ແລະ ຄວາມຄິດ ທີ່ສອດຄ່ອງກັບຖິ່ນອື່ນໆໄດ້ຢ່າງກວ້າງຂວາງ ເຊິ່ງຜ່ານມາເຮົາເອີ້ນສິ່ງນີ້ວ່າ: ລັກສະນະມະຫາຊົນໃນພາສາ.ຫາກຕ້ອງການເພື່ອໃຊ້ມັນສື່ສານໃນສັງຄົມຕົວທີ່ບໍ່ສອດບໍ່ຄ່ອງນັ້ນ ລ້ວນແຕ່ກາຍເປັນສ່ວນທີ່ຄວນປັບ ເພາະຄວາມບໍ່ເອກະພາບໃນການໃຊ້ພາສາມັກເກີດຍ້ອນສ່ວນນີ້. ການ

ປັບນີ້ບໍ່ຕ້ອງການບັງຄັບກໍ່ປັບໄດ້ ຫາກເຂົ້າໃຈໃນເລື່ອງທຳມະຊາດແຫ່ງພາສາ ວ່າ ອັນທີ່ໄດ້ຮັບຮູ້ມາກ່ອນນັ້ນ ມັນຄົງມີຕົວບໍ່ຄືກັນບາງອັນ ຫຼື ຫຼາຍອັນ, ການ ເຂົ້າໃຈເຊັ່ນນີ້ ຫາກຫັນເປັນວັດທະນະທຳສະເພາະເລື່ອງ ແລະ ມີຢູ່ປະຈຳຕົວ ຈົນທົ່ວທຸກຄົນໄດ້ເມື່ອໃດ ການປັບຄວາມແຕກຕ່າງທາງການໃຊ້ພາສາກໍ່ຈະ ເກີດຂຶ້ນໄດ້ງ່າຍ,ຕົວທີ່ໄດ້ປັບຫາກມີຫຼາຍແນ່ນອນວ່າ ການປັບກໍ່ຈະບໍ່ງ່າຍ ມັນອາດປຽບໄດ້ກັບການປະຕິວັດສະເພາະຕົວທີ່ຈະປ່ຽນແທນຕົວເກົ່າດ້ວຍຕົວ ໃໝ່. ພ້ອມນີ້ ການຄິດ ແລະ ການເລືອກຄຳ, ຮຶ່ນຕອງຄວາມໝາຍກ່ອນການ ໃຊ້ ດ້ວຍຕົວ ຫຼື ດ້ວຍປຶ້ມຕຳລາຫາກເກີດເປັນວັດທະນະທຳປະຈຳຕົວອີກ ກໍ່ ຈະເຮັດໃຫ້ຄວາມເປັນເຈົ້າການເພື່ອຄວາມເປັນເອກະພາບໃນການໃຊ້ພາສາ ເກີດຂຶ້ນໄດ້.

ວັດທະນະທຳສອງຢ່າງນີ້ ຫາກຍັງເກີດບໍ່ໄຄ່ວ່ຄົນ ການຈະສ້າງຄວາມ ຜິດ, ຄວາມບໍ່ເອກະພາບໃນການໃຊ້ພາສາ, ການດຶງຄຳອັນບໍ່ຈຳເປັນຈາກພາ ສາອື່ນມາແທນຄຳທີ່ມີແລ້ວຂອງພາສາຕົນ ຕະຫຼອດເຖິງການຂຽນຕາມຄວາມ ເຄີຍອັນເກົ່າໆ,ຂຽນຕາມແຕ່ຫັນ ຕາມແຕ່ຄິດ ກໍ່ຈະມາເກີດໃຫ້ເຫັນເປັນປະຈຳ. ສັກສິ ແລະ ວຸດທິພາບຂອງບຸກຄົນມີໄດ້ກໍ່ຕໍ່ເມື່ອມີມະຫາຊົນ, ການຍຶດຢ່າງຕັ້ງ ໃຈໃນສິ່ງທີ່ບໍ່ຄ່ອງກັບຍຸກສະໄໝນັ້ນບໍ່ສູ້ສອດຄ່ອງກັບຄວາມເປັນມະຫາຊົນໃນ ພາສາ.



ຄຳວ່າ ກໍ ແລະ ກໍ່ ໃນພາສາລາວ

ຄຳວ່າ ກໍ ໃນພາສາລາວເປັນຄຳໜຶ່ງທີ່ມີຫຼາຍຄວາມໝາຍ ໃນນີ້ເປັນໄດ້ທັງຄຳນາມເຊັ່ນ: ກໍໄມ້, ກໍໄຜ່, ຂີ້ກໍ; ເປັນຄຳຄຸນສັບໄດ້ຄື: ຕາກໍ ແລະ ເປັນໄດ້ທັງຄຳລັກສະນະນາມຄື: ໄມ້ຫ້າກໍ, ໄຜ່ສິບກໍ. ແຕ່ສິ່ງທີ່ໜ້າສຶກສາໃນນີ້ຄືຄຳວ່າ: ກໍ ເມື່ອໃຊ້ເປັນຄຳນຳໜ້າຊື່ເຊັ່ນ: ກໍໄມ້, ກໍຂ່າ, ກໍໄຜ່; ແລະໃຊ້ເປັນລັກສະນະນາມເຊັ່ນ: ໄມ້ຫ້າກໍນັ້ນ ຄຳວ່າ: ກໍ ໃນນີ້ໝາຍເຖິງຕົ້ນດຽວ ຫຼື ຫຼາຍຕົ້ນຮວມເຂົ້າກັນ?

ການອະທິບາຍເລື່ອງນີ້ໄດ້ອີງໃສ່ການ ສຳຫຼວດຂໍ້ມູນຈາກການໃຊ້ຄຳນີ້ໃນຫຼາຍຖິ່ນເຊິ່ງໄດ້ພົບດັ່ງນີ້: ພາສາຖິ່ນເໜືອ ແລະ ໄຕຕ່າງໆທີ່ຢູ່ພາກຕາເວັນອອກຂອງລາວໃຊ້ຄວາມໝາຍຂອງຄຳວ່າ ກໍ ໝາຍເຖິງໄມ້ທີ່ເປັນຕົ້ນ ຫຼື ກິກ ອັນດຽວ; ເຖິງຈະເອົາຄຳນີ້ເອີ້ນໃຫ້ໄມ້ປ່ອງ ຫຼື ພືດທີ່ເກີດຢູ່ຮ່ວມກັນເຊັ່ນ: ກໍໄຜ່, ກໍກ້ວຍ, ກໍເຂົ້າ, ກໍສີໃຄ ແຕ່ກໍຍັງມຸ່ງໝາຍເຖິງພຽງຕົ້ນດຽວຢູ່ໃນນັ້ນເທົ່ານັ້ນ. ຫາກຢາກໝາຍເຖິງຫຼາຍຕົ້ນເກີດຢູ່ຮ່ວມກັນເອີ້ນວ່າ: ສຸມ ເຊັ່ນ: ສຸມໄຜ່. ສຸມອ້ອຍ, ສຸມສີໃຄ, ສຸມກ້ວຍ. ເມື່ອໃຊ້ເປັນຄຳລັກສະນະນາມເຊັ່ນ: ອ້ອຍສອງກໍ, ສີໃຄສອງກໍ ເຊັ່ນນີ້ກໍ່ໝາຍເຖິງ ອ້ອຍສອງຕົ້ນ, ສີໃຄສອງຕົ້ນ ເຊັ່ນເດີມ. ໃນກໍລະນີໃດໆຄຳວ່າ ກໍ ຈະບອກຈຳນວນໃຫ້ພຽງຕົ້ນດຽວເທົ່ານັ້ນ. ການໃຊ້ຄວາມໝານຍຂອງຄຳວ່າ ກໍ ທີ່ໝາຍເຖິງໄມ້ຫຼາຍຕົ້ນເກີດຢູ່ຮ່ວມກັນນັ້ນໄດ້ພົບວ່າມີຜູ້ໃຊ້ຫຼາຍ ຢູ່ຕາມລ້ອງແມ່ນ້ຳຂອງເຂດວຽງຈັນລົງໄປ, ແຕ່ພາສາລາວທີ່ໃຊ້ຕາມແຖບນີ້ກໍ່ໃຊ້ບໍ່ຄືກັນໝົດ,ມີຄຳວ່າ ກໍ ແລະ ສຸມ ສອງຄຳເຊັ່ນ: ກໍອ້ອຍ ຫຼື ສຸມອ້ອຍ, ກໍໄຜ່ ຫຼື ສຸມໄຜ່ ແຕ່ຄຳທັງສອງກໍ່ໄດ້ໝາຍເຖິງຫຼາຍຕົ້ນ ບໍ່ແມ່ນຕົ້ນດຽວ. ເມື່ອຢາກບອກລັກສະນະນາມ ກໍ່ໃຊ້ຄຳວ່າຕົ້ນ ຫຼື ລຳເອີ້ນໃຫ້.ຕົວຢ່າງ ໄມ້ສອງຕົ້ນ, ໄມ້ໄຜ່ຫ້າລຳ...

ຈາກທີ່ພົບວ່າ ກໍ ມີຫັ້ງຄວາມໝາຍທີ່ບອກເຖິງຕົ້ນດຽວ ແລະ ຫຼາຍຕົ້ນຮວມ ກັນເຊັ່ນນີ້ ຫາກເບິ່ງຜ່ານກົດເກນທາງຄວາມໝາຍແລ້ວແມ່ນເປັນໄປບໍ່ໄດ້ໃນ ພາສາດຽວ,ຄຳດຽວ ຈະມີຄວາມໝາຍເປັນເຊັ່ນນີ້. ແຕ່ແນວໃດປະຈຸບັນເຮົາ ພົດເຫັນມັນເປັນໄປເຊັ່ນນີ້ໃນບາງເຂດ ສະນັ້ນ ຈຶ່ງສົມຄວນສຶກສາເບິ່ງຫາສາ ເຫດພາຍນອກຂອງພາສານັ້ນກໍ່ຄື: ຜົນກະທົບຈາກພາສາອື່ນ ຄົງໄດ້ແກ່ຄຳອັນ ດຽວກັນໃນພາສາໄທ.

ຫາກເບິ່ງຄືນໃນປະຫວັດຄວາມໝາຍ ຄຳວ່າ: ສຸມ ທີ່ໝາຍເຖິງໄມ້ຫຼາຍ ຕົ້ນເຊິ່ງເກີດຢູ່ຮວມກັນ ແລະ ຄຳວ່າ: ກໍ ໝາຍເຖິງໄມ້ຕົ້ນດຽວນັ້ນ ຄົງເປັນ ຄວາມໝາຍເດີມກ່ວາໃນພາສາລາວ,ໃນຕໍ່ມາຄວາມໝາຍຂອງຄຳວ່າ: ສຸມຍັງ ຮັກສາໄວ້ດັ່ງເດີມ, ແຕ່ຄຳວ່າ ກໍ ຊ້ຳໄດ້ຮັບການແຊກແຊງທາງຄວາມໝາຍ ຈາກພາສາອື່ນທີ່ຢູ່ໃກ້ ພາໃຫ້ຄວາມໝາຍເດີມຍ້າຍທີ່ຈາກອັນທີ່ບອກວ່າໄມ້ ຕົ້ນໜຶ່ງກາຍເປັນຫຼາຍຕົ້ນ ແຕ່ໃນນັ້ນ ຄຳວ່າ ສຸມ ກໍ່ຍັງບໍ່ສູນຫາຍໄປຈົນໝົດ ເທື່ອ ສະນັ້ນ ຈຶ່ງພົບການໃຊ້ທັ້ງຄຳວ່າ ສຸມ ແລະ ກໍ ໃນຄວາມໝາຍດຽວກັນ. ເຖິງຢ່າງໃດເຮົາກໍ່ຫວັງວ່າ ຄວາມໝາຍຂອງຄຳວ່າ ກໍ ທີ່ຫຼົງກັນກັບພາສາເພີ່ນ ແຕ່ດົນແລ້ວນັ້ນ ກໍ່ຈະຫາຄືນມາໄດ້ດ້ວຍຄົນລາວທີ່ເປັນເຈົ້າຂອງພາສາຕົນ.



ສຶກສາ ຊົ່ນນີ້ອມີ ຕາມແງ່ວັດທະນະທຳ

ນີ້ອທີ່ມີໃນຕົວຂອງຄົນມີຊາວນີ້ອ ແຕ່ຊື່ທີ່ເອີ້ນຍັງບໍ່ພົບວ່າມີຮອດ ຊາວຊື່ຢູ່ໃນພາສາໃດ. ການເປັນເຊັ່ນນີ້ກໍ່ມີສາເຫດໂດຍເຫັນວ່າ ແມ່ນສາເຫດ ທາງວັດທະນະທຳເປັນສຳຄັນ.

ໃນວັດທະນະທຳຂອງໝາຍຊາດ ເຄີຍແຍກລະຫວ່າງມີກັບຕີນໃຫ້ມີ ຖານທາງວັດທະນະທຳຕ່າງກັນ ເຊິ່ງໃຫ້ຕີນຢູ່ໃນຖານະຕ່ຳກວ່າ, ຕີນເມື່ອໃຊ້ ໃນເຊິງວັດທະນະທຳໄດ້ເປັນການແທນໃຫ້ຄວາມຕ່ຳຊ້າ, ຄວາມຮຸນແຮງ ແລະ ຄວາມຢາກຮ້າຍແຝງນຳສະເໝີ. ສະນັ້ນ ເມື່ອເບິ່ງກັບມາສູ່ຊື່ຂອງນີ້ອມີ ໝາຍ ຊາດບໍ່ສາມາດໃຫ້ຊື່ຢ່າງຢ່າງດຽວກັນໄດ້, ມີແຕ່ເລືອກໃຊ້ບາງຄຳທີ່ເປັນຊື່ຂ ອງນີ້ອມີ ນອກນັ້ນກໍ່ຫາຊື່ອື່ນໃຫ້ຕ່າງຫາກັນ ຕາມກຸ່ມນີ້ອມີ ແລະ ກຸ່ມນີ້ອຕີນ. ຕົວຢ່າງ: ໃນພາສາມົງໂກນ ນີ້ອມີກັບນີ້ອຕີນທີ່ໃສ່ຊື່ດຽວກັນໄດ້ ມີແຕ່ສອງ ນີ້ອຄື: ນີ້ອໂປ້ເຊິ່ງເອີ້ນວ່າ ເອຣຄີ ມີຄວາມໝາຍວ່າ: ຕົວຜູ້, ຕົວເຂັ້ມແຂງ ແລະ ນີ້ອກາງເອີ້ນວ່າ: ຕົງຕ໌ ໝາຍເຖິງ ກາງ. ນອກນັ້ນກໍ່ແຍກ ບໍ່ຮ່ວມຊື່ກັນ. ສາເຫດ ກໍ່ເພາະວ່າແຕ່ລະຊື່ກໍ່ມີຄວາມໝາຍຕົວຄວາມໝາຍນັ້ນເປັນຕົວຂັດທີ່ຈະໃສ່ຊື່ ດຽວກັນ ຄື: ນີ້ອຊີ ເອີ້ນວ່າ ຕໍລໍວັອຣ ມີຄວາມໝາຍວ່າ ນີ້ອເລຍ, ອັນໃຊ້ເລຍ, ເນື່ອງຈາກວ່າ ຈະໃຊ້ນີ້ອມີແຈະ ຫຼື ຕ້ອຍແນວມາເລຍເທົ່ອໃດແມ່ນເຄີຍໃຊ້ນີ້ອ ນີ້ປະຈຳກວ່າໝູ່ ກໍ່ເລີຍໄດ້ຊື່ຕາມພາລະກຳນີ້. ຊື່ນີ້ບໍ່ສາມາດນຳໄປເອີ້ນໃຫ້ນີ້ອ ຕີນຕົວທີ່ຢູ່ຕຳແໜ່ງດຽວກັນໄດ້ ເພາະພາລະກຳຂອງນີ້ອນັ້ນບໍ່ເຄີຍໃຊ້ຕ້ອຍ ຫຼືແຈະແນວມາເລຍຈັກເທົ່ອ.

ມາສູ່ຄຳວ່າ ນີ້ອນາງ ພາສາມົງໂກນເອີ້ນວ່າ: ຢາຕຳ ມີຄວາມໝາຍ ວ່າ: ຜ່ອງ,ຕື່ງເຕັມ, ເສາະໃສ. ຊື່ນີ້ກໍ່ບໍ່ໄດ້ນຳໄປເອີ້ນໃຫ້ນີ້ອຕີນຕົວທີ່ຢູ່ໃນຕຳ

ແໜ່ງດຽວກັນໄດ້ ເພາະສີຊົ່ງຂອງມັນບໍ່ສູ້ເຫັນວ່າ ຜ່ອງ ແຖມຍັງຄິດລ້ອກ້ອກ ມັນຊິບໍ່ສົມຊື່.

ມາເຖິງຄຳວ່າ ນິ້ວກ້ອຍ ເອີ້ນວ່າ ຈິກຈີ່ ມີຄວາມໝາຍວ່າ: ຈີ້ມ ຄ້ວດແງ. ຊື່ນີ້ກໍ່ໄດ້ຕາມພາລະກຳເຊັ່ນກັນ ເພາະເວລາຈີ້ມ ຫຼື ຄ້ວດຫູ, ແງະຂີ້ຕາ ກໍ່ມັກ ໃຊ້ແຕ່ນິ້ວນີ້ ຍ້ອນມັນນ້ອຍ ແລະຢູ່ຂອກສຸດໝູ່. ໄປເບິ່ງຕົນນິ້ວໃນຕຳແໜ່ງ ດຽວກັນນີ້ກໍ່ໃສ່ຊື່ຮ່ວມກັນບໍ່ໄດ້ອີກແລ້ວ, ສາເຫດ ໃຜກໍ່ພໍຈະຮູ້ໄດ້ງ່າຍ ເພາະບໍ່ ເຄີຍມີຊາດໃດ ເວລາຈີ້ມແຂ້ວ, ແງະຂີ້ຕາ ຫຼື ຄ້ວດຫູຊິໄປກຸມໃຊ້ນິ້ວໃດໜຶ່ງ ຂອງຕົນ, ຈະເປັນການໃຊ້ນິ້ວຕົນຕົນ ຕົນເພິ່ນກໍ່ບໍ່ມີໃຜເຄີຍເຮັດ, ຫາກໄປເອີ້ນ ວ່າ ນິ້ວຈີ້ມ ໃຫ້ມັນກໍ່ຊິໂພດເກີນໄປ ເພາະໃນພາສາ ຍັງມີຫຼາຍຄຳ ທີ່ຖືກຄວາມ ກວ່າ ຊິມາວົນເອົາແຕ່ຄຳວ່າ ຈີ້ມ ຕໍ່ວດຽວແນ່ມັນບໍ່ແມ່ນນິ້ເຮັດຫຍັງ.

ບັດນີ້ມາເບິ່ງໃນພາສາລາວ ເຖິງວ່າຖານະຂອງມື ແລະ ຕີນ ລາວເຮົາ ໄດ້ແຍກໃຫ້ເປັນຖານໃຜມັນ ໂດຍໃຫ້ມືມີຖານະສູງກວ່າ ແຕ່ເລື່ອງຊື່ຂອງນິ້ວ ເຮົາພັດເອີ້ນຮ່ວມຊື່ກັນ. ຊື່ບາງນິ້ວກໍ່ເອີ້ນຕາມພາລະກຳເຊັ່ນ ນິ້ວຊີ້ ເວລາຕ້ອງ ການຊີ້ທຸກເທື່ອເຄີຍໃຊ້ນິ້ວໃດກໍ່ໃຫ້ຊີ້ຕາມນັ້ນ;ນິ້ວກາງແມ່ນໄດ້ຊື່ຕາມຕຳແໜ່ງ ທີ່ຢູ່ກາງ.

ສ່ວນນິ້ວກ້ອຍ ຄຳນີ້ບາງຖິ່ນເອີ້ນນິ້ວ ກອຍ ເພາະເວລາກອຍມັກໃຊ້ນິ້ວນີ້, ສ່ວນຜູ້ສຶກສາເອງຄິດວ່າ: ກ້ອຍ ໃນຄຳວ່າ ນິ້ວກ້ອຍນີ້ ຄົງມາຈາກຄຳວ່າ ກອຍ ທີ່ໝາຍເຖິງ ສຸດທ້າຍ, ຫຼັງສຸດ ເຊັ່ນ: ກອຍເຮືອນ ກໍ່ໝາຍເຖິງ ທ້າຍເຮືອນ, ຫຼັງສຸດຂອງເຮືອນ; ແລະຄຳວ່າ ເຈັບກົ້ນເຈັບກອຍ ກໍ່ໝາຍເຖິງ ເຈັບບ່ອນສຸດ ຂອງຄົ້ງ; ນິ້ວກ້ອຍ ກໍ່ໝາຍເຖິງ ນິ້ວທ້າຍສຸດ; ການອອກສຽງວ່າ ກອຍ ເປັນ ກ້ອຍ ຄົງເປັນເພາະການຜັ່ນສຽງໃນໄລຍະຕໍ່ມາ.

ນິ້ວໂປ້ ກໍ່ໝາຍເຖິງນິ້ວໃຫຍ່, ນິ້ວຕົ້ນ, ຄຳວ່າ ໂປ້ ກັບຄຳວ່າ ພໍ່ ຄົງມີ ຄວາມສຳພັນດ້ານຈິດສຳນຶກອັນຕົ້ນໆຢ່າງດຽວກັນເພາະ ໝາຍເຖິງ ຕົວໃຫຍ່ ຕົວແຂງແຮງ,ຕົວກ້າ.

ນິ້ວນາງ ມີຄວາມໝາຍຈາກຄວາມຜ່ອງງາມ, ກົມງາມ ໜ້າຮັກ ໃຫ້ຈິດ ສຳນຶກດັ່ງນາງ ທີ່ມີເນື້ອຜ່ອງ ແລະເສາະໃສ. ຈາກນັ້ນ ເຄີຍໄດ້ຮັບເປັນນິ້ວທີ່ໃຫ້ ສຸບແຫວນແຫ່ງຄວາມຮັກໄວ້.

ພາສາລາວໄດ້ໃຫ້ຊື່ນິ້ວເປັນດັ່ງສະເໜີມາ ສິ່ງທີ່ໜ້າສົນໃຈກໍ່ຄື ຊຸມ ນິ້ວຕີນທີ່ໄດ້ຮັບຊື່ອັນດຽວກັນກັບນິ້ວມືເຊັ່ນຄຳວ່າ ນິ້ວນາງ ເຮົາບໍ່ເຄີຍເຫັນວ່າ ນິ້ວນັ້ນຈະໄດ້ຮັບໂອກາດໃຫ້ຖືແຫວນຈັກເທື່ອ ຫຼື ນິ້ວກ້ອຍ ກໍ່ບໍ່ເຄີຍເຫັນໃຜໃຊ້ ນິ້ວນັ້ນກອຍຫຍັງຈັກເທື່ອ. ມາເບິ່ງຄຳວ່າ ນິ້ວຊີ້, ສຳລັບຊີ້ແມ່ນໄດ້ຄຳວ່າຊີ້ ແຕ່ໃນຕົວຈິງ ແມ່ນໃຜກ້າໃຊ້ນິ້ວຕີນຕົວນັ້ນຊີ້? ຫາກກ້າເຮັດກໍ່ຄົງມີແຕ່ຄົນຈິດ ບໍ່ເຕັມ. ຄົນຊັ້ນວັດທະນະທຳສ່ວນນີ້ເຮົາມີໄວ້ຄົງເພື່ອນິ້ວມືເປັນອັນສຳຄັນ ໝາຍວ່າ ນິ້ວມືໄດ້ທັງຊື່, ມີທັງວັດທະນະທຳຄຸ້ມຄອງໃຫ້, ສ່ວນນິ້ວຕີນ ຄົງໄດ້ ແຕ່ຊື່ ເຊິ່ງເອີ້ນວ່າ ໄດ້ຊື່ແຫ່ຕາມເພິ່ນ, ພາສາລາວ ກໍ່ມີຮອດກໍລະນີໄດ້ຊື່ຕາມ ເພິ່ນເຊັ່ນນີ້ ມັນມາຈາກສັງຄົມຫຼືວັດທະນະທຳລາວຕົວໃດ?

24 / VII

ຫ້າມຈຳໜ່າຍ

ຄຳ: ລາກ, ດຶງ, ແກ່ ໃນພາສາລາວ

ທຸກຄຳໃນພາສາລາວກໍ່ລ້ວນແຕ່ມີໂອກາດຈະໄດ້ຮັບການຄົ້ນຄວ້າ ໃນນີ້ຄຳວ່າ: ລາກ ດຶງ ແກ່ ກໍ່ໄດ້ຮັບໂອກາດສຳລັບຄົ້ນຄວ້າເລື່ອງຄວາມເປັນ ມາທາງຄວາມໝາຍຂອງແຕ່ລະຄຳເຊັ່ນກັນ.

ຜ່ານມາການໃຊ້ຄຳທັງສາມບໍ່ພົບວ່າມີຄວາມຜິດພາດ, ພຽງແຕ່ພົບວ່າ ບາງເຂດມີການໃຊ້ຄຳໃດໜຶ່ງໃນນີ້ຫຼາຍກວ່າອີກຄຳໜຶ່ງ. ການເປັນແນວນີ້ບໍ່ແມ່ນຄວາມບັງເອີນເຊິ່ງສາເຫດຄົງມີບາງອັນດັ່ງຈະສະເໜີຕໍ່ໄປນີ້.

ຄຳວ່າ ລາກ ແມ່ນຄຳເດີມໆໃນພາສາລາວ, ເປັນຄຳກິລິຍາມີຄວາມໝາຍດຽວຄື: ໝາຍເຖິງອາການໃຊ້ແຮງໃຫ້ສິ່ງໃດໜຶ່ງເຄື່ອນໄປຕາມຫຼັງໂດຍອັນທີ່ເຄື່ອນນັ້ນ ດ້ານໜຶ່ງຂອງຕົວແມ່ນແທດຖູໄປກັບພື້ນ ເຊິ່ງແມ່ນພື້ນດິນ, ພື້ນຮ້ານຫຼືພື້ນເຮືອນກໍ່ໄດ້. ສຳລັບອາການທີ່ເຮັດໃຫ້ເຄື່ອນໄປນັ້ນ ອາດໃຊ້ມືຈັບ,ໃຊ້ເຊືອກມັດຕໍ່ໃສ່ກໍ່ໄດ້ ສິ່ງສຳຄັນແມ່ນຕົວພາໄປຕ້ອງຢູ່ທາງດ້ານໜ້າສະເໝີ. ຕົວຢ່າງ: ຊ້າງລາກໄມ້, ເສືອລາກຫາງ, ເຂົາເຈົ້າລາກເຫຼັກເສັ້ນ...

ສ່ວນຄຳວ່າ ດຶງ ກໍ່ເປັນຄຳກິລິຍາ ມີຄວາມໝາຍຄ້າຍກັນຫຼາຍກັບຄຳວ່າ ລາກ ແຕ່ມີຈຸດຕ່າງທີ່ວ່າ ດຶງ ເປັນອາການໃຊ້ແຮງໃຫ້ສິ່ງໃດໜຶ່ງເຄື່ອນ ຫຼື ເພື່ອໃຫ້ຂາດ ໂດຍການເຄື່ອນນັ້ນມີທິດມາສູ່ຕົວ ແລະ ອັນທີ່ຖືກດຶງນັ້ນຕົວຈະຢູ່ແທດດິນ ຫຼື ບໍ່ແທດ ເຊັ່ນ: ຫ້ອຍຢູ່, ຄ້າງຢູ່, ເນັບ ຫຼື ປັກຢູ່ກໍ່ໄດ້ ແລະ ຈາກທິດລຸ່ມ, ຈາກທາງຂ້າງ ຫຼື ຈາກທາງເທິງກໍ່ໄດ້.ຕົວຢ່າງ: ດຶງເຄືອຫວາຍທີ່ຂຶ້ນຕົ້ນໄມ້ໃຫຍ່ໃຫ້ລົງ, ດຶງສາຍໄໝຫຍິບ, ດຶງເຊືອກ... ຄຳວ່າ ແກ່ ມີສາມຄວາມໝາຍ; ໜຶ່ງ ເປັນຄຳຄຸນສັບ ຕົວຢ່າງ: ຄົນແກ່, ສາວແກ່; ສອງ: ເປັນຄຳເຊື່ອມ ຕົວຢ່າງ: ໃຫ້ແກ່ທ່ານ, ໄດ້ແກ່...;ສາມ: ເປັນຄຳກິລິຍາເຊິ່ງພົບວ່າເຮົາຮັບຈາກພາສາມອນມາແຕ່ດົນແລ້ວ, ໃນພາສາມອນຄຳວ່າ ແກ່ ມີຄວາມໝາຍຮວມເອົາທັງລາກແລະດຶງ , ເພາະເປັນແນວນີ້ ຄຳວ່າ ແກ່ ຈຶ່ງມາຂະຫຍາຍການໃຊ້ແທນທັງສອງຄຳນີ້ໄດ້ຢ່າງງ່າຍ. ແຕ່ເຖິງຢ່າງໃດຄຳວ່າລາກ ແລະ ດຶງ ກໍ່ຍັງບໍ່ສູນໄປ. ທັງນີ້ກໍ່ເພາະວ່າບາງບໍລິບົດຈະໃຊ້ແທນກັນບໍ່ໄດ້ເຊັ່ນ ເຮົາເຄີຍເວົ້າວ່າ: ແກ່ຢຶດແກ່ຍາວເວລາ ແຕ່ບໍ່ເຄີຍເວົ້າວ່າ: ດຶງຢຶດດຶງຍາວເວລາ; ດຶງສາຍໄໝຫຍິບໃຫ້ຂາດ; ເຮົາບໍ່ເຄີບເວົ້າວ່າ: ແກ່ ຫຼື ລາກສາຍໄໝຫຍິບໃຫ້ຂາດ. ເຮົາເຄີຍເວົ້າ: ຟ້ອນໂມຍເສືອລາກຫາງ ແຕ່ບໍ່ເຄີຍເວົ້າ: ຟ້ອນໂມຍເສືອແກ່ຫາງ ຫຼື

ອື່ນໆ. ເພາະຄວາມຕ້ອງການທາງບໍລິບົດຍັງມີຢູ່ຕາມເດີມເຊັ່ນນີ້ ພາໃຫ້ພາສາລາວຕ້ອງຮັກສາຄຳທັງສາມໄວ້. ບາງຖິ່ນຍັງມີຄຳວ່າ ເຂັນ ເຊິ່ງມີຄວາມໝາຍຄ້າຍກັບຄຳວ່າ ດຶງ ແລະ ແກ່. ແຕ່ສັງເກດພົບວ່າ ຖິ່ນໃດທີ່ມີຄຳວ່າ ເຂັນ ກໍ່ຈະບໍ່ສູ້ໃຊ້ຄຳວ່າ ແກ່. ໃນບາງກໍລະນີເຊັ່ນ: ລິດບັນທຸກດິນໄປ ກໍ່ຈະບໍ່ໃຊ້ຄຳວ່າ ລິດແກ່ດິນ ແລະ ບໍ່ໃຊ້ຄຳວ່າ ລາກດິນ ຫຼື ດຶງດິນ ເພາະລິດບໍ່ໄດ້ລາກ ຫຼື ດຶງ. ເຄີຍໃຊ້ຄຳວ່າ ຂົນ ເປັນລິດຂົນດິນ, ຂົນຫີນ ຈະແມ່ນເທື່ອດຽວ ຫຼື ຫຼາຍເທື່ອກໍ່ຕາມ; ຫາກບໍ່ໃຊ້ຄຳວ່າ ຂົນ ກໍ່ໃຊ້ຄຳວ່າ ຕ່າງ ຄື: ລິດຕ່າງດິນ, ຕ່າງຫີນ. ນີ້ສະແດງວ່າບາງຖິ່ນຄຳວ່າ ແກ່ ຍັງເຂົ້າໄປບໍ່ເຖິງ, ແຕ່ພ້ອມດຽວກັນບາງຖິ່ນເມື່ອຮັບຄຳວ່າ ແກ່ ເຂົ້າມາໃຊ້ພາໃຫ້ຄຳວ່າ ລາກ ແລະ ດຶງ ມີຂອບເຂດການໃຊ້ແຄບເຂົ້າ, ຄຳທີ່ຮັບຈາກພາສາອື່ນເຂົ້າມາກໍ່ມີຜົນດີທັງຜົນເສຍໃຫ້ແກ່ພາສາເຮົາເຊັ່ນກັນ.

ຄຳວ່າ: ຖ້ຽນາ ໃນພາສາລາວ

ການສຶກສາເຖິງທີ່ມາຂອງຄຳໃນພາສາລາວ ບໍ່ຮູ້ວ່າຍາມໃດຈຶ່ງຈະຈຸບ ຈະທົ່ວ, ຍ້ອນວ່າມັນໜາຍ ບາງຄຳມີເລື່ອງສັ້ນບາງຄຳພັດມີເລື່ອງຍາວ, ບາງຄຳ ຄຶດວ່າບໍ່ມີເລື່ອງ ແຕ່ມີຜູ້ຄົ້ນຄວ້າຂຽນອອກມາ ພັດວ່າມີແຕ່ເລື່ອງກັບເລື່ອງ ດັ່ງ ຄຳວ່າ ຖ້ຽນາ ກໍ່ແມ່ນຄຳໜຶ່ງໃນນັ້ນ.

ໃນພາສາລາວສະເພາະຄຳວ່າ ຖ້ຽງ ເປັນໄດ້ທັ້ງຄຳນາມ ແລະ ຄຳກິລິຍາ. ທີ່ເປັນຄຳກິລິຍາໝາຍເຖິງ: ເວົ້າຕອບ, ເວົ້າສູ້ຄືນກັບຄຳເວົ້າຂອງຜູ້ອື່ນທີ່ເວົ້າມາ. ຄຳວ່າ ຖ້ຽງກັນ ໝາຍເຖິງ: ເວົ້າສູ້ກັບໄປກັບມາລະຫວ່າງຄົນ; ຄຳວ່າ ຖ້ຽງ ທີ່ເປັນຄຳນາມ ໝາຍເຖິງຮ້ານຂະນິດໜຶ່ງມີພື້ນຍົກເປັນລັກສະນະເຮືອນຂະໜາດນ້ອຍທີ່ຕັ້ງໄວ້ເປັນບ່ອນຊົ່ນ, ບ່ອນພັກຕາມທົ່ງນາ ຫຼື ໄຮ່. ຖ້ຽງ ບໍ່ແມ່ນເຮືອນ ພຽງແຕ່ມີລັກສະນະຄ້າຍກັບເຮືອນ. ສິ່ງສົນໃຈໃນນີ້ຜູ້ຂຽນບໍ່ໄດ້ມຸ່ງໃສ່ເປົ້າຂອງການຕັ້ງຖ້ຽງນາ ແຕ່ສົນໃຈໃນຄຳວ່າ: ຖ້ຽງ ນີ້ ໄດ້ມາຈາກໃສ.

ດ້ວຍການສຶກສາຄຳທີ່ລາວຮັບມາຈາກພາສາອື່ນພົບວ່າ ລາວໄດ້ຮັບຄຳຫຼາຍຄຳຈາກພາສາຈີນບູຮານເຂົ້າມາໃຊ້. ເມື່ອນຳເຂົ້າມາແລ້ວກໍ່ໃຊ້ຄຳນັ້ນໆຄືກັບຄຳລາວໂດຍທົ່ວໄປຄື ມີການປັບຮູບຄຳ, ປັບສຽງ ຫຼື ຄວາມໝາຍ ແລ້ວແຕ່ກໍລະນີ.

ບັດນີ້ ມາເວົ້າເຖິງຄຳທີ່ຮັບຈາກພາສາຈີນບູຮານກໍ່ມີຄຳວ່າ: ຖ້ຽງ ອັນໝາຍເຖິງຮ້ານທີ່ເຮັດຂຶ້ນເພື່ອເປັນບ່ອນຂອງຄົນນອນ. ສ່ວນຄຳວ່າ ຮ້ານ ແມ່ນຮັບມາຈາກພາສາມອນຈາກຕົ້ນຄຳວ່າ: ຮ້ານ. ເມື່ອໆຈາກລາວໄດ້ຮັບຄຳວ່າ ຖ້ຽງ ມາຈາກພາສາຈີນກ່ອນ ຕໍ່ມາຈຶ່ງໄດ້ຮັບອິທິພົນຈາກມອນແລ້ວໄດ້ຮັບຄຳວ່າ ຮ້ານ ຕາມມາ. ຄຳທີ່ມາກ່ອນຄືຄຳວ່າ ຖ້ຽງ ນັ້ນໄດ້ມີບົດບາດ ແລະ ຮັບໄປໃຊ້ກ່ອນ. ໃນພາສາລາວແຕ່ຕົ້ນໆມີພຽງຄຳວ່າ ຖ້ຽງນາ. ຕໍ່ໆມາຈຶ່ງພົບຄຳວ່າ ຖ້ຽງໄຮ່. ໃນຄວາມຈິງແທ້ ການມີຄຳວ່າຖ້ຽງນາກ່ອນນັ້ນແມ່ນມີເຫດຜົນທີ່ເຊື່ອຖືໄດ້ກວ່າ. ສາເຫດກໍ່ເພາະນາ ໂດຍທົ່ວໄປ ນາ ເປັນດິນຢູ່ບ່ອນຕ່ຳ ແລະ ນາແມ່ນດິນຕິດພັນກັບນ້ຳ, ການເຮັດນາແມ່ນອາໄສນ້ຳເປັນຕົ້ນຕໍ. ສະນັ້ນ ນາຈຶ່ງເປັນບ່ອນນ້ຳຂັງຊຶມໄດ້ທົ່ວໄປ,ເມື່ອຕັ້ງບ່ອນເພິ່ງພັກພາກໍ່ຈະຊູໃສ່ພື້ນດິນເລີຍບໍ່ໄດ້ຈຳຕ້ອງເຮັດພື້ນສູງໃຫ້ຫ່າງຈາກໜ້າດິນ; ສິ່ງທີ່ຕັ້ງນັ້ນທຳອິດກໍ່ຄົງມີຂະໜາດນ້ອຍງ່າຍດາຍ ໂດຍໃຊ້ໄມ້ຕາມທຳມະຊາດເປັນຮ່າງ ແລະ ໃຊ້ໄມ້ປ່ອງຂະນິດໃຫຍ່ເຮັດຝາກປູ ມັນບໍ່ຄືຖ້ຽງນາຂອງບາງຄົນໃນປະຈຸບັນທີ່ເປັນ

ເຮືອນກໍ່. ແນວມຸງຄາວນັ້ນເຄີຍໃຊ້ຫຍ້າຫວາຍ, ຫຍ້າຄາ ຂັ້ນດີຂຶ້ນແມ່ນໃຊ້ຝ້າ. ໂດຍປົກກະຕິ ຖ້ຽງນາ ບໍ່ແອ້ມຝາເພື່ອໃຫ້ລົມລ່ວງເຢັນສະບາຍ.

ສິ່ງທີ່ຕັ້ງເປັນບ່ອນພັກນີ້ ກໍ່ເປັນລັກສະນະດຽວດັ່ງຕ່ຽງ ເຊິ່ງກໍ່ມີເສົາ ແລະ ພື້ນບໍ່ແທດດິນ. ອັນນີ້ໄດ້ເປັນເຫດສຳຄັນທີ່ໄດ້ຄຳວ່າ: ຖ້ຽງ ມາຮຽກໃຫ້ເປັນຖ້ຽງນາ. ສະນັ້ນ ໝາຍວ່າ ຖ້ຽງ ເປັນຄຳທີ່ຜັນຈາກຄຳວ່າ ຕ່ຽງ, ເຊິ່ງ ຕ່ຽງ ນັ້ນແມ່ນຄຳຈີນບູຮານທີ່ລາວຮັບມາຕັ້ງແຕ່ນານ. ເລື່ອງນີ້ມີຄວາມເປັນໄປໄດ້ສູງ ເນື່ອງຈາກວ່າພາສາລາວໃນການສ້າງຄຳໃໝ່ ມີກົດໜຶ່ງທີ່ເຄີຍພົບມາຄື ກົດການຜັນສຽງ ໄດ້ແກ່ສຽງວັນນະຍຸດ ຫຼື ສຽງພະຍັນຊະນະໃດໜຶ່ງໃນຄຳນັນໆ ຕົວຢ່າງ: ມອນ ກັບ ມ້ອນ, ຮອມ ກັບ ຮ່ອມ, ຕອມ ກັບ ຕ້ອມ... ລ້ວນແຕ່ເປັນຄຳທີ່ມີຈິດສຳນຶກ (Concept) ກ່ຽວຂ້ອງກັນ ມີສຽງໃກ້ກັນ ຫາກແຕ່ວ່າໄດ້ແຍກເປັນຄຳລະຄຳ. ສະນັ້ນຄຳວ່າ: ຕ່ຽງ ຫາກຂຽນຕາມສັດທະອັກສອນສາກົນກໍ່ເປັນ: /tiaŋ/ ແລະ ຖ້ຽງ ກໍ່ເປັນ: /thiaŋ/. ການປ່ຽນສຽງ /t/ ກັບ /th/ ໄດ້ພົບຫຼາຍໃນພາສາຕະກູນ ລາວ-ໄຕ. ປະຈຸບັນ ຊາວລື້ຍັງເວົ້າ ຕ່ຽງນາ ບໍ່ວ່າ ຖ້ຽງນາ ຄືຄຳລາວ. ພາສາລາວມີທັ້ງຄຳວ່າ ຕ່ຽງ ແລະ ຄຳວ່າ ຖ້ຽງ ເຊິ່ງແຍກໃຫ້ແນວຕ່າງກັນ. ຕ່ຽງ ກັບ ຖ້ຽງ ຍັງມີຄວາມສຳພັນທາງຄວາມໝາຍນຳກັນຢູ່ຄື: ອັນເປັນຮ້ານ. ສ່ວນໄຮ່ ແຕ່ເດີມພຸ້ນເຄີຍເຮັດຕູບ ບໍ່ແມ່ນເຮັດ ຖ້ຽງ. ເພາະໄຮ່ເຄີຍເຮັດຢູ່ບ່ອນສູງນຳ້ບໍ່ອ້ຽງຂ້ຽງ ແລະ ຕູບ ເຮັດຊູດິນເລີຍກໍ່ໄດ້. ຕູບນັ້ນ ຫາກເອີ້ນຕາມລັກສະນະແມ່ນ: ຕູບໝາແຫງນ, ຫາກເອີ້ນຕາມບ່ອນຕິດພັນເອີ້ນວ່າ: ຕູບໄຮ່ ແລະ ບໍ່ເຄີຍຍິນວ່າ: ຕູບນາ ຈັກເທື່ອ. ສະນັ້ນ ຕູບຈຶ່ງຕິດພັນກັບໄຮ່ມາແຕ່ຕົ້ນ ແລະ ຖ້ຽງ ເຄີຍຕິດພັນກັບນາ, ສ່ວນຄຳວ່າ ຖ້ຽງໄຮ່ ຄົງເປັນສິ່ງຖ່າຍທອດຈາກ ຖ້ຽງນາ ໃນໄລຍະຫຼັງມານີ້ນັ້ນເອງ.

ຄຳຫຼາຍຄວາມໝາຍ ກັບ
ຄຳທີ່ມີຄວາມໝາຍ ກະຈາຍ

ຄຳທີ່ມີຫຼາຍຄວາມໝາຍເປັນສິ່ງທີ່ເຄີຍຍິນມາແລ້ວ ແຕ່ຄຳທີ່ກະຈາຍຄວາມໝາຍອາດເປັນຄຳຫາກ໋ຍິນສຳລັບບາງຄົນກ໋ເປັນໄດ້. ຄຳສອງຄຳນີ້ແມ່ນອັນລະອັນ ຫາກແຕ່ວ່າໃນໄວຍາກອນລາວຜ່ານມາບ໋ໄດ້ນຳສິ່ງນີ້ມາຮຽນໃຫ້ລະອຽດຈິ່ງພາໃຫ້ຄົນລາວຫຼາຍໆຄົນຄິດວ່າແມ່ນອັນດຽວກັນ.

ຄຳຫຼາຍຄວາມໝາຍ ໃນທາງວິຊາການເອີ້ນວ່າ:(Polysymy) ໝາຍເຖິງຄຳ-ຄຳໜຶ່ງແຕ່ມີເກີນສອງຄວາມໝາຍຂຶ້ນໄປ ເຊິ່ງແຕ່ລະຄວາມໝາຍຈະເປັນຊະນິດຄຳທີ່ຕ່າງກັນກ໋ໄດ້.ຕົວຢ່າງຄຳວ່າ ງາ

ໜຶ່ງ: ເປັນຄຳນາມ ໝາຍເຖິງແກ່ນເມັດຂອງພືດທີ່ເອີ້ນວ່າຕົ້ນໝາກງາ.

ສອງ: ເປັນຄຳນາມ ໝາຍເຖິງອະໄວຍະວະຢ່າງໜຶ່ງທີ່ປົ່ງຊີ້ອອກເປັນຄູ່ ຕາມສອງຟາກສ່ວນກົກຂອງງວງຊ້າງຮຽກວ່າ ງາຊ້າງ.

ສາມ: ເປັນຄຳກິລິຍາ ໝາຍເຖິງ ຍົກກຳປັ້ນຂຶ້ນໃສ່,ໃຊ້ມືຈັບສິ່ງໃດໜຶ່ງ ຍົກໄປໃສ່ອີກສິ່ງໜຶ່ງ ຫຼື ໃຫ້ຕີນຍົກໄປໃສ່ ເຊັ່ນ: ງາຕີນ, ງາພ້າ, ງາກຳປັ້ນ.

ໃນນີ້ ຈະຢູ່ໃນສະຖານໃດຄຳວ່າ ງາ ກ໋ຍັງຮັກສາຮູບຄຳຄົເກົ່າໂດຍບ໋ປ່ຽນ ບ໋ມີຄຳອື່ນຕື່ມເຂົ້າມາ ແຕ່ຫາກມີຫຼາຍຄວາມໝາຍຢູ່ໃນຫັ້ນຢ່າງນັ້ນ.

ຄຳທີ່ຄວາມໝາຍກະຈາຍ ໃນທາງວິຊາການເອີ້ນວ່າ: (The meaning's distribution) ໝາຍເຖິງຄວາມໝາຍຫຼັກຂອງຄຳໜຶ່ງເມື່ອມີຄຳອື່ນມາປະກອບເຂົ້າພາໃຫ້ເກີດເປັນຄວາມໝາຍໃໝ່ຂຶ້ນ, ຄວາມໝາຍໃໝ່ນັ້ນອາດມີຄວາມກ່ຽວຂ້ອງກັບຄວາມໝາຍຫຼັກກ໋ໄດ້ ຫຼື ອາດປ່ຽນໄປເປັນ

ຄວາມໝາຍອື່ນຕາມຄຳທີ່ມາປະກອບນັ້ນກໍ່ໄດ້.ຕົວຢ່າງຄຳວ່າ: ໃຈ ເມື່ອນຳຄຳອື່ນໆມາປະກອບກໍ່ຈະເຮັດໃຫ້ຄວາມໝາຍຂອງມັນກະຈາຍກວ້າງອອກຄື: ໃຈກວ້າງ, ໃຈແຄບ, ໃຈນ້ອຍ, ໃຈໃຫຍ່, ໃຈດີ, ໃຈຮ້າຍ, ໃຈປຶກ, ໃຈງ່າຍ, ໃຈຍາກ, ໃຈຍາວ, ໃຈສັ້ນ, ໃຈຮ້ອນ, ໃຈເຢັນ, ໃຈໂຫດ, ໃຈສາມານ, ໃຈອ່ອນ, ໃຈແຂງ... ໃນຄະນະດຽວກັນກໍ່ມີ: ເຊື່ອໃຈ, ໄວ້ໃຈ, ຈັບໃຈ, ດູດດຶງໃຈ, ປອບໃຈ, ຊຶ້ນໃຈ, ເສົ້າໃຈ, ອຸ່ນໃຈ, ທຸກໃຈ, ມີໃຈ, ພູມໃຈ, ອຸກໃຈ, ຕັດໃຈ, ຕັດສິນໃຈ, ພໍໃຈ, ຕັ້ງໃຈ, ໃສ່ໃຈ, ນອກໃຈ, ເອົາໃຈ, ລັກໃຈ, ລະເລີງໃຈ, ສຸດໃຈ, ຍາກໃຈ, ດີໃຈ, ພ້ອມໃຈ, ນິ້ງໃຈ, ເພີນໃຈ...

ໃນນີ້ສັງເກດເຫັນວ່າຄຳວ່າ: ໃຈ ບາງຄັ້ງກໍ່ປະກົດກ່ອນຄຳທີ່ມາປະກອບ, ບາງຄັ້ງກໍ່ປະກົດຕາມຫຼັງຂອງຄຳທີ່ມາປະກອບ. ຄວາມໝາຍທີ່ໄດ້ມາແຕ່ລະຄຳນັ້ນເປັນຄວາມໝາຍເກີດຈາກການປະສົມຄຳວ່າ: ໃຈ ກັບຄຳອື່ນ ຫຼື ຄຳອື່ນກັບຄຳວ່າ: ໃຈ. ຫາກບໍ່ມີຄຳອື່ນມາປະກອບຄວາມໝາຍຂອງຄຳວ່າ ໃຈ ກໍ່ບໍ່ກະຈາຍອອກໝາຍເຖິງຂັ້ນນັ້ນ. ຄວາມຕ່າງກັນຂອງຄຳມທີ່ມີໝາຍຄວາມໝາຍ ກັບຄຳທີ່ຄວາມໝາຍກະຈາຍນັ້ນ ອັນທີ່ແຈ້ງທີ່ສຸດຄື: ຄຳທີ່ມີໝາຍຄວາມໝາຍເປັນພຽງຄຳ-ຄຳດຽວ, ບໍ່ຈຳເປັນມີຄຳອື່ນມາປະກອບ; ແຕ່ຄຳທີ່ຄວາມໝາຍກະຈາຍຕ້ອງມີຄຳອື່ນມາປະກອບຈຶ່ງເກີດການກະຈາຍ. ເມື່ອເຂົ້າໃຈໃນເລື່ອງນີ້ແລ້ວຈຶ່ງນຳຄຳອື່ນໆມາປະກອບກັບຄຳທີ່ວ່າ: ຫົວ ແລະ ຕີນ ແລ້ວຈຶ່ງເບິ່ງວ່າຄວາມໝາຍຂອງ ແຕ່ລະຄຳ ກະຈາຍອອກໄດ້ໝາຍສ່ຳໃດ.

ຄຳວ່າ ຮາດ ແລະ ກະຈາ ໃນພາສາລາວ

ຄຳທັງສອງນີ້ຍັງພົບການໃຊ້ເປັນປະຈຳເຊັ່ນ: ຊີ້ນສຸກຮາດ, ປີ້ງໃຫ້ສຸກ ຮາດ ແລະ ພາສາຊອດກະຈາ, ວັດທະນະທຳຊອດກະຈາ ດັ່ງນີ້ເປັນຕົ້ນ. ເຖິງ ເປັນຄຳເຄີຍໃຊ້ຢູ່ສະເໝີ ແຕ່ຄຳທັງສອງນີ້ກໍ່ຍັງມີແນວເວົ້າ, ບໍ່ແມ່ນເລື່ອງການ ໃຊ້ກໍ່ແມ່ນເລື່ອງຄວາມໝາຍ ຫຼື ທີ່ມາຂອງມັນ.

ຄຳວ່າ: ຮາດ ເປັນຄຳພື້ນຖານ ຫຼື ຄຳເດົ້າຂອງພາສາລາວ. ການທີ່ຮູ້ ໄດ້ເຊັ່ນນີ້ກໍ່ເພາະຄຳນີ້ເຫັນມີໃຊ້ໃນພາສາລາວ ໂດຍໄດ້ກຳກົດຈຸດຂອງຄວາມ-ໝາຍເປັນບ່ອນໜຶ່ງໄວ້ໃຫ້ສະເພາະເຊັ່ນວ່າ ຮາດ ໝາຍເຖິງສ່ວນໜຶ່ງສຸກ ແລະ ສ່ວນໜຶ່ງຍັງດິບ, ໃນນີ້ບ່ອນກຳນົດຢູ່ຂອງຄວາມໝາຍນີ້ຄື: ແມ່ນສິ່ງທໃຊ້ ຄວາມຮ້ອນເຮັດໃຫ້ສຸກ,ບໍ່ແມ່ນມັນສຸກດ້ວຍທຳມະຊາດ.

ສ່ວນຄຳວ່າ ກະຈາ ກໍ່ມີຄວາມໝາຍວ່າ ດິບແດ່ສຸກແດ່, ແຕ່ຈຸດທີ່ກຳ ນົດຢູ່ຂອງຄວາມໝາຍນີ້ຕົ້ນໆແມ່ນ ໝາກແຕ່ງລາຍໂດຍສະເພາະ,ທີ່ສຸກຕາມ ທຳ-ມະຊາດໃນລະດັບເລີ່ມເຂົ້າຫາສຸກ ສະນັ້ນ ໝາກແຕ່ງເຂົ້າ, ໝາກແຕ່ງ ຊັ້ງຈະບໍ່ມີກະຈາ. ໝາກແຕ່ງລາຍທີ່ສຸກກະຈາເມື່ອນຳມາກິນກໍ່ຮູ້ສຶກວ່າມີ ລົດຫວານເລັກໜ້ອຍ ແຕ່ຈະມີອາການຕອດລີ້ນ ພາໃຫ້ລີ້ນເຈັບປາບປິບ.

ສຳລັບທີ່ມາຄຳວ່າ ກະຈາ ໄດ້ສຶກສາພົບວ່າເປັນຄຳທີ່ຮັບມາຈາກພາ ສາຂະມຸ, ຮັບມາແລ້ວລາວກໍ່ໃຊ້ມັນຕາມຄວາມໝາຍທີ່ເປັນໃນພາສາລາວຄື: ໃຫ້ຄວາມໝາຍຂອງຄຳວ່າ ກະຈາ ຄືກັບ ຊອດແລະໃຫ້ຕ່າງຈາກຄຳວ່າ ຮາດ. ໃນນີ້ຄຳວ່າ ຊອດ ກໍ່ໝາຍເຖິງສົມປົນລະຫວ່າງພັນ, ລະຫວ່າງເຊື້ອແນວທີ່ບໍ່ ແມ່ນຢ່າງດຽວກັນ ໂດຍສະເພາະໄດ້ແກ່ຄົນ ເຊັ່ນ: ລູກຊອດ, ຄົນຊອດ. ໃນຍຸກ ນີ້ຄຳວ່າ ຊອດ ແລະ ກະຈາ ໄດ້ມີຜູ້ນຳມາໃຊ້ຮ່ວມກັນເໝືອນຄຳປະສົມ, ຄວາມໝາຍຂອງຄຳວ່າ ກະຈາ ກໍ່ໄດ້ຮັບອິດທິພົນຈາກຄວາມໝາຍຂອງຄຳວ່າ

ຊອດ, ເມື່ອໄດ້ຄຳວ່າ ຊອດກະຈາ ຂຶ້ນມາ, ກະຈາ ໃນນີ້ມີພາລະເປັນພຽງຄຳ ຂະຫຍາຍຄວາມໝາຍຂອງຄຳວ່າ ຊອດ ເທົ່ານັ້ນ.

ຄຳວ່າ ວັດທະນະທຳຊອດກະຈາ ກໍ່ຈະມີຄວາມໝາຍວ່າ ວັດທະນະທຳທີ່ມີການປະສົມດ້ວຍແບບແຜນຊີວິດ, ວັດທະນະທຳ ທີ່ບໍ່ແມ່ນຂອງກັບຊາດຕົນ ແຕ່ນຳມາໃຊ້ສະແດງ, ປະຕິບັດດ້ວຍຕົວຂອງບຸກຄົນໃດໜຶ່ງ; ຄຳວ່າ ພາສາຊອດກະຈາ ກໍ່ຄືງໝາຍເຖິງພາສາທີ່ໃຊ້ສົມປົນທັງຄຳຂອງພາສາຕົນແດ່ ຄຳພາສາເພິ່ນແດ່, ຈະຮູ້ອັນໃດດີແທ້ກໍ່ບໍ່ຮູ້,ທັນຍົນທັນຈີ່ໄດ້ຄຳໃດກໍ່ເອົາມາເວົ້າ ມາໃຊ້. ພາສາຊອດກະຈາກັບວັດທະນະທຳຊອດກະຈາ ມີຄວາມກ່ຽວຂ້ອງກັນ ດ້ານຂະບວນການຂອງມັນ, ເຄີຍເກີດຂຶ້ນເພາະສະພາບແວດລ້ອມທີ່ຄ້າຍຄືກັນຫຼາຍອັນ ນອກນີ້ຄ່ານິຍົມກໍ່ແມ່ນຕົວທີ່ນຳວັດທະນະທຳຊອດກະຈາແລະພາສາຊອດກະຈາເຂົ້າມາ. ແຕ່ເມື່ອມີຄົນຊອດກໍ່ຈະມີວັດທະນະທຳຊອດ ແລະ ພາສາຊອດກະຈານຳ ຫຼື ບໍ່ ນັ້ນກໍ່ເປັນເລື່ອງຕ່າງຫາກ.

ຄຳວ່າ: ເຂົ້າຈ້າວ ໃນພາສາລາວ

ຄຳວ່າ: ເຂົ້າຈ້າວ ພົບວ່າຖິ່ນໃດໆໃນລາວກໍ່ອອກສຽງໃນຄຳນີ້ເປັນ ສຽງຍາວຄື: ຈ້າວ ບໍ່ແມ່ນ ເจ້ົາ. ຄວາມໝາຍຂອງຄຳວ່າ ເຂົ້າ ຄືງເປັນທີ່ຮູ້ກັນ ໂດຍທົ່ວໄປແລ້ວ, ສ່ວນວ່າ ຈ້າວ ໃນພາສາລາວມີຄວາມໝາຍວ່າ: ຕົ້ມຮົ່ມ ເມັດພືດໂດຍສະເພາະແມ່ນເຂົ້າໃຫ້ສຸກເພື່ອກິນ ເຊິ່ງກະປະລິມານເຂົ້າ ແລະ

ນ້ຳ ທີ່ນຳມາໃສ່ກັນໃຫ້ສົມສ່ວນ, ເມື່ອເມັດເຂົ້າສຸກຜຸ ນ້ຳກໍ່ໃຫ້ແຫ້ງຂອດພໍດີ. ສະນັ້ນ ຈ້າວ ຈຶ່ງແຕກຕ່າງກັບການຕົ້ມໂດຍທົ່ວໄປ. ເມື່ອໃດການຈ້າວດຳເນີນໄປຜິດສ່ວນຜິດເກນກໍ່ຈະເກີດເປັນອາການຕ່າງໆເຊັ່ນ: ໂຂ, ຜົງ, ປຸງກແຫຼວ ຫຼື ເລະ. ຈ້າວຕ້ອງໃຊ້ໝໍ້ທີ່ມີຝາປົກ, ເຂົ້າຈ້າວເປັນເຂົ້າທີ່ຕິດພັນກັບການຕົ້ມດ້ວຍໝໍ້ ບໍ່ແມ່ນໃຊ້ຫວດ ແລະບໍ່ໃຊ້ວິທີໜຶ້ງ; ຊຶ່ນີ້ໄດ້ຈາກວິທີຢ່າງໜຶ່ງທີ່ເຮັດໃຫ້ເຂົ້າສຸກ.

ການຜັນຜ່ຽນສຽງຂອງສະຫຼະໃນບາງຄຳ ພາໃຫ້ການເວົ້າ ຫຼື ຂຽນຄຳລາວຈຳນວນໜຶ່ງໄດ້ບໍ່ຄືກັນ ແລ້ວສ້າງຄວາມເຂົ້າໃຈຕໍ່ຄວາມໝາຍເກີດຜິດຜ່ຽນເຊັ່ນ: ຫິນ-ຫີນ, ລິງ-ລີງ, ຝຸງ-ຝຸ່ງ, ສິນ-ສີນ ແລະອື່ນໆ,ຜົນສະທ້ອນຂອງການຜັນຜ່ຽນນີ້ ກໍ່ກ່ຽວມາຮອດຄຳວ່າ ເຂົ້າຈ້າວ ກໍ່ເປັນ ເຂົ້າເຈົ້າ ສຳລັບບາງຄົນ. ຄຳວ່າເຂົ້າເຈົ້າ ນີ້ແມ່ນຄຳມາຈາກໃສ ເຮົາໄປຫາຄຳນີ້ໃນພາສາອື່ນດເບິ່ງ.

ຄຳວ່າ **ເຂົ້າຈ້າວ**ທີ່ລາວເອີ້ນນີ້ ໃນພາສາໄທເອີ້ນເປັນ **ຂ້າວເจ้า**; ເອ-ກະສານທາງພາສາຂອງໄທບາງສະບັບອະທິບາຍວ່າ: **ຂ້າວเจ้า** ເປັນຊະນິດ**ຂ້າ**ວທີ່ອ່ອນນວນຢ່າງສະເໝີທຸກເມັດເມື່ອເຮັດໃຫ້ສຸກໂດຍຕ່າງຈາກ**ຂ້າ**ວໜຽວ ເພາະຄວາມອ່ອນນຸ້ມ ແລະມີກິ່ນຫອມ,**ຂ້າ**ວຊະນິດນີ້ຈຶ່ງມີແຕ່ຜູ້ເປັນເจ้า, ເຊື້ອเจ้าจຶ່ງໄດ້ກິນ. ດ້ວຍຄວາມຊົມຊອບວ່າເປັນ**ຂ້າ**ວຂອງเจ้า ຕ່ຳງມາຈຶ່ງມີຜູ້ຊອບກິນຕາມແລ້ວກໍ່ນຳມາປູກກັນຢ່າງແຜ່ຫຼາຍໂດຍທົ່ວໄປ. ເພາະເປັນ**ຂ້າ**ວຂອງเจ้านີ້ຈຶ່ງໄດ້ຊື່ວ່າ**ຂ້າ**ວเจ้า. ສ່ວນ**ຂ້າ**ວໜຽວນັ້ນເປັນຊະນິດ**ຂ້າ**ວຂອງພວກໄພ່ທີ່ກິນ ແລະປູກໂດຍທົ່ວໆໄປ.

ໃນພາສາລາວ ຈ້າວ ກໍ່ໝາຍເຖິງແບບຕົ້ມຢ່າງໜຶ່ງດັ່ງສະເໜີໃນຕົ້ນໆບົດນີ້; ສ່ວນເຂົ້າໜຽວນັ້ນ ເປັນຊື່ທີ່ໄດ້ມາຈາກລັກສະນະທີ່ເຂົ້າຊະນິດນີ້ຕິດກັນຢູ່ເປັນໂງ່ນເປັນຈຸນເມື່ອເຮັດໃຫ້ສຸກ. ການຈະຕິດກັນໄດ້ເພາະມັນມີຢາງໜຽວ ເຊິ່ງເຂົ້າຊະນິດນີ້ ໃຜໆຢາກ ກໍ່ກິນໄດ້ບໍ່ແມ່ນແຕ່ໄພ່. ສ່ວນເຂົ້າຈ້າວ ກໍ່ເຊັ່ນດຽວ ກໍ່ບໍ່ໄດ້ແບ່ງກຸ່ມຜູ້ກິນມາແຕ່ໃດ. ບາງຖິ່ນການປູກເຂົ້າຈ້າວກໍ່ເພື່ອ

ພຽງໃຊ້ຕົ້ມເອົານ້ຳເຂົ້າໄວ້ຂ້າຝ້າຍ ເຮັດໃຫ້ເສັ້ນຝ້າຍຫັນກ່ອນການຈະຈຸບ ນ້ຳນິນ (ນ້ຳຫ້ອມ) ພ້ອມນີ້ກໍ່ປູກແຮເຮືອນເພື່ອໄວ້ກິນຍາມອຶດ, ຫາກປີໃດບໍ່ ອຶດ, ເຂົ້າຈ້າວທີ່ແຮກໍ່ຈະຖືກນຳມາເກືອໄກ່ເກືອເປັດ. ໃນແຕ່ກ່ອນຄົນລາວເຮົາ ໃຜກິນເຂົ້າຈ້າວກໍ່ຈະເປັນຄົນທຸກ, ເປັນຄົນອຶດເຂົ້າ, ຜູ້ເປັນເຈົ້າຂອງເຂົ້າຈ້າວ ມັກໄດ້ແກ່ເປັດ, ໄກ່ ແລະຄົນທີ່ອຶດເຂົ້າ. ເມື່ອເບິ່ງການກ່າວເຖິງປະຫວັດແຫ່ງ ຄວາມໝາຍຂອງຄຳວ່າ ເຂົ້າຈ້າວ ໃນພາສາລາວ ກັບຄຳຊີ້ແຈງໃນບາງເອກະ-ສານຂອງພາສາໄທກ່ຽວກັບ ຂ້າວເຈົ້ານັ້ນ ມັນໂລດໄປກັນຄົນລະທາງກັບພາ ສາລາວ. ໃນລາວ ເຂົ້າຈ້າວຈະຢູ່ໃນຖານະສຳຮອງຈາກເຂົ້າໜຽວ ແລະ ບໍ່ຊິງ ຄ່າ, ບໍ່ຊິງຈິດສຳນຶກກ່ຽວກັບເຈົ້ກັບໄພ່ຢ່າງໃດເລີຍ.

24 / VII

ຄຳວ່າ: ປັ້ນ ແລະ ໄຕ່ ໃນພາສາລາວ

ห้องสมุดหอไตรวัดเชียงยืน

ຄຳທັງສອງນີ້ເຖິງວ່າເປັນຄຳລາວດັ້ງເດີມ ແຕ່ຜູ້ຈະຮັກສາຄວາມ ໝາຍອັນດັ້ງເດີມຂອງຄຳນີ້ກໍ່ຍັງໄດ້ບໍ່ທຸກຄົນຄື: ມີຜູ້ໃຊ້ປັ້ນເປ, ໃຊ້ບໍ່ເຂົ້າກັບກໍ ລະນີ ຫຼື ບໍ່ຖືກເຫດການ. ສາເຫດບາງຢ່າງກໍ່ເພາະການແຊກຄວາມໝາຍຂອງ ຄຳ ຢ່າງດຽວກັນຈາກພາສາໄທ ແລະ ມີສາເຫດທີ່ເປັນຂອງສ່ວນບຸກຄົນອີກທີ່ ບໍ່ ມັກຄິດຄຳ ເລືອກຄຳກ່ອນໃຊ້ ຫາໄດ້ຄຳໃດກໍ່ໃຊ້ໂລດ.

ຄຳວ່າ: ປັ້ນ ເປັນຄຳກຳມະ ໝາຍເຖິງອາການຍົກຂາໜຶ່ງ ແລະ ໃຊ້ ຕີນຢຽບບ່ອນສູງກວ່າເຊິ່ງຕີນໜຶ່ງຍັງຢຽບຢູ່ບ່ອນຕ່ຳກວ່າ ແລ້ວປັ້ນຕົວຂຶ້ນຫາ

ຈຸດສູງ. ປັນໃນພາສາລາວ ລະຫວ່າງຕີນ ແລະ ສິ່ງທີ່ປັນມີຄວາມກ່ຽວຂ້ອງກັນ ຄື: ປັນຕ້ອງມີບ່ອນຢຽບທີ່ສູງກວ່າບ່ອນຢູ່ທຳອິດສະເໝີ, ອາດເປັນຕັ່ງ, ຖ້ານ ຫຼື ຕົ້ນໄມ້ທີ່ມີງ່າກໍ່ໄດ້.

ຄຳວ່າ: ໄຕ່ ເປັນຄຳກຳມະ ໝາຍເຖິງອາການໃຊ້ຕີນເດີນໄປຕາມສິ່ງ ທີ່ນ້ອຍເປັນເສັ້ນສາຍ, ເປັນລຳ ຫຼື ເປັນເສັ້ນຊື່ໆ ສິ່ງເຫຼົ່ານັ້ນອາດຢູ່ພື້ນ, ກ່າຍ ຫຼື ເນັ່ງຕາມລວງຊື່ ຫຼື ລວງເນີ້ງ. ໄຕ່ ໃນພາສາລາວຍັງໝາຍເຖິງການໄປຕາມ ແນວທີ່ນ້ອຍ, ແຄບ,ຍາວຫຼືເປັນເສັ້ນໂດຍຕີນ; ທີ່ອັນໄຕ່ບໍ່ກ່ຽວວ່າເປັນສິ່ງມີງ່າ, ມີຕູດ ຫຼື ມີພັກ, ພ້ອມນີ້ ໄຕ່ຍັງກ່ຽວກັບການຍ້າຍຕີນໄປບາດຖີ້ໆ, ຫາກແມ່ນ ຄົນ ຫຼື ສັດໃຫຍ່ໄຕ່ຍັງມີຄວາມໝາຍເຖິງຍ້າຍບາດຕີນຊ້າໆຢ່າງມີຄວາມລະ ວັງ, ແຕ່ສຳລັບແມງທີ່ມີຂາເກີນສີ່ຂາ ຫຼື ບໍ່ມີຂາເຊັ່ນ: ຫອຍ ແລະ ໂຕມົດ, ຕັກ ແຕນ, ບົ້ງ, ບົ້ງກີ ຊຸມນີ້ ໃຊ້ຄຳວ່າໄຕ່ຢ່າງດຽວ ໃນທຸກກໍລະນີ,ຈະແມ່ນສິ່ງທີ່ເປັນ ພື້ນ, ຫຼື ເປັນເສັ້ນຍາວກໍ່ຕາມ, ສັດຊຸມນີ້ຈະບໍ່ໃຊ້ຄຳວ່າຍ່າງໃຫ້ແກ່ການເຄື່ອນ ໄປ.

ຕໍ່ກັບຕົ້ນໄມ້ ພາສາລາວໃຊ້ໄດ້ທັ້ງຄຳວ່າ ຂຶ້ນດປັນ ແລະ ໄຕ່ ໃຊ້ໃນ ກໍລະນີຕ່າງກັນ,ຄວາມໝາຍກໍ່ຕ່າງກັນ, ຂຶ້ນ ກໍ່ຕ່າງຈາກຄຳວ່າ ປັນແລະ ປັນ ກໍ່ ຕ່າງຈາກ ໄຕ່. ຄວາມໝາຍຂອງຄຳວ່າ ຂຶ້ນກໍ່ຮວມເອົາວິທີປັນ, ວິທີໄຕ່, ວິທີ ກອດຕົ້ນໄມ້ແລ້ວຢັນຂຶ້ນໄວ້ຢູ່ໃນນັ້ນ. ສ່ວນຄຳວ່າໄຕ່ ພັດບໍ່ມີຄຳວ່າຂຶ້ນ ຫຼື ລົງ ຢູ່ນຳ ເຊິ່ງຕ້ອງໃຊ້ຄຳວ່າ ລົງ ແລະ ຂຶ້ນ ເພື່ອບອກທິດ ຄື ໄຕ່ລົງ , ໄຕ່ຂຶ້ນ. ສ່ວນ ຄຳວ່າ ປັນ ນັ້ນເຖິງຄວາມໝາຍຈະບອກທິດວ່າ ຂຶ້ນ ຢູ່ໃນນັ້ນ ແຕ່ເຮົາກໍ່ໃຊ້ຄຳ ວ່າຂຶ້ນຕື່ມເຂົ້າເປັນປັນຂຶ້ນ ເພື່ອເສີມຄວາມໝາຍຂອງກັນກັບກັນ. ແຕ່ຍາກທີ່ ຈະໃຊ້ຄຳວ່າປັນລົງ. ຫາກມີກໍ່ມີໃຊ້ໃນທາງທີ່ເປັນສຳນວນວັນນະຄະດີ. ພາສາ ລາວເຮົາມີ ປັນ, ໄຕ່, ຂຶ້ນ, ໄຕ່ຂຶ້ນ, ໄຕ່ລົງ, ປັນຂຶ້ນ, ລົງມາ ຢ່າງຄົບດີຖີ່ຖ້ວນ ແລ້ວເຊິ່ງສາມາດເລືອກໃຊ້ໄດ້ ຂໍແຕ່ຢ່າໃຊ້ຜິດກໍລະນີ.

ຄຳວ່າ: ໄວ້ຕົວ ຖືຕົວ ແລະ ໃນຕົວ ໃນພາສາລາວ

ຄຳ: ໄວ້ຕົວ ແລະ ຖືຕົວ ລ້ວນແຕ່ເປັນຄຳກ່ຽວກັບບຸຄະລິກກັບນິໄສ ຂອງຄົນໃດໜຶ່ງທີ່ສະແດງອອກຕໍ່ຄວາມສຳພັນກັບຄົນອື່ນ ໂດຍສະເພາະຄົນທີ່ ບໍ່ແມ່ນສະມາຊິກໃນຄອບຄົວ.

ໄວ້ຕົວ ເປັນຄຳກິລິຍາ ເປັນອາການຢ່າງໜຶ່ງຂອງຄົນທີ່ສະແດງໃຫ້ຮູ້ ສຶກຫຼືເຫັນວ່າບໍ່ຍອມໃຫ້ຄວາມຕິດແຫດ, ຄຸ້ນເຄີຍ ຫຼື ເປັນກັນເອງໂດຍງ່າຍກັບ ໃຜຜູ້ໜຶ່ງທີ່ເປັນຄົນອື່ນຂອງຄອບຄົວ, ເຊິ່ງຄົນອື່ນທີ່ວ່ານັ້ນ ເຖິງຈະເປັນຄົນ ຮ່ວມວຽກຮ່ວມງານນຳກັນ, ເຄີຍເຫັນ, ພົບພໍ້ກັນເປັນປະຈຳກໍ່ຕາມ ຫຼື ຄົນທົ່ວໆ ໄປກໍ່ຄືກັນ. ການໄວ້ຕົວນີ້ສາມາດນຳມາສຶກສາຫາສາເຫດໄດ້ ໂດຍໃຊ້ວິທີສຶກ ສາທາງສັງຄົມສາດ ແລະ ຈິດຕະສາດປະສານກັນ, ຜົນທີ່ສຶກສາໄດ້ໃນຜ່ານມາ ໃຫ້ຄວາມເຫັນວ່າ ການໄວ້ຕົວ ມັກເກີດຈາກການຈັດຕົວເອງໃຫ້ຢູ່ຕ່າງຫາກ ຕາມຖານະ, ຕຳແໜ່ງທີ່ແຕກຕ່າງກັນ, ໃນເລື່ອງຂອງຖານະ ອາດມີເສດຖະ ກິດ, ລະດັບການສຶກສາມຳດ້ວຍ. ແຕ່ເຖິງຢ່າງນັ້ນການໄວ້ຕົວທີ່ເບິ່ງໃນແງ່ຈິດ ຕະສາດພົບວ່າ ເປັນອາການອັນມີລັກສະນະຕາມບຸກຄົນທີ່ສຳນຶກ ແລະ ຖືເອົາ ຄວາມສຳນຶກນັ້ນ ມາເປັນອາດເພື່ອສະແດງ ຫຼື ປະຕິບັດ. ອາການໄວ້ຕົວຈະ ກ່ຽວຂ້ອງເຖິງຄວາມລະມັດລະວັງໃນການເວົ້າ, ການເຮັດ, ການຄົບຄ້າກັບຄົນ ອື່ນຕະຫຼອດເຖິງ ການຂໍຄວາມຊ່ວຍເຫຼືອຈາກຜູ້ອື່ນນຳດ້ວຍ ເພາະມັກຈະຄິດ

ເຖິງການຂໍຄວາມຊ່ວຍເຫຼືອນັ້ນເປັນການອ່ອນຕົວ, ອ່ອນຂໍ້ ແລະ ພາໃຫ້ຕົນຕ້ອຍຕ່ຳຍ້ອນ.

ຄຳວ່າ ຖືຕົວ ເປັນອາການາທາງບຸຄະລິກທີ່ສະແດງອອກຂອງບຸກຄົນໃດໜຶ່ງຕໍ່ກັບຜູ້ອື່ນໂດຍຖືວ່າຕົນເໜືອກວ່າ, ລົ້ນທາງດ້ານຖານະ, ໜ້າທີ່, ຕຳແໜ່ງ, ລະດັບຄວາມຮູ້ ຫຼື ສັກສິ. ການຖືຕົວເປັນຄວາມຮູ້ສຶກນຶກຄິດເອົາຕົວໃຫ້ຢູ່ລະດັບສູງກວ່າຜູ້ອື່ນສະເໝີ, ເຊິ່ງຕໍ່ກັບຜູ້ອື່ນອາດຈະເກີດຄວາມບໍ່ມັກໄດ້ງ່າຍ. ການຖືຕົວພາໃຫ້ເກີດຄວາມຫ່າງເຫີນຈາກຜູ້ອື່ນ ຫຼື ອາດຫ່າງເຫີນຈາກບາງ ອຸງກທີ່ຄິດວ່າເປັນອຸງກອັນຈະສ້າງຄວາມລຳບາກ, ສ້າງສິ່ງທີ່ຈະເປັນຕົວວັດແທກ ເຖິງຄວາມສາມາດ ຫຼື ຄວາມບໍ່ສາມາດຂອງຕົນ ແລະ ຍາມໃດກໍ່ຈະຫາວິທີຫຼົບຫຼີກໃນສິ່ງທີ່ຈະໃຫ້ຕົນເປັນທີ່ຮັບໃຊ້ໃຫ້ໝູ່ກອງ, ແຕ່ກົງກັນຂ້າມກໍ່ມັກໃຊ້ໝູ່ກອງເຮັດໃນສິ່ງຈະເປັນປະໂຫຍດໃຫ້ຕົນ ມັກສວຍໃຊ້ຜູ້ອື່ນ, ກົນແຮງຜູ້ອື່ນ. ພ້ອມນີ້ການຖືຕົວກໍ່ຍາກທີ່ຈະມີການຂໍຄຳເຫັນ ຫຼື ຮຽນຮູ້ຈາກຜູ້ອື່ນແມ່ນແຕ່ສິ່ງທີ່ບໍ່ຮູ້, ຮູ້ໜ້ອຍກໍ່ຈະເຮັດຄືວ່າຕົນເກ່ງ, ເພາະຖືການຂໍຄຳເຫັນ ຫຼື ຮຽນນຳນັ້ນເປັນສິ່ງທີ່ລົບສັກສີຂອງຕົນ, ບໍ່ມັກການບອກ ຫຼື ການກວດກາ,ການຕິຂອງຜູ້ອື່ນໃນໝູ່ກອງ ແຕ່ມັກອອກໜ້າ,ມັກຍົກຍ້ອງ, ມັກເຮັດດີຕໍ່ຜູ້ທີ່ມີຕຳແໜ່ງສູງກ່ວາເພື່ອຫວັງປະໂຫຍດສະເພາະຕົວ, ຜູ້ຖືຕົວເມື່ອເຮັດໃນສິ່ງລະອຽດດ້ວຍຕົນເອງມັກບໍ່ເປັນ.

ໃນຕົວ ເປັນແບບແຜນທາງຈິດໃຈຂອງບຸກຄົນທີ່ມັກຍຶດເອົາແຕ່ຄວາມຄິດ, ຄວາມເຂົ້າຂອງຕົນຜູ້ດຽວໃນການຕັດສິນບັນຫາເພື່ອຫວັງເອົາປຽບຜູ້ອື່ນ,ແນວທີ່ຕົນເອງຈະເຮັດ ຈະຕັດສິນນັ້ນ ເຖິງຜູ້ອື່ນມີຄຳຄິດເຫັນ, ຄຳສະເໜີ ແບບບໍ່ເຫັນຄວນນຳແຕ່ກໍ່ບໍ່ສູ້ເອົາຕາມຄຳເຫັນຂອງຫຼາຍຄົນ,ບາງບັນຫາກໍ່ໃຫ້ຫຼາຍຄົນສະແດງຄຳຄິດເຫັນຕໍ່ແຕ່ກໍ່ພຽງໃຫ້ເປັນຮູບການ, ເມື່ອຕັດສິນ ກໍ່ມາເອົາຄວາມຂອງຕົນທີ່ບໍ່ສູ້ໄປໃນທາງດຽວກັບຄຳເຫັນຂອງຄະນະ, ໝູ່ກອງ, ບໍ່ສູ້ຖືກກັບສິ່ງເປັນຈິງອັນພາວະວິໄສ ຫຼືບໍ່ສູ້ຕອບສະໜອງ ຕໍ່ຄຳສະເໜີຮ້ອງຂໍຂອງຄົນສ່ວນ

ຫຼາຍ.ຄວາມໃນຕົວມັກເກີດກັບບຸກຄົນທີ່ໄດ້ຮັບຖານະເປັນນາຍ.

ໄວ້ຕົວ ແລະ ຖືຕົວ ເປັນຄຳທີ່ມີເນື້ອຄວາມປະກອບຂຶ້ນຈາກອາການຫຼາຍໆອັນເຊິ່ງຕ້ອງການໃຫ້ຄຳອະທິບາຍຍາວ.ໄວ້ຕົວຍັງມີຄ່າແຫ່ງວັດທະນະ-ທຳ ເປັນສຳຄັນ ແລະ ຕາມດ້ວຍລັກສະນະບຸກຄົນ, ສ່ວນຄຳວ່າຖືຕົວບໍ່ແມ່ນຄ່າທາງວັດທະນະທຳ ເປັນລັກສະນະແຫ່ງບຸກຄົນທີ່ນຶກ ແລະ ວາງວາດຊົງ, ທ່າທາງເອົາເອງເພື່ອສະແດງຄວາມລົ້ນ ທັງຄວາມຫຼົງຕົວເຂົ້ານຳກັນ.ຄຳທັງສອງມີຄວາມໝາຍຕ່າງກັນຫຼາຍຢ່າງ, ແຕ່ລະຄຳລ້ວນແຕ່ກ່ຽວຂ້ອງກັບການທີ່ບໍ່ຕິດແຫດ, ບໍ່ໃກ້ຊິດກັບຜູ້ອື່ນໂດຍງ່າຍ. ແຕ່ກໍ່ຕ່າງທີ່ວ່າ ອັນໜຶ່ງເປັນການບໍ່ຕິດແຫດ ຄຸ້ນເຄີຍເພາະເພື່ອຄວາມມີອິສະຫຼະ ມັກຢູ່ເອງ, ແຕ່ອັນໜຶ່ງບໍ່ຍອມໃຫ້ຊິດຕິດແຫດເພາະຄວາມມັກເໜືອກວ່າຜູ້ອື່ນນັ້ນເອງ; ສ່ວນ ໃນຕົວ ມັກຈະໄປກັບຄວາມຖືຕົວແລະການຖືຕົວກໍ່ມັກມີຄວາມໃນຕົວຕາມໄປນຳ ເຫັນວ່າມັນເປັນໝູ່ທີ່ສະໜັບສະໜູນກັນ.

ແອບແຝງ ຫຼື ອີບແຝງ

ປະຈຸບັນໄດ້ພົບການໃຊ້ຄຳວ່າ ແອບແຝງ ເປັນປະຈຳ ມີພຽງບາງຄັ້ງເທົ່ານັ້ນຈຶ່ງພົບການໃຊ້ ຄຳວ່າ ອີບແຝງ. ເຖິງຢ່າງໃດເຮົາກໍ່ຮູ້ວ່າຄຳນີ້ກໍ່ແມ່ນ

ຈຸດໜຶ່ງທີ່ຄວນເວົ້າເຖິງ ໂດຍສະເພາະແມ່ນ ທີ່ໄປທີ່ມາຂອງຄວາມໝາຍໃນຄຳ ທັງສອງນີ້.

ແອບ, ອີບ ແລະ ແຝງ ລ້ວນແຕ່ແມ່ນຄຳເດີ່ມໃນພາສາລາວ ຫາກແຕ່ ວ່າເມື່ອເປັນຄຳປະສົມເຊັ່ນ ແອບແຝງ ແລະ ອີບແຝງ ແລ້ວກໍ່ມີຄວາມສົງ ໄສວ່າ ຄຳໃດແມ່ນແນວໃດແທ້.

ຄຳວ່າ: ແອບ ໃນວັດຈະນະນຸກົມພາສາລາວໄດ້ອະທິບາຍໄວ້ມີສອງ ຄວາມໝາຍຄື ໜຶ່ງ ໝາຍເຖິງເຝິກ, ຫັດ, ເຮັດເພື່ອໃຫ້ເປັນ ຫຼື ລ້ຽ. ສອງ ໝາຍເຖິງສິ່ງໃສ່ເຂົ້າໜຽວທີ່ໜຶ້ງສຸກແລ້ວ, ຄຳນີ້ລາວເຮົາຮັບຈາກພາສາ ຂະມຸ ເຂົ້າມາໃຊ້.

ຄຳວ່າ: ອີບ ໝາຍເຖິງແປະເຂົ້າກັນຈົນແໜ້ນ, ຈີ່ມກັນ, ແປະຢ່າງ ໜີບກັນ. ໃນນີ້ຄວນສັງເກດວ່າ ເມື່ອກ່າວເຖິງ ອີບ ໄດ້ມີຄວາມສຳນຶກທີ່ກ່ຽວ ກັບ ອາການຢູ່ຢ່າງແໜ້ນດ້ວຍໜາຍອັນ ຫຼື ນັບແຕ່ສອງຂຶ້ນໄປ. ສະນັ້ນ ໃນການ ນິ-ຍາມຄວາມໝາຍຈຳຕ້ອງມີຄຳວ່າ "ກັນ" ອັນໝາຍາເຖິງອັນນີ້ຕໍ່ອັນນັ້ນ, ແນວກັບແນວ, ຄົນກັບຄົນ .

ຄຳວ່າ: ແຝງ ໝາຍເຖິງທຽມໄປນຳ, ແປະໄປກັບ, ເຊື່ອງຊ້ອນຢູ່ນຳ, ລີ້ຢູ່ ດັ່ງນີ້ເປັນຕົ້ນ.

ມາກ່າວເຖິງຄຳປະສົມ, ໃນພາສາລາວມີຄຳປະສົມໜາຍຊະນິດ ບາງ ຊະນິດເມື່ອເປັນຄຳປະສົມແລ້ວຍັງມີຄວາມໝາຍກ່ຽວຂ້ອງກັບຄຳເດີມດັ່ງຄາວ ຍັງເປັນຄຳດ່ຽວເຊັ່ນ: ບຸກບັ່ນ, ສູ້ຊົນ, ຜ່ານຜ່າ, ຫຼົ້ງລືມ, ໜຸດຜ່ອນ... ແຕ່ບາງຊະ -ນິດເມື່ອເປັນຄຳປະສົມແລ້ວບໍ່ໄດ້ມີຄວາມກ່ຽວຂ້ອງກັບຄວາມໝາຍເດີມເລີຍ ກໍ່ມີເຊັ່ນ: ນ້ຳສຽງ, ນ້ຳຄວາມ, ສາຍໄຟ, ໄຟຟ້າ ເມື່ອໄດ້ຄວາມໝາຍໃໝ່ຂຶ້ນ ມາຈະບໍ່ເຫັນວ່າມີນ້ຳຢູ່ໃນສຽງ ແລະ ຄວາມນັ້ນໆ, ພຽງແຕ່ເປັນການປຽບທຽບ ເທົ່ານັ້ນ.

ບັດນີ້ໄວ້ມາເບິ່ງຄຳວ່າ: ແອບແຝງ ກັບ ອີບແຝງ ຄວາມໝາຍທີ່ໃຊ້ໃນປະຈຸບັນໝາຍເຖິງຕິດແປະກັນ, ເຊື່ອງຊ້ອນໄປນຳ, ແປະໆໄປນຳດັ່ງນີ້ເປັນຕົ້ນ ພ້ອມນີ້ກໍ່ເຫັນວ່າເປັນຄຳປະສົມຊະນິດທີ່ມີຄວາມກ່ຽວຂ້ອງກັບຄຳເດີມຄື ມີຄວາມໝາຍກ່ຽວກັບການຕິດແປະ, ແນະ, ເຊື່ອງຊ້ອນຢູ່ຢ່າງນີ້ຮ່ວມຢູ່ນຳ. ຫາກຕາມຄວາມໝາຍນີ້ ຄຳທີ່ກ່ຽວຂ້ອງຄົງໄດ້ແກ່ ອີບ ແລະ ແຝງ. ສະນັ້ນ ຄົງ ແມ່ນ ອີບແຝງ ຈະເຂົ້າຄວາມກວ່າ. ສ່ວນຄຳວ່າ ແອບແຝງ ຫາກຢູ່ໃນພາສາໄທ ໝາຍເຖິງເຮັດໂດຍບໍ່ໃຫ້ຜູ້ອື່ນເຫັນດ້ວຍອາການຕ່າງໆເຊັ່ນ: ຊຸ່ມຊ້ອນ, ແນບ ຫຼື ເຂົ້າໄປແປະ. ເບິ່ງແລ້ວຈະເຂົ້າກັບຄວາມວ່າລີ້ຊ່ອນ, ເຊື່ອງຢູ່ນັ້ນເອງ, ແຕ່ໃນພາສາລາວ ແອບ ພົບວ່າມີພຽງສອງຄວາມໝາຍທີ່ໃຫ້ມາໃນຕົ້ນນີ້. ຄຳທີ່ເຮົາມັກໃຊ້ຈົນລົ້ງແລ້ວຈຶ່ງມີໂອກາດນຳມາເວົ້າຢ່າງນີ້ ກໍ່ມີຄວາມລຳບາກພໍຄວນທີ່ຈະປັບຄືນ, ແຕ່ເຖິງຢ່າງໃດຫາກຄຳໃດທີ່ມີຢູ່ໃນພາສາເຮົາແລ້ວກໍ່ໃຫ້ໃຊ້ເຕັມຄ່າເຕັມຂີດຂອງມັນກ່ອນ, ຄັນບໍ່ມີແທ້ໆຈຶ່ງໄປຮັບເອົາຈາກທີ່ອື່ນມາໃຊ້ ເພາະສັບພາສາໄດ້ມີຄ່າທາງສັກສີແຫ່ງຄວາມເປັນຊາດ.

ຄຳວ່າ: ເຈາະຢາງ ມີຢູ່ໃສໃນໄມຍ-ມວຍລາວ

ການທີ່ລາວເຮົາມີໄມຍລາຍມາແຕ່ກີ້ແຕ່ໃດນັ້ນ ຖືວ່າເຮົາກໍ່ມີເອກະລັກຢ່າງໜຶ່ງທີ່ກ່ຽວກັບການຕໍ່ສູ້ ແລະ ປ້ອງກັນຕົວຕາມແບບຂອງເຮົາໂດຍບໍ່ໄດ້ນ້ອຍໜ້າໃຫ້ຄົນຮ້າຍອ້າຍອວດເກ່ງໃດໆທີ່ຈະເຂົ້າມາຂົ່ມຂູ່.

ມາເບິ່ງ ລີລາໃນໂມຍລາຍລາວກໍ່ເຫັນວ່າ ອຸດົມສົມບູນສົມຄວນສຳລັບທີ່ຈະເລືອກໃຊ້ເພື່ອເຂົ້າສູ້ໂດຍຫວັງຈະເຮັດໃຫ້ຄູ່ຕໍ່ສູ້ເຈັບໜ້ອຍ ເຈັບໜາຍ; ເອົາຈົນຄາງກະໄຕຫັກ ຫຼື ຫົວສັກຂາເຄກໍ່ໄດ້. ການທີ່ຈະໃຫ້ເກີດອາການຕ່າງໆ ເຊັ່ນນີ້ໄດ້ ໃນໂມຍລາຍລາວຈຶ່ງເອົາທັງ ກົກມື,ຝ່າມື, ສົ້ນຕີນ, ຫຼັງຕີນ, ປາຍຕີນ,ໜ້າແຂ່ງ, ເຂົ່າ, ກຳປັ້ນ,ສັນມື ແລະສອກ ຊຸມນີ້ເຂົ້າເປັນຊຸມເຄື່ອງສຳລັບປະທະ. ເບິ່ງແລ້ວ ອະໄວຍະວະທີ່ສາມາດກໍ່ໃຫ້ເກີດຄວາມເຈັບໆໄດ້ທຸກສ່ວນແມ່ນຖືກນຳມາຮ່ວມ. ອັນນີ້ແມ່ນເວົ້າເຖິງສ່ວນທີ່ເອົາໃຊ້ປະທະ.

ມາເວົ້າໃນເລື່ອງຈຸດສຳຄັນເພື່ອທຳລາຍຄູ່ກົງກັນຂ້າມກໍ່ໄດ້ກຳນົດໄວ້ເຊັ່ນກັນຄື: ຄໍຫອຍ, ຄາງກະໄຕ, ສ້ວາ, ຈະໜອກຄໍ, ເປົ້ນແກ້ມ, ຂະໜັບ, ຫູ, ຈະໜອກເອິກ, ທ້ອງນ້ອຍ, ພວາງຫຳ, ຂາບ່ອາ ແລະ ກ້ານຄໍ. ບັນດາຈຸດນີ້ ກໍ່ຈັດເປັນບ່ອນຕາຍ ແລະ ບ່ອນເຈັບ.

ບ່ອນຕາຍຮວມມີ: ຈະໜອກຄໍ, ຈະໜອກເອິກ, ຄໍຫອຍ, ກ້ານຄໍ ແລະ ພວາງຫຳ. ນອກນັ້ນຖືເປັນບ່ອນເຈັບ. ແຕ່ໃນບ່ອນເຈັບກໍ່ມີບ່ອນເຈັບໜ້ອຍ ແລະ ເຈັບໜາຍເຊັ່ນ: ຄາງກະໄຕ, ສ້ວາ, ຂະໜັບ, ເປົ້ນແກ້ມ,ທ້ອງນ້ອຍ ແລະ ຂາບ່ອາ ນັບເປັນບ່ອນເຈັບໜາຍ, ມີແຕ່ຫູຖືເປັນບ່ອນເຈັບໜ້ອຍກວ່າ ເພາະເມື່ອຖືກຕີຈົນຫູດັບ ແຕ່ບໍ່ພໍຕາຍຍ້ອນ.

ສຳລັບການຕີກໍ່ມີເຕັກນິກທີ່ບໍ່ງ່າຍ ໃນນີ້ອາດຈັດເປັນສາມກຸ່ມຄື: ກຸ່ມໜອກ ເຊິ່ງຖືເປັນກຸ່ມກົນລະຍຸດທາງຈິດຕະສາດ. ກຸ່ມນີ້ໃຊ້ການຟ້ອນລາຍ ແລະ ເຕັ້ນຫຼິບ ເພື່ອເຮັດໃຫ້ຄູ່ຕໍ່ສູ້ລາຍຕາ, ໃນພາສາລາວເອີ້ນ ຟ້ອນລາຍ, ຕີລາຍ, ໂມຍລາຍ ແຕ່ລະຄຳທີ່ມີຄຳວ່າ **ລາຍ** ໃນນີ້ໝາຍເຖິງລາຍຕາ, ອັນນີ້ບໍ່ທັນແມ່ນການຕີ ພຽງແຕ່ເປັນກົນລະຍຸດທາງຈິດຕະສາດເຮັດໃຫ້ຕາຂອງຄູ່ຕໍ່ສູ້ລາຍ. ກຸ່ມທີ່ສອງໄດ້ແກ່ກຸ່ມຕີຕັດແຮງ, ກຸ່ມນີ້ໃຊ້ການຕົບ ແລະ ເຕະເປັນສຳຄັນຄື: ຕົບໜ້າ, ຕົບຂະໜັບ, ຕົບຫູ, ຕົບຄາງ, ຖົບທ້ອງນ້ອຍ, ຟັນແຂນ,ເຕະສ້ວາ,ໄສກາບຄາງ ແລະ ເຕະຕັດນ່ອງ ອັນພາໃຫ້ຄູ່ຕໍ່ສູ້ອ່ອນກຳລັງຕົວ. ກຸ່ມຕໍ່

ไปถึ ทามปะทัดปะทาม หมายเถิงเอิาให้หมูบ หิ ตาย เซิ่งใช้ทาม เตะ, สับ ฟันด้อยสันมี หิ ซัด อันมีเซ่ำ, ติม และ สอท โดยเลังใส่เป้าที่เป้นบ่อมตาย หิ บ่อมเจับๆเป้นสำคัม. ทามติโมยลาอแต่ละถั้งก่ำจะปะสามทั้งสามกุ่มนี้ไป และ ทามแอบก่ำจะแอบทั้งสามกุ่มนี้ให้ถึบ .ทามติโมยลาอในแต่ใดพุ้นแม่นบ่ถีโสบมอมมี; เป้นทามใช้มีเป่ำติม เป่าใส่กัม. หากถีโสบมอมมี มันก่ำสำกับทามมัดสิละปะทามติและอิทิปะทะเอิาไอ้ตั้งกายเถิง,อันได้ใช้ก่ยังเหือบ่พ่เท่าใด, แมอนี้ก่ำเป้นเหด อันสำคัมที่พาให้ สิละปะทามติโมยลายลาอถีกปุ่มแปงไป ผู้รู้ติแบบโมยลายลาอแท้ก่ำหน้อยเฮ้าๆจิมหาซิบ่มีแล้อ..

จากที่สะเหมิมานี้บ่พิบอ่า คำอ่า: เจาะยาๆ มิคำยู่กุ่ม หิ กินละยุดใดฮองโมย-มอยลายลาอ. หากถือ่า ลาอก่ำเป้นซาดหึ่งที่มีโมย-มอยเป้นฮองติอเอิงแท้; เพื่อถามสิมสักสิฮองเอกะลักในวัดทะมะหำด้านนี้ฮองติม ก่ถอมใช้คำลาอที่มียู่ในวิทิต่สู้ย่าๆโมย-มอยลายลาอนี้จะเหาะกว่า. คำอ่า เจาะยาๆ เป้นสำมอมที่ยู่มอกพาสาลาอ เซิ่งต้อๆแปถามหมายอีกหอดหึ่งถื: ยาๆ หมายเถิงติมลิด และ เจาะหมายเถิงเธ็ดให้ธื่อ; ให้ลิมในติมลิดผื่อออกเทื่อละหน้อย ในที่สุดเมื่อลิมหมิดลิดก่ำจะไปบ่ได้ เซิ่งปฺบกับทามเตะฮาม่อๆ หิ เตะม่อๆก่เป้นทามตัดแรๆฮองคู่ต่สู้ให้ลิๆเทื่อละหน้อย. แต่ในพาสาลาอจุดนี้ เฮาบ่เธ็ดสำนอม (Idiom) ใดๆไอ้ มีแต่เอ้าซื่ตามถามลาออ่า: เตะม่อๆ, ตัดม่อๆ หิ บักฮาม่อๆ ก่หากรู้เลื่อๆอ่า เพื่อหยัๆ ทังฟังก่ม่อมเซ่นกัม.

ຄຳວ່າ: ແພ້ ກັບ ຊະນະ

ບົດນີ້ເປັນການຕອບຂໍ້ຂ້ອງໃຈທີ່ຜູ້ອ່ານຖາມມາ. ຂໍ້ຂ້ອງໃຈນີ້ຄື: ແພ້ ກັບ ຊະນະ. ຂ້າພະເຈົ້າກໍ່ເຄີຍໃຊ້ຄຳວ່າ ແພ້ ທີ່ໝາຍເຖິງຊະນະມາແຕ່ນ້ອຍໆຄືກັບຄົນພື້ນເມືອງທົ່ວປະເທດ, ເຮົາຍັງຈະໃຊ້ຄຳນີ້ ຫຼື ຈະເຊົ່າ ໄປໃຊ້ຄຳວ່າ ຊະນະ ແທນ?

ຄຳຕອບ: ແພ້ ພົບວ່າເປັນຄຳດັ້ງເດີມໃນພາສາລາວ, ມັກໃຊ້ກັບຄຳວ່າ: ຜາບ ເປັນຜາບແພ້ ມີຄວາມໝາຍຄືກັບຄຳວ່າ ຊະນະ, ເໜືອຄູ່ຕໍ່ສູ້,ແຕ່ສະເພາະ ແພ້ ຄຳດຽວ ແຕ່ໃດໆມາມີຄວາມໝາຍວ່າ ລ້ອນ,ສາມາດ,ໄດ້. ສ່ວນຄຳວ່າ ຊະນະເປັນຄຳຮັບມາຈາກພາສາອື່ນ. ສອງຄຳນີ້ ເຖິງວ່າມີຄວາມໝາຍເຊັ່ນດຽວກັນແຕ່ການໃຊ້ກໍ່ຈະມີບໍລິບົດທີ່ເໝາະກວ່າກັນຕາມແຕ່ລະຄຳ. ທັງນີ້ກໍ່ເພາະວ່າ ແພ້ ຍັງມີຄວາມໝາຍອື່ນຮວມໃນນັ້ນ ຕົວຢ່າງ: ແບກໄມ້ທ່ອນນີ້ບໍ່ແພ້ ຄືກັບ ແບກໄມ້ທ່ອນນີ້ບໍ່ລ້ອນ. ແຕ່ຄຳວ່າ ຊະນະ ປະກົດວ່າມີຄວາມໝາຍຢ່າງດຽວຄື ເໜືອກວ່າຄູ່ຕໍ່ສູ້, ໄດ້ໄຊ ຕົວຢ່າງ: ເຮົາຊະນະສັດຕູ.

ຄຳກົງກັນຂ້າມກັບ ແພ້ ແມ່ນ ພ່າຍ ແລະ ໂຈກ. ແຕ່ໃນປະຈຸບັນ ຄວາມໝາຍຂອງຄຳວ່າ ພ່າຍ ມັກໃຊ້ຄືກັບຄຳວ່າ ໜີ ຫຼື ນຳມາໃຊ້ນຳກັນເປັນ ພ່າຍໜີ; ແລ້ວນຳຄຳວ່າ ເສຍ ມາໃຊ້ແທນຄຳວ່າ ພ່າຍ. ນີ້ສະແດງວ່າ ຍັບຄຳນີ້ໄປແລ້ວດຶງຄຳອື່ນມາແທນ,ຄວາມວ່າ ແພ້ ມີທ່າວ່າ ຈະຄາດເຄື່ອນຈົນເສຍທີ ແລະ ເສຍ ຄວາມເປັນເອກະລາດ ແລ້ວເກີດໄປຮວມຕົວເຂົ້າກັບຄຳວ່າ ໜີ,

ພ້ອມດຽວກັນຄຳວ່າ ເສຍ ຊ້ຳພັດມາແຍ່ງທີ່ຂອງຄຳວ່າ ພ່າຍ **ພາໃຫ້ຂອບ** ເຂດຂອງຄຳວ່າ ເສຍ ໄດ້ກວ້າງອອກ. ສ່ວນຄຳວ່າ ໂຈກ ກໍ່ຍັງເຫຼືອຢູ່ໃນວົງ ແຄບພໍແຕ່ຫຼົມຕົວ ຄື ຢູ່ພຽງໃນວົງທີ່ໃຊ້ຫຼິ້ນການພະນັນ ຕົວຢ່າງ: ຫຼິ້ນໄພ້ໂຈກ ເທົ່ານັ້ນ.

ໃນພາສາລາວ ຜາບແພ້ ກັບ ພ່າຍແພ້ ມີຄວາມໝາຍຕ່າງກັນຄື: ພ່າຍແພ້ ໝາຍເຖິງເສຍໄຊ, ໜີໄປຈາກການຊະນະ. ສ່ວນ ຜາບ ນັ້ນກໍ່ຄືປາບ ຫຼື ນາບ, ໝາຍເຖິງ ຂົ່ມໃຫ້ລົ້ງ, ທັບຢ່າງແຮງລົ້ງ. ເມື່ອຄວບກັບ ແພ້ ເປັນ ຜາບແພ້ ກໍ່ເປັນການເສີມເຕີມຄວາມໝາຍ ຄື: ປາບຊະນະ, ປາບໄດ້ ນັ້ນເອງ.

ແພ້ ກັບ ຊະນະ ເປັນສອງຄຳທີ່ມີໜ້າທີ່ ແລະ ຄວາມໝາຍຢ່າງດຽວ ກັນ. ແຕ່ຫາກຢູ່ໃນຮູບສຳນວນກໍ່ຈະມີຄວາມໝາຍຕ່າງກັນເລັກໜ້ອຍ. ຄວາມ ຕ່າງນີ້ຄົງຍ້ອນລັກສະນະ ແລະ ສຽງວັນນະຍຸດຂອງຄຳແຕ່ລະຄຳຕ່າງກັນ,ເມື່ອ ມັນເຂົ້າກັບຄຳອື່ນກໍ່ຈະເຂົ້າໄດ້ບໍ່ຄືກັນ ຕົວຢ່າງ: ແບກຂອງໜັກໂພດຈະແພ້ຕົວ ແພ້ຄົງ ໝາຍເຖິງຂອງທີ່ໜັກນັ້ນມັນຈະນາບ, ປາບຕົວເຮົາ,ເຮັດໃຫ້ສຸຂະພາບ ເຮົາເສຍ. ສຳນວນນີ້ເຮົາບໍ່ເຄີຍເວົ້າ: ແບກຂອງໜັກໂພດມັນຈະຊະນະຕົວຊະ ນະຄົງ.

ການຮັບຄຳຈາກພາສາອື່ນເຂົ້າມາໃຊ້ໃນພາສາຕົນນັ້ນ ຈຸດປະສົງຕົ້ນ ຕໍແມ່ນການຫາຄຳອັນຈຳເປັນມາເພີ່ມໃຫ້ພຽງພໍກັບຄວາມຕ້ອງການໃຊ້ໃນແຕ່ ລະສະໄໝເຊິ່ງເປັນການເຮັດໃຫ້ຄຳໃນພາສາຕົນອຸດົມສົມບູນຍິ່ງຂຶ້ນ.ແຕ່ພ້ອມ ດຽວກັນເມື່ອຮັບຄຳຢ່າງດຽວກັນຈາກພາສາອື່ນເຂົ້າມາ, ຊ້ຳພັດມາແທນບ່ອນ ຂອງຄຳທີ່ມີແລ້ວໃນພາສາເຮົາ ແລະ ເກີດການໄສໄຍຈົນເຮັດໃຫ້ຄຳເດີມໃນ ພາສາຕົນເກີດໝຸດຫາຍ ຫຼື ວົງຄວາມໝາຍຖືກແຄບເຂົ້ານັ້ນ ນັບວ່າຈະເປັນ ການສ້າງພາວະເສື່ອມຖອຍໄປໃນທາງລົບ (Negative) ມາສູ່ພາສາຕົນ. ເຮົາບໍ່ ມີໃຈຫວັງວ່າຈະເຮັດໃຫ້ຄຳເດີມໃນພາສາລາວເສື່ອມຖອຍ ຫຼື ຕ້ານກັບການ ຮັບເອົາຄຳຈາກພາສາອື່ນເຂົ້າມາ. ເຮົາມີຈຸດປະສົງພຽງວ່າຢາກຢັບຢັ້ງພາວະ

ໄສໄຍທີ່ຈະເກີດຂຶ້ນຈາກການຢືມຄຳຢ່າງດຽວກັນຈາກພາສາອື່ນເຂົ້າມາແລ້ວ ເຮັດໃຫ້ຄວາມໝາຍເດີມຂອງຄຳລາວເສື່ອມ ແລະ ຈະສູນເສຍໄປ. ຫາກຮັກພາສາລາວແທ້ກໍ່ພາກັນໃຊ້ຄຳວ່າ ແພ້ ອັນໝາຍເຖິງ ຊະນະ ນັ້ນ ສືບຕໍ່ໄປຕາມຄວາມໝາຍເດີມຂອງມັນດ້ວຍກັນ.

ຄຳ: ຕ່າງດ້າວ ແລະ ຕ່າງປະເທດ ໃນພາສາລາວ

ໃນປະຈຸບັນ ຄຳວ່າ ຕ່າງດ້າວ ແລະ ຕ່າງປະເທດ ຕ່າງຄຳຕ່າງກໍ່ພົບການໃຊ້ເປັນປະຈຳໃນພາສາລາວ. ເຖິງແນວນັ້ນຄວາມເຂົ້າໃຈໃນຄວາມໝາຍຂອງຄຳທັງສອງຍັງມີຜູ້ເຂົ້າໃຈວ່າເປັນອັນດຽວກັນກໍ່ມີ. ສະນັ້ນ ຄຳທັງສອງສົມຄວນນຳມາປຽບທຽບດ້ານຄວາມໝາຍເບິ່ງຈັກເທື່ອຈັກທີ.

ໃນສອງຄຳນີ້ຈຸດທີ່ສົງໄສໄດ້ແກ່: ດ້າວ ກັບ ປະເທດ. ສ່ວນຄຳວ່າ ຕ່າງ ຄົງເຂົ້າໃຈໂດຍທົ່ວກັນແລ້ວ. ທຳອິດເຮົາມາເບິ່ງຄຳວ່າ ດ້າວ ກ່ອນ. ໃນພາສາລາວແຕ່ເດີມໆກໍ່ພົບຄຳວ່າ: ດ້າວ ອັນໝາຍເຖິງ ດິນແດນໃດໜຶ່ງ, ຖິ່ນຖານໃດໜຶ່ງ, ທີ່ນອກດິນແດນຖິ່ນຖານທີ່ຕົນຢູ່ຕົວຢ່າງ: ຄົນຕ່າງດ້າວທ້າວຕ່າງແດນ ໃນນີ້ເຫັນວ່າ ຕ່າງດ້າວກໍ່ຄືກັບຕ່າງແດນ. ຄຳວ່າ ປະເທດ ເປັນຄຳຮັບມາຈາກພາ-ສາປາລີ ທີ່ມີຄວາມໝາຍປະກອບດ້ວຍຫຼາຍຢ່າງນຳກັນຄື: ດິນແດນທີ່ມີອານາເຂດອັນແນ່ນອນ ເຊິ່ງປະກອບມີປະຊາກອນຕັ້ງຫຼັກປັກຖານຢູ່ໂດຍມີ

ການປົກຄອງມີຜູ້ປົກຄອງດ້ວຍລະບົບລະບຽບຕາມແບບໃດໜຶ່ງ. ໃນນີ້ເຫັນວ່າ ປະເທດ ມີຄວາມໝາຍກ່ຽວຂອງທັງດິນແດນທັງຄົນແລະທັງອຳນາດການປົກຄອງ. ສະນັ້ນ ການເຂົ້າໃຈໃນຄຳວ່າປະເທດກໍ່ຄວນເຂົ້າໃຈໃນສິ່ງເຫຼົ່ານີ້ຮວມກັນ. ສ່ວນຄຳວ່າ: ດ້າວ ນັ້ນ ມີຄວາມໝາຍກ່ຽວຂ້ອງໃນເລື່ອງດິນແດນເປັນສຳຄັນ.

ບັດນີ້ ມາສູ່ຄຳປະສົມທີ່ວ່າ: ຄົນຕ່າງດ້າວ ກັບ ຄົນຕ່າງປະເທດ. ຄຳທັງສອງນີ້ມີບາງຄົນວ່າແມ່ນອັນດຽວກັນ. ຄວາມຈິງເປັນແນວໃດ ເຮົາມາເບິ່ງດັ່ງນີ້:

ແຕ່ເດີມໆພຸ້ນຄວາມໝາຍຂອງຄຳວ່າ ຄົນຕ່າງດ້າວ ກໍ່ເຊັ່ນດຽວກັບຄຳວ່າ ຄົນຕ່າງປະເທດ ຫາກຕ່າງຢູ່ບ່ອນວ່າ: ຄົນຕ່າງດ້າວ ໄດ້ມີຄວາມໝາຍທີ່ບໍ່ຮວມເອົາໝາຍແນວເຂົ້ານຳເທົ່າກັບຄຳວ່າຄົນຕ່າງປະເທດ, ຄົນຕ່າງດ້າວ ໝາຍເຖິງຄົນຕ່າງດິນແດນທີ່ມີພາສາ ແລະ ປະເພນີຕ່າງຫາກ ເຊິ່ງເຂົ້າຢູ່ໃນດິນແດນໜຶ່ງເພື່ອດຳລົງຊີວິດ ແລະ ທຳມາຫາກິນໄປຕາມຄວາມສາມາດຂອງໃຜມັນ ຕາມບ້ານຕາມເມືອງ. ສ່ວນຄຳວ່າ ຄົນຕ່າງປະເທດ ພົບວ່າເປັນຄຳທີ່ປະກົດໃຊ້ຕາມມາຈາກຄຳວ່າ ຕ່າງດ້າວ ຄື: ຄົນຕ່າງປະເທດ ກໍ່ແມ່ນຄົນຕ່າງດ້າວຕ່າງແດນ ແຕ່ກຳນົດຄວາມແຕກຕ່າງທີ່ສຳຄັນບາງອັນເຊັ່ນ ຄົນຕ່າງປະເທດ ຍັງໝາຍເຖິງຄົນຜູ້ທີ່ຈາກແດນອື່ນມາຜ່ານ ຫຼື ມາຢູ່ໂດຍມີວຽກ, ມີຈຸດໝາຍມີກຳນົດ,ມີການຄຸ້ມຄອງການຜ່ານ,ການຢູ່ດ້ວຍໜັງສືຜ່ານແດນ, ບໍ່ແມ່ນຄຸ້ມຄອງດ້ວຍສຳມະໂນຄົວດັ່ງຄົນຕ່າງດ້າວ.

ສະຖານະຂອງຄົນຕ່າງປະເທດເໝືອນກັບເປັນແຂກທີ່ມີຄວາມຕ່າງຫາກຈາກປະຊາຊົນ, ແຕ່ສະຖານະຂອງຄົນຕ່າງດ້າວເໝືອນກັບປະຊາຊົນທົ່ວໆໄປເຊິ່ງຢູ່ຢ່າງບໍ່ມີກຳນົດທັງຢູ່ພາຍໃຕ້ລະບຽບບ້ານເມືອງດັ່ງກັນກັບຄົນຊາດທີ່ເຂົາຢູ່. ພາສາລາວມີເອກະລັກທີ່ເດັ່ນຄື ມີການແບ່ງຄວາມໝາຍທີ່ກວ້າງອອກໃຫ້ເປັນຄວາມໝາຍຍ່ອຍ ສະນັ້ນ ຄຳວ່າ ຄົນຕ່າງດ້າວກັບ ຄົນຕ່າງປະເທດກໍ່ເປັນໄປຕາມກົດເກນການແຍກຍ່ອຍທາງຄວາມໝາຍນີ້; ຄຳວ່າ ຄົນ

ต่ๆปะเทด ได้แยกส่วน ให้มีความสะเพาะออกไปจากคำว่าถิ่นต่ๆ ด้าวและ กายเป้นสองคำที่เป้นเอกะลาด แต่มีความสำพันกัน.

มีคำถามมา มีคำตอบให้
ก่ยวกับสยง "ธ" ในพาสาลาว

นี้ก่เป้นคำตอบในข้อข้องใจที่ผู้อ่านทานหนึ่งถามมา ถืถามว่า: อักสอนลาวบ่มีติว ธ เด็กน้อยเผ่าลาวลุ่มหันลิ้นบ่เป้น, Paris ว่า ปาลิ. ถูสอนพาสาสำลับเด็กแม่นยากเหื่อเกิน. ลุงพูมีได้ส้างจุดอ่อนไว้ฮื่บ่?

อักสอนลาวบ่มีติว ธ /r/ นั้นบ่แม่นย้อนลุงพูมีเร็ดบ่ให้มี. พวกเฮาผู้ฮ่ยนพาสาสาดที่สอนตามมะหาวิทะยาไล และ เร็ดอ่ยกยู่สะถาบันค้นคว้าพาสาสาดได้มีโอกาดค้นคว้าพาสาลาวค้นคว้าเอกะสานของนักพาสาสาดชาดอื่นๆ. ผู้ที่ได้ค้นคว้าพาสาลาวแต่เดิมๆ (Proto Lao Language) เช่นท่าน: J. Gedney, Gerard Diffloth, Li Fangkuei, Ferlus, Chamberlian และ ผู้อื่นๆทุกท่านก่สะเหนิว่า พาสาลาวแต่เดิมๆบ่พิบสยง /r/ ในถิ่นใด, เถิงปะจุบันก่ยังยึดในความนี้. สยง /r/ และ อักสอน ธ ที่ปะกิดใช้ในพาสาลาวนั้นแม่นรับมาจากพาสาอื่น โดยสะเพาะจากปาลิ-สันสะกิด. หมายว่าเลิ่มมาปะกิดพายหลังที่พาสาลาวมีแล้ว,มีในถานะเป้นสยงยืม. พาสาลาวที่ใช้ในปะจุบันเป้นพาสา

ທີ່ມີຄຳຮັບມາຈາກພາສາອື່ນໆເຊັ່ນ: ພາສາຈີນບູຮານ, ມອນ, ຂະແມ, ຈາມ, ປາລິ, ສັນສະກິດ, ຝຣັ່ງ, ອັງກິດ, ລາແຕັ້ງ... ໃນນັ້ນພາສາທີ່ເຮົາຮັບມາສ່ວນຫຼາຍເປັນພາສາທີ່ມີໜ່ວຍສຽງ /r/ ແລະ ຄຳຈຳນວນໜຶ່ງທີ່ເຮົາຮັບມາກໍ່ມີສຽງ /r/. ເມື່ອຄຳຈຳນວນນີ້ເຂົ້າມາໃນພາສາລາວ ໃນການອອກສຽງຕົວຈິງຂອງຄົນທົ່ວໄປຕາມພາວະປົກກະຕິ ກໍ່ຈະອອກສຽງຕາມລະບົບສຽງພື້ນຖານຂອງພາສາລາວ. ສະນັ້ນ ຄຳທີ່ຮັບມາມີສຽງ /r/ ຈຶ່ງຖືກຜັນຮູບອາດເປັນ ລ ຫຼື ຣ ຕາມທີ່ມີໃນສຽງພາສາລາວ. ການຈະປ່ຽນເປັນ ລ ຫຼື ຣ ນັ້ນ ແມ່ນຂຶ້ນກັບລັກສະນະ ແລະ ສ່ວນປະກອບຂອງຄຳນັ້ນວ່າເປັນຄຳຊະນິດໃດ, ມີວັນນະຍຸດສຽງໃດ, ມີສະຫຼະຕົວໃດເປັນສະຫຼະແຖວໜ້າ ຫຼື ແຖວຫຼັງປະກອບເປັນຄຳນັ້ນໆດັ່ງນີ້ເປັນຕົ້ນ, ສິ່ງນີ້ຫາກໃຊ້ວິທີການທາງພາສາສາດກໍ່ສາມາດຄົ້ນຄວ້າໄດ້. ໃນຄະນະດຽວກັນມີບາງຄົນໄດ້ຮຽນ ແລະ ແອບອອກສຽງ /r/ ກໍ່ສາມາດອອກສຽງນີ້. ສະນັ້ນຈຶ່ງມີຄົນລາວບາງຄົນສາມາດອອກສຽງນີ້ໄດ້ ແຕ່ໄດ້ເພາະການຮຽນການເຝິກຫາກບໍ່ແມ່ນມີແຕ່ກຳເນີດ, ສຽງ /r/ ໃນຄຳຮັບມາຈາກປາລິ-ສັນສະກິດໄດ້ຜັນເປັນສຽງ ຣ ຫຼື ລ ຕາມລະບົບສຽງໃນພາສາລາວນັ້ນເປັນການຜັນພຽງສຽງ ສ່ວນຄວາມໝາຍຍັງຄົງເດີມຕາມທີ່ມາກັບ ປາລິ-ສັນສະກິດ.

ການທີ່ເດັກລາວອອກສຽງ /r/ ລຳບາກນັ້ນເປັນເພາະບັນພະບຸລຸດແຕ່ເດີມດາເຄົ້າຂອງລາວພາກຳນົດລະບົບໜ່ວຍສຽງຂອງພາສາລາວບໍ່ເຮັດສຽງ /r/ , ຄົນລາວທີ່ຢູ່ເຂດພາກອີສານຂອງໄທກໍ່ເຊັ່ນດຽວ. ລຸງພູມີ ວົງວິຈິດ ຮູ້ເລື່ອງນີ້ມາກ່ອນນີ້ເມື່ອ 60 ກວ່າປີແລ້ວ. ເມື່ອທ່ານຊຽນຫຼັກໄວຍາກອນພາສາລາວໃນປີ 1965-67 ກໍ່ມີເລື່ອງສຽງຂອງພາສາລາວເຊິ່ງເປັນຄວາມຮູ້ເພື່ອສອນໃຫ້ຄົນລາວຮູ້ຈຳແນກໜ່ວຍສຽງຂອງພາສາລາວແທ້ກັບໜ່ວຍສຽງທີ່ຮັບມາຈາກພາສາອື່ນ. ສະນັ້ນ ຈຶ່ງບໍ່ເຫັນມີສຽງ ຣ ໃນອັກສອນລາວ.

ຫາກມີຜູ້ເຂົ້າໃຈສຽງ ຣ ໃນພາສາລາວບໍ່ມີເພາະລຸງພູມີ ວົງວິຈິດ ຕັດອອກນັ້ນກໍ່ໝາຍເຖິງບໍ່ເຂົ້າໃຈໃນລະບົບສຽງຂອງພາສາລາວ, ບໍ່ຮູ້ຈຳແນກລະ

ບົບສຽງໃນພາສາລາວກັບພາສາອື່ນ ແລະ ອາດບໍ່ເຂົ້າໃຈໃນຈຸດປະສົງຂອງ ການຈຳແນກໂດຍທີ່ ລຸງພູມີ ວົງວິຈິດ ຢາກເນັ່ນເອກະລັກດ້ານໜ່ວຍສຽງຂອງ ພາສາລາວໃຫ້ທຸກຄົນຮູ້. ສຳລັບການສະກົດຄຳທີ່ຮັບມານັ້ນ ຄຳໃດຫາກເຮົາ ຮັບມາມານ ແລະ ໃຊ້ໃນລະບົບພາສາລາວຈົນເກີດຄວາມຊິນເຄັຍຄືກັບຄຳ ລາວກໍ່ໃຫ້ຂຽນຕາມລະບົບສຽງຂອງພາສາລາວ. ເມື່ອງຈາກຊຸມປີ 60 ເປັນ ສະໄໝເສິກສົງຄາມ ນັກຮຽນຮູ້ພາສາລາວທີ່ສາມາດເຮັດການຄົ້ນຄວ້ານຳທ່ານ ພູມີກໍ່ມີໜ້ອຍ, ດັ່ງນັ້ນການຂຽນໄວຍາກອນພາສາລາວນັ້ນຈຶ່ງນຳເອົາຄວາມຮູ້ ຫຼາຍໆເລື່ອງໆຂອງພາສາ ນັບຈາກພາກອັກຂະຫຼະຈົນເຖິງສັນທະກະວີໃຫ້ເປັນ ຄວາມຮູ້ພື້ນຖານອັນຫຼັກໆໄວ້. ມາເຖິງສະໄໝພັດທະນານີ້ຜູ້ທີ່ໄດ້ຮັບໜ້າທີ່ຄົ້ນ ຄວ້າພາສາກໍ່ມີໜ້າທີ່ຄົ້ນຄວ້າສືບຕໍ່ໂດຍຈັດແບ່ງລະບົບ ແລະ ຈັດພາກ, ຈັດ ຫາຂໍ້ມູນ, ນຳຄວາມຮູ້ແຫ່ງສາດພາສາອັນໃໝ່ໆເຂົ້າມາໃຫ້ຫຼາຍທັ້ງໃຫ້ຄົບ ເລື່ອງ. ລຸງພູມີ ບໍ່ໄດ້ສ້າງຈຸດອ່ອນໃນເລື່ອງນີ້ໄວ້ໃຫ້, ຜູ້ສ້າງຈຸດອ່ອນໃນດ້ານ ນີ້ຄົງໄດ້ແກ່ຜູ້ທີ່ເຂົ້າໃຈບໍ່ທັນໃນເລື່ອງເຊິ່ງຄວນຮູ້ມາກ່ອນນີ້ຕັ້ງ 60 ກວ່າປີ ແລ້ວ.



ຮວມ ແລະ ຮ່ວມ ໃນພາສາລາວ

ຮວມ ກັບ ຮ່ວມ ເປັນຄຳທີ່ໃກ້ກັນທາງສຽງ ແລະ ຄວາມໝາຍ. ດັ່ງນີ້ ສະ-ແດງວ່າ ບໍ່ແມ່ນຄຳດຽວກັນພຽງແຕ່ໃກ້ກັນເທົ່ານັ້ນ. ເພາະຄວາມໃກ້ກັນ ຫຼາຍນີ້ ຈຶ່ງພາໃຫ້ມີຜູ້ຫຼົງວ່າແມ່ນຄຳດຽວກັນ ພຽງແຕ່ຕ່າງສຽງຕາມການເວົ້າ ຂອງໃຜມັນເທົ່ານັ້ນ. ຄວາມຈິງບໍ່ເປັນເຊັ່ນນີ້ ຮວມ ແລະ ຮ່ວມ ເປັນອັນລະຄຳ ທີ່ມີເອກະລັກທາງຄວາມໝາຍຕໍ່ກັນ.

ຮວມ ໝາຍເຖິງອາການຫຼາຍອັນ ຫຼາຍສິ່ງມາເຕົ້ານຳກັນ ເຊັ່ນ: ນັກ ສຶກ-ສາ ມາຮວມກັນຢູ່ຫ້ອງ; ຮວມເງິນໃຫ້ໄດ້ສອງແສນກີບ; ຮວມນາເຂົ້າເປັນ ສະຫະກອນ.

ສ່ວນຄຳວ່າ: ຮ່ວມ ໝາຍເຖິງອາການຫຼາຍໆຢ່າງມາປະສົມປະສານ ກັນ ເຂົ້າຕົວຢ່າງ: ຮ່ວມແຮງຮ່ວມໃຈກັນ; ຮ່ວມມືກັນສ້າງສາປະເທດຊາດຂອງ ເຮົາ; ຮ່ວມສະຕາດຽວກັນ; ຮ່ວມເປັນຮ່ວມຕາຍ; ຮ່ວມທຸກຮ່ວມສຸກ...

ເບິ່ງພຽງຕົວຢ່າງໃນຄຳທັງສອງທີ່ໃຫ້ມານ້ຳຄົງຫາຄວາມຕ່າງທາງ ຄວາມໝາຍບໍ່ທັນແຈ້ງພໍ. ສະນັ້ນ ຈຶ່ງມີຂໍ້ຊີ້ແນະເພື່ອໃຫ້ເຫັນຈຸດແຕກຕ່າງດັ່ງ ນີ້ຕື່ມຄື: ຮວມ ເຖິງແມ່ນອາການທີ່ຫຼາຍອັນຫຼາຍສິ່ງມາເຕົ້ານຳກັນ ແຕ່ກໍ່ສັງ ເກດເຫັນວ່າ ສິ່ງມາເຕົ້າກັນນັ້ນໄດ້ແກ່ອັນເປັນຕົວໆ, ເປັນຕົນຕົວ (Object)

ເຊັ່ນ: ນັກສຶກສາ, ນາ, ເງິນ... ດັ່ງທີ່ໃຫ້ເປັນຕົວຢ່າງເທິງນີ້ ແລະ ບໍ່ເຄີຍປະກົດໃຊ້ຄຳວ່າ ຮວມກັບສິ່ງທີ່ເປັນຈິດໃຈ, ສິ່ງບໍ່ມີຕົນຕົວ (Non object).

ຄຳວ່າ: ຮ່ວມ ຈະສັງເກດເຫັນວ່າເປັນອາການມາປະສົມປະສານເຂົ້າກັນຂອງສິ່ງທີ່ເປັນຈິດໃຈ, ສິ່ງບໍ່ເປັນຕົນຕົວ, ສິ່ງຈັບບາຍບໍ່ໄດ້ ເຊັ່ນ: ຮ່ວມໃຈ, ຮ່ວມແຮງ, ຮ່ວມສະ-ຕາກຳ... ນອກນີ້ ເພື່ອຢາກຮູ້ຄວາມແຕກຕ່າງທາງຄວາມໝາຍລະຫວ່າງຄຳທັງສອງໃຫ້ແຈ້ງຕື່ມ ກໍ່ຈະໃຊ້ແຕ່ລະຄຳນີ້ກັບຕົວຢ່າງທີ່ຢູ່ນອກແນວລອງເບິ່ງຄື: ຮ່ວມເງິນໃຫ້ໄດ້ສອງແສນ (ຄົງບໍ່ເຄີຍໃຊ້) ແລະ ຮວມສະຕາດຽວກັນ (ກໍ່ຄົງບໍ່ເຄີຍໃຊ້ເຊັ່ນກັນ).

ກິດ ແລະ ກົ້ນ ໃນພາສາລາວ

ຄຳວ່າ: ກິດ ໝາຍເຖິງອາການຂາດອອກດ້ວຍຕົວມັນເອງ ຫຼື ດ້ວຍການຕັດ ຕໍ່ກັບສິ່ງທີ່ເປັນດ້ວ,ເປັນແທ່ງ ຫຼື ເປັນລັກສະນະກົມຍາວ ເຊິ່ງມີຂະໜາດ ນ້ອຍ ຕົວຢ່າງ: ນິ້ວມືກິດ, ໝາຫາງກິດ.

ຄຳວ່າ: ກົ້ນ ເປັນຄຳຄຸນສັບ ບອກລັກສະນະອັນທີ່ເຫຼືອຢູ່ບໍ່ຍາວຂອງສິ່ງທີ່ເປັນດ້ວ, ເປັນແທ່ງ ຫຼື ຂອງທີ່ກົມຂະໜາດນ້ອຍຈາກການຫັກ, ຂາດ, ຫຼື ຕັດອອກ. ໃນຄວາມໝາຍຂອງຄຳວ່າ ກົ້ນ ກໍ່ມີຄວາມວ່າ ສັ້ນ ນຳດ້ວຍ.

ຄຳທັງສອງມີຄວາມສຳພັນທາງຄວາມໝາຍລະຫວ່າງກັນໃນບາງກໍລະນີ ຫາກມີກິດກໍ່ຈະມີກົ້ນເກີດຕາມ ແລະ ກິດອອກຍາວເທົ່າໃດສ່ວນທີ່ກົ້ນຢູ່ກໍ່ຍິ່ງສັ້ນ. ແຕ່ຫາກພິຈາລະນາດ້ວຍໂລຊິກໃນສອງອາການນີ້ກໍ່ພົບວ່າ ຫາກມີ ກິດ ກໍ່

ບໍ່ໝາຍວ່າຈະມີກົ້ນສະເໝີໄປ ເພາະວ່າອາການກິດຫາກກວມເຖິງ 100% ຂອງຄວາມຍາວແລ້ວ ສ່ວນທີ່ກົ້ນກໍ່ຈະມີ 0% ໄດ້; ໃນດ້ານກົງກັນຂ້າມຫາກ ກິດພຽງ 1% ກົ້ນ ກໍ່ຈະເກີດບໍ່ໄດ້ເຊັ່ນກັນ ເພາະສ່ວນທີ່ເຫຼືອຢູ່ນັ້ນຍາວເກີນຂະ ໜາດທີ່ຈະເອີ້ນວ່າກົ້ນ ຕົວຢ່າງ: ຫາງຄ່າງຍາວ 80 cm ຫາກກິດອອກ 1cm ສ່ວນທີ່ເຫຼືອຢູ່ 79 cm ຈະບໍ່ຮຽກວ່າ ກົ້ນໄດ້. ສະນັ້ນ ກິດ ແລະ ກົ້ນ ຈະເກີດ ຂຶ້ນຮ່ວມກັນໄດ້ກໍ່ຕ້ອງມີເງື່ອນໄຂອັນສະເພາະ ໄດ້ແກ່ຄວາມຍາວຂອງສ່ວນທີ່ ກິດອອກ ແລະ ສ່ວນທີ່ເຫຼືອຢູ່ ໃຫ້ເກີດຄວາມສະໜອງທີ່ມີໂລຊິກຕໍ່ກັນ. ນອກ ຈາກນີ້ ການທີ່ກົ້ນອາດບໍ່ກ່ຽວກັບ ກິດກໍ່ເປັນໄດ້ເຊັ່ນກັນຄື ໝາຫາງກົ້ນ, ໝູຫາ ງກົ້ນ ອາດກົ້ນມາແຕ່ກຳເນີດໂດຍບໍ່ມີໃຜຕັດ. ໝາຍວ່າ ຄວາມຍາວຂອງມັນ ນັບແຕ່ເກີດມາກໍ່ມີພຽງສ່ຳນັ້ນ ເຊິ່ງເປັນຄວາມຍາວເຕັມ 100% ຂອງມັນ. ການທີ່ຖືກຮຽກເປັນຫາງກົ້ນໃນນັ້ນບໍ່ໄດ້ກ່ຽວກັບອາການກິດອອກຫຼືຕັດອອກ ແຕ່ໄດ້ມາເພາະກິດຂອງການປຽບທຽບ ເຊິ່ງມີຢູ່ໃນຕົວຂອງຄົນເຮົາຄືວ່າ ຫາງ ໝູ ຫຼື ຫາງໝາ ຕາມທຳມະຊາດກໍ່ຈະມີຂະໜາດຂອງຄວາມຍາວສະເພາະ ແຕ່ຕົວທີ່ຫາເກີດ ເມື່ອຫາງທີ່ຕາມອອກມາມີຄວາມຍາວສ່ຳກັບສ່ວນທີ່ເຄີຍ ເອີ້ນວ່າ ກົ້ນ ກໍ່ຈະໄດ້ຮັບຊື່ວ່າ ກົ້ນ ຕາມກັນ ນີ້ເປັນການໄດ້ຊື່ຕາມກິດແຫ່ງຈິດ ຕະສາດພາສາຂອງມະນຸດທີ່ເກີດຈາກປະສົບການ.



ຄຳວ່າ ຈ່ຽງ ແລະ ເພີກ ໃນພາສາລາວ

ຈ່ຽງ ແລະ ເພີກ ໃນພາສາລາວຕ່ຽງກໍ່ເປັນຄຳກິລິຍາຢູ່ໃນກຸ່ມຄຳດຽວກັນ ເຊິ່ງມີຄວາມໝາຍໃກ້ກັນ ພາໃຫ້ມີຄວາມໝາຍບາງສ່ວນເລື່ອມກັນ ສະນັ້ນ ເຮົາຈຶ່ງເຄີຍໄດ້ພົບການໃຊ້ຄຳທັ້ງສອງນີ້ໃນບໍລິບົດອັນດຽວກັນໄດ້ບາງບໍລິບົດ ເຊັ່ນ: ໝອກຈ່ຽງອອກ ແລະ ໝອກເພີກ ທັ້ງມີຄວາມໝາຍ ແລະ ໃຊ້ໄດ້ດັ່ງກັນໃນທາງວັນນະຄະດີ, ພ້ອມດຽວກັນກໍ່ຈະເຫັນຄວາມແຕກຕ່ຽງໃນເມື່ອໃຊ້ແຕ່-ລະກໍລະນີກັບຫຼາຍບໍລິບົດ ເຊິ່ງຄວາມແຕກຕ່ຽງນີ້ໃນທາງພາສາສາດຮຽກວ່າ: ຄວາມຕ່ຽງໃນສ່ວນຂອງຄວາມໝາຍ ທີ່ບໍ່ເລື່ອມກັນ ຕົວຢ່ຽງ: ເຮົາເຄີຍໃຊ້ຄຳວ່າ ຈ່ຽງຫົວເຮືອອອກ ແຕ່ບໍ່ໃຊ້ຄຳວ່າ ເພີກຫົວເຮືອອອກ; ຄົນເພີກໜີໄປ ແຕ່ບໍ່ໃຊ້ ຄົນຈ່ຽງໜີໄປ; ໄຂປະຕູຈ່ຽງປ່ຽງ ແຕ່ບໍ່ໃຊ້ ໄຂປະຕູເພີກ; ຈ່ຽງຂາ ແຕ່ບໍ່ໃຊ້ ເພີກຂາ...

ຈາກຕົວຢ່ຽງທີ່ໃຫ້ເຫັນຄວາມແຕກຕ່ຽງນີ້ ຈຶ່ງສຶກສາກັບຄົ້ນສູ່ຄວາມແຕກຕ່ຽງອັນສະເພາະຂອງຄວາມໝາຍໃນຄຳ ຈ່ຽງ ແລະ ເພີກ ໄດ້ສະດວກຂຶ້ນ ຄື: ຈ່ຽງພົບໃຊ້ກັບສິ່ງຂອງ ແລະ ສິ່ງທີ່ເປັນຄວັນ, ເປັນອາຍ ເຊິ່ງແຍກຈາກການຕິດແປະ ຫຼື ຫຸ້ມລຸມກັນ ຄື: ຈ່ຽງຂາ ໝາຍເຖິງ ໃຫ້ຂາຫ່ຽງຫວາອອກ; ໝອກຈ່ຽງ ໝາຍເຖິງອາການຫ່ຽງຫາຍຈາກການຫຸ້ມລຸມຂອງໝອກກັບໝອກ. ສ່ວນຄຳວ່າ ເພີກ ໃຊ້ໄດ້ກັບອາການຫ່ຽງອອກ, ຫາຍໄປຂອງສິ່ງເປັນຄວັນ,

ເປັນອາຍ ຫຼື ສິ່ງເປັນຕ໊ອໆດັ່ງຄົນ, ສັດ ເປັນຕົ້ນ ຕ໊ອຢ່າງ: ຄົນເພີກ ໝາຍເຖິງ ອາການທ່າງອອກໄປຈາກການຢູ່ທີ່ອັ່ງອໍກັນຂອງຄົນ ເຊິ່ງສ່ວນທີ່ເຫຼືອຢູ່ກໍ່ຍັງ ແຕ່ມີບໍ່ຄັບຄັ່ງ ຫຼືວ່າ ຍັງມີໜ້ອຍ ແລະ ຄຳວ່າ: ຄວັນໄຟເພີກ, ໝອກເພີກ ກໍ່ ໝາຍເຖິງອາການທ່າງຫາຍໄປຂອງຄວັນ ຫຼື ໝອກຈາກທີ່ຢູ່ເປັນກຸ່ມນັ້ນເອງ.

ຄຳວ່າ ສູບ ໃນພາສາລາວ

ສູບ ເປັນຄຳພື້ນຖານໃນພາສາລາວ, ເປັນຊະນິດຄຳກິລິຍາ. ຄຳນີ້ ເຖິງວ່າມີການນຳໃຊ້ຢູ່ເປັນປະຈຳ ແຕ່ຜູ້ໃຊ້ເອງຫຼາຍຄົນກໍ່ຍັງສົງໄສໃນຄວາມ ໝາຍຂອງຄຳວ່າ ສູບນີ້ ໝາຍເຖິງ ອາການດທີ່ເອົາລົມເຂົ້າ ຫຼື ເອົາລົມອອກ ໂດຍຜ່ານຮູ ຫຼື ປາກ ຢ່າງໃດກັນແທ້, ເພາະເຄີຍການໃຊ້ຄຳວ່າ ສູບ ຄື: ສູບຢາ ຫຼື ດູດຢາ ເຊິ່ງປະກົດວ່າເປັນອາການດູດລົມເຂົ້າໂດຍຜ່ານປາກ. ພ້ອມດຽວ ກັນໃນເວລາຕື່ມລົມໃສ່ຕີນລິດ ກໍ່ເອີ້ນວ່າ ສູບຕີນລິດ ເບິ່ງແລ້ວເປັນອາການ ເອົາລົມອອກຈາກເຄື່ອງຕື່ມລົມໃຫ້ຜ່ານຮູເຂົ້າສູ່ກົ້ງຕີນລິດ.

ໃນພາສາລາວຄຳທີ່ບອກອາການໃຫ້ລົມ ຫຼື ຂອງແຫຼວອອກ ກໍ່ມີຫຼາຍ ຄຳເຊັ່ນ: ເປົ່າ, ພູ່ ແລະ ພົ່ນ. ສ່ວນຄຳທີ່ບອກອາການໃຫ້ລົມ ຫຼື ຂອງແຫຼວເຂົ້າ ກໍ່ມີ: ດູດ, ຮົ່ນ, ຫຼຸບ,ກືນ,ລຶມ ແລະ ດື່ມ. ສ່ວນຄຳວ່າ ສູບ ນັ້ນ ໃນວັດຈະນານຸ ກົມພາສາລາວເຫຼັ້ມຕ່າງໆ ໄດ້ໃຫ້ຄຳອະທິບາຍວ່າ: ສູບ ແມ່ນອາການ ດູດ ຫຼື ພົ່ນ ດັ່ງ ນ້ຳ ແລະ ຂອງແຫຼວຕ່າງໆ ແລະ ອາການເປົ່າ ຫຼື ຕື່ມເຂົ້າ ດັ່ງສູບຕີນ ລິດເປັນຕົ້ນ.

ຈາກຄຳນິຍາມຄວາມໝາຍຂອງຄຳວ່າ ສູບ ໃນນີ້ໄດ້ບອກໃຫ້ຮູ້ວ່າ ສູບ ແມ່ນອາການທີ່ຮວບໜ້າທີ່ (Function) ທັງສອງຂໍ້ວ່າ: ທັງເຂົ້າ ແລະ ອອກ ເຊິ່ງໃຊ້ກັບລົມ ແລະ ທາດແຫຼວ. ສ່ວນຄຳອື່ນທີ່ຍົກມາໃນນີ້ ແຕ່ລະຄຳ ບອກ
ອາການພຽງຂໍ້ວດຽວ. ສະນັ້ນ ຄຳວ່າ ສູບຢາ ແລະ ດູດຢາ ຈຶ່ງຖືວ່າໃຊ້ຄຳໃດກໍ່ໄດ້ ແຕ່ວ່າ ຄວາມໝາຍທີ່ໄດ້ມາກໍ່ຈະມີຈຸດເນັ້ນທີ່ຕ່າງກັນຄື: ສູບຢາ ໝາຍເຖິງ ອາການເອົາຄວັນຢາເຂົ້າ ແລະ ອອກຜ່ານປາກ; ໃນຄຳວ່າ ດູດຢາ ໄດ້ໝາຍເຖິງເອົາຄວັນຢາເຂົ້າຜ່ານປາກເທົ່ານັ້ນ ໂດຍບໍ່ຮວມໄປເຖິງອາການເອົາຄວັນອອກຈາກປາກພາຍຫຼັງດູດເຂົ້າ, ໝາຍວ່າ ມີຈຸດເນັ້ນທີ່ອາການສ່ວນຕົ້ນ; ສຳ-ລັບອາການສ່ວນປາຍ ຄືອາການຜູ່ຄວັອອກນັ້ນ ປ່ອຍໃຫ້ເປັນຄວາມເຂົ້າໃຈໂດຍທຳມະຊາດ. ອັນນີ້ເອີ້ນວ່າປະກົດການແຫ່ງຄວາມສຳນຶກໂດຍເສລີທີ່ເປັນກົດເກນໜຶ່ງ ໃນພາສາຂອງມະນຸດ.

ຄຳ: ສວຍໂອກາດ ໃນພາສາລາວ

ຄຳວ່າ: ສວຍໂອກາດ ຄວາມໝາຍທີ່ໃຊ້ກັນໃນພາສາລາວປະຈຸບັນ ໝາຍເຖິງ ເອົາເວລາ ແລະ ເຫດການໃດໜຶ່ງມາໃຊ້ຢ່າງທັນການເພື່ອເປັນປະໂຫຍດໃຫ້ແກ່ຕົນ. ໝາຍວ່າ ຄວາມໝາຍນີ້ເປັນຄ່າລວມຂອງທັງສອງຄຳທີ່ມາ

ປະສົມເຊັ່ນ ຄຳວ່າ ສວຍ ແລະ ຄຳວ່າ ໂອກາດ. ໃນວັດຈະນານຸກົມພາສາລາວ ບາງເຫຼັ້ມ ພະຍາຍາມຫາຄຳອະທິບາຍທີ່ມາຂອງຄຳນີ້ຄື: ສວຍໂອກາດ ໝາຍ ເຖິງ ຖືຢ່າງຟ້າວ, ຖືໂອກາດ; ໃນບາງເຫຼັ້ມອະທິບາຍວ່າ: ສວຍໂອກາດ ໝາຍ ເຖິງ ເວລາທີ່ງາມ, ໂອກາດທີ່ດີ, ຍາມທີ່ດີ ດັ່ງນີ້ເປັນຕົ້ນ. ເມື່ອພົບຄຳອະທິບາຍ ທີ່ມີຄວາມແຕກຕ່າງກັນເກີນໄປເຊັ່ນນີ້ ກໍ່ພາໃຫ້ຜູ້ໃຊ້ຈະຈັບເອົາຄວາມໃດແທ້ ເພື່ອຍຶດເປັນຄວາມເຂົ້າໃຈທີ່ເປັນຫຼັກແກ່ຕົວກໍ່ຍັງລຳບາກ. ສະນັ້ນ ເຮົາມາສຶກ ສາທີ່ໄປທີ່ມາຂອງຄຳນີ້ຕື່ມອີກ.

ດ້ວຍການສຶກສາພົບວ່າ: ຄຳ ສວຍໂອກາດ ທີ່ເປັນຄຳຮູບປະສົມນີ້ ແມ່ນຄຳທີ່ລາວຮັບມາຈາກພາສາອື່ນ. ໃນນີ້ ສວຍ /suoj/ ເປັນຄຳທີ່ຮັບມາ ຈາກພາສາມອນ, ສ່ວນ ໂອກາດ ແມ່ນຄຳປາລີທັງສັນສະກິດ ທີ່ມີຮູບຄຳ /ʔo:ka:s/. ສ່ວນຮູບຄຳປະສົມທີ່ເປັນ ສວຍໂອກາດ ນີ້ ພົບໃຊ້ໃນພາສາໄທເຊິ່ງ ຂຽນເປັນ: /chuǒjʔo:ka:s/. ລາວໄດ້ຮັບຄຳຫຼາຍຄຳຈາກພາສາມອນເຂົ້າມາ, ແຕ່ເນື່ອງດ້ວຍພາສາລາວບໍ່ມີພະຍັນຊະນະບາງຕົວດັ່ງ/ch/, ເມື່ອຮັບຄຳເຂົ້າ ມາກໍ່ຈະຖືກປ່ຽນແທນດ້ວຍສຽງໃດໜຶ່ງທີ່ໃກ້ຄຽງອັນມີຢູ່ໃນພາສາລາວ.

ລາວໄດ້ຮັບຄຳວ່າ: ສວຍ ຈາກພາສາມອນ ທີ່ມີຄວາມໝາຍວ່າ ງາມ ແລະ ຄຳວ່າ: ກະສວຍ ເຊິ່ງເປັນເຄື່ອງພາຫຼອດຝ້າຍສອດໄປມາໃນເວລາຕຳ ຫູກ ທັງສອງຄຳນີ້ລາວເຮົາອອກສຽງເປັນ: ສວຍ ເຊັ່ນກັນ. ສ່ວນຄຳວ່າ ສວຍ ໃນຄຳວ່າ ສວຍໂອກາດນັ້ນ ໃນພາສາມອນອອກສຽງເປັນ /chuoj/ ທີ່ໄທຂຽນ ເປັນ: /chuoj/. ລາວບໍ່ມີສຽງພະຍັນຊະນະ /ch/ ຈຶ່ງໃຊ້: ສ /s/ ແທນ ຄວາມ ໝາຍຂອງຄຳວ່າ /chuoj/ ນັ້ນໝາຍເຖິງ: ຄວ້າປຶບປັບເອົາ, ຄວ້າເອົາຢ່າງປຶບ ປັບ ນັ້ນເອງ. ເຊິ່ງເປັນອາການເອົາທີ່ໄວດັ່ງໂຕແຫຼວບິນລົງຫຍຸມເອົາໄກ່ນ້ອຍ, ບໍ່ໄດ້ກ່ຽວກັບຄວາມໝາຍທີ່ວ່າງາມ, ດີ ເລີຍ. ຫາກແປວ່າຖືເອົາຢ່າງຟ້າວກໍ່ພໍ ເຫັນພາບໃກ້ຄຽງ ແຕ່ຈະໃຫ້ໃກ້ກວ່ານັ້ນອາດໄດ້ແກ່ຄຳ: ຄຶບປຶບ, ຄວ້າເອົາປັບ ປຶບ ຈະເໝາະກວ່າ. ຄວາມໝາຍຂອງຄຳວ່າ: /chuoj/ ທີ່ລາວຂຽນເປັນ ສວຍ

/suoj/ ນີ້ ມີຈຸດເນັ້ນທີ່ຄວາມໄວ. ສະນັ້ນ ຄຳວ່າ ສວຍໂອກາດ ກໍ່ມີຈຸດເນັ້ນທີ່ ຄວ້າເອົາໂອກາດຢ່າງໄວວາ, ຄວ້າເອົາໂອກາດແບບປຶບປັບເຊັ່ນກັນ. ສ່ວນຄຳ ວ່າ ໂອກາດນັ້ນ ຈະເປັນໂອກາດຫຍັງໆ ກໍ່ແລ້ວແຕ່, ເປັນຄຳທີ່ມີຄວາມກວ້າງ. ລາວຮັບຄຳນີ້ເຂົ້າມາແບບສະເພາະຕາມຮູບຄຳປະສົມ ບໍ່ແມ່ນຮັບມາເປັນຮູບ ຄຳດ່ຽວໆ. ສະນັ້ນ ການສຶກສາ, ການຈະອະທິບາຍຄວາມໝາຍຂອງຄຳປະສົມ ຈຶ່ງຄວນເບິ່ງເຖິງທີ່ມາ,ເບິ່ງທັງໝົດຊຸດຂອງຄຳນັ້ນໆ ແລະເບິ່ງຮາກຄວາມໝາຍ ຂອງຄຳໄປນຳ ຈຶ່ງຈະໄດ້ຂໍ້ຄວາມອັນໜຽງໜໍດີກວ່າ.

ຄຳ: ທຸກຍາກ ແລະ ທຸກຈົນ ໃນພາສາລາວ

ຄຳວ່າ: ທຸກ, ຍາກ ແລະ ຈົນ ລ້ວນແຕ່ແມ່ນຄຳໃນພາສາລາວ, ກໍລະ ນີທີ່ຍາກໃຊ້ເປັນຄຳໆກໍ່ສາມາດໃຊ້ໄດ້. ເມື່ອໃຊ້ຕາມຄວາມໝາຍຂອງຄຳແຕ່ ລະຄຳ ກໍ່ຈະເຫັນຄວາມແຕກຕ່າງໄດ້ສະດວກກວ່າ ເຊັ່ນ: ຕາຍທຸກ ຕ່າງກັບ ຕາຍຍາກ. **ຕາຍທຸກ ໝາຍເຖິງ ທຸກໂພດຈົນຕາຍຍ້ອນຄວາມທີ່ທຸກ, ສ່ວນ ຕາຍຍາກ ມີສອງຄວາມໝາຍຄື ໜຶ່ງ: ໝາຍເຖິງ ນາມຕາຍ; ສອງ:ໝາຍເຖິງ ຕາຍບໍ່ງ່າຍ.** ສ່ວນຄຳວ່າ ຕາຍຈົນ ໜຽງຄຳນີ້ແມ່ນບໍ່ເຄີຍເວົ້າ, ມີແຕ່ເຄີຍຍິນວ່າ: ຕາຍຈົນກັ໋ງ, ຕາຍຈົນດັບ ເຊິ່ງ ຈົນ ໃນນີ້ມີຄວາມໝາຍໜຶ່ງຕ່າງຫາກໄປອີກ.

ຄຳວ່າ ທຸກຍາກ ແລະ ທຸກຈົນ ນັ້ນ ຕາມປົກກະຕິໃນພາສາລາວເຄີຍໃຊ້ຄຳວ່າ ທຸກຍາກ ກວ່າຄຳວ່າ ທຸກຈົນ, ເພາະ ທຸກຍາກ ມີຄວາມໝາຍຕ່າງກັບ ທຸກຈົນ. ຄຳວ່າ ທຸກຍາກ ໝາຍເຖິງ ຂາດໃນສິ່ງທີ່ຕ້ອງການຫຼາຍໆຢ່າງ; ມີຊີວິດຢູ່ຢ່າງບໍ່ງ່າຍ. ເມື່ອວິເຄາະເລິກເຂົ້າກໍ່ພົບວ່າ ທຸກຍາກ ນັ້ນ ກໍ່ຍັງມີບາງອັນແຕ່ມີໜ້ອຍ, ມີດ້ວຍຄວາມຍາກ, ມີແຕ່ບໍ່ພໍ. ຂັ້ນຂອງມັນຍັງຢູ່ລະດັບທີ່ພົ້ນຈາກຄວາມຕາຍ, ຂັ້ນທີ່ມີຊີວິດຢູ່ໄດ້ແຕ່ບໍ່ສະດວກ, ບໍ່ລາບລື່ນ.

ມາສູ່ຄຳວ່າ ທຸກຈົນ, ຄຳວ່າ ຈົນ ໃນນີ້ໄດ້ບອກລະດັບຂອງຄວາມທຸກໃຫ້ຕ່າງຈາກຄຳວ່າ ຍາກ ໄປຢູ່ສະຖານໜຶ່ງອີກຕ່າງຫາກ, ຄຳວ່າ **ຈົນ** ໃນ**ພາສາລາວໝາຍເຖິງ ຈຳສຸດ, ຮອດຂີດທີ່ຄາ, ເຖິງທີ່ໄປບໍ່ໄດ້ອີກ**. ຕົວຢ່າງ: ຈົນຕາຍ ໝາຍເຖິງ ຮອດຈຸດທີ່ຕາຍ, ໝົດຈາກເຂດທີ່ມີຊີວິດ. ຈົນຕາແຈ ໝາຍເຖິງ ຈຳສຸດທີ່ແຈ, ຢູ່ມຸມຂ້ອນສຸດໆນັ້ນເອງ. ດັ່ງນີ້ ທຸກຈົນ ຈຶ່ງໝາຍເຖິງ ທຸກເຖິງຂັ້ນໝົດເຂດທີ່ຈະມີຊີວິດ,ຢູ່ຕໍ່ໄປບໍ່ໄດ້ອີກໃນທັນໃດ.

ຄົນລາວໃນປະຈຸບັນ ກໍ່ໜ້ອຍໜັກໜ້ອຍໜາທີ່ຈະພົບຄົນຈົນໆເຖິງຂັ້ນບໍ່ມີຫຍັງ, ບ່ອນອາໄສຢູ່ກໍ່ເອົາແຄມຖະໜົນ ຫຼື ກ້ອງຂົວ, ອັນກິນແມ່ນອາໄສກອງຂີ້ເຫຍື້ອຕາມຕະຫຼາດ ເຊິ່ງລໍພຽງຄວາມຕາຍໃນທຸກວັນ. ໂດຍທົ່ວໄປຄົນລາວຢ່າງໜ້ອຍກໍ່ຍັງມີດິນສຳລັບເປັນບ່ອນຢູ່ ຫຼື ປູກຝັງ ເປັນ ສວນ ຫຼື ໄຮ່, ຢູ່ຊົນນະບົດ ດິນສຳລັບໃຊ້ເຮັດສວນຜັກຍິ່ງມີຫຼາຍ ຫາກບໍ່ເຮັດສວນຜັກ ຕາມທົ່ງນາ, ຕາມແຄມຫ້ວຍຮ່ອງກໍ່ຍັງມີຜັກຫຍັງຕໍ່ຫຍັງແນວທີ່ກິນເປັນ ເຊັ່ນ: ບອນ, ຜັກກູດ,ຜັກແກບ,ຜັກກາບປີ,ຜັກຈີ້ຈໍ້,ຜັກຫິມ,ຜັກຕຸ້ມ...ແລະ ຫອຍ,ກົບ ຂຽດ ແມງຫຍັງຕໍ່ແມງຫຍັງນັ້ນ ລ້ວນແຕ່ເປັນຂອງບໍ່ມີເຈົ້າ, ບໍ່ແມ່ນສິ່ງທີ່ໃຜໄດ້ຜູກກຳມາສິດ.

ເມື່ອເບິ່ງຈາກສິ່ງແວດລ້ອມທຳມະຊາດຂອງລາວເຂົ້າມາ ຫາກໃຜປ່ອຍໃຫ້ຕົນເປັນຄົນຈົນ ກໍ່ຕັ້ງແມ່ນເພາະຄວາມບໍ່ຮູ້ເປັນເຈົ້າທຳມະຊາດ ແລະເຈົ້າຕົນເອງ ຫຼືອາດຍ້ອນຂີ້ຄ້ານໂພດແດ່, ຫາກເອົາວັດທະນະທຳ-ສັງຄົມທີ່

ເປັນຕົ້ນ ຖ້າແນບອ້ອມລ້ອມມາເບິ່ງນຳກໍ່ເຫັນວ່າ ລາວ ຍັງມີວັດທະນະທຳແຫ່ງ ຄວາມເອື້ອເຟື້ອດ້ວຍເຊື້ອສາຍພີ່ນ້ອງ ຫຼື ໝູ່ຄູ່,ທ້ອງຖິ່ນ ແລະຄວາມອິຕົນຊາດ ຄວາມເອື້ອເຟື້ອນີ້ກໍ່ຍັງມີກຳລັງຊ່ວຍກູ້ບຸກຄົນ ທີ່ມີຄວາມຜູກພັນໃນສາຍໃດ ໜຶ່ງດັ່ງກ່າວມາໃຫ້ຫວິດຈາກຄວາມຈົນ. ສະນັ້ນ ໃນລາວ ກ່ອນຄວາມຈົນຈະ ມາເຖິງນັ້ນ ກໍ່ຍັງມີວັດທະນະທຳລາວ ແລະ ທຳມະຊາດລາວ ຊ່ວຍ ກອບກູ້ໄວ້ ໃຫ້ຢູ່ໃນລະດັບທີ່ຕາຍບໍ່ງ່າຍ **ນັ້ນກໍ່ຄືລະດັບທຸກຍາກ**.

ຄົນຊັ້ນຊຸມຊາວລາວເຮົາ ສົມຄວນເວົ້າວ່າ: **ລົບລ້າງຄວາມທຸກຍາກ ອາດ ຈະເໝາະກວ່າການໃຊ້ຄຳວ່າ ລົບລ້າງຄວາມທຸກຈົນ**.ຍົນພາສາເພິ່ນໃຊ້ທຸກຈົນ ເຮົາກໍ່ໃຊ້ນຳ ເມື່ອຄວາມເຮົາບໍ່ຄືຄວາມເພິ່ນ, ຄຳໄທຟັ້ງຄືຄຳລາວແຕ່ບໍ່ແມ່ນຄຳ ລາວ ສົມຄວນຄິດໃນພາສາລາວກ່ອນຈຶ່ງໃຊ້.

ຄຳວ່າ ພາລະ ແລະ ບົດບາດ

ການຮູ້ຄວາມໝາຍ, ຂອບເຂດຄວາມໝາຍຂອງແຕ່ລະຄຳໃນພາສາ ໄດ້ດີ ກໍ່ຈະຊ່ວຍໃຫ້ການໃຊ້ພາສາໄດ້ຖືກຕ້ອງ. ບັດນີ້ເຮົາມາເຂົ້າສູ່ຄຳວ່າ ພາ ລະ ແລະ ບົດບາດ. ຜ່ານມາເຄີຍພົບການໃຊ້ຄຳທັ້ງສອງນີ້ ເມື່ອເຫັນຄຳໜຶ່ງກໍ່ ຕ້ອງເຫັນຄຳໜຶ່ງຕາມມາ, ສິ່ງທີ່ແປກກໍ່ຄືວ່າ ເຄີຍໃຊ້ຄຳວ່າ ພາລະກ່ອນ ແລະ

ໃຊ້ບົດບາດຕາມທັງຕະຫຼອດ, ສ່ວນຄວາມໝາຍທີ່ໃຊ້ນັ້ນກໍ່ເຂົ້າໃຈບໍ່ແຈ້ງວ່າ ຢາກເວົ້າພາລະ ຫຼື ຢາກເວົ້າບົດບາດອັນໃດກັນແທ້.

ໃນຄວາມແທ້ຄວາມຈິງ ພາລະ ແລະ ບົດບາດ ເປັນອັນລະຄຳ, ເປັນອັນລະຄວາມໝາຍ, ຄຳທັງສອງລ້ວນແຕ່ຮັບມາຈາກປາລີ ແຕ່ມາເປັນຮູບຂຽນຕາມແບບຂຽນຄຳຂອງຂອງລາວ, ສ່ວນຄວາມໝາຍກໍ່ໃຊ້ຕາມເດີມດັ່ງປາລີ ຄື: ພາລະ ໝາຍເຖິງຂອງໜັກ, ວຽກທີ່ໜັກເຊິ່ງຈຳຕ້ອງຮັບເຮັດ, ໜ້າທີ່ ດັ່ງນີ້ເປັນຕົ້ນ, ສ່ວນຄຳວ່າ ບົດບາດ ໝາຍເຖິງ ຄວາມສຳຄັນທີ່ມີຕໍ່, ຄວາມສຳຄັນທີ່ໄດ້ຮັບ. ໃນນີ້ ອັນໜຶ່ງແມ່ນ ວຽກງານ,ແມ່ນ ໜ້າທີ່ ທີ່ຕົກມາເຖິງຕົວທັງໃຫ້ຮັບເຮັດ, ອັນໜຶ່ງພັດແມ່ນ ຄວາມສຳຄັນທີ່ມີຕໍ່ອັນໃດອັນໜຶ່ງວ່າສຳຄັນສ່ຳໃດ. ຄວາມ-ໝາຍສອງຢ່າງນີ້ ສາມາດແຍກໃຊ້ຕາມກໍລະນີໃຜມັນໄດ້ ບໍ່ຈຳເປັນໃຊ້ນຳກັນກໍ່ໄດ້ ເຊັ່ນວ່າ: ນັກສຶກສາມີພາລະຮຽນເອົາຄວາມຮູ້ມາໃຫ້ຕົວເອງ, ຂາໂຕະ ມີພາລະຄ້ຳໂຕະໃຫ້ຕັ້ງຢູ່, ພາສາມີພາລະສື່ສານຄວາມໝາຍລະຫວ່າງຄົນ ແລະອີກຕົວຢ່າງອື່ນ. ສ່ວນບົດບາດນັ້ນ ກໍ່ສາມາດໃຊ້ຢ່າງເອກະລາດໄດ້ ເຊັ່ນກັນຄື: ຄູມີບົດບາດຕໍ່ການກໍ່ໃຫ້ເກີດລະດັບຄຸນນະພາບການສຶກສາຂອງນັກຮຽນ; ພາສາມີບົດບາດຕໍ່ຄົນໃນສັງຄົມ, ຫາກບໍ່ມີພາສາຄົນກໍ່ຈະບໍ່ມີອັນເດັ່ນກວ່າສັດ ຫຼື ຄົງສ່ຳກັນກັບສັດທົ່ວໆໄປ; ອາກາດມີບົດບາດຕໍ່ສິ່ງທີ່ມີຊີວິດ, ແສງສະຫວ່າງມີບົດບາດຕໍ່ການເຫັນ ແລະ ອື່ນໆ.

ເພື່ອຈຳແນກໃຫ້ເຫັນຄວາມແຕກຕ່າງລະຫວ່າງຄວາມໝາຍຂອງຄຳທັງສອງ ກໍ່ຍັງມີຕົວຢ່າງອື່ນໆອີກເຊັ່ນ: ອາກາດແມ່ນອນວ່າມີບົດບາດຕໍ່ການມີຊີວິດຂອງຄົນ, ຫາກຂາດອາກາດຄົນກໍ່ຈະຕາຍໃນບໍ່ນານ ແຕ່ອາກາດຄົງບໍ່ມີພາລະຫຍັງເລີຍຕໍ່ກັບຄົນ ເພາະມັນບໍ່ໄດ້ແບກຫາບຮັບຜິດຮັບຊອບຫຍັງຕໍ່ຄົນ. ແຕ່ກົງກັນຂ້າມສຳລັບຄົນ, ບາງຄົນສັງຄົມໄດ້ມອບໜ້າທີ່ວຽກງານໃດໜຶ່ງໃຫ້ເຮັດ ໝາຍວ່າມີພາລະແລ້ວ ບຸກຄົນນນັ້ນກໍ່ຢູ່ໄປຕາມທີ່ມອບໝາຍ ແຕ່ເຮັດບໍ່ເປັນ, ບໍ່ມີຜົນງານຫຍັງເກີດຂຶ້ນໃຫ້ແກ່ວຽກງານນັ້ນ, ກໍລະນີນີ້ ໝາຍວ່າ ມີພາ

ລະແຕ່ບໍ່ມີບົດບາດ ເພາະວ່າຜູ້ນັ້ນໆ ບໍ່ມີຄວາມສຳຄັນຫຍັງຕໍ່ວຽກນັ້ນ ຈະມີຜູ້ນັ້ນ ຫຼື ບໍ່ມີ ຜູ້ນັ້ນ ວຽກນັ້ນກໍ່ຍັງສຳນັ້ນ. ສະນັ້ນ ມີພາລະ ກໍ່ຈະມີບົດບາດພ້ອມ ຫຼື ອາດບໍ່ມີກໍ່ເປັນໄດ້. ເມື່ອຕ້ອງການໃຊ້ຄຳແຕ່ລະຄຳນີ້ ສົມຄວນໃຫ້ເລືອກ ກ່ອນໃຊ້ ແລະ ຫາກບໍ່ສົມຄວນໃຊ້ຄຽງຄູ່ກັນກໍ່ແຍກໃຊ້ໄດ້ ເພາະຄຳວ່າ ບົດ ບາດ ບໍ່ແມ່ນຄຳໂຕ໙ໂຕຍຂອ໙ຄຳວ່າ ພາລະ,ການໃຊ້ຄຳທັ໙ສອ໙ນີ້ຄຽ໙ຄູ່ກັນ ເປັນປະຈຳນັ້ນແມ່ນເກີດຂຶ້ນເພາະຜົນສະທ້ອນຂອ໙ການເວົ້າໃຫ້ມີໂຕ໙ໂຕຍທີ່ ເກີນເຫດ(Hypercorrection)ຂອ໙ບາ໙ຄົນ,ຜູ້ທີ່ຕິດໂຕ໙ໂຕຍລັກສະນະນີ້ເມື່ອ ໃຊ້ຄຳອື່ນກໍ່ມັກເກີດປະກົດການດັ່ງກັນນີ້ ຕົວຢ່າ໙: ຄູອາຈານ,ຫຼື ຄູບາອາ ຈານ; ນັກຮຽນນັກສຶກສາ,ເປີກສາຫາລື,ເດັດດ່ຽວໜຽວແໜ້ນ,ແນວຫ໙ຽນໂຍ ບາຍ,ໂຫດຮ້າຍປ່າເຖື່ອນ..ປະກົດການຂອ໙ການໃຊ້ພາສາແບບນີ້ບໍ່ແມ່ນຍ້ອນ ພາສາລາວເປັນແນວນີ້ ແຕ່ເປັນເພາະຜູ້ໃຊ້ເອ໙.ຫາກຄິດຢາກຈະແກ້ກໍ່ແກ້ ໄດ້ໂດຍເລີ່ມຈາກການຮູ້ສຳນຶກ, ຮູ້ສຶກຕໍ່ພາສາທີ່ຕົນເອ໙ໃຊ້ນັ້ນກ່ອນວ່າ ມີອາ-ການຕິດໂຕ໙ໂຕຍເກີນເຫດບໍ່? ຫາກມີກໍ່ພະຍາຍາມກຳຈັດ,ເມື່ອກຳຈັດໄດ້ ທ່ານກໍ່ຈະສາມາດປົດປ່ອຍຕົນອອກຈາກພາວະການໃຊ້ພາສາແບບຟຸ່ມເຟືອຍ ໄດ້ພ້ອມ.

ຄຳ ບາມເຕະ, ບາມສິ່ ໃນພາສາລາວ

ເອກະລັກຢ່າ໙ໜຶ່ ທີ່ເດັ່ນຂອ໙ພາສາລາວ ຄື ຄວາມພະຍາຍາມນຳ ເອົາຄຳພື້ນຖານຂອ໙ພາສາຕົນມາຫາແປໃຫ້ຄຳທີ່ຮັບມາ. ຄຳໃດຫາຄຳແປໄດ້

ບາງສ່ວນບໍ່ໄດ້ບາງສ່ວນ ກໍ່ເອົາຄຳລາວແດ່, ຄຳທີ່ຮັບມາແດ່ປະສົມກັນ, ຄຳໃດ ແປໄດ້ໝົດກໍ່ໃຊ້ຄຳລາວແທນ. ບາງກໍລະນີຫາກແປຕາມຄວາມໝາຍໂດຍກົງ ບໍ່ໄດ້ ຫຼື ໄດ້ແຕ່ບໍ່ນ່ວນ ຟັງຂັດຫູ ກໍ່ໃຊ້ວິທີຕັ້ງຄວາມຕາມລັກສະນະ, ສີ ຫຼື ຊະນິດເອົາໃຫ້. ໃນນີ້ ຄຳວ່າ ບານເຕະ ກໍ່ແມ່ນຄຳໜຶ່ງທີ່ຮັບມາຈາກພາສາອື່ນເຂົ້າມາແລ້ວລາວກໍ່ແປໃຫ້ມັນເຂົ້າກັບຄວາມລາວໄດ້ຢ່າງຄ່ອງຄ່ວງ. ຄຳນີ້ໃນພາສາອັງກິດເອີ້ນວ່າ: Foot ball ມີຄວາມໝາຍຕາມຄຳວ່າ: "ໜ່ວຍມົນຕີນ" ແຕ່ລາວເຮົາແມ່ນໃຜຊິເວົ້າຕາມນີ້ໄດ້ ເພາະມັນຂັດທາງມະໂນພາບ, ຂັດທັງການອອກສຽງ ແລະ ຮູບຄຳກໍ່ຍາວ, ສະນັ້ນ ການແປຄຳນີ້ກໍ່ເລືອກເອົາການແປບາງສ່ວນຂອງຄຳຄື: ຮັກສາຄຳວ່າ Ball ໄວ້ ແຕ່ຂຽນຕາມໜັງສືລາວເປັນ ບານ, ເວລາເອີ້ນດ່ຽວໆໂດຍບໍ່ຊີ້ບອກວ່າ ບານຊະນິດໃດ ມັກຕື່ມຄຳວ່າ: ໝາກ ເຂົ້າໄປເປັນ ໝາກບານ. ສ່ວນຄຳວ່າ Foot ທີ່ໝາຍເຖິງຕີນນັ້ນ ຫາກແປແລ້ວ ມາປະກອບເປັນ: ບານຕີນ ຟັງແລ້ວເຖິງຮູ້ເລື່ອງແຕ່ມັນກໍ່ຍັງຂັດຫູ ຫຼື ໜ້າຢາກ ຫົວ, ຄຳນີ້ກໍ່ເລືອກເອົາອາການຫຼິ້ນທີ່ໃຊ້ຕີນເປັນຫຼັກນັ້ນມາແທນ ກໍ່ໄດ້ຄຳວ່າ: ບານເຕະ ຂຶ້ນມາ ຟັງແລ້ວຈິ່ງງ່າຍ, ເຫັນພາບ, ໄດ້ຊື່ຕາມພາລະກຳທາງອາການ.

ມາເຖິງຄຳວ່າ ບານສົ່ງນີ້ ໃນພາສາອັງກິດເອີ້ນ Volley ball ຫາກແປແບບແຍກຕາມຄຳໆ Volley ໝາຍເຖິງລະດົມຍິງພ້ອມກັນ, ຍິງສວນໄປສວນກັບ ເມື່ອເປັນຄຳຮູບປະສົມ Volley ball ໝາຍເຖິງບານທີ່ຫຼິ້ນສົ່ງໄປແລ້ວສົ່ງກັບໂດຍບໍ່ໃຫ້ຕົກດິນ. ດ້ວຍຄວາມໝາຍນີ້ລາວເຮົາກໍ່ແປອອກເປັນ: ບານສົ່ງ. ຄຳນີ້ໃນເມື່ອກ່ອນເຄີຍໄດ້ແປໂດຍໃຊ້ວິທີດຽວກັບການແປຄຳວ່າ Foot ball ໃຫ້ເກີດຄຳວ່າບານເຕະຂຶ້ນມານັ້ນ ຄຳວ່າ Volley ball ກໍ່ແປເປັນ ບານຕີ. ເພາະວ່າ ບານນີ້ໃຊ້ກຳລັງຂອງຝ່າມືຕີໃຫ້ໄປເປັນສຳຄັນ ໂດຍບໍ່ເບິ່ງເອົາຈຸດທີ່ສົ່ງໄປ ແລະ ສົ່ງມາ. ເພາະການສົ່ງນັ້ນ ບານຊະນິດອື່ນກໍ່ມີການສົ່ງເຊັ່ນກັນ ໂດຍເຫັນວ່າ ບານຊະນິດນີ້ ການຫຼິ້ນແມ່ນວິທີຕີໂດຍໃຊ້ຝ່າມືເປັນສຳຄັນ ສະ

ນັ້ນ ກໍ່ແປຕາມພາລະກຳທາງອາກາມນີ້ເປັນ ບາມຕີ. ຟັງແລ້ວກໍ່ມ່ວນ, ຄຳກໍ່ສັ້ນ ເຫັນພາບ. ໃນປະຈຸບັນ ຄຳນີ້ເຮົາມີສອງຄຳແປຄື: ບາມຕີ ແລະ ບາມສິ່ງ ໃນຕໍ່ ໄປສັງຄົມ ກໍ່ຈະເລືອກໃຊ້ຕາມພາວະຂອງຂະບວນການທາງພາສາ, ແນ່ນອນ ຈະມີພຽງຄຳໃດໜຶ່ງເທົ່ານັ້ນທີ່ຈະຖືກຄັດເລືອກ ແລະ ເລືອກ ໄປເປັນຄູ່ ກັບຄຳ ວ່າ ບາມເຕະ ຫາກໄດ້ຄຳ ບາມຕີ ໄວ້ ກໍ່ຄົງຈະເຂົ້າຄູ່ກັບຄຳວ່າ ບາມເຕະ ໄດ້ ຄືກວ່າ ແລະ ເຮົາກໍ່ຈະໄດ້ຄຳທີ່ຮຽກໃຫ້ບາມຊະນິດຕ່າງໆຄື: ບາມເຕະ, ບາມຕີ ແລະ ບາມບ້ວງ ຢ່າງເຂົ້າຄວາມກັນດີ.

ຄຳວ່າ: ເຮັດຫຼ້ອນໜ້າທີ່

ມີຄຳຖາມໜຶ່ງຈາກຜູ້ອ່ານວ່າ: ຄຳວ່າເຮັດຫຼ້ອນໜ້າທີ່ ແລະ ເຮັດໜ້າ ທີ່ໃຫ້ຫຼ້ອນ ອັນໃດຖືກ ອັນໃດລາວແທ້, ອັນໃດລາວຊອດກະຈາ?

ຕອບ: ຄຳວ່າ ຫຼ້ອນ ແລະ ລ້ອນ ບາງຖິ່ນມີໃຊ້ພຽງຄຳດຽວໃນທຸກກໍ ລະນີເຊັ່ນ: ດູກຫຼ້ອນ ຫຼື ເຮັດວຽກຫຼ້ອນ ກໍ່ໃຊ້ຄຳດຽວກັນ, ແຕ່ບາງຖິ່ນກໍ່ມີໃຊ້ທັງ ສອງຄຳຄື ຫຼ້ອນ ໝາຍເຖິງ ກ້ຽງ ເຊັ່ນ: ກະດູກຫຼ້ອນ, ໄມ້ແກນຫຼ້ອນ. ສ່ວນຄຳ ວ່າ ລ້ອນ ໝາຍເຖິງຄວາມສາມາດ, ເຮັດໄດ້. ຕົວຢ່າງ: ແບກໄມ້ບໍ່ລ້ອນ, ເບິ່ງບໍ່ ລ້ອນ... ໃນປຶ້ມໄວຍາກອນພາສາລາວໄດ້ຮັບ ແລະກຳນົດວ່າ ຫຼ້ອນ ແລະ ລ້ອນ ເປັນສອງຄຳທີ່ມີຄວາມໝາຍຕ່າງກັນ. ສະນັ້ນ ຫາກຢູ່ຖິ່ນໃດມີພຽງໜຶ່ງ ໃນສອງຄຳນີ້ກໍ່ຈະໄດ້ປັບຄວາມເຂົ້າໃຈ ແລະຮັບເອົາຄຳໜຶ່ງອີກມາເພີ່ມ. ທຳ

ອິດອາດຍາກແດ່ ແຕ່ເພື່ອຄວາມພະຍາຍາມຮ່ວມກັນສ້າງໃນການໃຊ້ພາສາລາວໃຫ້ຖືກຕ້ອງ ເອກະພາບກັນນັ້ນ ຄວາມວ່າຍາກຄົງເປັນເລື່ອງຊົ່ວຄາວ. ຊັ້ນນັບແຕ່ຕອນນີ້ໄປເຮົາກໍ່ມາເລີ່ມໃຊ້ຄຳນີ້ໃຫ້ເຂົ້າກັບກໍລະນີໂລດ.

ຄວາມວ່າ: ເຮັດໜ້າທີ່ໃຫ້ລ້ອມ ຫຼື ເຮັດລ້ອມໜ້າທີ່ນັ້ນ ເປັນສຳນວນອະລິ. ອັນໃດໆກໍ່ເປັນຄວາມລາວແທ້ດັ່ງກັນ. ການທີ່ເກີດສິ່ງໄສວ່າມີອັນແມ່ນ ແລະ ອັນຊອດກະຈານັ້ນ ແມ່ນຍ້ອນ**ເລື່ອງໂຄງສ້າງຂອງສຳນວນອະລິນີ້ ແລະ ການໃຊ້ມັນ**. ສຳນວນໃດກໍ່ຕາມໃນສອງອັນນີ້ຫາກໃຊ້ບໍ່ເຂົ້າກັບເລື່ອງ, ບໍ່ເຂົ້າກັບຄຳອື່ນທີ່ນຳມາໃຊ້ໃນຊຸດ,ໃນຊຸມການຂຽນ,ການກ່າວນັ້ນ ຫຼື ໃຊ້ບໍ່ຖືກບໍລິບົດ, ບໍ່ຖືກເທສະແລ້ວ ກໍ່ເກີດອາການຂັດຫູ ເຊິ່ງທຽບໄດ້ກັບຄວາມຮູ້ສຶກອື່ນດັ່ງເຮົາເຫັນຄົນອື່ນນຸ່ງເຄື່ອງບໍ່ເຂົ້າຊຸດ, ຫຼືດັ່ງການຖືເກີບແຕະເຂົ້າໂຮງມະໂຫລະສົບເຊິ່ງຈະເກີດອາການຂັດຕາ ຂອງຜູ້ອື່ນ.

ຕາມການສຶກສາທາງພາສາສາດ ທຸກແບບສຳນວນ ຫຼື ປະໂຫຍກ ລ້ວນແຕ່ມີກິລິຍາອາການ (Speech act)ອັນໃດອັນໜຶ່ງ ຢູ່ໃນນັ້ນ ຄື: ອາດເປັນຄຳສັ່ງ, ຮ້ອງຂໍ, ວິ່ງວອນ, ບອກເລົ່າ, ຖາມ, ຕອບ, ປະຕິເສດ ແລະ ຮັບ.ສະນັ້ນ ຄວາມວ່າ ເຮັດລ້ອມໜ້າທີ່ ຄົງເປັນກິລິຍາແບບບອກເລົ່າ,ມີໃຈຄວາມດຽວ. ສ່ວນຄຳວ່າ: ເຮັດໜ້າທີ່ໃຫ້ລ້ອມ ຄົງເປັນກິລິຍາແບບຄຳສັ່ງ. ການທີ່ວ່າຄວາມໃດກໍ່ແມ່ນຄວາມລາວແທ້ນັ້ນ ເຮົາມີວິທີທົດລອງໃຫ້ຮູ້ເຊັ່ນນີ້ ໜຶ່ງ: ໃຜເຮັດລ້ອມໜ້າທີ່ຂອງຕົນຈົ່ງຖືວ່າເປັນຄົນດີທັ່ງມີຄວາມສາມາດ. ສອງ: ທຸກຄົນຈົ່ງເຮັດໜ້າທີ່ໃຫ້ລ້ອມ ຕາມກຳນົດທີ່ວາງໄວ້. ດ້ວຍສອງປະໂຫຍກນີ້ໃຫ້ຮູ້ວ່າ ປະໂຫຍກໃດກໍ່ຖືກ. ຄວາມຕ່າງກັນຂອງສຳນວນອະລິນີ້ ແມ່ນຕ່າງໃນການໃຊ້ກັບບໍລິບົດ ຄື: ເຮັດລ້ອມໜ້ໜ້ທີ່ ເຄີຍໃຊ້ໃນກໍລະນີເພື່ອ ເລົ່າ, ພັນລະນາ ແລະ ບັນລະຍາຍເປັນສຳຄັນ. ສ່ວນ ເຮັດໜ້າທີ່ໃຫ້ລ້ອມເຄີຍໃຊ້ໃນກໍລະນີ: ສອນ, ບອກ, ສັ່ງ ເປັນສຳຄັນ. ຫາກເມື່ອໃດຈັບມາໃຊ້ບໍ່ເຂົ້າກັບກໍລະນີ ກໍ່ຈະເກີດອາ

ການຂັດຫູທັນທີ. ສະນັ້ນ ການເລືອກຄຳ, ເລືອກສຳນວນ, ວະລີເພື່ອມາໃຊ້ໃຫ້ເຂົ້າກັບບໍລິບົດຈິ່ງເປັນເລື່ອງໜຶ່ງອີກ. ການຈະໄດ້ນັກປາຖະກະຖາທີ່ດີ, ເປັນຊ່າງແຫ່ງວາທະສິນນັ້ນ ຕ້ອງມີຄວາມຮູ້ເລື່ອງນີ້ ຫຼື ມີພອນສະຫວັນໃນການຊອກຮູ້, ຮູ້ເລືອກ ແລະ ຮູ້ໃຊ້ ທຸ່ມຢູ່ພ້ອມຍິ່ງເປັນການດີ.

ກິນ ແລະ ດື່ມ ໃນພາສາລາວ

ກິນ ແລະ ດື່ມ ຕ່າງກໍ່ເປັນຄຳກຳມະ ໝາຍເຖິງອາການຮັບສິ່ງໜຶ່ງເຂົ້າສູ່ໃນທ້ອງໂດຍຜ່ານປາກ. ແຕ່ຄວາມແຕກຕ່າງຂອງຄຳທັງສອງຢູ່ທີ່ສິ່ງຂອງທີ່ຈະລົງສູ່ທ້ອງ, ໃນໄລຍະຜ່ານປາກນັ້ນ ຕົວທີ່ໄດ້ໃຊ້ແຂ້ວຫຍ້ຳ ຫຼື ຜ່ານຂະບວນການກຳມະວິທີສຳລັບເຮັດໃຫ້ແຫຼກຈິ່ງກືນໄດ້ ແລະ ສິ່ງທີ່ບໍ່ຕ້ອງໄດ້ຫຍ້ຳກໍ່ກືນລົງໄດ້ນັ້ນຈຸດນີ້ໄດ້ເປັນຈຸດສຳຄັນສຳລັບແບ່ງຄວາມໝາຍຂອງຄຳວ່າ: ກິນ ແລະ ດື່ມໃນປະຈຸບັນ.

ການໃຫ້ຈຸດແບ່ງຕາມທີ່ວ່ານີ້ ຍັງມີຫຼາຍຄົນສົມຄວນບໍ່ເຫັນພ້ອມ ເນື່ອງຈາກວ່າໃນຕົວຈິງ ຄຳວ່າ ກິນ ກໍ່ເຄີຍໃຊ້ກັບສິ່ງທີ່ບໍ່ໄດ້ຫຍ້ຳເຊັ່ນ: ກິນເຫຼົ້າ, ກິນເບຍ, ລິດກິນນ້ຳມັນ. ນອກນີ້ຄຳວ່າກິນຍັງໃຊ້ກວມໄປເຖິງຢ່າງອື່ນໆເຊັ່ນ: ກິນເວລາ, ກິນໃຈ, ກິນຕາ, ກິນຫົວ ແລະອື່ນໆ ເຊິ່ງລ້ວນແຕ່ແມ່ນແນວບໍ່ໄດ້ຫຍ້ຳ. ສ່ວນຄຳວ່າ ດື່ມ ນັ້ນ ພົບວ່າມີພຽງລາວພຽງບາງຖິ່ນໃຊ້ ໃນນັ້ນອອກສຽງວ່າ: ດຶ່ມບາງຖິ່ນວ່າ: ດື່ມ ທັງສຽງສັ້ນ ແລະ ສຽງຍາວກໍ່ໃຊ້ໄດ້ໂດຍບໍ່ຮູ້ວ່າຄຳໃດແທ້ເປັນຄຳຖືກ; ນອກນີ້ຖິ່ນທີ່ເຄີຍໃຊ້ຄຳວ່າ ດື່ມ ທີ່ພົບເຫັນນັ້ນ ທີ່ມັກໃຊ້ປະຈຳກໍ່ມີແຕ່ດື່ມນ້ຳ. ສ່ວນວ່າ ເຫຼົ້າ ແລະ ເບຍ ຫຼາຍເທື່ອກໍ່ຈະວ່າ: ກິນເຫຼົ້າ, ກິນ

ເບຍ. ກໍລະນີທີ່ບໍ່ເຄີຍຍິນນັ້ນກໍ່ຄື: ຄຳວ່າດື່ມບໍ່ໄດ້ນຳໄປໃຊ້ກັບກໍລະນີ ອື່ນຢ່າງກວ້າງຂວາງຄືກັນກັບຄຳວ່າກິນເຊັ່ນ: ບໍ່ເຄີຍຍິນຄຳວ່າ: ດື່ມໃຈ ດື່ມ ຕາ, ດື່ມເວລາ ແລະອື່ນໆ.

ຈາກຊຸມຕົວຢ່າງຂອງແຕ່ລະຄຳໃນສອງຄຳນີ້ກໍ່ເຫັນວ່າ: ຄຳວ່າ ກິນ ມີ ການໃຊ້ກັບຫຼາຍກໍລະນີກວ່າ ພ້ອມທັງຂອບເຂດຄວາມໝາຍຂອງຄຳວ່າ ກິນ ກໍ່ກວ້າງຈົນກາຍເຂດຄື: ບໍ່ສະເພາະເຂດຂອງສິ່ງທີ່ໄດ້ຫຍໍ້ ຊ້ຳຍັງກວມເອົາ ບາງສ່ວນຂອງສິ່ງທີ່ບໍ່ໄດ້ຫຍໍ້, ພາໃຫ້ວົງຄວາມໝາຍຂອງຄຳວ່າ ດື່ມ ມີເຂດ ແຄບ. ການເປັນເຊັ່ນນີ້ຂອງຄຳທັງສອງສາມາດສຶກສາຫາສາເຫດໄດ້. ທຳອິດ ຈະເບິ່ງເຖິງທີ່ມາຄື: ຄຳວ່າ ກິນ ເປັນຄຳດັ້ງເດີມໃນພາສຕະກຸນໄຕ (Tai) ເຊັ່ນ ພາສາໄຕນຸ່ງ,ໄຕແຊກດ ໄຕດຳ, ໄຕແດງ,ໄຕຂາວ, ໄຕລື້, ເຂີນ, ໄຕຄັ່ງ, ງ້ຽວ ຊຸມນັ້ນມີພຽງຄຳວ່າ ກິນ ບໍ່ມີຄຳວ່າ ດື່ມ. ອາການນຳເອົາສິ່ງໃດໜຶ່ງຜ່ານປາກ ລົງສູ່ໃນທ້ອງກໍ່ໃຊ້ພຽງຄຳວ່າ ກິນ. ສະນັ້ນ ສຳລັບພສາຊຸມນັ້ນຈະໃຊ້ຄຳວ່າ ກິນ ເຂົ້າ , ກິນນ້ຳ, ກິນເຫຼົ້າ ຈະເປັນການຖືກຕ້ອງນັບທັງຈິດສຳນຶກ (Concept) ແລະ ຄວາມໝາຍ, ເມື່ອຍິນຈະບໍ່ເກີດອາການຂັດຫູ. ບາງພາສາ ໃນນີ້ດູດຢາ ຫຼື ສູບຢາ ກໍ່ໃຊ້ຄຳວ່າ ກິນ ເປັນ: ກິນຢາ.

ສ່ວນຄຳວ່າ: ດື່ມ ພົບໃຊ້ຫຼາຍໃນພາສາລາວເຂດພາກກາງລົງໄປ; ແຕລາວຖິ່ນດັ່ງກ່າວບໍ່ໝາຍວ່າຈະໃຊ້ຄຳອັນດຽວນີ້ສະເໝີ ໂດຍທົ່ວໄປກໍ່ຍັງຍິນ ການໃຊ້ຄຳວ່າ ກິນ ກັບສິ່ງຂອງທີ່ເປັນນ້ຳເຊັ່ນ: ກິນເຫຼົ້າ, ກິນເບຍ ດັ່ງກັນກັບ ຊຸມພາສາທີ່ສະເໝີມາເທິງນີ້. ສະນັ້ນ ຄຳວ່າ ກິນ ຄົງເປັນຄຳທີ່ມີຮາກເຫງົ້າ ອັນເລິກ ແລະ ເຄີຍໃຊ້ມາແລ້ວແຕ່ຕົ້ນກ່ອນຈະມີຄຳວ່າ ດື່ມ ເກີດ ຫຼື ເຂົ້າມາ ແບ່ງເອົາສ່ວນຂອງຄວາມໝາຍໄປໃຊ້, ຈິດສຳນຶກຂອງຄຳວ່າ ກິນ ກໍ່ໄດ້ຝັງໄວ້ ເລິກຈົນກາຍເປັນຕົ້ນແຫ່ງໃຫ້ແກ່ການຂະຫຍາຍຄຳທີ່ໃຊ້ໃນທາງວັນນະຄະດີ ເຊັ່ນ: ກິນເວລາ, ກິນໃຈ, ກິນຄວາມ, ໄດ້ກິນ ຕະຫຼອດເຖິງລົດ, ເຄື່ອງຈັກ ກໍ່ວ່າ ມັນ ກິນ ເຊັ່ນ ລົດນ້ຳມັນໜ້ອຍ ດັ່ງນີ້ເຊັ່ນກັນ.

ແງ່ມອງຈາກພາສາສູ່ວັດທະນະທຳ

ໃນສຳນວນລາວ: "**ລ້ອຍຊ້ອຍຂໍເປັນນ້ອຍນຳນ້ອງໄດ້ບໍ່**"

ແບບຂັບຮ້ອງໃດໆໃນລາວກໍ່ລ້ວນແຕ່ມີລັກສະນະເປີດອ້າຮັບເອົາຄຳເວົ້າຄຳວ່າອັນມ່ວນໆ,ອອນຊອນ,ໃຫ້ພາບ ແລະ ໄດ້ຄວາມໝາຍຢ່າງໃດໆກໍ່ມີມາປະກອບເຂົ້າໃນໂຄງ ກອນຂັບ-ລຳຂອງຕົນ. ແຕ່ກໍ່ເປັນໜ້າສົນໃຈຢ່າງໜຶ່ງຄື ບາງແບບຂັບ ແບບລຳ ຈະມີສຳນວນຊຸມໜຶ່ງທີ່ຕິດພັນຈົນກາຍເປັນສຳນວນສະເພາະຕົວຂອງແບບຂັບ ລຳນັ້ນໆ ຕົວຢ່າງທີ່ຫາໄດ້ສະດວກກໍ່ຄື ຂັບທຸ້ມໜວງພະບາງ ເຄີຍມີສຳນວນທຽບທຽມຕົວຢູ່ໜາຍສຳນນວນເຊັ່ນ: ປ່ອຍລ່ອຍຫອຍໄຕ່ຄັນນາເອີຍ ແຂ່ງບໍ່ຂາໄຕ່ຄັນນາຢູ່ດ້ອມໆ; ຕາຍລີເລືອເກືອກຂີ້ດິນຢູ່ກາງບ້ານ, ຕາຍຄາຮັ້ງດັ່ງນົກແຊວຢູ່ປາຍໄມ້... ໃນນີ້ກໍ່ມີສຳນວນໜຶ່ງຄື: ລ້ອຍຊ້ອຍຂໍເປັນນ້ອຍນຳນ້ອງໄດ້ບໍ່? ມື້ນີ້ເຮົາມາວິຈານສັ້ນໆ ໃນສຳນວນຕົວທ້າຍນີ້ວ່າ ວັດທະນະທຳຕົວທີ່ມາກ່ຽວຂ້ອງ ແລະ ພາໃຫ້ກຳນົດໄດ້ສຳນວນນີ້ອອກມາ ນັ້ນແມ່ນອັນໃດ.

ໃນສຳນວນນີ້ ຄຳວ່າ: ລ້ອຍຊ້ອຍ ກໍ່ມີຄວາມໝາຍສະເພາະຕົວເຊັ່ນກັນ ຄື: ເປັນຄຳຄຸນສັບ ບອກລັກສະນະຂອງຄວາມອ່ອນສະເໝີທ້ຽຕົວຂອງສິ່ງທີ່ເປັນເສັ້ນໆ ຫຼື ເປັນຍອດດ້ວຍໜາຍອັນດ້ວຍກັນ, ແຕ່ໃນສຳນວນນີ້ ຄຳວ່າ: ລ້ອຍຊ້ອຍ ເຮັດໜ້າທີ່ເປັນພຽງຄຳເສີມພາບທ້ຽເປັນຕົວຂຶ້ນຕົ້ນໃຫ້ໄດ້ສຽງຫຼັກເພື່ອດຶງຕົວອື່ນມາປະກອບໃຫ້ສຳຜັດຕາມໆໄປ ເຊັ່ນ: ລ້ອຍຊ້ອຍ ໄປສຳຜັດກັບຄຳວ່າ ເປັນ<u>ນ້ອຍ</u>. ແອ້ຂອງສຳນວນຢູ່ທີ່ ເປັນນ້ອຍນຳນ້ອງໄດ້ບໍ່? ບໍ່ແມ່ນຢູ່ທີ່ລ້ອຍຊ້ອຍ. ສະນັ້ນ ບ່ອນຈະວິຈານກໍ່ຈະໄດ້ແກ່ຈຸດ ເປັນນ້ອຍ ນີ້ເອງ.

ໃນວັດທະນະທຳຂອງໜາຍຊາດ ຮວມທ້ຽລາວເຮົາ ການເປັນນ້ອຍອັນຫຍໍ້ມາຈາກຄຳວ່າ ເມຍນ້ອຍນັ້ນ ແມ່ນມີຄວາມໝາຍເຖິງ ຄວາມໜຸດ ຫຼື

ຄວາມຖັດລົງດ້ານສິດ ທັງໝາຍເຖິງ ເມຍຜູ້ຖັດມາຈາກຜູ້ທີ່ເອົາກ່ອນ; ແລະ ນ້ອຍ ໃນນີ້ ບໍ່ໝາຍວ່າຕົວຄີງນ້ອຍ ຕ່ຳກວ່າ ເພາະບາງຄັ້ງ ເມຍນ້ອຍອາດສູງ ໃຫຍ່ກວ່າເມຍຜູ້ກ່ອນກໍ່ເຫັນມີໜາຍ. ດັ່ງທີ່ເຄີຍຍິນເຄີຍເຫັນນັ້ນກໍ່ໄດ້ແກ່ ເມຍ-ນ້ອຍ ແຕ່ບໍ່ເຄີຍຍິນວ່າ ຜົວນ້ອຍ, ຫາກຂືນມີກໍ່ຖືວ່າເປັນເລື່ອງຕ່າງເຊັ່ນຕ່າງຊາດ, ຕ່າງບ້ານຕ່າງເມືອງ. ແຕ່ໃນສຳນວນນີ້ ໄດ້ສະແດງເຖິງຄວາມກ້າຈະເຂົ້າໄປຫຼິ້ນກັບເລື່ອງຕ່າງເຊັ່ນຕ່າງຊາດໄດ້ໂດຍຂໍເປັນນ້ອຍ ເຊິ່ງກໍ່ໝາຍເຖິງ ຂໍເປັນຜົວນ້ອຍ ນັ້ນເອງ.

ສຳນວນປະພັນ ໄດ້ມີພາລະກຳໜາຍຢ່າງ, ໃນນັ້ນ ພາລະກຳຢ່າງໜຶ່ງ ກໍ່ແມ່ນ: ພາລະກຳສ້າງຄວາມບັນເທີງ (Fiction) ອັນຮວມມີ ການຕໍ່ແຍ ທັງແທ້ ແກມຢອກ, ຕົວທີ່ພາໃຫ້ຄົນມັກຟັງຂັບ-ລຳນັ້ນ ກໍເພາະມັນມີສິ່ງນີ້ຢູ່ນຳ. ແຕ່ໃນ ສຳນວນທີ່ວ່າ: ຂໍເປັນນ້ອຍນຳນ້ອງໄດ້ບໍ່ ນັ້ນ ຄົງບໍ່ແມ່ນການເວົ້າຫຼິ້ນແກມແທ້. ເຊິ່ງສາມາດສຶກສາໄດ້ໜາຍແງ່ຄື:

ໜຶ່ງ ເປັນການລອງຢາມເບິ່ງວ່າ ຍິງຄົນນັ້ນ ມີຜົວ ຫຼື ມີຊູ້ຢູ່ແລ້ວບໍ່. ເພາະຄຳວ່າເປັນນ້ອຍ ໝາຍເຖິງເປັນຜູ້ຖັດຈາກຜູ້ກ່ອນ, ຜູ້ກ່ອນນັ້ນກໍ່ໝາຍ ເຖິງຜົວ ຫຼື ຊູ້ ນັ້ນເອງ.

ສອງ ສະແດງເຖິງຄວາມມັກໝົດຈິດໝົດໃຈ,ເຖິງຂັ້ນມີຜົວຢູ່ແລ້ວກໍ່ຢ່າ ຫາກຮັບເອົາກໍ່ພ້ອມໃຈຈະອາສາ,ການເປັນຜົວນ້ອຍ ເຊິ່ງເປັນເລື່ອງຕ່າງ ເຊັ່ນຕ່າງຊາດກໍ່ຈະຍອມເຮັດ ໝາຍວ່າ ທຸກສິ່ງນັບທັງກຽດສັກສີໂສມອບໃຫ້ແກ່ ຄວາມມັກຮັກຕໍ່ສາວນັ້ນໆ, ຈຸດເນັ່ນຢູ່ທີ່ສະແດງຄວາມມັກ ເຖິງຢ່າງໃດກໍ່ມັກ.

ສາມ ເປັນການໃຊ້ກົດຄູ່ຄວາມໝາຍທາງພາສາເຂົ້າໃນສຳນວນຄື: ເມື່ອຍົກສິ່ງນີ້ພ້ອມດຽວກັນ ສິ່ງນັ້ນກໍ່ຈະຕ່ຳລົງ ແລະ ກົງກັນຂ້າມ ເມື່ອຍົກສິ່ງ ນັ້ນສິ່ງນີ້ກໍ່ຈະຕ່ຳລົງ. ຕົວຢ່າງ ຫາກສັ້ນໜາຍ ຍາວກໍ່ຈະໜ້ອຍ ແລະ ຍາວ ໜາຍສັ້ນກໍ່ຈະໜ້ອຍ ເພາະ ສັ້ນ ກັບ ຍາວ ເປັນຄູ່ສຳພັນທາງຄວາມໝາຍກັນ

ແລະຍັງມີມີໝາຍຕ່ໍຢ່າງ. ສະນັ້ນໃນຄວາມວ່າ: "ເປັນນ້ອຍນ ຳນ້ອງ" ເມ່ືອຜູ້ ຊາຍໃຫ້ຄ່ ຳສັກສິຕິ ວຕ ຳ່ ລ ົງທ ີ່ ອ ຳ ສ ຳ ເ ປ ັ ນ ຜ ົ ວ ນ ້ ອ ຍ ໃ ນ ນ ີ ້ ດ ້ ຳ ນ ກ ົ ງ ກ ັ ນ ຂ ້ ຳ ມ ກ ຳ ່ ຈ ະ ຊ ູ ຄ ່ ຳ ຂ ອ ງ ຜ ູ ້ ຍ ິ ງ , ຂ ອ ງ ສ ຳ ວ ຄ ົ ນ ນ ັ ້ ນ ໆ ສ ູ ງ ຂ ຶ ້ ນ ຕ ຳ ມ ກ ົ ດ . ນ ີ ້ ເ ປ ັ ນ ພ ຽ ງ ກ ຳ ນ ໃ ຊ ້ ສ ຳ ນ ວ ນ ເ ພ ື ່ ອ ເ ອ ົ ຳ ສ ິ ່ ງ ໜ ຶ ່ ງ ສ ະ ແ ດ ງ ໃ ຫ ້ ຮ ູ ້ ອ ີ ກ ສ ິ ່ ງ ໜ ຶ ່ ງ , ເ ປ ັ ນ ກ ົ ດ ຢ ່ ຳ ງ ໜ ຶ ່ ງ ທ ີ ່ ຍ ອ ມ ຫ ຸ ດ ຕ ົ ວ ລ ົ ງ ກ ່ ອ ນ ເ ພ ື ່ ອ ຫ ວ ັ ງ ແ ລ ກ ເ ອ ົ ຳ ສ ິ ່ ງ ໜ ຶ ່ ງ ອ ັ ນ ເ ປ ັ ນ ຕ ົ ວ ປ ະ ສ ົ ງ ຍ ິ ່ ງ . ຄ ັ ນ ບ ໍ ່ ແ ມ ່ ນ ເ ລ ື ່ ອ ງ ກ ຳ ນ ໃ ຊ ້ ສ ຳ ນ ວ ນ ຫ ຳ ກ ເ ປ ັ ນ ເ ລ ື ່ ອ ງ ຈ ິ ງ ນ ັ ້ ນ ກ ໍ ່ ຄ ົ ງ ຫ ຳ ໄ ດ ້ ຍ ຳ ກ ທ ີ ່ ຈ ະ ມ ີ ຜ ູ ້ ຊ ຳ ຍ ໃ ດ ອ ຳ ສ ຳ ຈ ະ ເ ອ ົ ຳ ຊ ີ ວ ິ ດ ທ ັ ້ ງ ຊ ີ ວ ິ ດ ໄ ປ ມ ອ ບ ໃ ຫ ້ ກ ຳ ນ ເ ປ ັ ນ ຜ ົ ວ ນ ້ ອ ຍ .

ແງ່ມອງຈາກພາສາສູ່ວັດທະນະທ ຳ ໃ ນ ສ ຳ ນ ວ ນ ລ າ ວ : "ບ ່ ໍ ໄ ດ ້ ນ ້ ອ ງ ຍ າ ມ ເ ປ ັ ນ ສ າ ວ ອ ້ ຳ ຍ ຈ ະ ເ ອ ົ ຳ ຍ ຳ ມ ເ ປ ັ ນ ຮ ້ ຳ ງ "

ສ ຳ ນ ວ ນ ສ ຳ ມ ຳ ດ ນ ຳ ມ ຳ ວ ິ ຈ ຳ ນ ໄ ດ ້ ໝ ຳ ຍ ແ ງ ່ ຕ ຳ ມ ຄ ວ ຳ ມ ປ ະ ສ ົ ງ ຄ ື : ວ ິ ຈ ຳ ນ ເ ພ ື ່ ອ ໃ ຫ ້ ເ ຫ ັ ນ ຄ ວ ຳ ມ ດ ີ ຄ ວ ຳ ມ ຊ ອ ບ , ຄ ວ ຳ ມ ຜ ິ ດ ຫ ຼ ື ຂ ໍ ້ ບ ົ ກ ພ ້ ອ ງ , ຄ ວ ຳ ມ ຄ ່ ອ ງ ແ ຄ ້ ວ ດ ້ ຳ ນ ພ ຳ ສ ຳ ທ ີ ່ ປ ະ ພ ັ ນ , ຄ ວ ຳ ມ ອ ອ ນ ຊ ອ ນ ດ ້ ວ ຍ ພ ຳ ບ ໂ ດ ຍ ຜ ່ ຳ ນ ສ ຳ ນ ວ ນ , ຄ ວ ຳ ມ ພ ຽ ງ ພ ໍ ຫ ຼ ື ຄ ວ ຳ ມ ເ ຫ ຼ ື ອ ໃ ນ ກ ຳ ນ ໃ ຊ ້ ຄ ຳ , ຄ ວ ຳ ມ ບ ໍ ່ ກ ົ ມ ກ ີ ນ ດ ້ ຳ ນ ພ ຳ ສ ຳ , ດ ້ ຳ ນ ຄ ວ ຳ ມ ໝ ຳ ຍ ຫ ຼ ື ດ ້ ຳ ນ ມ ະ ໂ ນ ພ ຳ ບ , ກ ຳ ນ ໃ ຊ ້ ອ ະ ລ ິ ຫ ຼ ື ປ ະ ໂ ຫ ຍ ກ ແ ລ ະ ອ ີ ກ ໝ ຳ ຍ ໆ ແ ນ ວ . ຫ ຳ ກ ແ ຕ ່ ວ ່ ຳ ຈ ະ ວ ິ ຈ ຳ ນ ເ ລ ື ່ ອ ງ ໃ ດ ໆ ກ ໍ ່ ລ ້ ວ ນ ແ ຕ ່ ມ ີ ຫ ຼ ັ ກ ວ ິ ຊ ຳ ທ ີ ່ ເ ປ ັ ນ ຕ ົ ວ ຊ ່ ວ ຍ ໃ ຫ ້ ຮ ູ ້ ວ ິ ທ ີ , ເ ປ ັ ນ ຕ ົ ວ ສ ະ ໜ ັ ບ ສ ະ ໜ ູ ນ ໃ ຫ ້ ກ ຳ ນ ວ ິ ຈ ຳ ນ ນ ັ ້ ນ ໆ ໃ ຫ ້ ເ ກ ີ ດ ຄ ວ ຳ ມ ເ ຊ ື ່ ອ ຖ ື ຈ ຳ ກ ຜ ູ ້ ອ ່ ຳ ນ ຜ ູ ້ ຟ ັ ງ ໄ ດ ້ . ເ ອ ົ ຳ ລ ະ ບ ັ ດ ນ ີ ້ ກ ໍ ່ ກ ັ ບ ມ ຳ ໃ ສ ່ ຫ ົ ວ ເ ລ ື ່ ອ ງ ຂ ອ ງ ບ ົ ດ ນ ີ ້ ຜ ູ ້

ວິຈານເອງໄດ້ມີຄວາມປະສົງວິຈານໃຫ້ເຫັນວ່າ: ວັດທະນະທຳອັນເປັນຕົວທີ່ພາໃຫ້ໄດ້ສຳນວນແບບນີ້ມານັ້ນແມ່ນອັນໃດ.

ນັກພາສາສາດຊື່ດັງທ່ານ: Whorfain ເຊິ່ງສຶກສາເລື່ອງພາສາສາດໃນແງ່ວັດທະນະທຳ ໄດ້ໃຫ້ຂໍ້ສົມມຸດຕິຖານໜຶ່ງໄວ້ວ່າ: ວັດທະນະທຳໄດ້ເປັນຕົວກຳນົດຄືນສູ່ພາສາ. ດ້ວຍຄຳສົມມຸດຕິຖານນີ້ເຮົານຳມາສຶກສາເບິ່ງວ່າ ສຳນວນໜຶ່ງໃນແບບຂັບທຸ້ມໜວງພະບາງຄື: " ບໍ່ໄດ້ນ້ອງຍາມເປັນສາວ ອ້າຍຈະເອົ້ຍາມເປັນຮ້າງ" ນີ້ແມ່ນວັດທະນະທຳຕົວໃດພາໃຫ້ກຳນົດໄດ້ສຳນວນແບບນີ້ ,ສຳນວນຕົວນີ້ອອກມາໄດ້.

ວັດທະນະທຳລາວແຫ່ງການສຳພັນລະຫວ່າງບ່າວ-ສາວ, ຍິງ-ຊາຍ ໄດ້ມີຂໍ້ກຳນົດທີ່ຮຽກວ່າ: ປະເພນີທີ່ປ້ອງຫ້າມ ອັນເປັນຕົວກັ້ນກາງແກ່ການທີ່ ບ່າວ-ສາວ ຍິງ-ຊາຍ ຈະເຂົ້າຫາກັນນັ້ນ ຢ່າງຖີ່ ແລະ ແໜ້ນໜາຍ ຫາກປຽບທຽບກັບບັນດາຊາດໃນຍຸຣົບ. ບ່າວ-ສາວ ເພື່ອຈະເຂົ້າກັນໄດ້ ຕ້ອງຜ່ານຂະບວນການ ແລະ ຂັ້ນຕອນຕ່າງໆທີ່ມີ ນັບແຕ່ອັນທີ່ເຮັດໄດ້ງ່າຍຫາເຮັດໄດ້ຍາກ, ຫາກບ່າວ ສາວເຂົ້າຫາກັນໂດຍຜ່ານບໍ່ຄົບຂະບວນການນັ້ນ ກໍ່ຖືວ່າເປັນການລະເມີດບາງກົດ, ໃຜບໍ່ຜ່ານເລີຍຖືວ່າເປັນຄວາມຜິດແບບລ້ຳລ່ວງ. ດັ່ງນັ້ນບ່າວ ສາວລາວຈະເກີດສຳພັນກັນໄດ້ກໍ່ບໍ່ແມ່ນເລື່ອງງ່າຍປານໃດ ຕ້ອງໃຊ້ເວລາແດ່, ຈະໄດ້ຮູ້ໄດ້ສາວກໍ່ບໍ່ແມ່ນຈະຫາໄດ້ມື້ໜຶ່ງຍາມດຽວ. ຈາກຄວາມສຳພັນທີ່ມີສິ່ງກີດກັ້ນໜາຍ ໃນວັດທະນະທຳສ່ວນທີ່ກ່ຽວກັບການສ້າງຮັກມັກເພດເຊັ່ນນີ້ ຕົວທີ່ສະແດງອອກໃຫ້ເຫັນໄດ້ດີ ແລະ ໜາຍທີ່ສຸດຢ່າງໜຶ່ງກໍ່ຄື **ສຳນວນພາສາ ແລະ ແບບການຂັບ-ລຳ.**

ການມີສຳນວນ ແລະ ແບບການຂັບ-ລຳນັ້ນ ໃນແງ່ມະນຸດສາດໄດ້ມອງວ່າ ແມ່ນແບບການໃຊ້ພາສາ ທີ່ບັນຈຸເອົາອາລົມ, ຄວາມນຶກຄິດ, ຄວາມຫວັງຈາກບຸກຄົນອອກໄປສູ່ຜູ້ອື່ນໆ ໂດຍມີທຳນອງເປັນຕົວຊ່ວຍນຳເອົາໄປ. ທຳນອງ ໄດ້ເປັນຕົວທີ່ມີບົດບາດທາງຈິດຕະສາດ ແລະ ອາລົມ, ສະນັ້ນຈຶ່ງມີ

ຄ່າບັນເທີງທີ່ສາມາດນຳຄວາມເຄິ່ງແທ້ແກມຢອກແບບຕ່າງໆອອກໄປໄດ້. ສ່ວນສຳນວນໄດ້ເປັນເຄື່ອງທີ່ຖືກໃຊ້ໄດ້ດີກວ່າໝູ່ໃນແບບການທັກທາຍເພື່ອ ສະແດງປະຕິກິລິຍາດ້ານຄວາມມັກລະຫວ່າງບ່າວ-ສາວ.

ບັດນີ້ກ້ຽວມາໃສ່ສຳນວນທີ່ວ່າ: " ບໍ່ໄດ້ນ້ອງຍາມເປັນສາວ ອ້າຍຈະ ເອົາຍາມເປັນຮ້າງ" ໃນສຳນວນນີ້ມີຄຳຈຳນວນບໍ່ຫຼາຍ, ຟັງງ່າຍ, ໄດ້ພາບ ແລະ ອອນຊອນຫູ. ຄວາມໝາຍຂອງສຳນວນນີ້ມີປັດໃຈດຽວຄື: ມັກຫຼາຍ ເພາະມັກ ຫຼາຍຈະເປັນສາວ ຫຼື ຮ້າງກໍ່ຍັງເອົາໄດ້ນັ້ນເອງ. ສຳນວນນີ້ ຍິງ ຫຼື ຊາຍກໍ່ໃຊ້ໄດ້ ພຽງແຕ່ປ່ຽນຄຳວ່າ ນ້ອງ ເປັນ ອ້າຍ ໃຫ້ເຂົ້າກັບເພດເທົ່ານັ້ນ.

ສຳນວນນີ້ບໍ່ເຄີຍໃຊ້ຄຳວ່າ ເປັນ ໝ້າຍ ແທນຄຳວ່າເປັນ ຮ້າງ ເລີຍ ເພາະຮ້າງ ກັບ ໝ້າຍ ມີຄວາມຕ່າງກັນເຖິງການຂາດຜົວ ຫຼື ເມຍໄປດ້ວຍການ ຍັງມີຊີວິດ ຫຼື ຕາຍ. ຄຳວ່າ ຮ້າງ ໃນນີ້ ໄດ້ມີຄ່າທາງວັດທະນະທຳມາເປັນຕົວ ກຳນົດຄວາມພໍດີພຽງ ພໍຮັບພໍຟັງໃຫ້, ຫາກໃຊ້ຄຳວ່າ ໝ້າຍ ກໍ່ສ່ຳກັບວ່າ ເອົາຄວາມຄອງໃຫ້ຕາຍໄປແຂວນໄວ້ກັບຊີວິດຂອງຜົວເຂົ ເຊິ່ງເປັນການມອນ ຮ້າຍ ເພື່ອຍາດເອົາເມຍເຂົາ. ໃນວັດທະນະທຳລາວບໍ່ເຄີຍມີຢ່າງນີ້ເພື່ອຊິ່ງເອົາ ຄວາມຮັກ ຫຼື ຄູ່ຄອງ. ສະນັ້ນ ໃນສຳນວນ ໄດ້ເລືອກເອົາຄຳວ່າ ຮ້າງ ໃນລະດັບ ນີ້ກໍ່ເຫັນວ່າໜັກໜ່ວງສົມຄວນແລ້ວ ທີ່ສາມາດສະແດງຄວາມມັກອັນຍືນນານ ແລະ ບໍ່ແຝງຄວາມໝາຍທີ່ໃຫ້ຄວາມລະກຳແກ່ຊີວິດຂອງໃຜ ດັ່ງນັ້ນສຳນວນນີ້ ຈຶ່ງມີຊີວິດຢືນຢູ່ ແລະ ຍັງຈະຍືນຕໍ່ໄປຕື່ມອີກຕັ້ງນານ.

ຄຳວ່າ: ເຫຼົ້າ ແລະ ສຸ່ງ ໃນພາສາລາວ

ເຫຼົ້າ ແລະ ສຸ່ງ ບາງຄັ້ງກໍ່ໃຊ້ຮວມກັນເປັນຄຳປະສົມໄດ້ເຊັ່ນ: ເຫຼົ້າ ສຸ່ງ, ບາງຄັ້ງກໍ່ແຍກໃຊ້; ເມື່ອແຍກ ຄຳວ່າເຫຼົ້າກໍ່ເປັນຄຳນາມ ສ່ວນສຸ່ງເປັນ ໄດ້ທັ້ງຄຳກຳມະ ແລະ ຄຳຄຸນຄຸນສັບ. ຕົວຢ່າງ: ເຫຼົ້າສຸ່ງ; ຄຳວ່າ ສຸ່ງ ໃນນີ້ ເປັນຄຳຄຸນສັບ ເພາະມັນມີພາລະບອກຢ່າງ, ບອກລັກສະນະຂອງເຫຼົ້າໃຫ້ຮູ້ວ່າ ບໍ່ແມ່ນເຫຼົ້າສ່າ; ເຫຼົ້າສ່າໂຫ, ແລະຄຳວ່າ: ສຸ່ງເຫຼົ້າ, ສຸ່ງໃນນີ້ເປັນຄຳກຳມະໄ ດ້ແກ່ອາການຕົ້ມກັ່ນເອົານ້ຳເຫຼົ້າຈາກສິ່ງທີ່ໝັກ. ບົດຄວາມພາສານີ້ ໄດ້ມີເປົ້າ ໝາຍເພື່ອສະເໜີເລື່ອງທີ່ມາຂອງຄຳທັ້ງສອງນີ້ເທົ່ານັ້ນ ເມື່ອອ່ານບົດນີ້ ຄວາມ ທີ່ຮູ້ຈະໄດ້ຍ້ອນກໍ່ຄົງຢູ່ໃນສາວນນີ້ ອາດບໍ່ຮວມເຖິງຄວາມຮູ້ການສຸ່ງເຫົ້າ ຫຼື ວັດທະນະທຳການເຮັດເຫົ້າ, ປະເພນີ ແລະ ວັດທະນະທຳການໃຊ້ເຫຼົ້າ, ດື່ມ ເຫຼົ້າແນວໃດ.

ເຫຼົ້າເປັນຄຳເກົ່າແກ່ໜຶ່ງໃນພາສາລາວ; ສ່ວນຄຳວ່າ: ສຸ່ງ ເມື່ອປຽບ ທຽບຄວາມກວ້າງຂວາງ ແລະ ໜັກແໜ້ນທາງຄວາມໝ!ຍກັຄຳວ່າ ເຫຼົ້າພົບວ່າ ສຸ່ງ ມີຄວາມແໜ້ນຕ່ຳ ແລະຄວາມສະໝ່ຳສະເໝີໃນການໃຊ້ຢູ່ທົ່ວທຸກພາກ ຂອງລາວກໍ່ບໍ່ສ່ຳກັບຄຳວ່າ ເຫຼົ້າ ເຊັ່ນກັນ; ເນື່ອງຈາກຄຳວ່າ ສຸ່ງ ບາງທ້ອງຖິ່ນ ໃຊ້ຄຳວ່າ ກັ່ນ, ບາງທ້ອງຖິ່ນໃຊ້ຄຳວ່າ ຕົ້ມ ຫຼື ຫຸງ ເຊັ່ນ: ກັ່ນເຫຼົ້າ, ຕົ້ມເຫຼົ້າ ແລະ ຫຸງເຫຼົ້າ. ທ້ອງຖິ່ນທີ່ໃຊ້ຄຳວ່າ ສຸ່ງ ໂດຍໃຊ້ສະເພາະກັບເຫຼົ້ານັ້ນເຫັນມີ ໃນລາວຖິ່ນພາກເໜືອ; ເຂດທີ່ມີຊາວໄຕແດງ, ໄຕຂາວ, ໄຕດຳເປັນສຳຄັນ ແລະ ລາວອີກບາງຖິ່ນ. ຄວາມສົນໃຈກໍ່ຄື: ຄຳວ່າ ສຸ່ງ ໃນນີ້ເປັນຄຳຂອງພາ ສາລາວຖິ່ນເໜືອ ຫຼື ໃນາແຕ່ໃສ?

ຜ່ານການຄົ້ນຄວ້າສົບສາວໃນເລື່ອງນີ້ໄດ້ພົບວ່າ: ໃນພາສາຈີນບູຮານ ແລະ ພາສາຈີນ ໃນຍຸກປະຈຸບັນ ຫຼາຍເຂດກໍ່ມີຄຳວ່າ ເຫຼົ້າ, ຄຳນີ້ໃນພາສາຈີນ

ເອີ້ນວ່າ ຫງວ ; ຊາວຫວງດນາມ ກໍ່ແມ່ນຜູ້ທີ່ໄດ້ຮັບອິດທິພົນຢ່າງແຮງ ທັງ ດ້ານ ນາມຈາກພາສາຈີນ ໃນຂະບວນການນີ້ກໍ່ມີເລື່ອງເຫຼົ້າ, ຄຳນີ້ ໃນພາສາຫວງດ-ນາມເອີ້ນວ່າ: ຢງວ /ʒiəw/. ລາວກໍ່ໄດ້ຮັບອິດທິພົນຈາກພາສາຈີນບູຮານ ສ່ວນ ໃດໜຶ່ງເຊັ່ນກັນ.

ເມື່ອນຳເອົາຄຳວ່າ: ເຫຼົ້າ /law/.ໃນພາສາລາວ ມາທຽບໃສ່ຄຳຂອງພາສາຈີນ /liəw/ ກໍ່ເຫັນມີຄວາມແຕກຕ່າງພຽງໜ່ວຍສຽງສະຫຼະຕົວດຽວຄື: / i /, ນີ້ ມີ ຄວາມເປັນໄປໄດ້ທີ່ຈະຖືວ່າ ເຫຼົ້າ /law/ ເປັນຄຳທີ່ໄດ້ຮັບມາຈາກ ພາສາຈີນບູ-ຮານວ່າ /liəw/. ສ່ວນຄຳວ່າ: ສຽວ /ʂiaw/ ກໍ່ຄົງແມ່ນຄຳທີ່ຮັບ ມາຈາກພາສາ ຫວງດນາມໂດຍຜ່ານພາສາໄຕແດງ, ໄຕດຳ ແລ້ວເຂົ້າມາສູ່ພາສາລາວ. ການ ຮັບຜ່ານຫຼາຍທອດເຊັ່ນນີ້ ແນ່ນອນວ່າ ຈະຕ້ອງເກີດປ່ຽນແປງສ່ວນໃດໜຶ່ງຂອງ ຄຳ, ໃນພາສາຫວງດນາມເອີ້ນ /ʒiəw/ ລາວບໍ່ມີໜ່ວຍສຽງພະຍັນຊະນະ /ʒ/ ເລີຍນຳເອົາ /s/ ມາແທນຈຶ່ງໄດ້ຄຳວ່າ: ສຽວ /siaw/ ເຊິ່ງໜ່ວຍສຽງ /ʒ/ ແລະ /s/ ມີຄວາມໃກ້ກັນຫຼາຍແລະ ສາມາດປ່ຽນແທນກັນໄດ້ຫຼາຍກໍລະນີ.

ຄຳວ່າ ເຫຼົ້າ ແລະ ສຽວ ຄົງເປັນຄຳທີ່ລາວເຮົາຮັ້ບຈາກພາສາອື່ນ ແຕ່ວິທີກິນເຫຼົ້າ ແລະເມົາເຫຼົ້າຄົງບໍ່ໄດ້ຢືມຈາກໃຜ.



ຄຳບອກກິ່ນ ໃນພາສາລາວ

ຄຳບອກກິ່ນ ໝາຍເຖິງຄຳທີ່ເປັນຊື່ເອີ້ນໃຫ້ອັນທີ່ຮູ້ສຶກຈາກພາຍນອກ ມາສູ່ດັ່ງ, ອັນທີ່ເກີດຂຶ້ນກັບສິ່ງໃດໜຶ່ງ ແລະ ຜາຍສິ່ງນັ້ນອອກໄປເອີ້ນວ່າ: ກິ່ນ. ສຳລັບກິ່ນ ແລະ ຈຳນວນຄຳທີ່ເອີ້ນຊື່ໃຫ້ກິ່ນນັ້ນໃນພາສາໃດໆກໍ່ມີ ແຕ່ມີຈຳນວນຄຳບໍ່ເທົ່າກັນ ສິ່ງທີ່ສັງເກດເຫັນກໍ່ຄື ຈຳນວນກິ່ນແມ່ນມີຫຼາຍ ແຕ່ຈຳນວນຄຳທີ່ຕັ້ງຊື່ໃຫ້ພັດມີຈຳນວນໜ້ອຍກວ່າ ອັນນີ້ເປັນເພາະວັດທະນະທຳ, ເພາະຄວາມສຳຄັນ ແລະຄວາມເດັ່ນຊັດຂອງກິ່ນນັ້ນວ່າສົມຄວນຈະໄດ້ຮັບເປັນຊື່ໜຶ່ງຫຼືບໍ່.

ໃນສາເຫດທາງວັດທະນະທຳ ຄື ບາງຊາດກໍ່ຮວບເອົາຫຼາຍກິ່ນມາໂຮມໄວ້ໃນຄຳດຽວເຊັ່ນ: ໂຮມເອົາກິ່ນທີ່ເກີດຈາກການຈູດຢາງ, ກິ່ນໄໝ້ຂົນ, ກິ່ນເໜົ່າຂອງຜັກຂອງຊີ້ນ ຊຸມນັ້ນເອົາເຂົ້າໃນວົງຄວາມໝາຍດຽວ, ແຕ່ບາງຊາດກໍ່ແຍກສິ່ງຊຸມນັ້ນອອກໃຫ້ເປັນອັນໆ ຖືວ່າແຕ່ລະອັນແມ່ນຕ່າງຫາກັນ ແລະກໍ່ຕັ້ງຊື່ໃຫ້ຕາມແຕ່ລະອັນນັ້ນ. ເບິ່ງແລ້ວວິທີໃດກໍ່ມີເຫດຜົນຕາມໃຜມັນ ແລະ ໃຊ້ສື່ສານກັນໃຫ້ເຂົ້າໃຈໄດ້ໃນພາສາຕົນ.

ສຳລັບພາສາລາວເຫັນວ່າ ເຮົາໃຊ້ວິທີແຍກອອກເປັນອັນລະກິ່ນອັນລະຄຳນີ້ເປັນສຳຄັນ ແລະ ໃນແຕ່ລະຄຳກໍ່ໂຮມເອົາກິ່ນອື່ນໆທີ່ມີລັກສະນະຄື ຫຼື ຄ້າຍກັນເຂົ້າມາ ຕົວຢ່າງ ຄຳບອກກິ່ນທີ່ຮີບໂຮມໄດ້ມີ: ຫອມ, ເໝັນ, ຄາວ, ຂີ້ວ, ເອືອນ; ສາບ, ກູຍ ແລະແຫງດ.

ແຕ່ລະຄຳນີ້ ກໍ່ຍັງໂຮມເອົາກິ່ນທີ່ມີລັກສະນະດຽວກັນມາໄວ້ຄື: ຄຳວ່າ ຫອມ ກໍ່ໂຮມເອົາກິ່ນດອກໄມ້ຫຼາຍຊະນິດ, ກິ່ນເຂົ້າໃໝ່, ສະບູບາງຊະນິດ, ຜັກບາງຊະນິດ ທີ່ເອີ້ນວ່າຜັກຫອມ ອາດຮວມໄປເຖິງໝາກໄມ້ ແລະ ເຄື່ອງສຳອາງຕ່າງໆ ເຊິ່ງແຕ່ລະກິ່ນກໍ່ຕ່າງກັນເລັກໜ້ອຍແຕ່ກໍ່ເອີ້ນໃຫ້ວ່າ ຫອມ.

ຄຳວ່າ ເໝັນ ກໍ່ໂຮມເອົາກິ່ນຂອງສິ່ງເໜົ່າ, ສິ່ງສົກກະປົກ, ຕະໜອດ ຮອດກິ່ນປາກຂອງຜູ້ທີ່ຂາດອານາໄມ, ເບິ່ງແລ້ວນັບວ່າໂຮມເອົາກິ່ນຂອງໜາຍ ຢ່າງ ແຕ່ຂອບເຂດທີ່ຈຳກັດໄວ້ກໍ່ຄືກຸ່ມທີ່ເໜົ່າຈາກການບົ່ມ ຫຼື ໝັກເປັນສຳຄັນ. ສ່ວນ ກິ່ນ ທີ່ເກີດຈາກຂີ້ນໄໝ້, ຢາງຕີນລົດໄໝ້ ຊຸມນີ້ໃນພາສາລາວໄດ້ຈັດເຂົ້າ ກຸ່ມຂີ ບໍ່ແມ່ນໃນກຸ່ມເໝັນ. ຂີ ບໍ່ສູພາໃຫ້ຈາມ ແຕ່ມັກໃຫ້ເກີດໜ້າຫຍີ້, ດັງ ຫຍີ້ ເຊັ່ນນີ້ເປັນຕົ້ນ.

ໃນກຸ່ມທີ່ເອີ້ນວ່າ ແຫງດ ນັ້ນ ໄດ້ແກ່ກິ່ນທີ່ເກີດຈາກໃບໄມ້ບາງຊະນິດ ເຊັ່ນ: ໃບຫຍ້າຂີ້ມ້ອນ,ຫຍ້າອູບເຂົ້າ, ໃບດອກຝ່ອມ; ກິ່ນຈາກໄຟໄໝ້ໜາກ ເຜັດແຫ້ງ ເປັນຕົ້ນ ກິ່ນທີ່ມີຄວາມເຂັ້ມລຸ່ມາໃສ່ດັງ ມັກພາໃຫ້ສະມັກ, ໃຫ້ຈາມ ຫຼືໄອ. ພ້ອມນີ້ຄຳວ່າ ແຫງດ ບາງຄັ້ງກໍ່ນຳມາໃຊ້ຂະຫຍາຍໃຫ້ຄຳອື່ນທີ່ມີໃນກຸ່ມ ກ່ຽວກັບກິ່ນນີ້ໄດ້ເຊັ່ນ: ເໝັນແຫງດ, ຂີແຫງດ.

ຄຳວ່າ ເອືອນ ແມ່ນກິ່ນທັ້ງຄາວທັ້ງເໝັນປົນກັນແຕ່ຄາວໜາຍກ່ວາ ພາ ໃຫ້ເກີດປວດຮາກໄດ້.

ຄຳວ່າ ກິ່ນສາບ ໝາຍເຖິງກິ່ນທີ່ເກີດຈາກສິ່ງຂອງ, ເຄື່ອງນຸ່ງ, ຜ້າໃຊ້ ທີ່ຊຸ່ມໂດຍຖືກງຸມໄວ້, ປົກໄວ້ບໍ່ໃຫ້ລົມໄດ້ລ່ວງແລ້ວເກີດເປັນກິ່ນອອກ. ກິ່ນນັ້ນ ເອີ້ນ ກິ່ນສາບ, ຂີສາບ ຫຼືເໝັນສາບຕາມກໍລະນີ.

ກິ່ນກູຍ ໄດ້ແກ່ ກິ່ນຂອງຄາບເຫື່ອ, ຄາບໄຄຄ້າວທີ່ເອົ້າຕົວ ຈາກການ ທີ່ບໍ່ສູ້ອາບນ້ຳ ຫຼື ບໍ່ອາບເລີຍຢ່າງພວກ ລີ້ ຄ່າ ໝາ ເຫງົ້ນ... ຊຸມສັດທີ່ມີຂົນ ໜາຍໄດ້ເຄື່ອນໄຫວເລື້ອຍແຕ່ບໍ່ອາບນ້ຳ; ກິ່ນນີ້ໃຊ້ເອີ້ນໃຫ້ກັບ ຄົນ ແລະ ສັດ ໄດ້ ຫາກກິ່ນທີ່ປະກົດອອກນັ້ນເປັນແນວດຽວກັນ.

ກິ່ນທີ່ພາໃຫ້ໃບໜ້າຊື່ນ, ໃຈຊື່ນໄດ້ແກ່ກິ່ນຫອມ, ສະນັ້ນ ດອກໄມ້ຊະ ນິດໃດທີ່ມີກິ່ນຫອມປະກອບກັບສີສັນງົດງາມ ກໍ່ມັກໄດ້ຮັບການເລືອກໃຫ້ເປັນ ສັນຍາລັກໃດໜຶ່ງອັນທີ່ກ່ຽວກັບຊາດຕົນກ່ອນດອກທີ່ມີກິ່ນບໍ່ຫອມ.

ໃນລາວດອກໄມ້ທີ່ມີກິ່ນຫອມໆທັງສີສັນງາມນັ້ນເຫັນມີຫຼາຍເຊັ່ນ: ດອກຈຳປາ, ດອກຄັດເກົ້າ, ດອກຫອມເດິກ, ດອກຈຳປີ, ດອກຊ້ອນ,ດອກເຜົ້ງ,ດອກເອື້ອງດົງ,ດອກດຳດວນ... ສ່ວນດອກດາວເຮືອງ ກໍ່ມີຊື່ນ່ວນຊວນມັກ ເລື່ອງຊື່ແມ່ນຢູ່ໃນກຸ່ມດອກໄມ້ແທ້ ແຕ່ເລື່ອງກິ່ນຢູ່ໃນກຸ່ມ ໜ້າຫຍີ້.

ການໃຊ້ຄຳວ່າ: ອາໄສ ໃນພາສາລາວ

ເລື່ອງຂອງຄຳວ່າ ອາໄສ ທີ່ຈະຂຽນໃນນີ້ ມີຄວາມມຸ່ງໝາຍເພື່ອແນະແນວທາງຄວາມໝາຍ ແລະ ແນວທີ່ສົມຄວນໃຊ້ຄວາມໝາຍນັ້ນໃຫ້ແມ່ນທ່າແມ່ນທາງ. ຄຳວ່າ ອາໄສ ລາວໄດ້ຮັບມາຈາກປາລີຕັ້ງນານ ແລະ ໃຊ້ມັນຂຽນຕາມລະບົບພາສາລາວມາກໍ່ດົນນານເຊັ່ນກັນ ດັ່ງນັ້ນ ການການເວົ້າເຖິງປະຫວັດທີ່ມາຄົງບໍ່ແມ່ນສິ່ງສົນໃຈແລ້ວກໍ່ເປັນໄດ້.

ຄຳວ່າ ອາໄສ ຄວາມໝາຍຫຼັກຂອງຄຳນີ້ໃນພາສາລາວແມ່ນ: ເພິ່ງ, ຢູ່ນຳຊົ່ວໄລຍະ, ຢູ່ເພື່ອຂໍຄວາມຊ່ວຍເຫຼືອ. ຜ່ານມາຄວາມໝາຍຂອງຄຳນີ້ ມີຜູ້ຮັບຮູ້ຜິດຈາກຫຼັກເລີຍໃຫ້ຄວາມໝາຍຂອງຄຳນີ້ຄືກັນກັບຄຳວ່າ: ດຳລົງ, ຢູ່ຢ່າງເປັນຫຼັກ, ຕັ້ງໃຈຢູ່ໃຫ້ໝັ້ນຄົງ. ອາດເຂົ້າໃຈແນວນີ້ຈຶ່ງພົບການໃຊ້ແທນກຳລະນີເຊິ່ງສົມຄວນໃຊ້ຄຳວ່າ ອາໄສ ແທນ.

ໃນບົດບັນລະຍາຍເລື່ອງສາລະຄະດີກໍ່ພົບຫຼາຍບົດໃຊ້ຄຳວ່າ ອາໄສ ນີ້ບໍ່ເຂົ້າກັບກຳລະນີ. ຕົວຢ່າງ: ການສະເໜີຈຳນວນປະຊາກອນໃນບ້ານໜຶ່ງເຊິ່ງບ້ານນັ້ນມີມາແຕ່ໃດໆ ແລະ ຄົນທີ່ຢູ່ບ້ານນັ້ນກໍ່ຢູ່ຢ່າງໝັ້ນຄົງ ໂດຍມີເຮືອນ, ມີ

ນາ, ມີສວນ ແລະ ສິ່ງທີ່ເປັນຂອງຕົນເອງໃຊ້ ແລະ ຢູ່ຢ່າງລຳພັງບໍ່ແມ່ນຢູ່ ແລະ ໃຊ້ແບບຈິ່ງໆຈຸມໆ, ແບບມີສິ່ງລະວັງໃຈເພີ່ນ. ການຢູ່ແບບນີ້ສົມຄວນເອີ້ນວ່າ: **ດຳລົງຊີວິດຢູ່** ແຕ່ຜູ້ບັນລະຍາຍກໍ່ໃຊ້ຄຳວ່າ ອາໄສຢູ່, ຫາກເຂົ້າໃຈຕາມຄຳທີ່ເລືອກມາໃຊ້ນີ້ ຈະຖືວ່າ ຊາວບ້ານນັ້ນຢູ່ຢ່າງເພິ່ງ, ຢູ່ຢ່າງຂໍຄວາມຊ່ວຍເຫຼືອ ໂດຍບໍ່ຮູ້ວ່າເພິ່ງໃຜ, ເອົາໃຜເປັນຜູ້ຊ່ວຍເຫຼືອ ແລະຄວາມໝາຍດຽວກັນນີ້ ຈະມອງວ່າ ຊາວບ້ານນັ້ນແມ່ນລ້ວນແຕ່ແມ່ນຜູ້ຢູ່ຊ່ຶອຄາວ, ຢູ່ຊ່ຶວໄລຍະເວລາໃດໜຶ່ງກໍ່ຈະແຍກຕົວອອກໄປຢູ່ດ້ວຍຍຕົນເອງຕ່າງຫາກ ເຊິ່ງຄືກັບເຮົາໄປອາໄສອ້າຍ-ເອື້ອຍ, ອາໄສວັດເພື່ອຮຽນຄວາມຮູ້ ເມື່ອຮຽນຈົບແລ້ວກໍ່ຈະອອກຈາກອ້າຍເອື້ອຍ ຫຼື ວັດນັ້ນໄປ. ເພື່ອເພີ່ມຄວາມກະຈ່າງແກ່ຄວາມໝາຍຂອງຄຳວ່າ ອາໄສ ແລະດຳລົງ ນີ້ ເຮົາກໍ່ຍັງມີຕົວຢ່າງອື່ນໆທີ່ຊັກມາໃຫ້ເຫັນໄດ້ ຄືຄວາມວ່າ: ອາໄສລຳແຄ່ງລຳຂາຂອງຕົນເອງທຳໄຮ່ໄຖນາຫາລ້ຽງຊີບ. ຄວາມນີ້ເຮົາເຄີຍຍິນ ແຕ່ບໍ່ເຄີຍຍິນຄວາມວ່າ: ດຳລົງລຳແຄ່ງລຳຂາຂອງຕົ້ນເອງທຳໄຮ່ໄຖນາຫາລ້ຽງຊີບ. ການເລືອກໄດ້ຄຳທີ່ມີຄວາມໝາຍເຂົ້າກັບບໍລິບົດໄດ້ຢ່າງເໝາະສົມນັ້ນຈະເປັນການໄດ້ມາເຊິ່ງຄວາມຖືກ ແລະ ຄວາມມ່ວນ.

ໃຕ ຄວາມໝາຍໃນພາສາລາວ

ພາສາລາວມີຈຸດພິເສດຢ່າງໜຶ່ງນັ້ນຄືການແຍກແຍະສິ່ງດຽວກັນໃຫ້ເປັນອັນລະອຽດ ໂດຍການແຍກນັ້ນອາດອີງໃສ່ລັກສະນະ, ສີສັນ, ຂະໜາດ,

ຄວາມແຂງອ່ອນ ອີກຫຼາຍຢ່າງ. ເຮົາມາເບິ່ງຄຳວ່າ: ໃຕ ຄຳນີ້ວ່າມັນໄດ້ຮັບ ການແຍກແນວໃດ.

ສິ່ງສຳລັບບັນຈຸອາຫານທີ່ຢູ່ໃນທ້ອງນັ້ນ ສຳລັບຄົນ ແລະ ສັດຂະນິດສີ່ ຕີນໄດ້ຮັບການຈັດເຂົ້າເປັນກຸ່ມດຽວກັນເຊິ່ງເອີ້ນວ່າ: ໂພ່ນ ແຕ່ໃດໆມາ. ເຊັ່ນ ໂພ່ນງົວ, ໂພ່ນເໝັ້ນ, ໂພ່ນໝູ . . .ໃນຄາວຕໍ່ມາ ວັດທະນະທຳອັນເພື່ອຄວາມ ຈະເລີນໄດ້ຂະຫຍາຍຕົວຂຶ້ນ ກໍ່ພາໃຫ້ເກີດການແຍກລະຫ່ວ່າງຄົນ ແລະ ສັດ ເດັ່ນຊັດ, ກະແສວັດທະນະທຳນີ້ໄດ້ມີຜົນໄປສູ່ຫຼາຍຢ່າງພາໃຫ້ປ່ຽນແປງແຍກ ແລະ ຈັດລະດັບຊັ້ນຫຼືໃຫ້ມີອັນຕ່ຳອັນສູງ ມີອັນງາມອັນຂີ້ຮ້າຍ ກໍ່ເພາະເປັນ ແນວນັ້ນ ຈຶ່ງພາໃຫ້ລາວໄດ້ຮັບຄຳວ່າ ກະເພາະ ເຂົ້າມາຕື່ມຄຳວ່າ ໂພ່ນ ແລ້ວ ປະຄຳວ່າ ໂພ່ນ ໄວ້ເອີ້ນໃຫ້ຊຸມໂຕສັດ, ສ່ວນຄົນເອົາຄຳວ່າ ກະເພາະ ມາໃຊ້. ເຊິ່ງຄຳນີ້ຄາດວ່າເປັນຄຳໃນພາສາຂະແມ.

ຫວນຄືນເຖິງການແຍກແຍະຄວາມໝາຍທີ່ຮັບວ່າເປັນເອກະລັກຂອງ ພາສາລາວນັ້ນມີຄວາມສະຫຼັບສັບຊ້ອນພໍຄວນຄື: ຊຸມສັດສີ່ນຕີນ ແລະ ຄົນ ເຊິ່ງມີສອງຕີນໄດ້ຮັບຄຳວ່າ: ໂພ່ນ ເຊັ່ນກັນ; ຊຸມສັດສອງຕີນເຊັ່ນ: ໄກ່,ນົກ, ເປັດ, ກໍ່ໄດ້ຮັບການຈັດເປັນກຸ່ມໜຶ່ງຕ່າງຫາກ; ສິ່ງບັນຈຸອາຫານຂອງສັດຊຸມນີ້ ນັບແຕ່ປາກລົງໄປເຖິງທ້ອງນັ້ນມີສອງບ່ອນ ບ່ອນທຳອິດໃກ້ກັບປາກເອີ້ນວ່າ: ໜຽງ; ບ່ອນຢູ່ໃນທ້ອງເອີ້ນໃຕ,ທັ້ງທີ່ວ່າ ໃຕ ແລະ ກະເພາະ ກໍ່ມີພາລະຢ່າງດຽວກັນ. ຄົນເຮົາບາງຄົນກໍ່ມີໜຽງ ຫາກ ບໍ່ຄືກັບໜຽງຂອງສັດ ປີກ , ໜຽງສັດປີກ ມີ ເພາະທຳມະຊາດ ທັ້ງມີກັບທຸກຕົວ.

ບັດນີ້ ມາເວົ້າເຖິງໂພ່ນ ແລະ ໃຕ ເຖິງວ່າມີພາລະເຊັ່ນດຽວກັນຄື: ບັນຈຸ ແລະ ທັ້ງໝັກອາຫານໄວ້ເພື່ອນຳໄປລ້ຽງຮ່າງກາຍ, ແຕ່ລັກສະນະຂອງ ໃຕ ຈະແຂງ, ມີກ້ອນຊີ້ນທີ່ແໜ້ນສຳລັບໃຫ້ຄວາມທົນຕໍ່ການໄສ ຍ່ອຍແນວ ແຂງເຊັ່ນ: ເຂົ້າເປືອກ, ໝາກເດືອຍ ຮວມເຖິງຫີນແຮ່ທີ່ຮວມໄປກັບອາຫານ. ສ່ວນ ໂພ່ນ ຈະມີຄວາມອ່ອນ ແລະ ລະດັບທົດຢຶດຈະໄດ້ດີກວ່າໃຕ.

ໃນພາສາລາວໄດ້ເອົາຄຳວ່າ: ໃຕ ໄວ້ໃຊ້ໃຫ້ສະເພາະສັດສອງຕີນທີ່ມີປີກເທົ່ານັ້ນ, ຄົນລາວໃຜທີ່ນຳເອົາຄຳນີ້ມາໃຊ້ກັບຄົນເຊັ່ນ: ໄດ້ຜ່າໃຕ, ປ່ຽນໃຕ, ເຈັບໃຕ ເຊັ່ນນີ້ກໍ່ສ່ຳກັບວ່າຈັດຕົນເອງເຂົ້າໄປຢູ່ໃນກຸ່ມສັດປີກດ້ວຍຄວາມສະໝັກໃຈຢ່າງບໍ່ຮູ້ສຶກ. ຜ່ານມາທີ່ເຄີຍເຫັນນັ້ນ ຄົນລາວບາງຄົນໄດ້ປາດໝາກໄຂ່ຫຼັງ, ເຈັບໄຂ່ຫຼັງ ເທົ່ານັ້ນບໍ່ເຄີຍເຈັບໃຕ, ປາດໃຕ ເພາະຄົນລາວບໍ່ເຄີຍມີໃຕ, ມີແຕ່ໝາກໄຂ່ຫຼັງ ເຖິງມັນມີລັກສະນະມົນຄ້າຍກັບໃຕ ແຕ່ກໍ່ບໍ່ເຄີຍຫຼົງກັນຈັກເທື່ອ ເພາະໝາກໄຂ່ຫຼັງມີສອງອັນ ບ່ອນຢູ່ໃນທ້ອງກໍ່ຕ່າງກັນ, ສ່ວນໃຕມີອັນດຽວ ແລະຢູ່ນຳສັດປີກເທົ່ານັ້ນ.

ຄຳວ່າ: ແຫຍ່ ແລະ ສອດ ໃນພາສາລາວ

ຄຳທັງສອງນີ້ເຄີຍຍິນຄວາມໝາຍວ່າຄືກັນ ຈະໃຊ້ຄຳໃດ ກໍ່ຍັງໄດ້ຄວາມໝາຍແນວເກົ່າ. ແຕໃນທາງພາສາສາດບອກວ່າ ຫາກເປັນຄຳລະຄຳເຊັ່ນນີ້ ເຖິງຄວາມໝາຍຈະຄືກັນຫຼາຍ ແຕ່ກໍ່ຈະມີຄວາມແຕ່ຕ່າງແນວໃດແນວໜຶ່ງຢູ່ສະເໝີ.

ໃນພາສາລາວຄຳທີ່ບອກອາການທີ່ເອົາສິ່ງໜຶ່ງເຂົ້າໄປໃນຂອງສິ່ງໜຶ່ງອີກນັ້ນມີຫຼາຍຄຳເຊັ່ນ: ປັກ, ແທງ, ສຽບ, ແຫຍ່, ສອດ, ເນັບ, ຮ້ອຍ ດັ່ງນີ້ເປັນຕົ້ນ. ໃນຄັ້ງນີ້ຈະນຳເອົາພຽງແຕ່ສອງຄຳດັ່ງທີ່ສະເໜີໃນຫົວບົດມາເວົ້າ.

ຄຳວ່າ: ແຫຍ່ ເປັນຄຳກິລິຍາ ໝາຍເຖິງເອົາສິ່ງທີ່ມີລັກສະນະນ້ອຍຍາວ, ເປັນລຳ, ເປັນດ້ວ ໂດຍໃຫ້ປາຍໄປແປະແນບຈີ່ໃສ່ສິ່ງໜຶ່ງ ຫຼື ກອນດ້ວຍການຂີດ ຕົວຢ່າງ: ເອົາໄມ້ດອກແຫຍ່ຮັ້ງມິດສົ້ມ, ເອົາໄມ້ແຫຍ່ຮັ້ງແຕນ . . .

ສ່ວນຄຳວ່າ: ສອດ ກໍ່ເປັນຄຳກິລິຍາ ໝາຍເຖິງເອົາສິ່ງໜຶ່ງທີ່ມີລັກສະນະຍາວມີຮູບກົມ ຫຼື ແປໃສ່ເຂົ້າໄປໃນຕາມແນວທີ່ເປັນຫວ່າງ, ເປັນຊ່ອງ. ເມື່ອປຽບທຽບດ້ວຍສິ່ງນຳມານິຍາມຄວາມໝາຍ ໃນນີ້ກໍ່ເຫັນວ່າ ອັນສຳພັນນຂອງຄຳທັງສອງໄດ້ແກ່ ສິ່ງຂອງທີ່ລັກສະນະຍາວເປັນຮູບກົມ ຫຼື ແປກໍ່ແລ້ວແຕ່ ແລະ ເອົາມັນເຂົ້າໄປ. ແຕ່ມນນີ້ການເອົາມັນເຂົ້າໄປນັ້ນ ສຳລັບ ແຫຍ່ ແມ່ນຈະຜ່ານ ຫຼື ບໍ່ຜ່ານສິ່ງກີດຂວາງ, ບໍ່ຈຳເປັນໄປຕາມແນວທີ່ເປັນຫວ່າງກໍ່ໄດ້ ພຽງແຕ່ເນັ້ນອາການໃຫ້ຮູ້ວ່າ ເອົາປາຍໃຫ້ໄປຈີ່ໃສ່ ຫຼື ໄປຂິດໆ. ແຕ່ອາການສອດໄດ້ເນັ້ນອາການທີ່ເອົາເຂົ້າໄປຕາມຫວ່າງ, ຕາມຊ່ອງ ເຊິ່ງຊ່ອງ ຫຼື ຫວ່າງນັ້ນມີຢູ່ແລ້ວ. ການສອດນັ້ນອາດສອດດ້ວຍຄວາມລຳບເກເພາະຄັບ ເພາະຊ່ອງ, ຫວ່າງບໍ່ຊີ ຫຼື ເພາະ ຊ່ອງ, ຫວ່າງຊີ່ແຕ່ແນວສອດຄິດຢ່າງໃດນັ້ນບໍ່ເປັນເລື່ອງທີ່ຢູ່ຮ່ວມໃນນີ້ ພຽງແຕ່ບອກອາການເອົາເຂົ້າໄປຕາມຊ່ອງ ຫຼື ຫວ່າງເທົ່ານັ້ນ.

ຄຳວ່າ: ແຫຍ່ ກັບ ສອດໄດ້ຖືກນນຳໄປໃຊ້ກັບກໍລະນີອື່ນໆທີ່ເປັນທາງຄຳປະພັນກໍ່ໄດ້ເຊັ່ນ: ໃຊ້ຄຳເວົ້າແຫຍ່; ໃນເວລາເຮົາເວົ້າເລື່ອງຂີດຂຽນຢູ່ເພີ່ນກໍ່ເວົ້າເລື່ອງທຸລະກິດສຶດຂຶ້ນ . . . ນອກນີ້ຄຳວ່າ ສອດ ຍັງພົບການໃຊ້ກັບຄຳອື່ນເຊັ່ນ: ສອດແນມ ໝາຍເຖິງຈອບຕິດຕາມເອົາເລື່ອງ, ການກະທຳ, ແນວທີ່ຜູ້ອື່ນລັບ; ສອດຄ່ອງ ໝາຍເຖິງເຂົ້າໄປໄດ້ຢ່າງດີກັບສະພາບຂອງຊ່ອງ ຫຼື ຫວ່າງ ໂດຍຄິດກໍ່ຄິດຕາມໂດຍບໍ່ຄັດບໍ່ຄ້າ ຫຼື ໃນທາງສັງຄົມໝາຍເຖິງເໝາະສົມກັບສະພາບ ແລະ ໂອກາດໄດ້ເປັນຢ່າງດີ. ເມື່ອຮູ້ແລ້ວຈຶ່ງວ່າຄຳລາວກໍ່ບໍ່ແມ່ນມັນງ່າຍ.

ຫາຄຳ ຈ໋ຳ, ຈ໊ຳ ແລະ ນ້ຳຈ໊ຳ ໃນພາສາລາວ

ຈ໋ຳ ແລະ ຈ໊ຳ ລ້ວນແຕ່ເປັນຄຳເດີມໃນພາສາລາວຕ່າງກໍ່ເປັນຄຳກິລິຍາ. ໃນນີ້ຄຳວ່າ ຈ໊ຳ ບາງຖິ່ນອອກສຽງເປັນ ຈ໊ຳ ໂດຍຫຼຸດຄວາມຍາວຂອງສຽງສະຫຼະ ◌ັ ເປັນ ◌ ັ . ຄຳວ່າ: ຈ໋ຳ ໝາຍເຖິງອາການເຮັດໃຫ້ແໜ້ນ ຫຼື ເອົາສິ່ງໃດໜຶ່ງຍັດ ຫຼື ຕອກເຂົ້າໄປໃນຫວ່າງຂອງສິ່ນ, ແຄມ ຫຼື ຮີມທີ່ມາຈຸ, ຕໍ່ ຫຼື ຄົບກັນ ເພື່ອໃຫ້ແຈບ ຫຼື ແໜ້ນ. ຕົວທີ່ເຮັດໄວ້ສະເພາະສຳລັບຈ໋ຳເອີ້ນວ່າ ຫຼ້ຳ ເຊິ່ງເປັນຕົວທີ່ມີພາລະເຮັດໃຫ້ແໜ້ນ, ຫາກຈ໋ຳເພື່ອຄວາມແຈບຈະໄດ້ແກ່ສິ່ງທີ່ມີເນື້ອອ່ອນ ເຊັ່ນ ເຈ້ັຍ, ຍອງຝ້າຍ, ຂີ້ຝອຍ ຫຼືຜ້າແພ. ຕົວຢ່າງ: ເອົາຫຼ້ຳຈ໋ຳເສົາຫຼາ, ຈ໋ຳຮູຂັ້ນໄດ; ນັ່ງຈ໋ຳກັນ ໝາຍເຖິງນັ່ງແປະໆກັນຢ່າງແໜ້ນ.

ຄຳວ່າ ຈ໊ຳ ໝາຍເຖິງອາການໃຊ້ຂອງແຂງທີ່ມີປາຍແຫຼມປັກ ຫຼື ເນັບເອົາສິ່ງທີ່ຖືກໜີບຢູ່ໃນຫວ່າງອອກມາເຊັ່ນ: ຈ໊ຳແຂ້ວ ໝາຍເຖິງເອົາໄມ້ນ້ອຍແຫຼມປັກແລ້ວເຂ່ຍເສດອາຫານທີ່ຢູ່ຕາມຫວ່າງແຂ້ວອອກ. . .

ຈ໋ຳ ກັບ ຈ໊ຳ ມີທິດຂອງຄວສາມໝາຍທີ່ແຕກຕ່າງກັນຄື: ຈ໋ຳ ເປັນອາການເຮັດໃຫ້ໜີບແໜ້ນເຂົ້າ, ແຕ່ ຈ໊ຳ ເປັນອາການເອາສິ່ງທີ່ຖືກໜີບໃຫ້ອອກ. ໃນກໍລະນີໃຊ້ຂອງທີ່ມີປາຍແຫຼມປັກເອົາສິ່ງທີ່ຢູ່ໂດຍບໍ່ມີອ່ການໜີບແໜ້ນເຊັ່ນ: ລູກຊີ້ນ, ໝາກຫຼອດ, ໝາກຍົມຕ່າງໆແລ້ວເອົາລົງໄປໃສ່ນ້ຳແຈ່ວຈາກນັ້ນກໍ່ເອົາຂຶ້ນມາກິນ, ທີ່ເຮັດນີ້ໃນພາສາລາວບໍ່ເອີ້ນວ່າ ຈ໊ຳ ເຄີຍໃຊ້ຄຳວ່າ ຈຸແຈ່ ໃນກໍລະນີທີ່ແຈ່ວເປັນນ້ຳ; ຫາກແຈ່ວເປັນຊະນິດຜົງ ຫຼື ປຸງກຊຸ່ມກໍ່ໃຊ້ຄຳວ່າ: ຈ້ຳ. ຄຳວ່າ ຈ໊ຳ, ຈຸ, ຈ້ຳ ມີຈຸດເນັ່ນທາງຄວາມໝາຍທີ່ຕ່າງກັນ.

ການແບ່ງເຂດແດນຂອງຄວາມໝາຍແຕ່ລະຄຳໄດ້ກ່ຽວກັບອາການທີ່ເຮັດ, ສິ່ງທີ່ໃຊ້, ສິ່ງທີ່ກ່ຽວຂ້ອງຕ່າງໆຮ່ວມເຂົ້າກັນນຳເຊັ່ນ: ຈຸ ມີຈຸດເດັ່ນຄື ໃຫ້ສິ່ງນີ້ຕິດແທດກັບສິ່ງນັ້ນ. ຄືໃຫ້ລູກຊີ້ນ ຫຼື ໝາກຫຼອດນັ້ນໄປແທດເຖິງນ້ຳແຈ່ວ.

ບໍ່ໄດ້ເນັ້ນໃນຈຸດທີ່ເອົາຂອງແຫຼມປັກ ຫຼື ເອົາມືຈັບເລີຍ. ສ່ວນຄຳວ່າ ຈ໊ ນັ້ນມີຈຸດເນັ້ນຄື ຕ້ອງກ່ຽວກັບການໃຊ້ມືຈັບ ແລະ ມີຄວາມແຮງກວ່າອາການຈຸ ຫາກໃຊ້ແຮງເບົາກໍ່ຽງກວ່າ ຈ. ນີ້ແຫຼະແມ່ນຄວາມລະອຽດຂອງການມອງໂລກແບບລາວ ເຊິ່ງເບິ່ງຜ່ານພາສານີ້ຈະເປັນຕົວທີ່ໃຫ້ຮູ້, ສະນັ້ນ ຫາກມີຜູ້ເອີ້ນນ໊ຕົວທີ່ຈຸນັ້ນເປັນນ໊ຈິ້ມ ຈິ່ງຖືວ່າເປັນຜູ້ທີ່ມອງໂລກຕ່າງໄປຈາກລາວ ເພາະນ໊ບໍ່ເປັນສິ່ງທີ່ປາຍແຫຼມ ແລະ ບໍ່ສາມາດໃຊ້ປັກເອົາສິ່ງທີ່ຖືກໜີບອອກມາໄດ້ສົມຄວນເປັນພຽງ ນ໊ຈຸ, ນ໊ແຈ່ວ ຕາມຄຳລາວແບບເດີມກໍ່ພຽງພໍສຳລັບການໃຊ້ໄດ້.

ສຶກສາບາງສາເຫດຂອງ

ການໃຊ້ຄຳເຮັດໃຫ້ເຫຼື

ຄຳໃນພາສາໃດໜຶ່ງບໍ່ມີຄຳເຫຼື ແຕ່ການເຫຼືອມັກເກີດຂຶ້ນເພາະການໃຊ້, ຄຳທີ່ເຫຼືອໃນຄຳເວົ້າແມ່ນຜູ້ໃຊ້ພາສາພາໃຫ້ເກີດ. ສະນັ້ນ ການຈະສຶກສາໃຫ້ຮູ້ການໃຊ້ຄຳເຮັດໃຫ້ເຫຼືອໄດ້ມີເປົ້າໝາຍຢູ່ທີ່ຜູ້ໃຊ້ພາສາ.

ການໃຊ້ຄຳເຮັດໃຫ້ເຫຼື ເປັນອາການທີ່ນອກຄວາມຕ້ອງການຂອງຜູ້ຟັງ, ຜູ້ອ່ານ ເນື່ອງຈາກວ່າ ຄຳເວົ້າທີ່ສ້າງຂຶ້ນດ້ວຍຄຳທີ່ນຳມາໃຊ້ນັ້ນເປັນຕົວເຮັດໃຫ້ເກີດພາວະຊ້ຳເດີມ, ລື້ມໄປລື້ມມາໃນແນວເກົ່າ, ຄວາມເກົ່າ. ຕົວທີ່ເຫຼືອນັ້ນເປັນເຫດກໍ່ໃຫ້ເກີດການຟຸ່ມເຟືອຍເວລາ, ບໍ່ມີຜົນຕໍ່ຄວາມດຶງດູດໃຈ, ຄຳເວົ້າຍາວ ແຕ່ເນື້ອຄວາມມີໜ້ອຍ ເຊິ່ງເບິ່ງໃນທາງວິທະຍາສາດສຳລັບການສື່ສານຕໍ່ກັບອາການນີ້ວ່າ ເປັນການໃຊ້ພາສາທີ່ໃຫ້ຄ່າແຫ່ງຄວາມອິດເມື່ອຍແກ່ຜູ້ຟັງ, ສ້າງຄ່າພາສາທີ່ມີຄວາມແນ່ນອນຕ່ຳແກ່ຜູ້ຟັງ.

ການໃຊ້ຄຳໃຫ້ເໝືອໃນຄວາມເວົ້າ ເປັນອາການທີ່ຜູ້ຟັງ, ຜູ້ອ່ານບໍ່ມັກ ແຕ່ຈະກຳຈັດມັນໄດ້ແນວໃດ. ເລື່ອງນີ້ນັກພາສາສາດຜູ້ທີ່ສຶກສາເຊິ່ງຈິດຕະວິ ທະຍາ (Psycho Linguistics) ແລະ ນັກພາສາສາດສັງຄົມ ກໍ່ພະຍາຍາມຄົ້ນ ຄວ້າດ້ວຍໜາຍຢ່າງຈົນໄດ້ຂໍ້ສະຫຼຸບມາ, ໃນນັ້ນ ເຫັນມີດັ່ງນີ້:

1. ເພາະຕົວຜູ້ໃຊພາສາຮູ້ໃນຄວາມໝາຍຂອງແຕ່ລະຄຳທີ່ຕົນມີນັ້ນ ບໍ່ແນ່, ບໍ່ລະອຽດ. ໝາຍວ່າ ໃນສິ່ງທີ່ຮູ້ກໍ່ຍັງມີສິ່ງທີ່ສົງໄສຕິດພັນ ຢູ່ນຳ.
2. ເພາະຄວາມຮູ້ຄຳ ຢູ່ໃນຕົວຂອງຜູ້ໃຊພາສາມີບໍ່ໜາຍ, ມີບໍ່ອຸດົມ ສົມບູນ.
3. ເພາະຜູ້ໃຊ້ພາສາຂາດຄວາມສາມາດໃນການເລືອກຄຳທີ່ຈະມາ ໃຊ້.
4. ເພາະຄວາມຮູ້ຮອບຕົວມີບໍ່ໜາຍ, ອາດຂາດບາງຢ່າງ ຫຼື ໜາຍ ຢ່າງ.
5. ເພາະຄວາມຕັ້ງໃຈ ຫຼື ຄວາມສົນໃຈຕໍ່ສິ່ງທີ່ເວົ້ານັ້ນມີໜາຍເກີນ ໄປ ຫຼື ໜ້ອຍເກີນໄປ.
6. ເພາະອິທິພົນທີ່ເປັນອັນນອກເລື່ອງພາສາ

ຄຳວ່າ: ນັກຂຽນ, ນັກແຕ່ງ, ນັກປະພັນ ໃນພາສາລາວ

ຄຳທັງສາມນີ້ມີສິ່ງພັນກັນທາງຄວາມໝາຍຄື: ເປັນບຸກຄົນທີ່ກ່ຽວກັບງານຂຽນ ແຕ່ເນື່ອງຈາກການໃຫ້ນິຍາມຄວາມໝາຍໃນແຕ່ລະຄຳຍັງບໍ່ທັນຊີ້ແຈງເຂດແບ່ງທາງຄວາມໝາຍໄດ້ ສະນັ້ນ ຈຶ່ງພົບມີການໃຊ້ບໍ່ເຂົ້າເປົ້າເຂົ້າໝາຍ ຫຼື ບາງຄັ້ງກໍ່ພົບການໃຊ້ພາບທັງສອງຄຳ ຫຼື ສາມຄຳນຳກັນກໍ່ມີ, ຍ້ອນບໍ່ສາມາດຊີ້ຂາດວ່າຈະໃຊ້ຄຳໃດ. ປ່ອຍໃຫ້ຜູ້ຟັງຮິ່ນຕອງ ຫຼື ໄຈ້ເອງ. ມື້ນີ້ເຮົາມາຮູ້ເຂດແດນທາງຄວາມໝາຍຂອງແຕ່ລະຄຳໃນນີ້.

ຄຳວ່າ:ນັກຂຽນ ເມື່ອແປຄວາມໝາຍກົງຕົວ ໝາຍເຖິງ ບຸກຄົນທີ່ຂຽນເປັນປະຈຳຈົນເຄີຍໃນການຂຽນ; ເມື່ອແປຄວາມໝາຍທີ່ບັນຍັດໃນຄຳ ໝາຍເຖິງ ບຸກຄົນທີ່ເຄີຍໃນການຂຽນເລື່ອງອັນສຳຄັນ ໄດ້ແກ່ເລື່ອງທີ່ເກີດ ຫຼື ມີມາແລ້ວ ເຊັ່ນ: ນິທານ, ຕຳນານ, ເລື່ອງຈິ່ງໃນອາດີດ, ບັນທຶກເຫດການໃນຊີວິດ, ເລື່ອງກ່ຽວກັບທຳມະຊາດ, ເຫດການທາງສັງຄົມ ເຫຼົ່ານີ້ເປັນຕົ້ນ. ຈຸດໝາຍຂອງການຂຽນແມ່ນເພື່ອໃຫ້ຄວາມມ່ວນ, ໜ້າອ່ານ ເພື່ອເປັນຄວາມຮູ້ໂດຍກວ້າງໆແກ່ຕົວຜູ້ອ່ານ, ບໍ່ແມ່ນເພື່ອໃຫ້ຄວາມຮູ້ທາງວິທະຍາສາດ ຫຼື ການເມືອງ, ສັງຄົມໂດຍສະເພາະ.

ຄຳວ່າ: ນັກແຕ່ງ ໝາຍເຖິງ ບຸກຄົນທີ່ເຄີຍໃນການສ້າງເປັນເລື່ອງຂຽນ ໂດຍຫາເອົາເລື່ອງຍ່ອຍຈາກຜູ້ໃດໜຶ່ງ, ຈາກບ່ອນໃດໜຶ່ງ ຫຼື ຈາກຫຼາຍຄົນ, ຫຼາຍບ່ອນມາປະກອບເຂົ້າຕາມທີ່ຜູ້ຂຽນຄິດ ແລະ ຈັດໄວ້. ນັກແຕ່ງກໍ່ແມ່ນນັກຂຽນ ແຕ່ມີຈຸດເນັ້ນທີ່ເລື່ອງຂຽນ ແມ່ນເລື່ອງປຸງເອົາແຕ່ງເອົາດ້ວຍຕົວຜູ້ຂຽນ, ເລື່ອງຈະໜ້າອ່ານ, ຈະໜ້າເຊື່ອສ່ຳໃດ ແມ່ນຂຶ້ນກັບການແຕ່ງການປຸງຂອງຜູ້ຂຽນ.

ຄຳວ່າ: ນັກປະພັນ ໝາຍເຖິງບຸກຄົນທີ່ເຄັຍໃນການສ້າງເລື່ອງຂຽນ ດ້ວຍການໃຊ້ຄຳເວົ້າຫາເອົາເລື່ອງມາປະກອບເຂົ້າກັນໃຫ້ເປັນບົດທີ່ມີສີສັນຂຶ້ນ ຈາກເດີມ, ພາໃຫ້ເກີດຄວາມສົນໃຈ, ໃຫ້ຜູ້ອ່ານຕິດໃຈໃນຄຳເວົ້າ ແລະໃນ ເລື່ອງທີ່ຂຽນ.

ຈາກຄຳນິຍາມໃດ້ເຫັນວ່າ ນັກແຕ່ງ ແລະ ນັກປະພັນ ກໍ່ເປັນງານ ແລະ ທຳນອງງານໃນລັກສະນະດຽວກັນ ພຽງແຕ່ເບິ່ງງານນັ້ນຈາກໃນມູມມອງ ທີ່ຕ່າງກັນກໍ່ພາໃຫ້ໄດ້ຄຳເອີ້ນຕ່າງກັນ. ສຳລັບຄຳທີ່ຫາມາຕັ້ງເປັນຊື່ໃຫ້ນັ້ນຄຳ ວ່ານັກແຕ່ງເປັນການໃຊ້ຄຳລາວເປັນຫຼັກ. ສ່ວນຄຳວ່າ: ນັກປະພັນໃນນີ້: ປະ ພັນ ເປັນຄຳທີ່ຮັບຈາກສັນສະກິດ ເຊິ່ງແປຄວາມໝາຍມາສູ່ຄວາມລາວກໍ່ ແມ່ນ: ແຕ່ງ, ເຮັດໃຫ້ຕໍ່ເນື່ອງເກາະກັນນັ້ນເອງ. ຄຳທີ່ຮັບຈາກພາສາອື່ນ ອັນທີ່ ດີກໍ່ເປັນການສ້າງຄວາມອຸດົມສົມບູນໃຫ້ແກ່ພາສາເຮົາ ແຕ່ທາງທີ່ພາໃຫ້ເກີດ ຄວາມຫຼົງກັນກໍ່ແມ່ນມີໂອກາດເປັນໄດ້ເຊັ່ນກັນ.

ສຶກສາຄຳວ່າ: ໄມ້ແສ້ ໃນພາສາລາວ

ຄຳວ່າ: ໄມ້ແສ້ ເປັນຊື່ຂອງໄມ້ທີ່ເປັນບົ້ງຍາວ ຫຼື ເປັນລຳນ້ອຍຍາວ ສຳລັບເອົາໃຊ້ຟາດໃຫ້ເກີດເຈັບຕາມບໍລິເວນໜັງ. ໄມ້ທີ່ໃຊ້ເຮັດແສ້ຈະເປັນໄມ້ ຊະນິດໃດ ຫຼື ເສັ້ນ, ເຄືອຊະນິດໃດກໍ່ໄດ້ ພຽງແຕ່ໃຫ້ມີລັກສະນະເປັນບົ້ງຍາວ, ເປັນເຄືອອ່າວແຂງ ຫຼື ເປັນລຳນ້ອຍໆທີ່ສາມາດຟັດໄດ້. ນີ້ແມ່ນຄວາມໝາຍ

ຂອງຄຳວ່າໄມ້ແສ້. ສຳລັບການໃຊ້ນັ້ນ ຕາມການສຶກສາພົບວ່າ: ໄມ້ແສ້ ເປັນ ໄມ້ທີ່ຫາມາເພື່ອໃຊ້ໃນງານຟາດ ແລະ ຟາດໃສ່ຕົນຕົວໂດຍສະເພາະ. ຄຳວ່າ ຕົນຕົວໃນນີ້ ໄດ້ແກ່ສັດ ຫຼື ຄົນນັ້ນເອງ ສະນັ້ນ ຈຳພວກຕົ້ນໄມ້, ຫີນຜາ ຂຸມນັ້ນ ກໍ່ຈະບໍ່ແມ່ນເປົ້າໝາຍທີ່ຈະໃຊ້ແສ້ ແລະ ໄມ້ແສ້ກໍ່ບໍ່ໄດ້ເກີດເພາະສິ່ງຂຸມນັ້ນ ເຊັ່ນກັນ. ແຕ່ໃນຄຳວ່າ ຕົນຕົວໃນນີ້ຫາກຈະບັກເອົາວ່າ ແມ່ນຄົນ, ໄມ້ແສ້ເຮັດ ຂຶ້ນຫາຂຶ້ນມາສຳລັບໃຊ້ຕີຄົນກໍ່ບໍ່ແມ່ນ ທີ່ວ່ານີ້ ກໍ່ມີສາເຫດຂອງມັນຄື:

ໜຶ່ງ: ສາເຫດແຫ່ງຄວາມຕ້ອງການ: ການໃຊ້ແສ້ຟາດ,ແມ່ນເພື່ອໃຫ້ ເກີດການສະໜອງຕໍ່ຜູ້ຟາດນັ້ນຄື: ການຍອມ, ການປະຕິບັດຕາມ ຫຼື ການພ່າຍ ໜີໄປ ໂດຍທີ່ຜູ້ຟາດບໍ່ໄດ້ຮັບການສູ້ກັບ, ຕ້ານຢັນກັບ.

ສອງ: ສາເຫດດ້ານອາການ: ການຟາດຂອງແສ້ທີ່ພາໃຫ້ເກີດການ ເຈັບນັ້ນ ເປັນການເຈັບຕາມບໍລິເວນໜ້າໜັງເປັນສິ່ງສຳຄັນ ເຊິ່ງເຄີຍເອີ້ນວ່າ ເຈັບແບບດຽດ. ສະນັ້ນ ບາງຄັ້ງເຄີຍຍິນຄຳວ່າ: ເອົາແສ້ດຽດຈັກບາດສອງບາດ. ດັ່ງນີ້ເປັນຕົ້ນ.

ສາມ: ສາເຫດທາງພິພິດທະພັນ: ຂຸມຊາດທີ່ມັກໃຊ້ມ້າ ຕິດພັນກັບ ມ້າກໍ່ມີປະເພນີສຳລັບເຮັດໄມ້ຟາດມ້າແບບຕ່າງໆຈົນກາຍເປັນສິ່ງປະກອບໃນ ຊຸດເຄື່ອງຂອງທີ່ໃຊ້ກັບມ້າ. ໄມ້ຟາດອັນນັ້ນ ບາງພາສາເອີ້ນ: ແສະ ຫຼື ເສ ບາງພາສາເອີ້ນ: ທັສ, ທວິສ.

ສີ່: ສາເຫດທາງພາສາ ໄດ້ພົບຄຳທີ່ໃຊ້ສັ່ງມ້າໃຫ້ອອກຕົວໂດຍຜູ້ຂີ່ມ້າ ໃຊ້ເປັນຄຳປະຈຳນັ້ນ ໄດ້ແກ່ຄຳວ່າ:ແສະ! ຫາກແມ່ນມ້າທີ່ເຝິກແລ້ວ ເມື່ອຜູ້ຂີ່ ອອກສຽງພຽງຄຳວ່າ: ແສະ ມັນກໍ່ອອກຕົວໂລດ ແຕ່ມ້າຕົວທີ່ບໍ່ເຝິກພໍ ຫຼື ມ້າໂຕ ອ່າວແທ, ມ້າຫ້າວ ໄດ້ຍິນສຽງພຽງຄຳວ່າ ແສະ ກໍ່ບໍ່ສູ້ຍອມອອກຕົວງ່າຍ. ຜູ້ຂີ່ ຕ້ອງໃຊ້ໄມ້ບິ້ງ, ໄມ້ລຳນ້ອຍໆທີ່ເຮັດໄວ້ ຫຼື ໃຊ້ສົ້ນສາຍຊັກມ້າຟາດໄປພ້ອມກັບ ເວລາວ່າ ແສະ ໝາຍວ່າ ເວົ້າແຕ່ຟາດແຕ່ໄປພ້ອມ. ສະນັ້ນ ຄຳວ່າ ແສ້ ຄົງ

ເປັນຊື່ທີ່ໄດ້ມາຈາກ ຄຳວ່າ: ແສະ, ເຊິ່ງເປັນຄຳທີ່ໃຊ້ໄລ່ມ້າໃຫ້ເລີ່ມອອກຕົວເດີນ, ໄມ້ແສ້ ກໍ່ໄດ້ແກ່ ໄມ້ແສະ ທີ່ໝາຍເຖິງໄມ້ຟາດມ້າໃຫ້ອອກຕົວນັ້ນເອງ.

ໄມ້ແສ້ ເປັນຄຳທີ່ເກີດຈາກວັດທະນະທຳແຫ່ງການໃຊ້ມ້າມາແຕ່ນານ. ພາສາໄຕບາງຖິ່ນ ທີ່ຢູ່ພາກໃຕ້ຈີນລົງມາເຂດພາກເໜືອຂອງລາວກໍ່ຍັງອອກສຽງວ່າ ໄມ້ແສະ ດັ່ງເດີມ. ການປ່ຽນສຽງຈາກ ແສະ ມາເປັນ ແສ້ ອາດເພາະສະພາບແວດລ້ອມທາງສຽງແຫ່ງພາສາລາວ. ດັ່ງນັ້ນ ການຫາເຮັດໄມ້ແສ້ຂຶ້ນມາທຳອິດກໍ່ແມ່ນເພື່ອໄວ້ໃຊ້ຟາດມ້າເປັນຕົ້ນຕໍ. ໄດ້ພົບບາງເຜົ່າຊົນຢູ່ປະເທດອື່ນ ເຄີຍເຮັດໄມ້ແສ້ສຳລັບຟາດມ້ານີ້ຂາຍຢູ່ຕາມຮ້ານ ຕາມຕະຫຼາດທັງເຮັດເປັນແນວເອ້ເຮືອນ ໂດຍໃຊ້ເງິນເຮັດດ້າມ ສັບລາຍຢ່າງງາມໃສ່ພ້ອມ ແຕ່ບໍ່ເຄີຍເຫັນ ຢູ່ໃສເຮັດໄມ້ແສ້ ສຳລັບຟາດຄົນ ວາງຂາຍຕາມຕະຫຼາດຈັກເທື່ອ. ເຖິງຢ່າງນັ້ນ ສຳລັບຄົນ ໂອກາດທີ່ຈະຖືກຟາດດ້ວຍແສ້ກໍ່ມີເຊັ່ນກັນ ຫາກຄົງຖືກພຽງບາງຄົນ, ບາງໂອກາດ ແລະ ບາງກໍລະນີເທົ່ານັ້ນ. ຈຸດປະສົງຂອງການຟາດບໍ່ແມ່ນໃຫ້ເລີ່ມອອກຕົວເດີນດັ່ງມ້າ ແຕ່ເພື່ອໃຫ້ອອກຕົວຈາກຄວາມຜິດ, ຄວາມດື້ທີ່ຕົນກະທຳໄປ ຫຼື ເພື່ອໃຫ້ ໄຂຄວາມທີ່ອຳຢູ່ໃຫ້ອອກມານັ້ນເອງ.



ເຕັ້ນແຊ - ເຕັ້ນສາກ ໃນພາສາລາວ

ຄຳວ່າ: ເຕັ້ນ ທີ່ນຳມາໃຊ້ໃນທາງສິລະປະນີ້ ກໍ່ມີຄວາມສຳພັນກັບການຟ້ອນ ແຕ່ບໍ່ແມ່ນຟ້ອນໂດຍກົງ. ໃນນີ້ເມື່ອຕື່ມຄຳວ່າ: ແຊ ຫຼື ສາກ ເຂົ້າໄປກໍ່ຈະເພີ່ມຄວາມກະຈ່າງທາງຄວາມໝາຍຂຶ້ນ, ພາໃຫ້ເຫັນພາບ, ເຫັນອາການທີ່ປະກົດຮ່ວມກັນໃນເວລາດຽວ.

ເຕັ້ນແຊ ຫຼື ເຕັ້ນສາກ ແມ່ນຊື່ການເຕັ້ນ ທີ່ເປັນແບບແຜນໜຶ່ງໃນທາງສິລະປະການຟ້ອນຂອງລາວ. ກ່ອນຈະເຂົ້າໃຈໃນຄວາມໝາຍຂອງຄຳວ່າ: ເຕັ້ນແຊ ຫຼື ເຕັ້ນສາກນັ້ນ ສົມຄວນຮູ້ໃນເລື່ອງທີ່ພາໃຫ້ໄດ້ຄຳທັງສອງນີ້ກ່ອນ.

ການເຕັ້ນແຊ ເປັນການເຕັ້ນທາງສິລະປະທີ່ປະກອບມີດົນຕີ, ໃຫ້ສຽງດົນຕີເປັນຕົວກຳກັບຈັງຫວະການເຕັ້ນ. ຄວາມຄຶກຄື້ນແມ່ນເກີດຈາກຫຼາຍຢ່າງ ອັນໄດ້ແກ່: ການເຕັ້ນນຳກັນຂອງຄູ່ບ່າວສາວ, ການຈັບມືກັນຂອງຄູ່ບ່າວສາວ ແລ້ວເຕັ້ນທັງພິກຂ້າງພິກຄືງ, ການຮິບໄມ້ສ້າວຄູ່ ເຊິ່ງມີຫຼາຍຄູ່ນຳກັນ ແລະມີສຽງເສບປະສານຈັງຫວະ. ການເຕັ້ນແຊ ເອົາການເຕັ້ນຢ່າງເປັນຈັງຫວະຕາມການຮິບໄມ້ສ້າວເປັນສຳຄັນ, ເປັນການຟ້ອນທີ່ອອກແຮງຫຼາຍກວ່າແບບຟ້ອນອື່ນໆ,ພາໃຫ້ຫຼາຍສ່ວນຂອງກາຍໄດ້ຢ້ອນ ຫຼືແຊໄປພ້ອມກັນ. ການທີ່ເອີ້ນວ່າ ເຕັ້ນແຊ ແມ່ນເອີ້ນຕາມອາການທີ່ວ່າມານີ້.

ສ່ວນຄຳວ່າ ເຕັ້ນສາກ ກໍ່ແມ່ນການເອີ້ນໃຫ້ແບບເຕັ້ນດັ່ງກ່າວເຊັ່ນກັນ ແຕ່ເອີ້ນໃຫ້ໃນຢ່າງໜຶ່ງອີກຕໍ່ກັບການເຕັ້ນອັນນີ້ ຄື: ລັກສະນະຂອງການເຕັ້ນເຊິ່ງຕ້ອງໃຫ້ຕີນແລະທ້ຽຕົວຂຶ້ນຊື່ ລົງຊື່ຕາມຈັງຫວະ, ຫາກລົງຕີນບໍ່ຈັບບ່ອນກໍ່ມີຫວັ່ງຖືກໄມ້ສ້າວຮິບເອົາທັນທີ .

ເຕັ້ນແຊ ແລະເຕັ້ນສາກ ຕ່າງກໍ່ເປັນຄຳພື້ນຖານຂອງພາສາລາວ. ຊຸມທີ່ເຫັນວ່າການເຕັ້ນເຊິ່ງຕົວຂອງຜູ້ເຕັ້ນແຊໄປໝົດນັ້ນເປັນເລື່ອງເດັ່ນ ກໍ່ເອີ້ນວ່າ ເຕັ້ນແຊ; ຊຸມທີ່ເຫັນການເຕັ້ນນີ້ ໄດ້ມີແບບແຜນກຳກັບໃຫ້ບາດຕີນແລະຕົວ ຂອງຜູ້ເຕັ້ນໃຫ້ຂຶ້ນຊື່ ແລະໃຫ້ລົງຕາມບ່ອນ ຫາກເຮັດສ່ວນນີ້ຜິດກໍ່ຈະຜິດຈັງ ຫວะ ເຊິ່ງເບິ່ງຄ້າຍຄືກັບສາກ ໃນເວລາໃຊ້ຕຳ ທີ່ຍົກຂຶ້ນແລ້ວຕຳລົງ.ຊຸມທີ່ເຫັນ ວ່າອັນເດັ່ນແມ່ນອັນທີ່ມັນຄືກັບ ສາກຕຳນີ້ ກໍ່ເອີ້ນວ່າ ເຕັ້ນສາກ ໃຫ້.

ສຳລັບຜູ້ສຶກສາເອງມັກເອີ້ນວ່າ ເຕັ້ນແຊ ຍ້ອນວ່າ ເຫັນການເຕັ້ນແບບນີ້ ຕ່າງກັບແບບຟ້ອນອື່ນຫຼາຍ ຕົນໂຕກໍ່ແຊອີຫຼີ ແລະເພງທີ່ເສບໃສ່ກໍ່ເອີ້ນວ່າ ເພງເຕັ້ນແຊ ເຊັ່ນວັກຂຶ້ນຕົ້ນກໍ່ມີຄຳວ່າ: ນ້ອງສາວເອີຍ ອອກມາເຕັ້ນແຊ ເຕັ້ນແຊໃຫ້ມັນຄ່ອງໆ ເຕັ້ນເຢາະເຕັ້ນຢ່ອງໃຫ້ງາມເບິ່ງດູ ໃຫ້ງາມໃຫ້ງາມ ເບິ່ງດູ ໃຫ້ງາມເບິ່ງດູ ສາວນ້ອຍເຕັ້ນແຊ.

ດ້ານພາສາທີ່ນຳມາເປັນຊື່ ແລະ ແງ່ມອງທີ່ພາໃຫ້ໄດ້ຊື່ໃນນີ້ ພົບວ່າ ລາວເຮົາ ເລືອກຊື່ໄດ້ອັນເໝາະມາໃຫ ້ທັງໃຊ້ເອີ້ນມາໄດ້ຫຼາຍຮ້ອຍປີແລ້ວ; ຫາກມີຜູ້ໄປນຳເອົາຄຳວ່າ ລາວກະທົບໄມ້ ມາເອີ້ນປ່ຽນໃຫ້ກໍ່ໜ້າສົງສານຕໍ່ຄຳ ວ່າ ເຕັ້ນແຊ ຫຼືເຕັ້ນສາກ ເຊິ່ງເຄີຍນຳເອົາຄວາມມ່ວນຊື່ນ, ຄວາມເປັນສັກສີ ທາງວັດທະນະທຳ, ການລຳທຳຟ້ອນທີ່ເປັນພື້ນແຜ່ນຂອງລາວມາແຕ່ໃດ ກໍ່ ຊ້ຳໄດ້ຮັບຄວາມບຸດບຸ່ນຈົນຈະເຖິງຕົວເຂົ້າທຸກວັນ. ຄົນລາວຈົ່ງມາຊ່ວຍກັນ ເທາະ! ເອີ້ນເຕັ້ນແຊ ຫຼືເຕັ້ນສາກ ຈະດີກ່ວາ.

ຄຳ: ໜັ໋ງຍຳ ແລະ ໜັ໋ງເຄັ໋ມ ໃນພາສາລາວ

ມີຜູ້ເຂົ້າໃຈວ່າ ໜັ໋ງຍຳ ແລະ ໜັ໋ງເຄັ໋ມ ແມ່ນຢ່າງດຽວກັນພຽງແຕ່ເອີ້ນຊື່ຕ່າງຕາມບາງຖິ່ນເທົ່ານັ້ນ. ເພື່ອໃຫ້ຮູ້ວ່າ ໜັ໋ງຍຳ ແມ່ນ ຫຼື ບໍ່ແມ່ນ ໜັ໋ງເຄັ໋ມ ກໍ່ຈະໄດ້ເອົາວິທີສຶກສາປະຫວັດທາງຄວາ໋ມໝາຍ (Etymology) ຂອ໋ງຄຳຕາ໋ມແນວພາສາດເຂົ້າ໋ມາໃຊ້ ໂດຍໃຊ້ວິທີສຶກສາປຽບທຽບສ່ວ໋ນປະກອບທາ໋ງຄວາ໋ມໝາຍຂອ໋ງແຕ່ລະຄຳ ກໍ່ຈະພາໃຫ້ຮູ້ໄດ້.

ເມື່ອສຶກສາເຖິ໋ງທີ່ມາພົບວ່າ ໜັ໋ງຍຳ ແລະ ໜັ໋ງເຄັ໋ມ ແມ່ນຄຳພື້ນຖານຂອ໋ງພາສາລາວແທ້ ເພາະສ່ວ໋ນວ່າ ໜັ໋ງ, ຍຳ ແລະ ເຄັ໋ມ ກໍ່ລ້ວ໋ນແຕ່ເປັນຄຳພື້ນຖານ ພ້ອ໋ມນີ້ໃນແ໋ງ່ວັດທະນະທຳທາ໋ງອາ໋ກາ໋ນກໍ່ພົບວ່າ ລາວເຄັ໋ຍໃຊ້ໜັ໋ງມາເປັນອາ໋ຫາ໋ນດ້ວ໋ຍໜັ໋ງຢ່າ໋ງດຽວ ຫຼື ນຳໜັ໋ງໄປເຮັ໋ດປົ໋ນກັ໋ບແນວກິ໋ນຢ່າ໋ງອື່ນ ຫຼື ນຳແນວກິ໋ນຢ່າ໋ງອື່ນມາປົ໋ນ, ມາເອົ໋ອບເຂົ້າ໋ໃສ່ໜັ໋ງ ວິທີເຫຼົ່ານີ້ໄດ້ປະຕິບັ໋ດມາໄດ້ຫຼາ໋ຍພັ໋ນປີແລ້ວ.

ຄຳວ່າ: ໜັ໋ງຍຳ ຈັ໋ດເປັ໋ນໜັ໋ງຊະນິ໋ດທີ່ນຳແນວກິ໋ນຢ່າ໋ງອື່ນມາເອົ໋ອບໃສ່, ໜັ໋ງເຄັ໋ມກໍ່ເຊັ່ນ໋ກັ໋ນ ໝາ໋ຍວ່າໃຊ້ໜັ໋ງເປັ໋ນຫຼັ໋ກແລ້ວ໋ນຳແນວເອົ໋ອບມາໃສ່ເທົ່ານັ້ນ, ແຕ່ຕ໋ອເອົ໋າມາເອົ໋ອບ ແລະ ວິທີເອົ໋ອບນັ້ນບໍ່ແມ່ນຢ່າ໋ງດຽວກັ໋ນ, ມີ ຂັ້ນຕອ໋ນການເອົ໋ອບຕ່າ໋ງກັ໋ນ; ແຮ໋ງງານ ເວລາທີ່ໄດ້ລົ໋ງໃສ່ເພື່ອໄດ້ໜັ໋ງຍຳ ຫຼື ໜັ໋ງເຄັ໋ມ ກໍ່ຕ່າ໋ງກັ໋ນ. ເຊິ໋ງການເອົ໋ອບ, ສິ່ງເອົ໋ອບ, ວິທີ ແລະ ຂັ້ນຕອ໋ນການເຮັ໋ດທີ່ວ່ານີ້ມີດັ່ງນີ້:

ໜັ໋ງຍຳ: ໃຊ້ໜັ໋ງຄວາ໋ຍເປັ໋ນສຳຄັ໋ນມາປາດເປັ໋ນຕ່ອ໋ນຍາວຕາ໋ມຕ້ອ໋ງການແລ້ວປະໄວ້ແຮ໋ມແຕ່ສາ໋ມຫາສີ່ຄົ໋ນ ຈາກນັ້ນກໍ່ນຳມານວດໃຫ້ອ່ອ໋ນ ແລະ ໃຫ້ຂົ໋ນຫຼິ່ນຈົ໋ນກ້ຽ໋ງ ແລ້ວ໋ນຳໄປລ້າ໋ງໃຫ້ຫຼ້ອ໋ນ, ຈາກນັ້ນກໍ່ນຳເອົ໋າເກືອ໋ມາໃສ່ໃຫ້

ພໍດີແລ້ວຫຍຳໆໄດ້ພ້ຽກ່ຳນຳເອົາແກບກາງເຊິ່ງມີຮຳປົນນຳເລັກນນ້ອຍໂຮຍໃສ່ສ່າວ,ໆແລ້ວນຳໄປຕາກ.

ເມື່ອຄົ້ນຫາຄວາມໝາຍຂອງຄຳວ່າ: ຍຳ ທີ່ເປັນຄຳນາມນີ້ ຜູ້ສຶກສາເອງສັນນິຖານວ່າຄົງໄດ້ມາຈາກຄຳວ່າ ຫຍຳ ຫຼື ຢ່ຳ ເຊິ່ງເປັນຄຳກຳມະເພາະເຫັນວ່າແຕ່ລະຄຳນີ້ໄດ້ມີສ່ວນກ່ຽວຂ້ອງກັບການເຮັດໜ້ຽຍຳ. ຄື ກ່ອນຈະເປັນໜ້ຽຍຳ ຕ້ອງໄດ້ຜ່ານການຫຍຳ ຫຼືຢ່ຳເພື່ອເຮັດໃຫ້ຂົນຫຼິ່ນຈົນຫຼ້ອນ; ຫາກໜ້ຽມີໜ້ອຍແມ່ນໃຊ້ມືຫຍຳ, ຄັນມີຫຼາຍແມ່ນໃຊ້ຕີນຢ່ຳ ເພາະມັນນານເມື່ອຍແລະໄດ້ແຮງດີກວ່າ, ການຢ່ຳແມ່ນຢ່ຳແຕ່ສະເພາະຕອນຊຳລະຂົນອອກ, ສ່ວນເວລາເອືອບເກືອແລະແກບແມ່ນບໍ່ເຄີຍຢ່ຳ ເພາະຫາກຢ່ຳ ຄວາມໜ້າຢາກໜ້າກິນກໍ່ຄົງບໍ່ມີ. ການເຮັດດ້ວຍວິທີ ຫຍຳ ຫຼື ຢ່ຳນີ້ ແມ່ນວິທີປະຖົມປະຖານ ແຕ່ມັນເປັນວິທີທຳອິດທີ່ເຮັດໃຫ້ໄດ້ໜ້ຽຂະນິດນີ້ມາ.

ຄຳວ່າ: ຫຍຳ ເປັນອາການໃຫ້ນິ້ວມືທັງໝົດເບ້ືອງ ຫຼື ສອງເບ້ືອງນຳກັນກຳສິ່ງໃດໜຶ່ງແລ້ວຢຸບລົງຢ່າງແຮງເປັນບາດໆ, ຫາກເຮັດຫຼາຍບາດຕໍ່ເນື່ອງອ່າວໄວ ເອ້ີນຂະຫຍຳ, ຄຳວ່າ ຫຍຳ ຕ່າງກັບຄຳວ່າ ນວດ ແລະ ຄັ້ນ.

ຄຳວ່າ: ຢ່ຳ ເປັນອາການໃຊ້ຕີນຢຽບແບບເນ່ັນລົງ. ສະນັ້ນ ຄຳວ່າໜ້ຽຍຳ ເຊິ່ງເປັນຄຳນາມນີ້ຄົງໄດ້ມາຈາກອາການທີ່ໄດ້ຫຍຳ ຫຼື ຢ່ຳ ນັ້ນເອງ. ມາເຖິງປະຈຸບັນຄຳວ່າຍຳ, ຢ່ຳ ແລະ ຫຍຳ ໄດ້ແຍກເປັນອັນລະຄຳ; ເຊ່ິງ ຍຳ ເປັນຊ່ືໃຫ້ແກ່ອາຫານທີ່ໃຊ້ຜັກດິບ, ໝາກປີດິບ, ເຂືອດິບ ຫຼື ໜ້ຽທີ່ຕົ້ມສຸກເປັນຫຼັກແລ້ວນຳແນວປະສົມມາໃສ່ ເອ້ີນ ຍຳຜັກ, ຍຳໝາກເຂືອ, ຍຳໜ້ຽ. ໜ້ຽຍຳ ກັບ ຍຳໜ້ຽມີໂຄງສ້າງຄຳຕ່າງ ຄວາມໝາຍຂອງຄຳກໍ່ຕ່າງ. ຊຸມຄຳທີ່ຍຳຂ້ຶນໜ້າໄດ້ເປັນຊ່ືອາຫານພ້ອມທີ່ຈະກິນໄດ້, ແຕ່ໜ້ຽຍຳຕ້ອງຜ່ານຂ້ັນຕອນຈ່ີກ່ອນຈ່ຶງກິນ.

ການເຮັດໜ້ຽຍຳທີ່ປ່ຽນຈາກການໃຊ້ມືຫຍຳ ຫຼື ຕີນຢ່ຳ ນັ້ນແມ່ນເກີດຂ້ຶນພາຍຫຼັງທີ່ຮູ້ເຮັດຄົກຕຳເຂ້ົາ ໂດຍໃຊ້ຄົກຕຳພາໃຫ້ແລ້ວໄວທ້ັງໄດ້ໜ້ຽເນ້ືອນຸ້ມ.

ການປ່ຽນແປງທາງວັດທະນະທຳຂອງການເຮັດໜ້ຽຍຳເປັນແນວນີ້ ພາໃຫ້ມີໜ້ອຍຄົນທີ່ຈະຮູ້ໄດ້ວ່າ ໜ້ຽຍຳ ກໍ່ມາຈາກ ໜ້ຽຫຍຳ ຫຼືໜ້ຽຢ່ຳ.

ສຳລັບໜ້ຽເຄັ້ມ ການເຮັດກໍ່ຄ້າຍກັບໜ້ຽຍຳ ແຕ່ຂັ້ນຕອນ ແລະ ວິທີເຮັດ ອ່າວຜ່ານໜ້ອຍຂະບວນການກວ່າ ຄື: ເວລາທີ່ໃຊ້ໝັກໜ້ຽ ພຽງດ້ຳມຄືນ ສອງ ຄືນກໍ່ໄດ້, ບໍ່ຕ້ອງຊຳລະຂົນອອກຈາກໜ້ຽ. ສິ່ງທີ່ນຳມາໃສ່ ໄດ້ແກ່ແກບແກ່ ແລະເກືອໃນປະລິມານໜ້ອຍ ໂດຍມຸ່ງໃຫ້ເຄັ້ມ, ໜ້ຽເຄັ້ມມີຜູ້ເຮັດເປັນໜ້ອຍກວ່າ ຜູ້ທີ່ຮູ້ເຮັດໜ້ຽຍຳ; ເນື້ອຂອງໜ້ຽເຄັ້ມກໍ່ແຂງຕາມລະດັບທຳມະຊາດຂອງໜ້ຽ ໜາທີ່ແທ້ງ, ສ່ວນໜ້ຽຍຳ ຈະມີເນື້ອອ່ອນນຸ້ມ ເພາະມີຄ່າຂອງແຮງງານຈາກການ ຫຍຳ, ຢ່ຳ ຫຼື ຕຳ ໃນເວລາເຮັດນັ້ນ ຢູ່ນຳ.

ເບິ່ງສູ່ ຄຳໂຕງໂຕຍ ໃນພາສາລາວ

ການໃຊ້ຄຳໂຕງໂຕຍ ເປັນເຫດການຂອງການໃຊ້ພາສາທີ່ເຫັນມີຢ່ຳໆ ເດັ່ນຊັດໃນພາສາລາວເຮົາ. ຫາກຈະຖືວ່າ ນີ້ແມ່ນເອກະລັກຂອງພາສາລາວ ແຕ່ເຮົາກໍ່ຄວນສຶກສາວ່າ ເອກະລັກອັນນີ້ໄດ້ມີຜົນດີຫຍັງຕໍ່ກັບການກຳນົດ ຄວາມຄິ, ວັດທະນະທຳໃຫ້ແກ່ເຮົາເຊັ່ນກັນ.

ຕາມການສຶກສາຂອງນັກພາສາສາດ ທ່ານ Whorf ແລະ ທ່ານ Eward Sapir (1940 ໜ້ຳ 229-248) ໄດ້ໃຫ້ຄຳຄິດເຫັນວ່າ: ພາສາ ມີບົດ ບາດຕໍ່ການກຳນົດຄວາມຄິດ; ພາສາເປັນຕົວຫຸ້ຫຸ້ຫ້ອມຄວາມຄິດ. ເມື່ອນຳຕາມ

ທິດສະດີນີ້ມາສູ່ການໃຊ້ຄຳຄຳໂຕໆໂຕຍ ເຊິ່ງເຮົາຖືວ່າພາສາອື່ນເກືອບບໍ່ປະກົດເຫັນມີໃຊ້ນັ້ນວ່າ ມັນຈະກາຍເປັນຕົວກຳນົດຄວາມຄິດ ແລະ ຫຼໍ່ຫຼອມຄວາມຄິດອັນໃດໃຫ້ເຮົາ.

ຄຳໂຕໆໂຕຍ ແມ່ນຄຳທີ່ໃຊ້ຕື່ມເຂົ້າທ້າຍຂອງຄຳໃດໜຶ່ງ ພາໃຫ້ຄຳນັ້ນໆມີອັນຫ້ອຍ. ຫາກເຮົາເບິ່ງພາສາຕາມທັດສະນະຂອງ Bloomfield ຊາວສະວິດ ນັກພາສາສາດທີ່ມີຊື່ສຽງຂອງໂລກ ເຊິ່ງປຽບເອົາພາສາເໝືອນກັບວັດຖຸທີ່ສາມາດເບິ່ງໄດ້ ເຫັນຮູບໄດ້ນັ້ນ ກໍ່ຈະເບິ່ງຄຳໂຕໆໂຕຍ ເໝືອນກັບ**ຫາງຂອງຄຳ** ເຊິ່ງ **ຫາງ** ອັນນີ້ບາງຄັ້ງກໍ່ຈະຊ່ວຍໃຫ້ຕົວຂອງມັນງາມຂຶ້ນຍ້ອນ. ແຕ່ເຮົາມອງໃນແງ່ທີ່ຖືເອົາຄຳແຕ່ລະຄຳຄືກັບວັດຖຸເປັນອັນໆ ໃນເມື່ອພາສາໜຶ່ງມີຄຳຕັ້ງຫຼາຍໜື່ນຄຳ ກໍ່ປຽບວ່າມັນມີວັດຖຸຕັ້ງເປັນໝື່ນໆອັນ, ໃນເມື່ອທຸກໆອັນນັ້ນ**ຫາກ**ນຳຫາງມາໃສ່ໃຫ້ໝົດ ກໍ່ຄົງຈະໄດ້ເພີ່ມບ່ອນຢູ່ຂອງຄຳນັ້ນໃຫ້ກວ້າງອອກ**ຕື່ມ** ເພາະຕ້ອງຂະຫຍາຍບ່ອນເພື່ອເປັນທີ່ຢູ່ໃຫ້ແກ່ຫາງທັງມວນນັ້ນ. ເມື່ອຫັນ**ວິທີ**ມອງອັນນີ້ມາສູ່ການໃຊ້ພາສາລາວ; ຫາກເວລາທີ່ໃຫ້ມີຂອບເຂດຈຳກັດ ແຕ່ຜູ້ໃຊ້ພາສາໄດ້ໃຊ້ເວລານັ້ນຈົນໝົດດ້ວຍຄຳທີ່ມີແຕ່ຫາງກັບຫາງ ກໍ່ຄົງເບິ່ງອອກວ່າ ຄຳທີ່ມີພາລະ, ມີປະໂຫຍດນັ້ນ ຄົງມີພຽງເຄິ່ງໜຶ່ງຂອງຈຳນວນທັງໝົດເທົ່ານັ້ນ. ກໍລະນີນີ້ຫາກເບິ່ງຜ່ານທາງສິລະປະຂອງການໃຊ້ພາສາກໍ່ຈະຮູ້ເຖິງສາເຫດທີ່ພາໃຫ້ມີຄຳເຫຼືອ, ຄຳຟຸ່ມເຟືອຍຫຼາຍໃນຂະບວນການເວົ້າຂອງບຸກຄົນໄດ້ງ່າຍຂຶ້ນ. ແຕ່ການໃຊ້ເວລາຫຼາຍ ໄດ້ຄວາມໝາຍໜ້ອຍນັ້ນ ບໍ່ແມ່ນເກີດຈາກການໃຊ້ຄຳເຫຼືອ, ຄຳຟຸ່ມເຟືອຍກໍ່ມີ, ອາດເກີດຈາກການທີ່ຈະອອກຄຳແຕ່ລະຄຳນັ້ນໃຊ້ເວລາຫຼາຍເກີນລະດັບປົກກະຕິ ໝາຍວ່າ ແຕ່ລະຄຳກ່ອນຈະອອກນັ້ນ ເວລາຜ່ານໄປກ່ອນດົນແລ້ວຈຶ່ງອອກຕາມ. ຄວາມລຳຄານໃຈຂອງຜູ້ຟັງເກີດໄດ້ງ່າຍທີ່ກັບການເວົ້າເຊິ່ງໃຊ້ເວລາຫຼາຍ ແຕ່ໄດ້ຄວາມໝາຍໜ້ອຍ. ໃນນີ້ບາງຄັ້ງການໃຊ້ຄຳໂຕໆໂຕຍຫຼາຍກໍ່ຈະພາໃຫ້ເກີດມີຄຳເຫຼືອ, ເກີດອາການຟຸມເຟືອຍໄດ້ງ່າຍເຊັ່ນກັນ. ແຕ່ສຳລັບຜູ້ທີ່ເກີດຕິດ ແລະ ໄດ້ຜົນກະທົບ

จากค่าของการเป็นคำโตๆไปจนกายเป็นความลึ้ๆ ก่ยากที่จะรู้สึกลำคามใจต่ำกับอาการใช้คำหยิ่อ, คำฟูมเฟือย ทังนี้ก่เพาะว่า ในต๊วของๆบุกคินนั้นมีพฺงละบิบดฺงอเช่น: ละบิบที่สอดถ่องๆ และ รองรับกับความฟูมเฟือยติดห้อยส้อยตามยู่แล้วนั้นเองๆ. ‘ะบิบนี้จะบ่ช่วยถัดจ้อม, เลือกเฟ้นอันเหมาะเจาะ, อันชัดเจนได้สะดวกปานใด หากปฺบทฺบกับอัดถุ ก่เหมือนกับมีสิ่งสามาดยืดขะหยาดออกได้. สะนั้น การใช้คำคำโตๆโตำในพาสาลาวเพื่อให้เกิดพฺงพ่เป็นสิละปะนั้นก่ถอม เลือกเฟ้นเช่นกัน. อาดบ่เป็นความสิมถอมที่จะเอ๊านักสึกสามาเป็นโตๆโตยของนักธฺมในบางกำละนิ; เอ๊าอาจามมาเป็นโตๆโตยให้ลู. เอ๊าเถ๊าแก่มาเป็นคำโตๆโตมให้แมอโธม, เอ๊าบิดบาดเป็นคำโตๆโตมให้พาละ, เอ๊าพายหน้าเป็นคำโตๆในอะนาถิด และอ่นๆ เพาะการให้คำโตๆให้ก่ปฺบเหมือนการให้หางแก่คำ. แต่หางถอมเกิดกับต๊วสิมถอมที่ต้องมีหางจิ่งถึกและงาม.

24 / VII

ห้ามจำหน่าย

คำ: ดั้น, ดฺง ແລะ ตอด ในพาสาลาว

ดั้น ແລะ ดฺง ล้อมแต่แม่นคำกำมะ เซิ่งต๊วกำกับอาการได้แก่แมงขะนิดที่มีไล เช่น: ต่ำ, แตน, มิดขะนอย, เผิ้ง, แมงดั้น, แมงสะหมูดเป็นติ้น. แมงฮุมที่อ่านี้เมื่อใช้ไลปักถิ่งมีแบบปักต่างกัน เพาะเบิ่ง

ຈາກພາສາລາວກໍ່ເຫັນວ່າ ອາການປັກໄດ້ແຍກເນດັ້ນ ແລະ ດຽດ. ສະນັ້ນສົມ ຄວນສຶກສາວ່າ ໃຊ້ວິທີປັກແບບໃດຈຶ່ງເອີ້ນວ່າດັ້ນ, ວິທີໃດຈຶ່ງເອີ້ນວ່າດຽດ.

ເມື່ອສຶກສາໃນຄຳທັງສອງນີ້ໄດ້ພົບວ່າ: ດັ້ນ ແລະ ດຽດ ເປັນອາການ ທີ່ມີຈຸດລວມຄື: ປັກໂດຍໃຊ້ໄລຂອງແມງ ບໍ່ໃຊ້ໜາມ, ເຂັມ ຫຼື ສ້ຽນ, ຄວາມ ລາວເຮົາໃຜກໍ່ວ່າມັນງ່າຍ, ໃຜວ່າບໍ່ເລິກເຊິ່ງລະອຽດກໍ່ລອງເບິ່ງພຽງສອງຄຳຄື ດັ້ນ ແລະ ດຽດນີ້. ຊຸມຄາຍໜໍ່ຄາຍບົ້ງກໍ່ປັກພາໃຫ້ຄັນຫຼືເຈັບໄດ້ ແຕ່ພັດບໍ່ໄດ້ ຈັດເຂົ້າໃນຈຳພວກດັ້ນ ແລະ ດຽດ. ສະນັ້ນ ທັງວິທີປັກ ແລະ ຕົວທີ່ປັກກໍ່ມີ ຄວາມຈຳກັດເຂົ້າອີກໂດຍແຍກ ບົ້ງ, ຄາຍໜໍ່ກັບຊຸມໜາມ, ສ້ຽນ ແລະ ເຂັມ ອອກ ຍັງບໍ່ແລ້ວໃນຊຸມທີ່ເຫຼືອຢູ່ຄື: ແມງຕ່າງໆ ທີ່ສະເໜີມາກໍ່ຍັງຖືກແບ່ງເປັນ ພວກດັ້ນພວກດຽດອີກ. ບັດນີ້ມາເບິ່ງວ່າ ດັ້ນ ແມ່ນອາການແບບໃດ? ດັ້ນ ໝາຍເຖິງອາການທີ່ແມງບາງຊະນິດໃຊ້ໄລຂອງມັນປັກເຂົ້າໃນເນື້ອຂອງຕົວ ອື່ນດ້ວຍວິທີຜຸນເຂົ້າໃຫ້ໄວ. ແມງທີ່ເຮັດແບບນີ້ໂດຍສະເພາະກໍ່ຈະໄດ້ຊື່ຕາມນີ້ ເຊັ່ນ: ແມງດັ້ນ. ຄັນຊັ້ນ ດຽດ ຕ່າງກັບ ດັ້ນ ຢ່າງໃດ. ດຽດ ໝາຍເຖິງອາການທີ່ ແມງບາງຊະນິດໃຊ້ໄລຂອງມັນປັກເຂົ້າໃນເນື້ອຂອງຕົວອື່ນຢ່າງໄວແລ້ວຖອດ. ແມງທີ່ເຮັດແນວນີ້ໄດ້ແກ່ ເຜິ້ງ, ຕໍ່, ແຕນ ແລະ ມົດຂະນອຍ. ໃນພາສາເຮົາຈຶ່ງ ພົບວ່າ: ເຜິ້ງດຽດ, ຕໍ່ດຽດ, ແຕນດຽດ. ຫາກໄດ້ຍິນຄຳວ່າ: ເຜິ້ງດັ້ນ, ແຕນດັ້ນ ຄົງເນການໃຊ້ບໍ່ຖືກອາການໂດຍຜູ້ເວົ້າເຂົ້າໃຈບໍ່ເຖິງຄວາມກໍ່ເປັນໄດ້. ອາການ ທີ່ຢູ່ໃນໝວດໝູ່ຄວາມໝາຍນີ້ ຍັງມີຄຳວ່າ ຕອດ. ເຊິ່ງ ຕອດ ເປັນອາການທີ່ ສັດບາງຊະນິດໃຊ້ສິບໄປສັບໃສ່ເພື່ອໃຫ້ເຈັບ ຫຼື ບາດດ້ວຍແຂ້ວ ຫຼື ປາຍແຂງ ຂອງສິບມັນ. ອາການຊຸມນີ້ຕົວກະທຳຂອງມັນໄດ້ແກ່ໄກ່, ງູ, ຂີ້ເຂັບ, ກັບແກ້, ສັດປີກ ແລະ ສັດປີກບາງຊະນິດ.

ບັນດາແມງໃນໂລກນີ້ຊ້ຳມີຫຼາຍຮ້ອຍຊະນິດ, ອາການທີ່ມັນເຮັດ ອອກບໍ່ແມ່ນແຕ່ສ່ຳສາມວິທີດັ່ງກ່າວມາ, ພາສາລາວເຖິງເປັນພາສາໜຶ່ງທີ່ມັກ ແຍກແຍະຄວາມລະອຽດແລ້ວຕັ້ງຊື່ໃຫ້. ແຕ່ບັນດາອາການຂອງແມງທັງມວນ

ທີ່ເຮັດອອກ ເຮົາກໍ່ບໍ່ສາມາດແຍກແລ້ວຕັ້ງຊື່ໃຫ້ຈົນຄົບ, ພາສາລາວໃຊ້ຄຳທັງ ສາມຄື: ດັ້ນ, ດຽດ, ຕອດ ໃຫ້ເປັນຄຳເຊິ່ງແຕ່ລະຄຳກໍ່ສາມາດບັນຈຸອາການ ອື່ນໆທີ່ຄ້າຍໆກັນມາໄວ້ນຳກໍ່ໄດ້. ແຕ່ເຖິງຢ່າງນັ້ນຄວາມລຳບາກທີ່ຈະຈັດບາງ ອາການເຂົ້າໄປກໍ່ຍັງບໍ່ຄັກແນ່ວ່າເອົາເຂົ້າພູດໃດຈຶ່ງຈະເໝາະ ເຊັ່ນ: ໂຕຍຸງ ຈະ ເອີ້ນວ່າ ດັ້ນ ຫຼື ດຽດ; ຕອດ ຫຼື ກັດ. ຫາກເອີ້ນກັດ ໂຕຍຸງພັດບໍ່ມີແຂ້ວ ເພາະ ຕົວກຳກັບຂອງກັດຕ້ອງແມ່ນແຂ້ວ ຈະເອີ້ນວ່າ ດັ້ນ ໂຕຍຸງພັດບໍ່ມີໄລ ເພາະໄລ ແມ່ນຢູ່ທາງກົ້ນ ມີພາລະເປັນອາວຸດຕໍ່ສູ້, ແຕ່ຍຸງພັດມີຢູ່ທາງຫົວຄືກັບຊ້າງ ສະ ນັ້ນ ຈຶ່ງເອີ້ນງວງ ບໍ່ແມ່ນໄລ. ອາການທີ່ຍຸງໃຊ້ງວງປັກນັ້ນເບິ່ງແລ້ວເປັນອາການ ຄ້າຍກັບດັ້ນ ຫຼາຍກວ່າດຽດ ແຕ່ດັ້ນແລ້ວພັດບໍ່ຖອດງ່າຍ. ອາການເຊັ່ນນີ້ທາງ ພາສາສາດຽກວ່າ ອາການຜັນ (Varience). ສະນັ້ນ ສຳລັບຍຸງ ໃນພາສາ ລາວອາການທີ່ມັນເຮັດຈຶ່ງໄດ້ການເອີ້ນທີ່ຕ່າງກັນຄື: ຍຸງກັດ, ຍຸງດັ້ນ, ຍຸງຄົບ, ຍຸງຕ່ອຍ, ຍຸງກິນ. ເຖິງຈະເອີ້ນແນວໃດກໍ່ຍັງແມ່ນການຢືມຄວາມອື່ນມາໃຊ້. ກໍ ລະນີນີ້ເອີ້ນວ່າ: ການຢືມອາການ.

ຫາຄຳ: ເຮືອນຮ້ານ ຫຼື ເຮືອນຍົກພື້ນ ໃນພາສາ ລາວ

ເຮືອນແມ່ນສິ່ງປຸກສ້າງສຳລັບຢູ່ເປັນຄອບຄົວ ຫຼື ຫຼາຍຄົນນຳກັນ, ເຮືອນທີ່ໄດ້ຕັ້ງເປັນແບບອັນດັ້ງເດີມກໍ່ຈະມີຄ່າທາງວັດທະນະທຳທີ່ໃຫ້ເຫັນລັກ

ສະນະຊາດ ຫຼື ເຜົ່າ ຝັ່ນເຝືອຢູ່ນຳ. ຄ່າວັດທະນະທຳທີ່ວ່ານີ້ໄດ້ແກ່: ຮູບຊົງເຮືອນ, ສິລະປະ, ສີມືການເຮັດ, ເຫື່ອແຮງທີ່ທຸ້ມໃສ່ ແລະ ຍັງຮວມໄປເຖິງຄວາມເຊື່ອ, ຄວາມມຸ່ງຫວັງທີ່ໃຫ້ໄດ້ມາເຊິ່ງຄວາມອົບອຸ່ນ, ຄວາມສຳລານໃຫ້ແກ່ໄທເຮືອນ ແລະ ຜູ້ມາອາໄສຢູ່. ດ້ວຍເຫດນີ້ຫຼາຍຊາດ ຫາກອີງຕາມຄວາມເຊື່ອດັ້ງເດີມນີ້ ເມື່ອຈະຕັ້ງເຮືອນກໍ່ໄດ້ຫາມື້ຫາຍາມ, ຫາເບິ້ອງຫາທິດ ຕະຫຼອດຮອດໄມ້ທີ່ຈະເອົາມາເຮັດເຮືອນ ໂດຍສະເພາະເສົາ, ຂື່, ສີຍົວ ແລະ ແປບົນ ຊຸມນີ້ໄດ້ດມີການເລືອກອ່າວເຄັ່ງຕາມຮີດຕາມຖີ. ອັນນີ້ແມ່ນຂໍ້ຄວາມບາງອັນກ່ຽວກັບເຮືອນເມື່ອເບິ່ງຜ່ານວັດທະນະທຳ. ຫາກຫັນມາເບິ່ງຊື່ທີ່ຕັ້ງໃຫ້ເຮືອນສະເພາະໃນພາສາລາວ ຫາກເອີ້ນຕາມລັກສະນະຂອງເຮືອນກໍ່ມີຄື: ເຮືອນຮ້ານ, ເຮືອນຊູດິນ, ເຮືອນຕົກ; ຫາກເອີ້ນຕາມສິ່ງທີ່ເອົາມາເຮັດເຮືອນໄດ້ແກ່: ເຮືອນກໍ່ ແລະ ເຮືອນໄມ້.

ຄຳວ່າ ເຮືອນຮ້ານ ເປັນຄຳທີ່ປະກອບຂຶ້ນດ້ວຍຄຳພື້ນຖານຂອງພາສາລາວ ສະເພາະສ່ວນທີ່ເອີ້ນວ່າ ຮ້ານ ໝາຍເຖິງ ຖາດ ຫຼື ຕາດ ເຊິ່ງຂຶ້ນຕັ້ງຂຶ້ນໄວ້ຫ່າງຈາກໜ້າດິນໂດຍເຮັດຫຼາຍເສົາຄ້ຳໃຫ້ຢູ່ໝັ້ນ; ເຮືອນຮ້ານກໍ່ໝາຍເຖິງເຮືອນທີ່ຕັ້ງໃສ່ຮ້ານ, ພື້ນດິນບ່ອນຕັ້ງເຮືອນກັບພື້ນເຮືອນເປັນສອງພື້ນບໍ່ໃຫ້ແທດກັນ ໂດຍປົກກະຕິສາມາດຍ່າງລອດເຂົ້າອອກໄດ້ເຊິ່ງເອີ້ນວ່າ: ກ້ອງລ່າງ ຫຼື ຕະລ່າງ. ກ້ອງລ່າງເປັນສ່ວນປະກອບທີ່ສຳຄັນຢ່າງໜຶ່ງຂອງເຮືອນລາວຄື: ເພື່ອບໍ່ໃຫ້ມີຄວາມຊຸ່ມຈາກນ້ຳ, ກັນສັດຮ້າຍແມງພິດ, ໃຫ້ມີລົມລ່ວງ, ໃຊ້ເປັນບ່ອນມ້ຽນເຄື່ອງຂອງບາງແນວ, ເປັນບ່ອນຕັ້ງກີ່ຕຳແຜ່ນຜ້າ, ເປັນບ່ອນພົບປະກັນໃນປະຈຳວັນຂອງຄົນເຮືອນເໜືອເຮືອນໃຕ້ ແລະເປັນບ່ອນທີ່ໃຫ້ຜູ້ຢູ່ຫັ້ນສາມາດເບິ່ງແຍງຄົນເຂົ້າອອກຊ່ວຍເຮືອນອື່ນ. ທີ່ເວົ້າມານີ້ແມ່ນເລື່ອງວັດທະນະທຳບາງຢ່າງທີ່ກ່ຽວກັບເຮືອນລາວເຊິ່ງມັນພົວພັນກັບພາສາ. ຫາກທ່ານໃດຄິດວ່າທີ່ສະເໜີມານີ້ບໍ່ເຫັນມີອັນພົວພັນກັບພາສາ; ໃນຂໍ້ຄວາມຕໍ່ໄປນີ້ກໍ່ຈະໃຫ້ຮູ້ແຈ້ງຂຶ້ນໄດ້ຄື: ຜ່ານມາ ຄຳວ່າ: ເຮືອນຮ້ານມີບາງຄົນນຳຄຳວ່າ: ເຮືອນຍົກ

ພື້ນມາໃຊ້ແທນ. ຜູ້ສຶກສາເອງເຫັນວ່າ: ເຮືອນຮ້ານນບໍ່ແມ່ນເຮືອນຍົກພື້ນ ຫຼື ເຮືອນພື້ນຍົກ. ດ້ວຍສາເຫດຄື: ເຮືອນພື້ນຍົກເປັນເຮືອນທີ່ພື້ນສູງຂຶ້ນກວ່າໜ້າດິນບ່ອນຕັ້ງເຮືອນ ອັນນີ້ຖືກຕ້ອງ ແຕ່ຄຳວ່າ ຍົກພື້ນ ບໍ່ໄດ້ບອກວ່າຍົກສູງຊ່ຳໃດອາດສູງພຽງເຄິ່ງຄືບ, ເຄິ່ງສອກກໍ່ໄດ້ພ້ອມນີ້ ພື້ນທີ່ຍົກນັ້ນອາດເຮັດຕັນບໍ່ມີຕະລ່າງກໍ່ໄດ້. ເຮືອນຍົກພື້ນກໍ່ແມ່ນເຮືອນຊູດິນພຽງແຕ່ເຮັດພື້ນສູງກວ່າໜ້າດິນເລັກໜ້ອຍ, ແຕ່ຜູ້ທີ່ນຳຄຳວ່າ: ເຮືອນຍົກພື້ນມາໃຊ້ນັ້ນພັດມາໃຊ້ແທນຄຳວ່າ: ເຮືອນຮ້ານ. ຫາກເປັນເຊັ່ນນີ້ກໍ່ສ່ຳກັບວ່ານຳມັນມາປັດຄ່າທາງວັດທະນະທຳທີ່ກ່ຽວກັບເຮືອນຮ້ານນັບທັງກ້ອງລ່າງອອກໄປ, ເພາະກ້ອງລ່າງແມ່ນຕິດກັບເຮືອນຮ້ານ.ຄຳທີ່ນຳມາໃຊ້ແລ້ວເກີດຄວາມບຽດບຽນຕໍ່ວັດທະນະທຳ ແລະ ພາສາເຮົາມັກແມ່ນຄຳຈາກພາສາອື່ນທີ່ເປັນຄຳຢ່າງດຽວກັນ. ການຄິດຄຳກ່ອນໃຊ້ໄດ້ເປັນວັດທະນະທຳໃໝ່ທີ່ຊ່ວຍໃຫ້ສັກສີແກ່ຜູ້ທີ່ຖືວ່າ ມີຄວາມຮູ້ ແລະ ມີຄວາມຮັກຊາດ, ຜູ້ຮັກວັດທະນະທຳພາສາຂອງຊາດ.



ກ່ຽວກັບຜູ້ຄົ້ນຄວ້າ

ຜູ້ຄົ້ນຄວ້າ ສົມແສງ ໄຊຍະວົງ

ຖິ່ນກຳເນີດ ແຂວງຫຼວງພະບາງ

ການສຶກສາ:

ຮຽນຊັ້ນປະຖົມ ແລະ ມັດທະຍົມທີ່ ແຂວງຫຼວງພະບາງ;

ຮຽນຊັ້ນອຸດົມ ທີ່ ໂຮງຮຽນອຸດົມສູນກາງ ເຂດລ້ອງມ້າ ແຂວງຫົວພັນ

ຮຽນຈົບຊັ້ນປະລິນຍາຕີ ວິຊາ ພາສາສາດ-ວັນນະຄະດີ ທີ່ ມະຫາວິທະຍາໄລແຫ່ງຊາດຂອງ ມົງໂກລີ.

ຮຽນຈົບຊັ້ນ ປະລິນຍາໂທ ວິຊາພາສາສາດປະຍຸກ (Applied-Linguistics) ທີ່ ມະຫາວິທະຍາໄລກະເສດສາດ, ກຸງເທບ ປະເທດ ໄທ.

ປະສົບການ:

ເປັນອາຈານ ສອນພາສາສາດ, ພາສາລາວ ທີ່ ມະຫາວິທະຍາໄລສ້າງຄູ ວຽງຈັນ (ດົງໂດກ) ຮວມເວລາ ແປດປີ (1983-1990), ມາເປັນນັກຄົ້ນຄວ້າພາສາສາດ ນັບແຕ່ປີ 1990 ຈົນເຖິງປະຈຸບັນ.

ຜົນງານການຂຽນ:

ຮ່ວມເຮັດວັດຈະນານຸກົມ ພາສາ ມົງໂກນ-ລາວ 11.000 ຄຳ. ຈັດພິມ ໂດຍ ພະແນກ ພາສາຕ່າງປະເທດ ມະຫາວິທະຍາໄລແຫ່ງຊາດມົງໂກລີ ປີ 1983

ໂຮມນິທານລາວ ຈຳນວນ 10 ເລື່ອງ ແປເປັນພາສາມົ້ງໂກນ ພິມທີ່ ໂຮງ ພິມແຫ່ງຊາດ ມົ້ງໂກລີ 1982.

ໄດ້ຮັບລາງວັນຊະນະເລີດ ການຂຽນນິທານພື້ນເມືອງລາວ ເລື່ອງ: ລູກໝໍ ເຫືອກ ໃນບັ້ນກວດສອບນິທານພື້ນເມືອງລາວທົ່ວປະເທດ ປີ 1986.

ມີຜົນງານການຂຽນນິທານລາວຫຼາຍບົດທີ່ໄດ້ຮັບພິມໃນປຶ້ມ: ນິທານພື້ນ ເມືອງລາວຈັດພິມໂດຍ ສຳນັກງານວາລະສານ ວັນນະສິນ ປີ 1987.

ຮ່ວມໃນການເຮັດ ວັດຈະນານຸກົມ ພາສາຂະມຸ-ລາວ ຈັດພິມໂດຍ ສະຖາບັນຄົ້ນຄວ້າວັດທະນະທຳ ປີ 1994.

ຮ່ວມໃນການເຮັດວັດຈະນານຸກົມພາສາ ຂະມຸ-ລາວ-ຝຣັ່ງ-ອັງກິດ ພິມ ໂດຍ ສະຖາບັນຄົ້ນຄວ້າວັດທະນະທຳ ປີ 1994.

ຮ່ວມໃນການຂຽນປຶ້ມ ປະເພນີກະສິກຳຂອງຊາວກະຕູ.ຈັດພິມໂດຍ ສະຖາບັນຄົ້ນຄ້ວາວັດທະນະທຳ ປີ 1995.

ຮ່ວມໃນການເຮັດ ວັດຈະນານຸກົມສາມພາສາ: ລາວ- ໄທ- ອັງກິດ ພິມທີ່ ມະຫາວິທະຍາໄລກະເສດສາດ, ກຸງເທບ ປະເທດໄທ ປີ 2000

ຂຽນບົດຄວາມວິຊາການກ່ຽວກັບພາສາ, ພາສາສາດ ພິມເຜີຍແຜ່ ໃນໜັງສືພິມປະເທດລາວ ສີ່ຮ້ອຍກວ່າບົດ.

ແປປຶ້ມນິທານເດັ່ນຂອງອາຊີສຳລັບເດັກ ພິມໂດຍ ສະຖາບັນຄົ້ນ ຄວ້າວັດທະນະທຳ ໃນປີ 1996

ສຶກສາການຢືມຄຳໃນພາສາລາວ ຈັດພິມໂດຍ ສະຖາບັນຄົ້ນ ຄວ້າພາສາສາດ, ນະຄອນວຽງຈັນ ປີ 2005.

ປຶ້ມ: ຮັກພາສາຂອງເຮົາ ເຫຼັ້ມ I, II , ຈັດພິມໂດຍ ສະຖາບັນຄົ້ນ ຄວ້າພາສາສາດ ປີ 2005.

ນອກນີ້ຍັງມີບົດຄົ້ນຄວ້າກ່ຽວກັບພາສາລາວ ເຊັ່ນ: ການສຶກສາ

ເລື່ອງສຽງວັນນະຍຸດຖິ່ນວຽງຈັນ, ເລື່ອງທີ່ມາຂອງການນັບ, ສິລະປະໃນການເວົ້າ ການປະກົດຕົວເທິງເວທີ, ສຶກສາກ່ຽວກັບເລື່ອງ ສີ ໃນພາສາລາວ, ແລະ ຄົ້ນຄວ້າທີ່ມາຂອງຄວາມໝາຍບາງຄຳເຊັ່ນ: ການຕັ້ງຊື່ໃຫ້ສັດທີ່ອີງຕາມສຽງຮ້ອງ; ບາງຂະນົດບົດ ທີ່ກ່ຽວກັບ ວັດທະນະທຳ ເຊັ່ນ:ການຄ້ຽວໝາກ, ການຕີຄີ ເຊິ່ງພວມຈັດແຈງເປັນປຶ້ມເພື່ອພິມ,ໄດ້ຂຽນບົດວິຈານເລື່ອງສັ້ນຈຳນວນໜຶ່ງ.

ນັບແຕ່ ປີ 1987 ເປັນຕົ້ນມາເຄີຍໄດ້ຮັບການແຕ່ງຕັ້ງໃຫ້ເປັນກຳມະການສຳລັບກວດແລະຕັດສິນບົດປະພັນເລື່ອງສັ້ນ, ບົດບັນທຶກເລື່ອງຈິງຄົນແທ້, ບົດວັນນະກຳສ້າງສັນສຸດຍອດ ແຫ່ງອາຊຽນ ທີ່ເອີ້ນຫຍໍ້ວ່າ ຊີໄຣ(S.E.A Write - Award) ທີ່ສົ່ງເຂົ້າກວດສອບໃນບັ້ນຕ່າງໆ. ນອກນີ້ ກໍ່ເຄີຍໄດ້ເຂົ້າຮ່ວມກອງຊຸມ ບັນດານັກຂຽນ ນັກແປ ໃນກອງປະຊຸມລະດັບພາກພື້ນ, ການສຳມະນາວິ-ທະຍາສາດ ລະດັບສາກົນກ່ຽວກັບໄຕ ຄະດີສຶກສາ (Tai Study) ຫຼາຍຄັ້ງ.

ຂ້າພະເຈົ້າຂໍຂອບໃຈນຳທຸກທ່ານທີ່ໄດ້ສະໜັບສໜູນຂ້າພະເຈົ້າ ດ້ວຍການອ່ານແລະໃຫ້ຄຳຊົມເຊີຍຕະຫຼອດມາ; ກຳລັງໃຈທີ່ຊ່ວຍໃຫ້ຢາກຄົ້ນຄ້ວາ ແລະສ້າງຜົນງານໃໝ່ອອກມາຕື່ມນັ້ນ ກໍ່ຄົງຍັງມີຕໍ່ໄປ ໃນເມື່ອການສະໜັບສະໜູນ ແລະຊົມເຊີຍຂອງທ່ານຜູ້ອ່ານຫາກຍັງມີຕໍ່ໄປ.

ຂໍຂອບໃຈ